# ເອກະສານປະກອບການສອນ

# ວິຊາ : ເຜົ່າພັນວິທະຍາ










ລະບົບ 12+4

ວິທະຍາໄລຄູສາລະວັນ

ສົກປີ 2021

# ເອກະສານປະກອບການສອນ
# ວິຊາ : ເຜົ່າພັນວິທະຍາ

ຮຽບຮຽງໂດຍ:
ປທ ນ ລຸ້ງຟ້າ ຂັນຕິວົງ

ກວດແກ້ໂດຍ:
ອຈ ປທ ນ ສີງອຳໄພ ພົມພາພອນ
ຊອ ນ ອິນປອນ ເພັງສຸວັນ
ຊອ ລັດສະໝີ ພົນທິສານ

**ສາຍປະຫວັດສາດ ລະບົບ 12+4**
**ວິທະຍາໄລຄູສາລະວັນ**
**ສົກປີ 2021**

# ຄໍານໍາ

ເພື່ອປັບປຸງຄຸນນະພາບ, ປະສິດທິພາບຂອງການກໍ່ສ້າງຄູໃຫ້ສູງ, ແນໃສ່ເພີ່ມສະມັດຖະພາບຂອງຄູ ແລະ ແລະ ພັດທະນາອາຊີບຄູໃຫ້ດີຂຶ້ນເທື່ອລະກ້າວນັ້ນ. ຂ້າພະເຈົ້າຈຶ່ງໄດ້ຮຽບຮຽງປຶ້ມເຫຼັ້ມນີ້ຂຶ້ນມາ ເພື່ອຮັບໃຊ້ຢູ່ພາຍໃນສະຖາບັນສ້າງຄູ, ໂດຍສະເພາະໄດ້ພັດທະນາຕາມທິດທາງການສ້າງຄູແບບໃໝ່ ທີ່ເນັ້ນການປູກອຸດົມການ, ຄຸນນະທໍາ ແລະ ຈິດວິນຍານຂອງຄວາມເປັນຄູໃຫ້ແກ່ນັກຮຽນຄູ, ເຮັດໃຫ້ເຂົາເຈົ້າມີທັກສະວິຊາຊີບຄູທີ່ໜັກແໜ້ນ, ເຂົ້າໃຈດ້ານເຜົ່າພັນວິທະຍາ, ເຜົ່າພັນວິທະຍາຈະສຶກສາກ່ຽວກັບເຊື້ອຊາດ, ກຸ່ມຄົນ, ທິດສະດີໂຄງສ້າງ ໜ້າທີ່ ແລະ ທິດສະດີຄວາມຄິດຂັດແຍ່ງທີ່ເກີດຂຶ້ນລະຫວ່າງຊົນເຜົ່າ ແລະ ຊົນຊາດຕ່າງໆ. ສຶກສາລະບົບພາສາໃນໂລກ ແລະ ວັດທະນະທໍາຂອງບາງເຜົ່າໃນຂົງເຂດອາຊີ ແລະ ອາເມລິກາ, ພ້ອມນີ້ກໍຈະສຶກສາກ່ຽວກັບໂຄງສ້າງຊົນເຜົ່າໃນລາວ ພ້ອມນັ້ນຍັງມີຄວາມຮູ້ທົ່ວໄປ ແລະ ຄວາມຮູ້ວິຊາສະເພາະທີ່ແທດເໝາະກັບຊັ້ນທີ່ຕົນເອງສອນ.

ປຶ້ມເຫຼັ້ມນີ້ໄດ້ພັດທະນາດ້ວຍການປະກອບສ່ວນຈາກພະນັກງານ- ຄູອາຈານ , ນັກຮຽນ, ນັກສຶກສາ ທີ່ໃຫ້ຄວາມຮ່ວມມື ແລະ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງເພື່ອແນໃສ່ເຮັດໃຫ້ນັກຮຽນຄູທີ່ຈົບຈາກສະຖາບັນສ້າງຄູມີປະສິດທິພາບ, ມີຄວາມຮູ້ ແລະ ຄວາມເຂົ້າໃຈລາຍວິຊາທີ່ຕົນຮຽນຢ່າງເລິກເຊິ່ງ, ຮູ້ຈັກໝູນໃຊ້ວິທີການສິດສອນຫຼາຍຮູບຫຼາຍສີ ມີຄວາມຊໍານານໃນການສອນ ແບບເອົາຮຽນເປັນໃຈກາງ, ຮູ້ຈັກຜະລິດ ແລະ ນໍາໃຊ້ອຸປະກອນການຮຽນ-ການສອນທີ່ງ່າຍດາຍ ມີຄວາມຮັບຜິດຊອບໃນການພັດທະນາອາຊີບຄູຂອງຕົນ.

ປຶ້ມເຫຼັ້ມນີ້ຮຽບຮຽງຂຶ້ນມາອາດປະສະຈາກບໍ່ໄດ້ຄວາມຂາດຕົກບົກຜ່ອງ, ບໍ່ເໝາະສົມ, ບໍ່ສອດຄ່ອງ ແລະ ບໍ່ທັນສະພາບ ກະລຸນາປະກອບຄໍາຄິດຄໍາເຫັນຂອງຕົນ ເພື່ອຊ່ວຍປັບປຸງເຮັດໃຫ້ປຶ້ມເຫຼັ້ມນີ້ສົມບູນ ແລະ ມີປະສິດທິຜົນຍິ່ງຂຶ້ນ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ໜ໙໙໙໙໑໑໑໑

ວິທະຍາໄລຄູສາລະວັນ

ຫ້ອງການອະນຸບານ-ປະຖົມ

# ໃບຮັບຮອງການກວດແກ້ການຮຽບຮຽງຕຳລາຮຽນປະກອບການສອນ

## ຫົວຂໍ້: ເຜົ່າພັນວິທະຍາ

**ຫ້ອງການ:** ວິທະຍາສາດສັງຄົມ

**ຜູ້ຮຽບຮຽງປຶ້ມ:**

ທ່ານ ປທ ລຸ້ງຟ້າ ຂັນຕິວົງ

| ຄະນະກຳມະການກວດແກ້ປຶ້ມ | ລາຍເຊັນ |
|---|---|
| ທ່ານ ອຈ ປທ ສິງອຳໄພ ພົມພາພອນ | ........................ |
| ທ່ານ ຊອ ອິນປອນ ເພັງສຸວັນ | ........................ |
| ທ່ານ ຊອ ລັດສະໝີ ພົນທິສານ | ........................ |

**ທີ່ສາລະວັນ, ວັນທີ** ...24/2/2023

**ຫ້ອງການວິທະຍາສາດສັງຄົມ**

ນ. ຄຳຂີງ ຈັນທະວົງສັກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ
ສະພາວິທະຍາສາດ

ເລກທີ. 50......ສວ

# ໃບຮັບຮອງ

## ອະນຸມັດຜ່ານການຮັບຮອງການຮຽນຮຽງຕຳລາຫ້ອງການວິທະຍາສາດສັງຄົມ

- **ອີງຕາມ:** ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ.
- **ອີງຕາມ:** ແຜນປັບປຸງຄຸນນະພາບ QA ຂອງກະຊວງສຶກສາທິການ ແລະ ກິລາ, ໃນມາດຕະຖານທີ 10 ຕົວຊີ້ວັດທີ 48-50 ການຄົ້ນຄວ້າວິທະຍາສາດ ແລະ ການບໍລິການ.
- **ອີງຕາມ:** ຂໍ້ຕົກລົງວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ ສະພາວິທະຍາສາດຂອງວິທະຍາໄລຄູສາລະວັນ ສະບັບເລກທີ 0640/ວຄວ, ລົງວັນທີ 17 ກຸມພາ 2022.

ຈາກຜົນການກວດສອບ-ກວດກາທາງດ້ານເນື້ອໃນ ແລະ ຫຼັກການ. ຄະນະກຳມະການເຫັນວ່າປຶດຮຽນຮຽງມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ. ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ - ການສອນໃນວິທະຍາໄລຄູສາລະວັນ.

| ຄະນະກຳມະການກວດສອບ | ລາຍເຊັນ |
|---|---|
| ທ່ານ ອຈ ປທ ນາງ ຄຳຂຽງ ຈັນທະວົງສັກ | .............................. |
| ທ່ານ ຊອ ປທ ມອນໄຊ ຂັນທະຈັກ | .............................. |
| ທ່ານ ຊອ ປທ ໄພທອງ ພົງສິງຄາມ | .............................. |

ທີ່ ສາລະວັນ, ວັນທີ ..07 MAR 2023

ປະທານສະພາວິທະຍາສາດ

ອ.ຈ ນ. ສົມປອງ ແສນທະວິສຸກ

ສແກນດ້ວຍ CamScanner

# ສາລະບານ

**ບົດທີ 1**

ຄວາມຮູ້ທົ່ວໄປກ່ຽວກັບເຜົ່າພັນວິທະຍາ........................................................................ 1

1. ເຜົ່າພັນວິທະຍາແມ່ນຫຍັງ?............................................................................... 1

2. ການພົວພັນຂອງເຜົ່າພັນວິທະຍາກັບວິທະຍາສາດອື່ນໆ. .............................................. 5

**ບົດທີ 2**

ເຊື້ອຊາດໃນໂລກ...................................................................................... 7

1. ວິວັດທະນາການຂອງມະນຸດ. ............................................................................ 7

2. ເຊື້ອຊາດ. ................................................................................................ 9

3. ການແຈກຢາຍເຊື້ອຊາດໃນໂລກ........................................................................ 12

4. ການຍ້າຍຖິ່ນຂອງເຊື້ອຊາດ. ............................................................................ 14

**ບົດທີ 3**

ກຸ່ມຄົນສໍາພັນ.......................................................................................... 18

1. ນິຍາມກຸ່ມຄົນສໍາພັນ. .................................................................................... 18

2. ກຸ່ມຄົນສໍາພັນ.............................................................................................. 18

3.ລັກສະນະຄວາມແຕກຕ່າງທາງເຜົ່າພັນ.................................................................. 19

**ບົດທີ 4**

ຕະກຸນພາສາໃນໂລກ .................................................................................. 22

1. ເຄົ້າກໍາເນີດຂອງພາສາ. .................................................................................... 22

2. ພາສາ ແລະ ຄວາມສໍາຄັນຂອງພາສາ.................................................................... 24

3. ຄວາມສໍາຄັນຂອງພາສາ. ................................................................................ 25

4. ທັດສະນະກ່ຽວກັບພາສາ. ................................................................................ 26

5. ຕະກຸນພາສາໃນໂລກ. .................................................................................... 29

**ບົດທີ 5**

ແນວຄິດທິດສະດີກ່ຽວກັບຊົນເຜົ່າ .................................................................... 31

1. ແນວຄິດທິດສະດີໂຄງສ້າງເລື່ອງຄວາມສໍາພັນລະຫວ່າງງກຸ່ມຊົນເຜົ່າ. ............................... 31

**ບົດທີ 6**

ບັນດາຊົນເຜົ່າໃນລາວ.................................................................................. 36

1. ໂຄງສ້າງຂອງຊົນເຜົ່າຢູ່ໃນລາວໃນສະໄໝການປະຕິວັດຊາດເຖິງຄ.ສ 1975 - 1986 ........................ 36

5. ການແຈກຢາຍຊົນເຜົ່າໃນລາວ.......................................................................... 46

6. ການຍ້າຍຖິ່ນຂອງຊົນເຜົ່າໃນລາວ. ...................................................................... 48

**ບົດທີ 7**

ວັດທະນະທຳບາງຊົນເຜົ່າໃນລາວ. ........................................ 49
1. ຄວາມໝາຍວັດທະນະທຳ. ........................................ 49
2. ອາຊີບຂອງຊົນເຜົ່າລາຫູ ........................................ 62
3. ພາສາປາກເວົ້າຂອງຊົນເຜົ່າລາຫູ ........................................ 62
4. ທີ່ຕັ້ງບ້ານ ແລະ ເຮືອນ ........................................ 63
5. ເຄື່ອງນຸ່ງຫົ່ມ ........................................ 64
6. ອາຫານ ແລະ ເຄື່ອງດື່ມ ........................................ 65
7. ຄວາມເຊື່ອຖື ........................................ 65

<u>ພາກເພີ່ມເຕີມ</u>

ຊົນເຜົ່າລື້ ........................................ 89
ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ ........................................ 89
ຄວາມເຊື່ອຖື. ........................................ 91
ຊົນເຜົ່າອິວມຽນ ........................................ 92
ປະຫວັດຄວາມເປັນມາ ........................................ 93
ທີ່ຕັ້ງບ້ານ ແລະ ເຮືອນ ........................................ 94
ຊົນເຜົ່າມົ້ງ ........................................ 97
ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ ........................................ 97
ຊົນເຜົ່າອາຄາ ........................................ 102
ຄວາມເປັນມາຂອງຊົນເຜົ່າອາຄາ ........................................ 102
ອາຫານ ແລະ ເຄື່ອງດື່ມ. ........................................ 104
ຊົນເຜົ່າໂລໂລ ........................................ 106
ປະຫວັດຄວາມ ແລະ ຊື່ເອີ້ນ ........................................ 106
ເຜົ່າຊິງມູນ ........................................ 108
ປະຫວັດຄວາມເປັນມາຂອງເຜົ່າຊິງມູນ ........................................ 108
ອາຊີບຂອງຊົນເຜົ່າຊິງມູນ ........................................ 110
ອາຫານ ແລະ ເຄື່ອງດື່ມ ........................................ 111
ການແຕ່ງງານ ແລະ ປະເພນີ ........................................ 111
ຊົນເຜົ່າສາມຕ່າວ. ........................................ 112
ປະຫວັດຄວາມມາ ແລະ ຊື່ເອີ້ນ ........................................ 112
ຊົນເຜົ່າຕຣີ ........................................ 115

ປະຫວັດຄວາມເປັນມາ ແລະ ຊື່ເອີ້ນຊົນເຜົ່າຕຣີ......115
ເຜົ່າຊົນເຜົ່າມະກອງ......118
ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ......118
ເຄື່ອງນຸ່ງຫົ່ມ......119
ເຜົ່າຕະໂອ້ຍ......120
ປະຫວັດຄວາມເປັນມາ ແລະ ຊື່ເອີ້ນຂອງຊົນເຜົ່າຕະໂອ້ຍ......120
ອາຊີບຂອງຊົນເຜົ່າຕະໂອ້ຍ......121
ພາສາປາກເວົ້າ......123
ຊົນເຜົ່າກຶມມຸ......123
ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ......123
ຊົນເຜົ່າຊ່ວຍ......126
ປະຫວັດຄວາມເປັນ ແລະ ຊື່ເອີ້ນ......126
ອາຊີບຂອງຊົນເຜົ່າຊວ່ຍ......127
ເຄື່ອງນຸ່ງຫົ່ມ......127
ຊົນເຜົ່າກະຕູ......129
ປະຫວັດຄວາມເປັນມາ ແລະ ຊື່ ເອີ້ນ......129
ເຜົ່າໂອຍ......131
ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ......131
ທີ່ຕັ້ງບ້ານ ແລະ ເຮືອນ......132
ອາຫານ ແລະ ເຄື່ອງດື່ມ......134
ພາສາປາກເວົ້າ......135
ເຜົ່າຍະເຫີນ......136
ປະຫຫັວດຄວາມເປັນມາ ແລະ ຊື່ເອີ້ນ......136
ພາສາປາກເວົ້າ......137
ຊົນເຜົ່າຂະແມ......138
ປະຫັວດຄວາມເປັນມາຂອງຊົນເຜົ່າຂະແມ......138
ຊົນເຜົ່າພູນ້ອຍ......140
ປະຫວັດຄວາມເປັນມາ ແລະ ຊື່ເອີ້ນຂອງເຜົ່າພູນ້ອຍ......140
ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ......142
ອາຫານ ແລະ ເຄື່ອງດື່ມ......143
ເອກະສານອ້າງອີງ......136

# ບົດທີ 1
# ຄວາມຮູ້ທົ່ວໄປກ່ຽວກັບເຜົ່າພັນວິທະຍາ

## 1. ເຜົ່າພັນວິທະຍາແມ່ນຫຍັງ?

ເຜົ່າວິທະຍາ ແມ່ນພາກສ່ວນໜຶ່ງຂອງວິທະຍາສາດສັງຄົມ ແລະ ແມ່ນພາກສ່ວນໜຶ່ງຂອງ ວິຊາປະຫວັດສາດ.

ເຜົ່າພັນວິທະຍາ (Ethnography) ໄດ້ມາຈາກສອງຄຳສັບຂອງພາສາກະເຣັກບູຮານ : Etthno (ຊົນຊາດ) ແລະ Graphy (ພັນລະນາ). ດັ່ງນັ້ນ, ອີງຕາມຄວາມໝາຍຂອງສອງຄຳສັບດັ່ງກ່າວມາຂ້າງເທິງນັ້ນ ເຜົ່າພັນວິທະຍາ ແມ່ນ ວິທະຍາສາດ ທີ່ພັນລະນາຊົນຊາດ ແລະ ຊົນເຜົ່າຕ່າງໆ ກ່ຽວກັບ ຮູບຮ່າງລັກສະນະ, ແບບແຜນການດຳລົງຊີວິດ, ຮີດຄອງປະເພນີ ແລະ ສາຍພົວພັນທາງດ້ານວັດທະນະທຳຂອງບັນດາຊົນຊາດ ຊົນເຜົ່າຕ່າງໆ ໃນໂລກ.

### 1.1. ເປົ້າຫມາຍຂອງເຜົ່າພັນວິທະຍາ.

ເນື່ອງຈາກວ່າ ປະຊາກອນຢູ່ໃນໂລກນີ້ແມ່ນປະກອບດ້ວຍຫຼາຍເຊື້ອຊາດ ແລະ ຫຼາຍຊົນເຜົ່າທີ່ມີລະດັບການຂະຫຍາຍຕົວທາງດ້ານເສດຖະກິດ, ສັງຄົມ, ວັດທະນະທຳ ແລະ ອື່ນໆທີ່ຫຼຸດລົ່ນ ແລະ ແຕກຕ່າງກັນຫຼາຍທີ່ສຸດເຊັ່ນ: ບາງຊົນຊາດມີຄວາມກ້າວໜ້າທາງດ້ານວິທະຍາສາດ - ເຕັກໂນໂລຢີສູງ, ສັງຄົມມີຄວາມສີວິໄລ, ລະດັບຊີວິດການເປັນຢູ່ຂອງປະຊາຊົນມີຄວາມສະດວກສະບາຍ ແລະ ພຽງພໍກັບຄວາມຕ້ອງການແຕ່ກົງກັນຂ້າມ. ໃນເວລາດຽວກັນ ພັດມີບາງຊົນຊາດ ຫຼື ບາງຊົນເຜົ່າ ຍັງດ້ອຍພັດທະນາ ລະດັບຊີວິດການເປັນຢູ່ຂອງຄົນ ໃນສັງຄົມຍັງຄ້າຍຄືສັງຄົມປະຖົມບູຮານ ດັ່ງນັ້ນ, ເຜົ່າພັນວິທະຍາ ຈິ່ງມີເປົ້າໝາຍໃນການຄົ້ນຄວ້າດັ່ງນີ້:

- ຄົ້ນຄວ້າທັງໝົດບັນດາຊົນຊາດ ແລະ ຊົນເຜົ່າທີ່ດຳລົງຊີວິດຢູ່ບົນໜ້າໂລກ, ນັບແຕ່ຊົນຊາດທີ່ຂະຫຍາຍຕົວຊ້າ ຫຼື ດ້ອຍພັດທະນາ ຈົນຮອດຊົນຊາດທີ່ມີການພັດທະນາແລ້ວ.
- ຄົ້ນຄ້ວາຮ່ອງຮອຍເສດເຫຼືອຂອງສັງຄົມປະຖົມບູຮານທີ່ຍັງຄົງຄ້າງໄວ້ຢູ່ນຳແຕ່ລະຊົນຊາດຊົນເຜົ່າ ໄປພ້ອມໆກັບການຄົ້ນຄ້ວາ ບັນຫາທີ່ກ້າວໜ້າ ແລະ ທັນສະ ໄໝ.

ໃນສະໄໝກ່ອນນັກຄົ້ນຄວ້າທຶນນິຍົມ ເຂົາເຈົ້າເຄີຍເອົາໃຈໃສ່ດ້ານຫຼ້າຫຼັງຂອງບັນດາຊົນຊາດ ແລະ ຊົນເຜົ່າຕ່າງໆເທົ່ານັ້ນ ໂດຍສະເພາະແມ່ນການຄົ້ນຄ້ວາອັນທີ່ເອີ້ນວ່າ ສິ່ງເສດເຫຼືອຂອງສັງຄົມປະຖົມບູຮານ ທີ່ຕົກຄ້າງໄວ້ກັບບັນດາຊົນຊາດ ຊົນເຜົ່າຕ່າງໆໃນປະຈຸບັນເຊັ່ນ:

- ຊົນເຜົ່າເດີມຢູ່ Australia.
- ຊົນເຜົ່າເດີມຢູ່ Africa.
- ຊົນເຜົ່າເດີມຢູ່ America.
- ຊົນເຜົ່າເດີມ Asia.

ໝາຍຄວາມວ່າ ໄດ້ເອົາໃຈໃສ່ດ້ານຫຼ້າຫຼັງຫຼາຍກ່ວາດ້ານກ້າວໜ້າແຕ່ມາຮອດປະຈຸບັນພວກນາຍທຶນເອີຣົບພັດມີທັດສະນະໃໝ່ເກີດຂຶ້ນຄື: ເຜົ່າພັນວິທະຍາ ຢາກຄົງຕົວຢູ່ໄດ້ ຕ້ອງຄົ້ນຄ້ວາ ບັນດາຊົນຊາດ ຊົນເຜົ່າທີ່ກ້າວໜ້າ. ສະເພາະຢູ່ບ້ານເຮົາໃນປະຈຸບັນ ແມ່ນຍັງນອນຢູ່ໃນໄລຍະພວມພັດທະນາ ສະນັ້ນ, ວຽກງານການຄົ້ນຄ້ວາ ສັງຄົມປະຖົມບູຮານ ຫຼື ສິ່ງເສດເຫຼືອຂອງສັງຄົມປະຖົມບູຮານ ກໍແມ່ນບັນຫາໜຶ່ງທີ່ຄວນເອົາໃຈໃສ່ ເພາະຢູ່ບ້ານເຮົາ ສິ່ງດັ່ງກ່າວກໍ່ຍັງປະກົດມີຢູ່ເຊັ່ນ: ພວກຕອງເຫຼືອງ ຢູ່ໄຊຍະບູລີ ແລະ ຄຳມ່ວນ ແລະ ປະກົດການການເອົາເມຍຫຼາຍຄົນ ແລະ ອື່ນໆ.

- ຄົ້ນຄ້ວາທາງດ້ານວັດທະນະທຳ ໃນການຄົ້ນຄ້ວາທາງດ້ານວັດທະນະທຳອາດຈະແບ່ງວັດທະນະທຳອອກເປັນ 2 ປະເພດຄື: ວັດທະນະທຳທາງດ້ານວັດຖຸ ແລະ ວັດທະນະທຳທາງດ້ານຈິດໃຈ.

• ວັດທະນະທຳທາງດ້ານວັຖຸ ແມ່ນສິ່ງທີ່ມະນຸດປະດິດສ້າງຂຶ້ນເປັນຮູບປະທຳຄື: ເຄື່ອງມືການຜະລິດ.....

• ວັດທະນະທຳທາງດ້ານຈິດໃຈ ແມ່ນເປັນຮູບນາມມະທຳຄື: ຄວາມຄິດ,ຄວາມເຊື່ອ,ວິທະຍາສາດ....

ສະນັ້ນ ເຜົ່າພັນວິທະຍາ ຈິ່ງເຫັນວ່າ ວັດທະນະທຳເປັນຮາກຖານທາງສັງຄົມ ທີ່ຊຸກຍູ້ໃຫ້ຊາດ ຫຼື ເຜົ່າຍືນຍົງຄົງຕົວ ແລະ ຂະຫຍາຍຕົວ.ພື້ນຖານວັດທະນະທຳຂອງແຕ່ລະຊົນ, ຊົນເຜົ່າຍາມໃດກໍ່ມີເອກະລັກສະເພາະຂອງຕົນຊຶ່ງບໍ່ມີວັດທະນະທຳຂອງຊົນເຜົ່າໃດຄ້າຍຄື ແລະ ມັນກໍແມ່ນມາດຖານອັນໜຶ່ງເພື່ອຈຳແນກຄວາມແຕກຕ່າງລະຫວ່າງນີ້ກັບຊາດນັ້ນ ຫຼື ເຜົ່ານີ້ກັບເຜົ່າອື່ນ.

**1.2. ໜ້າທີ່ຂອງເຜົ່າພັນວິທະຍາ.**

ເຜົ່າພັນວິທະຍາ ມີໜ້າທີ່ໃນການສຶກສາຄົ້ນຄ້ວາບັນຫາຕ່າງໆ ຂອງຊົນຊາດ ແລະ ຊົນເຜົ່າທີ່ຍັງຄົງຢູ່ ຫຼື ໄດ້ສູນເສຍໄປພ້ອມກັບໄລຍະປະຫວັດສາດອັນຍາວນານຂອງຊົນຊາດ ແລະ ຊົນເຜົ່າເອງຢ່າງຮອບດ້ານເພື່ອສຶກສາຄົ້ນຄວ້າເລື່ອງອາດີດປະຈຸບັນ ແລະ ອານາຄົດ.

**1.2.1. ຄົ້ນຄວ້າໂຄງປະກອບຂອງຊົນເຜົ່າຢູ່ພາຍໃນປະເທດ ຫຼື ໃນທົ່ວໂລກ.**

ການຄົ້ນຄວ້າໂຄງປະກອບຂອງ ຊົນເຜົ່າຢູ່ພາຍໃນປະເທດໜຶ່ງ ຫຼື ໃນທົ່ວໂລກນັ້ນເປັນໜ້າທີ່ໆສຳຄັນ ທີ່ຈະຕ້ອງໄດ້ເອົາໃຈໃສ່ເປັນພິເສດ ເພາະວ່າຢູ່ໃນປະເທດ ຫຼື ທ້ອງຖິ່ນໜຶ່ງໆ ມັນປະກອບມີຫຼາຍຊົນເຜົ່າທີ່ດຳລົງຊີດຢູ່ຮ່ວມກັນແຕ່ກໍມີບາງປະເທດທີ່ມີແຕ່ຊົນເຜົ່າດຽວຄື: ປະເທດເກົາຫຼີ ສຳລັບປະເທດທີ່ມີຫຼາຍຊົນເຜົ່າ ແລະມີຊາຍແດນຕິດຈອດກັບຫຼາຍປະເທດນັ້ນ ບັນຫາທີ່ຄວນເອົາໃຈໃສ່ເປັນພິເສດນັ້ນແມ່ນ ບັນດາຊົນເຜົ່າທີ່ຢູ່ລຽບຕາມຊາຍແດນເຊັ່ນ: ລາວ-ຫວຽດ, ລາວ-ໄທ, ລາວ - ຈີນ...ດັ່ງນັ້ນ, ການຄົ້ນຄ້ວາໂຄງສ້າງປະກອບສ້າງຂອງແຕ່ລະຊົນເຜົ່າຢູ່ລາວເຮົາກໍ່ແມ່ນສິ່ງໜຶ່ງທີ່ສຳຄັນ ເພາະຢູ່ບ້ານເຮົາມີຫຼາຍຊົນເຜົ່າ ມັນຈິ່ງຮຽກຮ້ອງໃຫ້ມີການກຳນົດແຕ່ລະຊົນເຜົ່າໃຫ້ຈະແຈ້ງ ແລະ ຊັດເຈນ ຖ້າເຮັດໄດ້ແນວນັ້ນກໍ່ແມ່ນການປະກອບສ່ວນທີ່ຄັນ ແລະ ໃຫຍ່ຫຼວງ ເຂົ້າໃນການປະຕິບັດນະໂຍບາຍຊົນເຜົ່າຂອງພັກ - ລັດ ຊຶ່ງປະຈຸບັນຢູ່ລາວເຮົາກໍ່ພວມດຳເນີນການສຳຫຼວດ ແລະ ເກັບກຳສະຖິຕິນີ້ຢູ່

**1.2.2. ຄົ້ນຄ້ວາກົກເຄົ້າຂອງຊົນເຜົ່າ.**

ກົກເຄົ້າຂອງຊົນເຜົ່າ ແມ່ນບັນຫາທຳອິດ ທີ່ໄດ້ວາງອອກໃນເວລາເລີ່ມລົງມືຄົ້ນຄ້ວາ ຊົນເຜົ່າໃດໜຶ່ງ.ໃນການຄົ້ນຄ້ວາ ບັນຫານີ້ມັນບໍ່ພຽງແຕ່ມີວິຊາເຜົ່າພັນວິທະຍາເທົ່ານັ້ນທີ່ມີໜ້າທີ່ຄົ້ນຄ້ວາ ແຕ່ມັນຍັງກ່ຽວຂ້ອງ ແລະພົວພັນເຖິງ ການປະກອບສ່ວນອັນສຳຄັນ ແລະ ຢ່າງຕັ້ງໜ້າຂອງວິທະຍາສາດສາຂາອື່ນໆເຊັ່ນ: ວິຊາປະຫວັດສາດ, ບູຮານວິທະຍາ, ມະນຸດວິທະຍາ, ພາສາສາດ... ກົກເຄົ້າຂອງຊົນເຜົ່າມັນແມ່ນບັນຫາໜຶ່ງສຸດທີ່ກ້ວາງຂວາງ ແລະຫຍຸ້ງຍາກ, ເພາະມັນບໍ່ແມ່ນເຫດການທີ່ເກີດຂຶ້ນໃນໄລຍະສັ້ນໆ ແຕ່ມັນແມ່ນໝາກຜົນຂອງມວນມະນຸດເປັນຜູ້ສ້າງຂຶ້ນ ໃນຊ່ວງໄລຍະເວລາອັນດົນນານທີ່ສຸດ ເຫດນັ້ນການທີ່ນັກຊົນເຜົ່າວິທະຍາຈະຮູ້ໄດ້ຢ່າງເລິກຊຶ້ງເຖິງກົກເຄົ້າ ແລະຄວາມເປັນມາຂອງແຕ່ລະຊົນເຜົ່ານັ້ນຈຶ່ງເປັນໜ້າທີ່ອັນສຳຄັນຂອງນັກຊົນເຜົ່າວິທະຍາທັງຫຼາຍເພື່ອຈະເຂົ້າໄປເຖິງປະຫວັດສາດການກຳເນີດຂອງແຕ່ລະຊົນເຜົ່າ.

ປະຫວັດສາດການກຳເນີດຂອງຊົນເຜົ່າຕ່າງໆ ເວລາໃດກໍຕິດພັນກັບປະຫວັດສາດ ເສດຖະກິດ, ສັງຄົມ, ການເມືອງ ແລະ ວັດທະນະທຳຂອງຊາດ. ແຕ່ບາງຄັ້ງພາສາ ແລະ ຊື່ ຂອງຊົນເຜົ່າທີ່ເປັນຊ່ອງທາງ ໃຫ້ເຂົ້າໄປເຖິງກົກເຄົ້າຂອງຊົນເຜົ່ານັ້ນອາດມີການປ່ຽນແປງຫຼື ຫາຍໄປຍ້ອນເງື່ອນໄຂປະຫວັດສາດຊົນເຜົ່າຖືກສົງຄາມ ແລະ ການບຸກລຸກຮຸກຮານຈາກກຸ່ມຄົນພາຍນອກ.

**1.2.3. ຄົ້ນຄວ້າຮ່ອງຮອຍວັດທະນະທຳຊົນເຜົ່າ.**

ຮ່ອງຮອຍທາງວັດທະນະທຳ ແມ່ນປັດໃຈໜຶ່ງທີ່ສຳຄັນບໍ່ວ່າທາງດ້ານທິດສະດີກໍຄືໃນພາກປະຕິບັດ ເພາະວ່າ ນັບທັງຊົນເຜົ່າທີ່ຂະຫຍາຍຕົວຊ້າກໍ່ຄືຊົນເຜົ່າທີ່ຂະຫຍາຍຕົວໄວ ຫຼື ຊົນເຜົ່າທີ່ມີພົນລະເມືອງນ້ອຍກໍຄືຊົນເຜົ່າທີ່ມີພົນລະເມືອງຫຼາຍ ກໍລ້ວນແຕ່ມີພື້ນຖານທາງວັດທະນະທຳສະເພາະຂອງແຕ່ລະຊົນເຜົ່າ ແລະ ລ້ວນແລ້ວແຕ່ມີໜ້າທີ່ປະກອບສ່ວນເຂົ້າໃນການສ້າງວັດທະນະທຳລວມຂອງສັງຄົມມະນຸດ.

ຕົວຢ່າງເຊັ່ນ: ວັດທະນະທຳຂອງຊົນເຜົ່າລາວ ແລະ ວັດທະນະທຳຂອງຊົນເຜົ່າມົ້ງ ຮົາອາດປຽບທຽບສອງວັດທະນະທຳນດັ່ງນີ້:

| ວັດທະນະທຳຊົນເຜົ່າລາວ | ວັດທະນະທຳຊົນເຜົ່າມົ້ງ |
|---|---|
| ມີສະຖາປະຕະຍະກຳວັດວາອາຮາມ | ມີຫິ້ງບູຊາຜີ |
| ນັບຖືສາສະໜາພຸດ | ນັບຖືຜີ |
| ມີສິນລະປະຟ້ອນ, ລຳ | ມີຂັບລຳ |
| ເປົ່າປີ່, ເປົ່າແຄນ | ເປົ່າປີ່, ເປົ່າເຕີນ, ເປົ່າແຄນ ເບິ່ງໃບໄມ້ |
| ການສ້າງບ້ານເຮືອນຍົກພື້ນ | ການສ້າງບ້ານເຮືອນບໍ່ຍົກພື້ນ |
| ຕ່ຳຫູກ | ຫຍິບປັກທັກແສ່ວ |

ຈາກການສັງເກດການປຽບທຽບວັດທະນະທຳຊົນເຜົ່າລາວ ແລະ ຊົນເຜົ່າມົ້ງເທິງ ນັ້ນເຮົາເຫັນວ່າຊົນເຜົ່າລາວ ແລະ ຊົນເຜົ່າມົ້ງລ້ວນມີວັດທະນະທຳເປັນຂອງຕົນເອງ ເພື່ອປະຕິບັດໃນວິຖີຊີວິດຂອງແຕ່ລະຊົນເຜົ່າ ຈະນ້ອຍຫຼື ຫຼາຍຈະເດັ່ນ ຫຼື ບໍ່ເດັ່ນແຕ່ກໍເປັນວັດທະນະທຳຂອງຊົນເຜົ່ານັ້ນໆ ແລະ ເປັນຕົວແທນຂອງຊົນເຜົ່າໃນການປະກອບສ່ວນເຂົ້າໃນສັງວັດທະນະທຳຂອງມວນມະນຸດໄດ້ເຊັ່ນດຽວກັນ. ສະເພາະປະເທດລາວຂອງພວກເຮົາ ເປັນປະເທດໜຶ່ງທີ່ມີຫຼາຍຊົນເຜົ່າ, ມີຄວາມລາກຫຼາຍທາງດ້ານວັດທະນະທຳທີ່ເປັນເອກະລັກຂອງແຕ່ລະຊົນເຜົ່າ, ດັ່ງນັ້ນການຄົ້ນຄວ້າຮ່ອງຮອຍທາງວັດທະນະທຳຂອງຊົນເຜົ່າຈຶ່ງຕ້ອງອາໃສຄວາມລະອຽດອ່ອນຮຽນຮູ້ ແລະ ເຂົ້າໃຈກ່ຽວກັບວັດທະນະທຳດັ່ງກ່າວຈຶ່ງສາມາດເຂົ້າໄປເຖິງຊົນເຜົ່ານັ້ນໄດ້. ໃນປະຈຸບັນການຄົ້ນຄວ້າວັດທະນະທຳຂອງແຕ່ລະຊົນເຜົ່າສ່ວນຫຼາຍເປັນການຄົ້ນຄວ້າເພື່ອຮັບໃຊ້ໜ້າທີ່ການເມືອງແລະ ນະໂຍບາຍຂອງພັກ - ລັດ ເປັນອັນສຳຄັນ ແລະ ເປັນໜ້າທີ່ຕົ້ນຕໍຂອງການຄົ້ນຄວ້າວັດທະນະທຳຊົນເຜົ່າ. ໂດຍນັ້ນໃຫ້ບັນດາຊົນເຜົ່າກຸ່ມຕ່າງໆໃຫ້ມີການແລກປ່ຽນສຳພັນລະຫວ່າງວັດທະນະທຳຂອງແຕ່ລະຊົນເຜົ່າເພື່ອຫຍັບເຂົ້າຫາກັນໃຫ້ເປັນອັນໜຶ່ງອັນດຽວກັນ ຊ່ວຍເຫຼືອຊຶ່ງກັນ ແລະ ກັນ ໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດໃຫ້ຊົນເຜົ່າຕ່າງໆໃນດິນແດນລາວແຫ່ງນີ້ມີຈິດສຳນຶກໃນຄວາມເປັນຄົນລາວ ແລະ ຊາດລາວຢ່າງສົມບູນ.

### 1.2.4. ຄົ້ນຄວ້າຮີດຄອງປະເພນີ.

ຄົ້ນຄວ້າຮີດຄອງປະເພນີ ແມ່ນວຽກງານໜຶ່ງທີ່ສຳຄັນຂອງ ເຜົ່າພັນວິທະຍາ ເພາະວ່າທຸກຊົນຊາດ ຊົນເຜົ່າລ້ວນແລ້ວແຕ່ມີຮີດຄອງປະເພນີທີ່ເປັນເອກະລັກຂອງຊົນຊາດຊົນເຜົ່ານັ້ນ ແລະ ຊົນຊາດຊົນເຜົ່ານັ້ນໄດ້ປະຕິບັດຍຶດຖືກັນມາເປັນເວລານານ. ດັ່ງນັ້ນ, ຮີດຄອງປະເພນີ ດັ່ງກ່າວຈຶ່ງເປັນຮີດຄອງປະເພນີທີ່ສະແດງເຖິງຄວາມເປັນຊາດ ແລະ ຄວາມເປັນເຜົ່າ ຂອງກຸ່ມຄົນຕ່າງໆ, ຮີດຄອງປະເພນີຂອງແຕ່ລະຊົນຊາດຊົນເຜົ່າບາງຄັ້ງອາດມີຈຸດມຸ່ງໝາຍຄືກັນ ແຕ່ການເຄື່ອນໄຫວທາງກິດຈະກຳອາດແຕກຕ່າງກັນລວມທັງທາງດ້ານວັນເວລາ, ການກະທຳ ແລະ ການປະຕິບັດດັ່ງນັ້ນຮີດຄອງປະເພນີຈຶ່ງເປັນເງື່ອນໄຂໜຶ່ງທີ່ສຳຄັນເພື່ອໃຫ້ເຮົາຈຳແນກຊົນຊົນຊາດຊົນເຜົ່າຕ່າງໆດັ່ງນັ້ນເຊັ່ນ: ຮູບແບບຂອງຄວາມເຊື່ອ ໃນເລື່ອງຂອງຄວາມເຊື່ອອາດແຍກອອກເປັນຄວາມເຊື່ອທີ່ເຮົາເຄີຍເອີ້ນເປັນພາສາລາວວ່າ ສາສະໜາ ແລະ ຄວາມເຊື່ອທີ່ເອີ້ນວ່າ: ໄສຍະສາດ ໂດຍທົ່ວໄປ ພິທີກຳບາງຢ່າງມີລັກສະນະປະສົມປະສານລະຫວ່າງສາສະໜາ ແລະ ໄສຍະສາດໃນລະດັບຄວາມເຊື່ອ ແລະ ການປະຕິບັດ ດັ່ງນັ້ນ ເພື່ອໃຫ້ເຫັນຂໍ້ແຕກຕ່າງລະຫວ່າງສາສະໜາ ແລະ ໄສຍະສາດ ຕາລາງຕໍ່ໄປນີ້ຈະສະແດງໃຫ້ເຫັນສ່ວນທີ່ຄືກັນ ແລະ ສ່ວນທີ່ແຕກຕ່າງກັນຂອງຄວາມເຊື່ອທາງສາສະໜາ ແລະ ຄວາມເຊື່ອທາງໄສຍະສາດ.

| ສາສະໜາ | ໄສຍະສາດ |
|---|---|

| | |
|---|---|
| 1. ເຊື່ອໃນສິ່ງສັກສິດທີ່ເໜີທຳມະຊາດ | 1. ເຊື່ອໃນສິ່ງສັກສິດທີ່ເໜືອທຳມະຊາດ |
| 2. ຄວາມເຊື່ອຢູ່ເໜືອປະສົບການໂດຍກົງ | 2. ຄວາມເຊື່ອເໜືອປະສົບການໂດຍກົງ |
| 3. ມີລະບົບສັນຍາລັກ | 3. ມີລະບົບສັນຍາລັກ . |
| 4. ມີພິທີກຳ ແລະຜູ້ປະກອບພິທີກຳ | 4. ມີພິທີກຳ ແລະຜູ້ປະກອບພິທີກຳ |
| 5. ຜູ້ປະກອບພິທີກຳຄືຕົວແທນຂອງຜູ້ ສືບທອດສາສະໜາຫຼືພະແຕ່ຈະເປັນ ພະຮູບໃດອົງໃດກໍໄດ້ | 5. ຜູ້ປະກອບພິທີກຳຄືຕົວແທນຂອງສິ່ງ ສັກສິດສິ່ງໃດສິ່ງໜຶ່ງ ຊຶ່ງເປັນຕົວແທນ ທີ່ຖືກກຳນົດໄວ້ແລະໂດຍທົ່ວໄປແລ້ວ ບໍ່ອາດປະກອບພິທີແທນກັນໄດ້. |
| 6. ພິທີກຳມີວັດຖຸປະສົງກວ້າງໆ ເຊັ່ນ: ເພື່ອຂໍໃຫ້ມີຄວາມສຸກຄວາມຈະເລີນ ໄດ້ສົມດັ່ງປາດຖະໜາ | 6. ພິທີກຳມີວັດຖຸປະສົງສະເພາະ ເຊັ່ນ: ເພື່ອໃຫ້ບຸກຄົນຫາຍຈາກໂລກເພື່ອທຳ ລ້າຍສັດຕູ, ຂໍຝົນ ເປັນຕົ້ນ. |
| 7. ຂັ້ນຕອນຂອງພິທີກຳມັກເປັນ ສວດຂໍ ແລະບໍ່ມີການຈັດການໃຫ້ເກີດ ກິດຈະກຳເຊີງຮູບປະທຳ | 7. ຂັ້ນຕອນຂອງພິທີກຳມັກເປັນການດຳ ເນີນການເຊີງຮູບປະທຳເຊັ່ນການປຸກ ເສກ ການນຳຮາກໄມ້ມາໃສ່ຂັນຂອງໝໍຜີ |

## 2. ການພົວພັນຂອງເຜົ່າພັນວິທະຍາກັບວິທະຍາສາດອື່ນໆ.

2.1. ພົວພັນກັບປະຫວັດສາດ.

ນັກວິທະຍາສາດເຄີຍຕັ້ງຄຳຖາມວ່າ ເຜົ່າພັນວິທະຍາ ຕ່າງກັບ ປະຫວັດສາດຢູ່ບ່ອນໃດ? ໃນຕົວຈິງແລ້ວ ເຜົ່າພັນວິທະຍາ ເປັນວິຊາໜຶ່ງທີ່ຄົ້ນຄວ້າກ່ຽວກັບກົກເຄົ້າການກຳເນີດມະນຸດ ແລະ ຄວາມເປັນມາຂອງຊົນຊາດ ຊົນເຜົ່າ ແລະ ເຊື້ອຊາດຕ່າງໆເຫດນັ້ນ ເຜົ່າພັນວິທະຍາ ຈຶ່ງມີ ສ່ວນທີ່ຄ້າຍຄືກັບ ວິຊາປະຫວັດສາດກໍ່ຄືຄົ້ນຄວ້າເຖິງ ວິວັດທະນາການຂອງມວນມະນຸດແຕ່ເລີ່ມການກຳເນີດຈົນເຖິງປະຈຸບັນ

ພົວພັນກັບບູຮານຄະດີ.

ນັກຄົ້ນຄວ້າບູຮານນຄະດີຂຸດຄົ້ນ ແລະ ຄົ້ນຄວ້າວັດຖຸຕ່າງໆໃນຊັ້ນດິນຕ່າງໆຢູ່ຂົງເຂດໜຶ່ງ ສ່ວນເຜົ່າພັນວິທະຍາ ສຶກສາກ່ຽວກັບວິວັດທະນາການກຳເນີດການດຳລົງຊີວິດຂອງເຮົາຕ້ອງໄດ້ອີງໃສ່ວັດຖຸທີ່ບູຮານຄະດີຂຸດຄົ້ນມາໄດ້ນັ້ນເພື່ອເປັນຫຼັກຖານໃນການພິສູດກົກເຄົ້າການກຳເນີດ ແລະ ການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ວັດທະນະທຳຂອງເຜົ່ານັ້ນໆ.

2.2. **ພົວພັນກັບພາສາສາດ.**

ນັກຄົ້ນຄວ້າເຜົ່າພັນວິທະຍາ ຢາກເຂົ້າເຖິງຊົນເຜົ່າໄດ້ດີທີ່ສຸດກໍຕໍ່ເມື່ອຮູ້ພາສາຂອງຊົນເຜົ່ານັ້ນ ເພາະວ່າພາສາເປັນທີ່ສຳຄັນທີ່ນຳໄປເຖິງສິ່ງທີ່ນັກຄົ້ນຄວ້າຕ້ອງການທີ່ຈະຢູ່ຮ່ວມກັບຊົນເຜົ່າ, ສອບຖາມເຫດການຕ່າງໆ. ຟັງການເລົ່າຄືນຂອງຊົນເຜົ່າ ເພາະສະນັ້ນພາສາ ຈຶ່ງຈຳເປັນທີ່ສຸດສຳຫລັບນັກຄົ້ນຄວ້າເຜົ່າພັນວິທະຍາ.

2.3. **ພົວພັນກັບວັນນະຄະດີ.**

ການທີ່ເຜົ່າພັນວິທະຍາມີຄວາມກ່ຽວຂ້ອງກັບວັນນະຄະດີ ຄື ທາງດ້ານວັນນະຄະດີພື້ນເມືອງ, ນັກເຜົ່າພັນວິທະຍາຄົ້ນຄວ້າວັນນະຄະດີພື້ນເມືອງຂອງເຜົ່າຕ່າງໆ, ນັກວັນນະຄະດີ ກໍຄົ້ນຄວ້າວັນນະຄະດີພື້ນເມືອງຂອງເຜົ່າຕ່າງໆ ເຊັ່ນດຽວກັນ ເພາະສະນັ້ນນັກຄົ້ນຄວ້າເຜົ່າພັນວິທະຍາທັງແມ່ນນັກຄົ້ນເຜົ່າພັນວິທະຍາ ແລະ ກໍ່ທັງແມ່ນນັກຄົ້ນຄວ້າ

ວັນນະຄະດີ ອີກດ້ວຍ ແລະ ກົງກັນຂ້າມນັກຄົ້ນຄວ້າວັນນະຄະດີກໍເຊັ່ນດຽວກັນ ທັງແມ່ນນັກຄົ້ນຄວ່າວັນ ນະຄະດີ ແລະ ທັງແມ່ນນັກຄົ້ນຄວ້າເຜົ່າພັນວິທະຍາອີກດ້ວຍ.

2.4. **ພົວພັນກັບສິນລະປະກຳ**

ຂະແໜງສິນລະປະດົນຕີ, ຂວັດ, ແຕ້ມຕ່າງໆ ລ້ວນແຕ່ມີກົກເຄົ້າມາຈາກສີໄມ້ລາຍມືຂອງປະຊາຊົນບັນດາເຜົ່າ ເພາະສະນັ້ນເຮັດວຽກງານສິນລະປະກຳກໍແມ່ນເຮັດວຽກງານທັງເຜົ່າພັນວິທະຍາອີກດ້ວຍ ກົງກັນຂ້າມນັກເຜົ່າພັນວິທະຍາກໍຄົ້ນຄວ້າກ່ຽວກັບສິນລະປະກຳດົນຕີ,, ຂວັດແຕ້ມບູຮານຂອງເຜົ່າເຊັ່ນດຽວກັນ.

**2.5. ພົວພັນນກັບປະຊາກອນສາດ.**

ການສຶກສາການຍ້າຍຖິ່ນຂອງພົນລະເມືອງເຜົ່າຈາກຊົນນະບົດມາສູ່ຕົວເມືອງ ຈາກເຂດພູດອຍມາສູ່ທົ່ງພຽງ ແລະ ການສຶກສາການຂະຫຍາຍຕົວຂອງພົນລະເມືອງເຜົ່າສ່ວນນ້ອຍທີ່ ນັບມື້ມີຫລາຍຂຶ້ນທີ່ກົງກັບຂະແໜງປະຊາກອນທີ່ສຶກສາກ່ຽວກັບການຍ້າຍຖິ່ນ ການຂະຫຍາຍຕົວຂອງປະຊາກອນໂລກ. ການເຕີບໂຕຂອງພົນລະເມືອງໃນເມືອງໃຫຍ່ຕ່າງໆດັ່ງນັ້ນວຽກງານຂອງເຜົ່າພັນວິທະຍາ ແລະ ວຽກງານຂອງປະຊາກອນກໍເປັນວຽກງານອັນດຽວກັນ ຄືສຶກສາການຍ້າຍຖິ່ນຂອງປະຊາກອນ ແລະ ການຂະຫຍາຍຕົວຂອງປະຊາກອນໂລກ.

# ບົດທີ 2
# ເຊື້ອຊາດໃນໂລກ

## 1. ວິວັດທະນາການຂອງມະນຸດ.

### 1.1 ຄວາມໝາຍຂອງຄຳວ່າເຊື້ອຊາດ.

**ຄຳວ່າ** " ເຊື້ອຊາດ " ເປັນກຸ່ມທີ່ໝາຍເຖິງລະບົບການຈຳແນກກຸ່ມປະຊາກອນກຸ່ມນ້ອຍ ຫຼື ກຸ່ມຂະໜາດໃຫຍ່ທີ່ມີລັກສະນະຂອງຮູບຊົງພາຍນອກທາງພັນທຸກຳ ( DNA ) ຫຼື ລັກສະນະທາງກາຍວິທະຍາ ຄືກັນ ເຊັ່ນ: ຜິວພັນ, ຜົມ , ເລັບ, ຕາ, ດັງ, ຮິມສົບ ... ເຊິ່ງສາດມາດພິສູດທາງດ້ານວິທະຍາສາດ.

### 1.2 ທັດສະນະກ່ຽວກັບການກຳເນີດຂອງມະນຸດ.

ບັນຫາທີ່ວ່າມະນຸດກຳເນີດມາແນວໃດ ຫຼື ມາແຕ່ໃສ່ນັ້ນ ມາເຖິງປະຈຸບັນ ຄຳຕອບກ່ຽວກັບກົກເຄົ້າການກຳເນີດຂອງມະນຸດກໍຍັງບໍ່ທັນຈະແຈ້ງ ຫຼື ບໍ່ທັນມີຄຳຕອບທີ່ແນ່ນອນແຕ່ກໍມີຫຼາຍທັດສະນະ ແລະ ຫຼາຍທິດສະດີທີ່ຕອບບັນຫານີ້ຕ່າງໆນາໆ ໃນນີ້ຈະຂໍຍົກເອົາສອງທັດສະນະທີ່ແຕກຕ່າງກັນທີ່ເວົ້າເຖິງກົກເຄົ້າ ແລະ ວິວັດທະນາການຂອງມະນຸດເຮົາມາໃຫ້ເຫັນດັ່ງນີ້:

**1). ທັດສະນະຂອງສາສະໜາ.**

ສາສະໜາຕ່າງໆ ເຊັ່ນ: ສາສະໜາຄຣິດ, ສາສະໜາພຸດ, ຮິນດູ, ອິດສະລາມ...ລ້ວນແລ້ວແຕ່ມີທັດສະນະ ແລະ ເຫດຜົນເພື່ອອະທິບາຍກ່ຽວກັບມະນຸດວ່າມະນຸດກຳເນີດມາຈາກໃສ ຫຼື ມາແນວໃດ? ແຕ່ລະສາສະໜາໄດ້ໃຫ້ເຫດຜົນຕ່າງໆນາໆເຖິງທີ່ມາຂອງມະນຸດດັ່ງເຊັ່ນ:

- ຄົນເກີດຈາກປາ ຫຼື ມ້າ.
- ນິທານຂອງຈີນວ່າ ນາງຟ້າໃຊ້ຂີ້ຕົມດຳເພື່ອປັ້ນມະນຸດ.
- ນິທານລາວ ວ່າ ຄົນເກີດມາຈາກ ນ້ຳເຕົ້າປຸງ.
- ຕາມຄວາມເຂົ້າໃຈຂອງຜູ້ເຊື່ອຖືສາສະໜາທັງຫຼາຍເຊື່ອວ່າ ພະເຈົ້າເປັນຜູ້ສ້າງໂລກ ແລະ ກໍ່ແມ່ນພະເຈົ້າເປັນຜູ້ສ້າງມະນຸດດັ່ງແຊງ ໂອກຸດສະຕິນ ນັກບວດສາສະໜາຄຣິສໄດ້ເວົ້າວ່າ ມະນຸດສືບເຊື້ອສາຍມາຈາກບັນພະບູລຸດຄູ່ທຳອິດຂອງໂລກຄື ອາດຳ ແລະ ອີວາ ພະເຈົ້າສ້າງມະນຸດຄູ່ນີ້ຂຶ້ນມາເມື່ອປະມານ 6000 ປີກ່ອນ ຄ.ສ.

ດັ່ງນັ້ນ ແຕ່ໃດມາຈົນເຖິງປະຈຸບັນ ຄົນສ່ວນຫລາຍກໍ່ຍັງເຊື່ອວ່າ ເທວະດາເປັນຜູ້ໃຫ້ກຳເນີດມະນຸດ ແລະ ປະຈຸບັນເທວະດາກໍຍັງຮັກສາ ແລະ ຄຸ້ມຄອງວິນຍານຂອງມະນຸດຢູ່.

**2).ທັດສະນະຂອງນັກວິທະຍາສາດ.**

ໃນໄລຍະທີ່ຜ່ານມາມີຫຼາຍນັກວິທະຍາສາດໄດ້ພິສູດ ແລະ ຄົ້ນຄວ້າເຖິງວິວັດທະນາການຂອງມະນຸດໂດຍລາຍແງ່ມຸມທີ່ແຕກຕ່າງກັນດັ່ງເຊັ່ນ:

- ທ່ານ Aric ( 384-322 ກ່ອນ ຄ.ສ) ເປັນຜູ້ທຳອິດທີ່ກ່າວຕໍ່ຕ້ານທິດສະດີການກຳເນີດມະນຸດຂອງສາສະໜາ ແລະ ທ່ານໄດ້ອະທິບາຍວ່າມະນຸດກຳເນີດມາຈາກສັດຊະນິດໜຶ່ງແຕ່ບໍ່ຮູ້ວ່າແມ່ນສັດຫຍັງ.
- ທ່ານ ດາກວິນ ( 1809-1882 ) ຊຶ່ງເປັນນັກປາດຊາວອັງກິດໄດ້ໃຫ້ຄຳອະທິບາຍວ່າ: ມະນຸດກຳເນີດມາຈາກສັດຊະນິດໜຶ່ງມີລັກສະນະຄ້າຍຄືທະນີແຕ່ສະຫຼາດກວ່າສະນິດອື່ນໆ ແຕ່ເຂົາກໍບໍ່ສາມາດອະທິບາຍໄດ້ຢ່າງຈະແຈ້ງວ່າດ້ວຍສາເຫດໃດທະນີຈຶ່ງກາຍມາເປັນມະນຸດໄດ້.

ຈົນມາຮອດສະໄໝຂອງ ທ່ານ ອັງແກນ ໃນປຶ້ມ " ຄວາມສຳຄັນຂອງການອອກແຮງງານ" ທ່ານ ອັງແກນ ໄດ້ຄົ້ນຄວ້າ ແລະ ອະທິບາຍເງື່ອນໄຂການປ່ຽນແປງຂອງທະນີກາຍມາເປັນຄົນນັ້ນ ສາເຫດຕົ້ນຕໍ ແມ່ນມາຈາກການອອກແຮງງານ, ແຕ່ວ່າການອອກແຮງງານ ຂອງຄົນເລີ່ມຕົ້ນຂຶ້ນຍາມໃດ, ເວລາໃດບໍ່ມີຜູ້ໃດຮູ້ໄດ້ມີແຕ່ສັນນິຖານວ່າທະນີຄົນຊອກຫາກິນດ້ວຍໄມ້ຄ້ອນ ແລະໃຊ້ກ້ອນຫີນເພື່ອລ່າສັດເປັນປະກົດການໜຶ່ງຂອງ ການອອກແຮງງານ, ແຕ່ມັນຜະລິດເຄື່ອງມືໄດ້ແນວໃດ, ຕໍ່ບັນຫານີ້ ທ່ານ ອັງແກນ ໄດ້ອະທິບາຍວ່າ: ແຮງງານເກີດມາຈາກການຜະລິດເຄື່ອງມື, ການເຄື່ອນໄຫວ, ການຜະລິດ, ການປະດິດສ້າງເຄື່ອງໃຊ້ເຮັດໃຫ້ເກີດມີການແບ່ງໜ້າທີ່ກັນລະຫວ່າງຂາໜ້າ ແລະ ຂາຫຼັງ. ໃນນີ້ການຜະລິດເຄື່ອງໃຊ້ແມ່ນໜ້າທີ່ຂອງຂາໜ້າ, ອັນໄດ້ເຮັດໃຫ້ມີຄວາມຊຳນິຊຳນານແລ້ວໃນທີ່ສຸດຂາໜ້າກໍປ່ຽນເປັນມື. ຜ່ານຈາກການອອກແຮງງານເຮັດໃຫ້ອະໄວຍະວະສ່ວນຕ່າງໆຂອງທະນີມີການປ່ຽນແປງມັນສະໝອງກໍມີບໍລິມາດໃຫຍ່ຂຶ້ນເຮັດໃຫ້ມີຄວາມສະຫຼາດຂຶ້ນ.

ໃນປະຈຸບັນ ມີທັດສະນະແນວໃໝ່ເກີດຂຶ້ນເຊັ່ນວ່າ: ມະນຸດປະຈຸບັນບໍ່ແມ່ນເກີດມາຈາກສັດທະນີ, ແຕ່ມະນຸດມີກົກເຄົ້າ, ມີບັນພະບຸລຸດຂອງມະນຸດເອງເມື່ອປະມານ 3 ລ້ານປີ ກ່ອນ ຄ.ສ ເຊັ່ນ:

**1. ມະນຸດ ອົດສະຕຣາໂລປີເຕັກ** (Australopithec) ມີຄວາມໝາຍວ່າ ລີງໂທນທາງພາກໃຕ້. ຄົ້ນພົບຢູ່ປະເທດຕັງຊີ ໃນປີ 1959 ມະນຸດດັ່ງກ່າວນີ້ມີລັກສະນະຄື ຍ່າງສອງຂາ, ຢືນເກືອບຕັ້ງຊື່, ບໍລິມາດສະໝອງ 600 ຊັງຕີແມັດກ້ອນ ($cm^2$ ) ມີອາຍຸປະມານ 3 ລ້ານປີ ບໍ່ຮູ້ຜະລິດເຄື່ອງມືໃນຮັບໃຊ້ດຳລົງຊີວິດ.

**2. ມະນຸດປີເຕກັງຕຣົບ** (pethecantrop) ຫຼື (Jowa ເmon )ຄົ້ນພົບ ໃນປີ 1891 ຢູ່ເຂດຕີນິນຕອນກາງຂອງ ເກາະຊາວາ ອິນໂດເນເຊຍ ມະນຸດດັ່ງກ່າວຍ່າງຕັ້ງຊື່ ບໍລິມາດສະໝອງ 750-900 ຊັງຕີແມັດກ້ອນ , ມີອາຍຸປະມານ 700 000 ປີກ່ອນ ຄ.ສ ບໍ່ຮູ້ຜະລິດເຄື່ອງມືແຕ່ມີເຄື່ອງມືທຳມະຊາດ( ເຄື່ອງມືງ່າຍດາຍ ).

**3. ມະນຸດຊີນານຕຣົບ** (Sinantrp) ຫຼື (Pak.ng Ten) ຄົ້ນພົບໃນປີ 1925, ບໍລິມາດສະໝອງ 1000-120ຊັງຕີແມັດກ້ອນ ຮູ້ປະດິດໄຟ, ນຳໃຊ້ໄຟ, ເຄື່ອງມືເຮັດໃຫ້ແຫຼມຄົມຈາກຫີນ, ໄມ້ ແລະກະດູກສັດ, ມີອາຍຸປະມານ500000-600 000 ( 5 ແສນ ເຖິງ 6 ແສນ) ປີກ່ອນ ຄ.ສ.

**4.ມະນຸດເນອັງແດກຕານ** (Neanderthan) ຄົ້ນພົບໃນປີ 1956 ແຄມແມ່ນ້ຳເນ ອັງແດກຕານ ຢູ່ເຢຍລະມັນ, ບໍລິມາດສະໝອງ 1350- 1 400$cm^2$ ມີອາຍຸ 100 000 ປີກ່ອນ ຄ.ສ ຮູ້ຈັກປະດິດເຄື່ອງມືຢ່າງປະນີດ ແລະ ມີຄວາມເຊື່ອໃນເລື່ອງວິນຍານ.

**5,ມະນຸດໂຣມາໂຍງ** (Gromagnon ຫຼື Homospen) ເປັນມະນຸດທີ່ມີຄວາມຮູ້ຄວາມສະຫຼາດສູງ, ສາມາດປະດິດເຄື່ອງມືຢ່າງປານີດບໍລິມາດສະໝອງ 1400- 1600$cm^2$ , ມີອາຍຸ 35 000-40 000 ປີຄົ້ນພົບໃນເຂດອາຊີ ແລະ ເອີລົບ.



ວິວັດທະນາການຂອງມະນຸດ

**1.3. ທັດສະນະຕ່າງໆກ່ຽວກັບເຊື້ອຊາດ.**

ຄວາມແຕກຕ່າງລະຫວ່າງທາງດ້ານລັກສະນະຂອງອະໄວຍະວະພາຍນອກຂອງຮ່າງກາຍມະນຸດ ເຊັ່ນ: ສີຜິວ, ຕາ, ດັງ, ຮີມສົບ ແລະ ຜົມ ຂອງແຕ່ລະກຸ່ມຄົນທີ່ເຮົາວ່າເຊື້ອຊາດນີ້ເປັນຄຳຖາມໜຶ່ງທີ່ຫລາຍໆຄົນໄດ້ໃຫ້ທັດສະນະທີ່ແຕກຕ່າງກັນດັ່ງເຊັ່ນ:

- ມີທັດສະນະໜຶ່ງໄດ້ເວົ້າວ່າ ເຊື້ອຊາດເກີດຂຶ້ນພ້ອມກັບການກຳເນີດຂອງມະນຸດເຊັ່ນ: ມະນຸດເນອັງແດກຕານ ແລະ ມະນຸດໂຮໂມຊາປຽງ: ມະນຸດດັ່ງກ່າວໄດ້ອາໄສຢູ່ດິນແດນເອີລົບຕັ້ງແຕ່ເວລາເລີ່ມຕົ້ນມີມະນຸດທຳອິດ ແລະ ກໍ່ແມ່ນພວກທີ່ມີຄວາມສີວິໄລມາຕັ້ງແຕ່ດຶກດຳບັນ. ພວກເຂົາຍັງເວົ້າວ່າເຊື້ອຊາດແມ່ນຄົງຕົວ ແລະ ຖາວອນ. ມີເຊື້ອຊາດດີເດັ່ນ ແລະ ຕ່ຳຕ້ອຍ (ມົງໂກໂລອິດ ແລະ ເນກໂລ - ອົດສຕາໂລອິດ) ແມ່ນເກີດມາຈາກທະມີ.
- ພວກທີ່ກ້າວໜ້າ ໄດ້ຢືນຢັນວ່າ 3 ເຊື້ອຊາດຕ່າງໆທີ່ມີຄວາມແຕກຕ່າງກັນທາງດ້ານຮູບນອກເທົ່ານັ້ນສ່ວນເລື່ອງຄວາມແຕກຕ່າງລະຫວ່າງດ້ານຜິວໜັງ, ຕາ, ຜົມ, ດັງ ຊຶ່ງເປັນຮູບຮ່າງພາຍນອກເທົ່ານັ້ນ.

ການຈັດແບ່ງເຊື້ອແມ່ນມີຫຼາຍທັດສະນະແຕກຕ່າງກັນແຕ່ແນວໃດກໍ່ຕາມເມື່ອມາຮອດໄລຍະທ້າຍຂອງມະນຸດເນອັງແດກຕານ ແມ່ນໄດ້ຈັດແບ່ງມະນຸດທີ່ມີສີຜິວແຕກຕ່າງກັນອອກເປັນສາມເຊື້ອຊາດໃຫຍ່ດັ່ງນີ້:

- ເຊື້ອຊາດເອີໂຣໂປອິດ ( Europ0ide )
- ເຊື້ອຊາດເນກໂຣ - ອົດສຕາໂລອິດ ( Negatoide - Autstraloic).
- ເຊື້ອຊາດມົງໂກໂຣອິດ ( Mongol0ide ).

ໃນໄລຍະຕໍ່ມາຍ້ອນການຂະຫຍາຍຕົວຂອງສັງຄົມຄົນມີການຜົວພັນໄປມາຫາສູ່ເຊິ່ງກັນແລະກັນ ໃນດ້ານຕ່າງໆຫຼາຍຂຶ້ນ.ດັ່ງນັ້ນ ຈາກສາມເຊື້ອຊາດເດີມໄດ້ແຜ່ອອກເປັນຫຼາຍເຊື້ອຊາດຕໍ່ເນື່ອງກັນເລື້ອຍໆຈົນມາເຖິງປັດຈຸບັນນັກວິທະຍາສາດຄາດຄະເນວ່າໃນໂລກມີປະມານ150ເຊື້ອຊາດແລ້ວ.

## 2. ເຊື້ອຊາດ.

**2.1. ທັດສະນະກ່ຽວກັບເຊື້ອຊາດ.**

**• ທັດສະນະຂອງນາຍທຶນ.**

ພວກນາຍທຶນ ເວົ້າວ່າ ເຊື້ອຊາດເກີດຂຶ້ນມາຍ້ອນມະນຸດກໍາເນີດເກີດຂຶ້ນເທິງໜ້າໂລກຄືຄົນແບບໃໝ່ (ຄົນເນອັງແດກຕານ ໂຣໂມຊາປຽງ) ໄດ້ອາໄສຢູ່ດິນແດນເອີລົບຕັ້ງແຕ່ເວລາເລີ່ມຕົ້ນມີມະນຸດທໍາອິດ ແລະ ກໍ່ແມ່ນພວກທີ່ມີມີຄວາມສີວິໄລມາແຕ່ດຶກດໍາບັນ. ພວກເຂົາຍັງເວົ້າວ່າ ເຊື້ອຊາດແມ່ນຄົງຕົວ ແລະ ຖາວອນ ມີເຊື້ອຊາດດີເດັ່ນ ແລະ ຕໍ່າຕ້ອຍ ແລະ ກໍຈະເປັນແບບນີ້ຕະຫຼອດໄປ. ສອງເຊື້ອຊາດຕໍ່າເຕ້ຍ(ໂມງໂກໂລອິດ ແລະ ເນກໂຣ-ອົດສຕາໂລອິດແມ່ນເກີດມາຈາກທະນີ ສ່ວນເອີໂຣໂປອິດແມ່ນກໍ່ໄດ້ເກີດມາຈາກທະນີ.

**• ທັດສະນະຂອງລັດທິມາກ - ເລນິນ.**

ລັດທິມາກ - ມາກເລນິນ ໄດ້ຢືນຢັນວ່າ ສາມເຊື້ອຊາດນີ້ແມ່ນມີຕອມແຕກຕ່າງກັນທາງດ້ານຮູບນອກເທົ່ານັ້ນ ແລະ ກໍ່ບໍ່ສໍາຄັນຫຍັງໝົດທາງດ້ານຜິວພັນ. ຕາ, ຜົມ, ດັງ ນັ້ນມັນຄວາມແຕກຕ່າງກັນສາມເຊື້ອຊາດ ແມ່ນບໍ່ມີຜົນສະທ້ອນເຖິງແນວຄິດຈິດໃຈ...

**• ທັດສະນະຂອງນັກວິທະຍາສາດປະຈຸບັນ.**

ເຊື້ອຊາດກໍາເນີດຂຶ້ນດ້ວຍເຫດຜົນຂອງສະພາບແວດລ້ອມທາງດ້ານພູມສາດ ຢູ່ບ່ອນມະນຸດກໍາລັງຊີວິດຢູ່. ໝາຍຄວາມວ່າຄວາມແຕກຕ່າງທາງຮູບຊົງພາຍນອກຂອງມະນຸດສາມເຊົ້າຊາວແມ່ນຕິດພັນກັບເງື່ອນໄຂຂອງທໍາມະຊາດເປັນຕົ້ນຕໍ ເຊັ່ນ ໝີຂາວຢູ່ຂົ້ວໂລກເໜືອ ບ່ອນທີ່ມີຫິມະຕະຫລອດປີ.

**2.2. ລັກສະນະຂອງເຊື້ອຊາດ.**

ເຊື້ອຊາດມີຈຸດພິເສດເນື່ອງມາຈາກຜູ້ຄົນທີ່ດໍາລົງຄົງຕົວ ແລະ ມີຊີວິດຢູ່ຢ່າງຍາວນານໃນເງື່ອນໄຂທາງດ້ານພູມສາດທີ່ແຕກຕ່າງກັນ. ຄວາມແຕກຕ່າງນີ້ມີຂຶ້ນບໍ່ແມ່ນຍ້ອນຄວາມມຸ້ງມາດປາດຖະໜາຂອງຄົນເຮົາ ຫຼື ໂດຍມານະຈິດຂອງສິ່ງທີ່ມີອໍານາດແຕ່ຢ່າງໃດ. ແຕ່ຫາກແມ່ນຜົນແຫ່ງການກະທົບຈາກທໍາມະຊາດຈຶ່ງເຮັດໃຫ້ມະນຸດທີ່ດໍາລົງຊີວິດຢູ່ໃນສະພາບແວດລ້ອມທີ່ແຕກຕ່າງກັນມີລັກສະນະພາຍນອກແຕກຕ່າງກັນ. ໂດຍທົ່ວໄປ ມະນຸດທີ່ດໍາລົງລົງຊີວິດໃນສະພາບແວດລ້ອມທີ່ມີຜົນສະທ້ອນຈາກຄວາມຮ້ອນຂອງແສງຕາເວັນຫຼາຍອາກາດຮ້ອນ ກໍຈະເຮັດໃຫ້ມະນຸດທີ່ດໍາລົງຊີວິດໃນເຂດນັ້ນມີສີຜິວດໍາ. ສ່ວນມະນຸດທີ່ດໍາລົງຊີວິດໃນເຂດທີ່ມີອາກາດຮ້ອນທໍາມະດາກໍຈະມີສີຜິວຈາງກວ່າຄືຜິວເຫຼືອງ ແລະ ມະນຸດທີ່ດໍາລົງຊີວິດໃນເຂດອາກາດເຢັນກໍຈະມີສີຜິວຂາວ, ສີຜິວຂອງມະນຸດກໍຈະປ່ຽນສີໄປຕາມລໍາດັບຈາກເຂດທີ່ມີອາກາດຮ້ອນໄປເຖິງເຂດທີ່ມີອາກາດເຢັນ ຕົວຢ່າງຄື ຄົນເອທິໂອປີດໍາລົງຊີວິດໃນເຂດທີ່ມີອາກາດຮ້ອນຫລາຍຄືໃກ້ກັບເສັ້ນສູນສູດ ເຮັດໃຫ້ຄົນເອທິໂອປີມີສີຜິວດໍາເຫຼື້ອມ ແລະ ພວກເຮົາມັກຈະເອີ້ນສີຜິວນີ້ວ່າຜິວດໍາ ຄົນຈີນດໍາລົງຊີວິດໃນເຂດທີ່ມີອາກາດບໍ່ຮ້ອຫລາຍ ແລະ ບໍ່ໜາວຫລາຍ, ຄົນຈີນຈຶ່ງມີສີຜິວຈາງກວ່າຄົນເອທິໂອປີ ຊຶ່ງເຮົາມັກຈະເອີ້ນສີຜິວນີ້ວ່າ ພວກຜິວເຫຼື້ອງ, ສ່ວນຄົນລັດເຊຍດໍາລົງຊີວິດໃນເຂດທີ່ມີອາກາດເຢັນ, ຖືກ ແສງຕາເວັນນ້ອຍກວ່າກໍຈະມີສີຜິວຂາວ, ດັ່ງນັ້ນ ອີງຕາມຄວາມແຕກຕ່າງທາງລັກສະນະພາຍນອກຂອງຮ່າງກາຍມະນຸດທີ່ເຫັນໄດ້ຊັດດັ່ງກ່າວ ເຂົາຈຶ່ງແບ່ງມະນຸດຂອງໂລກອອກ ເປັນ 3 ເຊື້ອຊາດໃຫຍ່ດັ່ງນີ້:

(1) ເຊື້ອຊາດ ເນກໂຣ-ອົດສຕາໂລອິດ (Negro - Austaroide) ເປັນເຊື້ອຊາດ ທີ່ດໍາລົງຊີວິດໃນຂົງເຂດທີ່ມີອາກາດຮ້ອນ, ແຫ້ງແລ້ງ, ມີຝົນຕົກນ້ອຍ ຂອງເຂດສູນສູດ ເປັນຕົ້ນແມ່ນໃນທະວີບ ອາຟຣິກາ ຊຶ່ງເປັນຂົງເຂດທີ່ມີອາກາດຮ້ອນ ແລະ ແຫ້ງແລ້ງ D ເຊື້ອຊາດເນກໂຣອິດຈຶ່ງມີລັກສະນະຮູບຮ່າງພາຍນອກແຕກຕ່າງຈາກເຊື້ອຊາດອື່ນອີງຕາມຄວາມແຕກຕ່າງທາງຮູບຮ່າງພາຍນອກຂອງຮ່າງກາຍບາງຢ່າງໃນເຊື້ອຊາດ ເນກໂຣ - ອົດສຕາໂລອິດ ນັກມະນຸດຊາດຈຶ່ງໄດ້ແບ່ງເຊື້ອຊາດເປັນສອງເຊື້ອຊາດຍ່ອຍດັ່ງນີ້:

**ກ) ເຊື້ອຊາດເນກໂຣອິດ ມີລັສະນະຮູບຮ່າງຂອງຮ່າງກາຍຄື:**

- ຮ່າງກາຍນ້ອຍ,ຜົມດຳກູດຫຼາຍສີຜິວໜັງຂອງຮ່າງກາຍເປັນສີດຳກ່ຳດັງທຳມະດາ, ຮີມສົບໜາ, ຊັ້ນຕາທີ່ສອງຢູ່ເບື້ອງເທິງບໍ່ຊັດເຈນ, ລວງສູງຂອງເຊື້ອຊາດນີ້ບໍ່ສະເໝີ ( ມີລວງສູງແຕ່ 141 cm – 182 cm ).



**ຂ) ເຊື້ອຊາດອົດສຕາໂລອິດ** ມີລັກສະນະຮູບຮ່າງຂອງຮ່າງກາຍແຕກຕ່າງໄປຈາກ ຮູບຮ່າງທາງຮ່າງກາຍຂອງເຊື້ອຊາດເນກໂຣອິດຄື: ຜິວເທິງຮ່າງການດຳ, ຜົມກູດຫຼາຍ, ສົບຂົນທີ່ສາມຂະຫຍາຍຕົວ, ລວງສູງບໍ່ສະເໝີກັນ



**ຄ) ເຊື້ອຊາດເອີໂລໂປອິດ.**

ເຊື້ອຊາດເອີໂລໂປອິດ ມີຖິ່ນຖານເດີມຂອງການດໍາລົງຊີວິດຢູ່ເອີລົບ, ພວກເຂົາມີ ລັກສະນະຮູບຮ່າງພາຍນອກດັ່ງນີ້:



ຜິວຮ່າງກາຍເປັນສີຂາວ, ຜົມສ່ວນຫຼາຍແມ່ນກູດຄືຟອງນໍ້າ , ສີທອງ ແລະ ເຫຼືອງ, ຕາສີຂີ້ເທົ່າ, ສີຟ້າ ມີຂົນຍາວ, ດັງສູງ( ໂມ ) , ແຫຼມຮີມສົບບາງລວງສູງ ທໍາມະດາ ແລະ ຮ່າວກາຍສູງໃຫຍ່ .

ງ) **ເຊື້ອຊາດມົງໂກໂລອິດ.** (Mongoloids)

ເຊື້ອຊາດມົງກໂລອິດ ມີຖິ່ນຖານເດີມຂອງການດໍາລົງຊີວິດຢູ່ອາຊີ ແລະ ສ່ວນໜຶ່ງຢູ່ມະຫາສະໝຸດ, ພວກເຂົາມີລັກສະນະຮູບຮ່າງພາຍນອກດັ່ງນີ້:



ລັກສະນະຮ່າງກາຍບໍສູງ, ຜົມດໍາ, ຊື່ ແລະ ແຂງ, ຜິວໜັງເຫຼືອງ ຫຼື ແດງ , ດັງຕໍ່າ( ນ້ອຍ ), ແໜບ, ໜ້າຜາກກວ້າງ, ຮີບສົບທໍາມະດາ, ຮີມຕາເທິງຂະຫຍາຍ, ລວງສູງສະເລ່ຍ 161-164 cm

ເຊື້ອຊາດມົງກໂລອິດ (Mongoloids)

## 3. ການແຈກຍາຍເຊື້ອຊາດໃນໂລກ.

ປີ 1994 ບັນດາເຊື້ອຊາດໃນໂລກມີປະຊາກອນມີປະຊາກອນ 5.642.151.000 ຄົນດໍາລົງຊີວິດຢູ່ບົນເນື້ອທີ່ 150 ລ້ານ ກິໂລຕາແມັດ ໃນ 100 ກວ່າປະເທດ ສະເລ່ຍ 37 ຄົນ /ກິໂລຕາແມັດ. ປະເທດຈີນ, ອິນເດຍ, ລັດເຊຍ,ອາເມລິກາ, ອິນໂດເນເຊຍ, ຍີ່ປຸ່ນ, ເບຣຊິນ ເປັນປະເທດທີ່ມີປະຊາກອນຫຼາຍກວ່າ 100 ລ້ານຄົນ, ສ່ວນບາງປະເທດທີ່ເປັນເກາະ, ດອນໃນທະວີບອາຊີ. ອາເມລິກາ ແລະ ພາກເໜືອທະເອີລົບ ມີປະຊາກອນນ້ອຍກວ່າ 100.000ຄົນຄື ຫມູ່ເກາະຟິດຈີ, ກົງຕາ, ໄຊໂລມົງອິດສະລັງ.

ໃນນີ້ເພິ່ນໄດ້ຄິດໄລ່ວ່າ ປີ 2000 ເຊື້ອຊາດຕ່າງໆຈະມີປະຊາກອນເພີ່ມຂຶ້ນຮອດ 300 000 000 ຄົນໃນນັ້ນປະຊາກອນທີ່ເພີ່ມຫລາຍ ແລະ ໄວ ແມ່ນເຊື້ອຊາດເນກໂຣ - ອົດສຕາໂລອິດ ແລະ ມົງກໂລອິດທີ່ຢູ່ໃນປະເທດກໍາລັງພັດທະນາຂອງຂົງເຂດອາເມລິກາໃຕ້, ອາຟຣິກາ ແລະ ອາຊີ ການເພີ່ມປະຊາກອນຂອງເຊື້ອຊາດເຫຼົ່ານີ້ໃນ

ເວລາໄວວາດັ່ງກ່າວໄດ້ກາຍເປັນບັນຫາຢ່າງໜັກຂອງລັດຖະບານຕ່າງໆ ເປັນຕົ້ນ ແມ່ນການຂາດແຄນອາຫານ, ທີ່ພັກອາໄສ, ວຽກເຮັດງານທຳ, ການສຶກສາ, ວັດທະນະທຳ.

ສະພາບການແຈກຢາຍຢູ່ບາງປະເທດມີເຂດປະຊາກອນອາໄສຢູ່ຢ່າງໜາແໜ້ນເຊັ່ນ:

1. ຂົງເຂດອາຊີອາຄະເນ ແລະ ລຽບຕາມແຄມມະຫາສະໝຸດປາຊີຟິກ ແລະ ອິນເດຍເປັນຕົ້ນ ແຫຼມອິນດູຈີນ, ພາກຕາເວັນອອກຂອງຈີນ, ຍີ່ປຸ່ນ, ເກົາຫຼີ, ອິນໂດເນເຊຍ...ເປັນຂົງເຂດທີ່ມີປະຊາກອນອາໄສຢູ່ຫຼາຍ ແລະ ໜາແໜ້ນກວ່າໝູ່ໃນໂລກ ມີເຖິງ 50 ຕົວເມືອງທີ່ມີປະຊາກອນອາໄສຢູຫຼາຍກວ່າ 1 ລ້ານຄົນ.




ແຜນທີ່ການແຈກຢາຍເຊື້ອຊາດໃນໂລກ

- ເຊນ 16.792.000ຄົນ
-ການກຸດຕາ 11.898.000ຄົນ
-ມານີລາ 10.156 000ຄົນ
- ບອມເບ3.725.000ຄົນ
- ໂຕກຽວ 8.100.000ຄົນ
- ຍາກາກຕາ 9.125.000ຄົນ
- ຊຽງໄຮ7.500.000ຄົນ
- ບັງກອກ 5.955.000ຄົນ

ເຊື້ອຊາດມົງກໂລອິດ ດຳລົງຊີວິດຢູ່ທະວີບອາຊີເປັນຕົ້ນບັນດາປະເທດ ຈີນ, ຍີ່ປຸ່ນ,ໄທ, ລາວ, ເກົາຫຼີ ຫວຽດນາມ, ກຳປູຊາ, ມາເລເຊຍ, ອິນເດຍ ແລະ ມີປຊາກອນ ຫຼາຍກວ່າໝູ່ໃນໂລກ (3344, 623, 000 ຄົນ), ຈີນມີປະຊາກອນ 1.190.431.000 ຄົນ. ອິນເດຍ ມີປະຊາກອນ 919.903.000ຄົນ ອິນໂດເນເຊຍມີ

ປະຊາກອນ 200.410.000 ຄົນ, ຍີ່ປຸ່ນ ມີປະຊາກອນ 105.107.000 ຄົນ, ປາກິດສະຖານ ມີປະຊາການ 128.856.000ຄົນ

2) ເຊື້ອຊາດເອີໂຣໂປອີດ ດຳລົງຊີວິດຢູ່ທະວີບເອີລົບເປັນຕົ້ນຕໍເຊັ່ນບັນດາປະເທດ ຝຣັ່ງ, ເຢຍລະມັນ, ລັດເຊຍ, ອັງກິດ, ຊູວີເດັນ, ໂປໂລຍ, ອີຕາລີ...ມີປະຊາກອນອາໃສຢູ່ຫຼາຍ ແລະ ໜາແໜ້ນເປັນອັນດັບທີ່ສອງຂອງໂລກຫຼາຍກວ່າ 40 ຕົວເມືອງມີປະຊາກອນຫຼາຍກວ່າ 1 ລ້ານຄົນ:

- ລອນດອນ 9.125.000 ຄົນ
- ມົດສະກູ 10.466.000 ຄົນ
- ແບກແລງ 3.021.000 ຄົນ
- ປາຣີ 8.72.000 ຄົນ
- ໂຣມ 3.033.000 ຄົນ
- ລັດເຊຍ 149.609.000 ຄົນ
- ອັງກິດ 58.135.000 ຄົນ
- ອູກະແຣນ 51.847.000 ຄົນ
- ອີຕາລີ 58.135.000 ຄົນ
- ຝລັ່ງ 57.840.000 ຄົນ
- ເຢຍລະມັນ 81.088.000 ຄົນ

**3) ທະວີບອາເມລິກາ** ເປັນຂົງເຂດທີ່ມີຫຼາຍເຊື້ອຊາດອາໃສຢູ່ດ້ວຍກັນເປັນຕົ້ນ ເຊື້ອຊາດມົງໂກໂລອິດ, ເອໂຣ ໂປອິດ ແລະ ເນກໂຣ - ອົດສຕາໂລອິດມີປະຊາກອນອາໃສຢູ່ ຢ່າງໜາແໜ້ນ, ແຕ່ເຂດໃຕ້ໜອງໃຫຍ່ເຖິງແຄມທະເລພາກຕາເວັນອອກຂອງອາເມລິກາ (ແຕ່ລັດອີລີນອຍເຖິງນິວຢອກ) ອາເມລິກາມີ 260.714.000 ຄົນ, ເມືອງຊີກາໂກ 6.529.000 ຄົນ.

## 4. ການຍ້າຍຖິ່ນຂອງເຊື້ອຊາດ.

ການຍ້າຍຖິ່ນຂອງເຊື້ອຊາດ (ປະຊາກອນໂລກ) ມີການເຄື່ອນຍ້າຍເປັນປະຈຳມາຕັ້ງແຕ່ບູຮານນະການ, ຊຶ່ງລວມມີການເຄື່ອນຍ້າຍອອກ ແລະ ການເຄື່ອນຍ້າຍເຂົ້າ, ສະພາບການເຄື່ອນຍ້າຍຈຳນວນປະຊາກອນທີ່ແຜ່ຫຼາຍຂອງບັນດາປະເທດຕ່າງໆໃນໂລກມັນເກີດຂຶ້ນຕົ້ນຕໍ ໃນສະຕະວັດທີ່ 19 - ສະຕະວັດທີ 20 ແລະ ປະຈຸບັນ ຊຶ່ງເຮັດໃຫ້ຄົນ ຜິວຂາວ, ຜິວເຫຼືອງ ແລະ ຜິວດຳ ສາມາດຢູ່ຮ່ວມກັນໃນທະວີບ, ໃນປະເທດ, ໃນແຂວງ. ໃນເມືອງ, ໃນບ້ານ ຫຼື ອາດຢູ່ໃນຄອບຄົວດຽວກັນມັນເປັນຜົນມາຈາກການຍ້າຍຖິ່ນຂອງເຊື້ອຊາດນີ້ໄປສູ່ອີກເຊື້ອຊາດໜຶ່ງໂດຍການບັງຄັບ ແລະ ສະມັກໃຈ. ການຍ້າຍຖິ່ນໂດຍການບັງຄັບເປັນການຍ້າຍຖິ່ນຂອງຜູ້ຄົນຈາກສົງຄາມ ແລະ ການເນລະເທດ (ຄົນທີ່ຖືກໂທດ), ການລ່າເມືອງຂຶ້ນ ຍ້າຍຖິ່ນໂດຍຄວາມສະມັກໃຈເປັນການຍ້າຍຖິ່ນຈາກການລ່າອານານິຄົມ ແລະ ການແຜ່ລ່າເມືອງຂຶ້ນ ຫຼື ສາຍເຫດທາງດ້ານເສດຖະກິດ ຈຶ່ງເຮັດໃຫ້ເກີດມີຜົນລະເມືອງຂອງເຊື້ອຊາດຕ່າງໆຢູ່ປົນເປໃນປະເທດ ຫຼື ທະວີບດຽວກັນ ເຊັ່ນ ທະວີບອາຟຣິກາ ນອກເໜືອຈາກມີ ຄົນຜິວດຳແລ້ວກໍຍັງມີຄົນຜິວຂາວ, ທະວີບອາເມລິກາ ນອກເໜືອຈາກມີຄົນຜິວເຫຼືອງແລ້ວກໍຍັງມີຄົນຜິວຂາວ ແລະ ຄົນຜິວດຳ ແລະ ທະວີບອາຊີ ນອກຈາກມີຄົນຜິວເຫຼືອງແລ້ວ ກໍຍັງມີຄົນຜິວດຳ ແລະ ຂາວເປັນຕົ້ນ.

ການຍ້າຍຖິ່ນຈາກການບັງຄັບ ເຮົາອາດມີຕົວຢ່າງດັ່ງນີ້ ການທີ່ເຮົາເຫັນຄົນຜິວຂາວຈຳນວນຫຼວງຫຼາຍດຳລົງຊີວິດຢູ່ ທະວີບອົດສະຕາລີ ໃນປະຈຸບັນ ໂດຍທົ່ວໄປຫຼາຍຄົນຄິດວ່າຄົນດັ້ງເດີມຂອງ ທະວີບອົດສະຕາລີ ນັ້ນເປັນຄົນຜິວຂາວ ແຕ່ໃນຕົວຈິງແລ້ວເຊື້ອຊາດດັ້ງເດີມຂອງ ທະວີບອົດສຕາລີ ເປັນເຊື້ອຊາດມົງກໂລອິດ - ອົດສຕາໂລໂປອິດ ແລະ ມີສີຜິວດຳ, ແຕ່ຍ້ອນການເນລະເທດນັກໂທດຂອງ ອັງກິດ ຊຶ່ງເປັນເຊື້ອຊາດເອີໂລໂປອິດທີ່ມີ ຜິວຂາວໃນສະໄໝຂອງການແຜ່ອຳນາດຈັກກະພັດ ແລະ ການລ່າອານານິຄົມຂອງ ຈັກກະພັດອັງກິດ ໄດ້ເອົານັກໂທດຄົນອັງກິດໄປປ່ອຍຢູ່ ເກາະອົດສຕາລີ, ດັ່ງນັ້ນເພື່ອການຢູ່ລອດຂອງນັກໂທດເອງ ນັກໂທດຕ່າງໆເຫຼົ່ານັ້ນໄດ້ແຕ່ງງານກັນ ແລະຫາກຸ້ມຕົນເອງດ້ວຍການເພີ່ມພູນຜະລິດຜົນ, ຄົ້ນຄວ້າວິທະຍາສາດ ແລະ ນຳໃຊ້ຊັບພະຍາກອນທີ່ມີຢູ່ໃນທ້ອງຖິ່ນເພື່ອການຄົງຕົວຂອງພວກເຂົາເອງຜ່ານຫຼາຍທົດສະຕະວັດ, ພົນລະເມືອງຜິວຂາວມີເພີ່ມຫຼາຍຂຶ້ນບົນເກາະ, ເສດຖະກິດ - ສັງຄົມຂະຫຍາຍຕົວ, ເຮັດໃຫ້ເກາະອົດສະຕາລີ ມີຄວາມຈະເລີນຮຸ່ງເຮືອງ, ມີຊີວິດຄວາມເປັນຢູ່ດີຂຶ້ນ. ຄົນຜິວຂາວນັບມື້ຫຼາຍຂຶ້ນ ແລະ ມີອຳນາດທາງດ້ານເສດຖະກິດ - ສັງຄົມບົນເກາະ ກາຍເປັນເຈົ້າຂອງເກາະແຫ່ງນີ້ຊຶ່ງເປັນ ທະວີບອົດສຕາລີ ໃນປະຈຸບັນ. ເຜົ່າເດີມທີ່ເປັນເຈົ້າຂອງເກາະອົດສຕາລີໃນເມື່ອກ່ອນໄດ້ກາຍ ເປັນຊົນເຜົ່າຊົນນ້ອຍໜຶ່ງຂອງເກາະ(ທະວີບ) ອົດສາລີ.

ການຍ້າຍຖິ່ນຂອງເຊື້ອຊາດໂດຍການສະໝັກໃຈ ການປະກົດຕົວຂອງພົນລະເມືອງ ເຊື້ອຊາດເອີໂລໂປອິດຢູ່ທະວີບອາຟຣິກາ ແລະ ທະວີບອາເມລິກາ ນັ້ນເປັນການຍ້າຍຖິ່ນ ໂດຍການສະມັກໃຈ ຊຶ່ງເປັນຜົນມາຈາກການລ່າອານານິຄົມ ແລະ ການແຜ່ລ່າເມືອງຂຶ້ນຂອງ ເຊື້ອຊາດເອີໂລໂປອິດ ໃນທ້າຍສະຕະວັດທີ່ 19 ແລະ ຕົ້ນຂອງສະຕະວັດທີ່ 20 ອອກ ໄປສູ່ທະວີບຕ່າງໆທີ່ພວກເຂົາຄິດວ່າເປັນທະວີບທີ່ມີພົນລະເມືອງຫຼ້າຫຼັງ ແຕ່ມີຊັບພະຍາກອນທຳມະຊາດ ຫຼາຍທີ່ຍັງບໍ່ທັນໄດ້ຂຸດຄົ້ນເຊັ່ນ: ອາຊີ, ອາຟຣິກາ ແລະ ອາເມລິກາ, ດັ່ງນັ້ນ; ເຊື້ອຊາດເອີໂລໂປອິດຈຶ່ງລ່າອານານິຄົມ ແລະ ແຜ່ລ່າເມືອງຂຶ້ນໄປຍັງບັນດາປະເທດຕ່າງໆຂອງບັນດາທະວີບດັ່ງກ່າວຈຶ່ງເປັນຜົນໃຫ້ມີພົນລະເມືອງຂອງ ເຊື້ອຊາດເອີໂລໂປອິດ ປະກົດຕົວຢູ່ໃນຫຼາຍໆປະເທດທີ່ມີພົນລະເມືອງເປັນ ເຊື້ອຊາດເນກໂລອິດ - ອົດສຕາໂລໂປອິດ ແລະ ໂມງໂກໂລອິດ ດຳລົງຊີວິດຢູ່.

ນອກຈາກນີ້ ການຍ້າຍຖິ່ນຂອງເຊື້ອຊາດ (ປະຊາກອນໂລກ) ຂອງແຕ່ລະຂົງເຂດທີ່ ມີການເຄື່ອນຍ້າຍຈຳນວນປະຊາກອນ ຫຼື ການປະກົດຕົວຂອງ ເຊື້ອຊາດເນກໂກອິດ - ອົດສຕາໂລໂປອິດ ແລະ ມົງໂກໂລອິດ ໃນປະເທດຕ່າງໆຂອງເອີລົບ ແລະ ການປະ ກົດຕົວຂອງ ເຊື້ອຊາດເນກໂກອິດ - ອົດສຕາໂລອິດ ໃນທະວີບອາຊີ ແລະອາເມລິການັ້ນ ເປັນຕົ້ນມາຈາກສົງຄາມ, ການເກນແຮງງານຂອງພວກລ່າເມືອງຂຶ້ນໃນສະຕະວັດທີ 19 ແລະ 20 ແລະ ການອົບພະຍົບເຮັດໃຫ້ຄົນຜິວດຳຊຶ່ງເປັນເຊື້ອຊາດເນກໂລອິດ - ອົດສຕາໂລໂປອິດ ທີ່ມີຖິ່ນຖານເດີມຢູ່ທະວີບອາຟຣິກາ ແລະ ອົດສຕາລີປະກົດຕົວໃນຫລາຍໆປະເທດຂອງທະວີບ ເອີລົບ, ອາຊີ ແລະ ອາເມລິກາ ສ່ວນຫຼາຍແມ່ນມາຈາກການເກນແຮງງານ ແລະ ການເກນທະຫານ. ການປະກົດຕົວຂອງຄົນຜິວເຫຼືອງທີ່ມີຫລາຍໃນບັນດາປະເທດທີ່ຈະເລີນໃນ ປະຈຸບັນ, ມາຈາກສອງສາຍເຫດເຊັ່ນ ການອບພະຍົບ ຫຼື ໄພສົງລາມ ແລະ ຊອກຫາວຽກງານທຳເປັນຕົ້ນຄົນຈີນ, ຄົນລາວ ຄົນຫວຽດນາມ ອອກຈາກປະເທດດັ້ງເດີມໄປຍັງປະເທດທີ່ຈະເລີນກວ່າໄປຍັງປະເທດອາເມລິກາ, ເຢຍລະມັນ, ໂປໂລຍ, ຊູວີເດັນ, ອັງກິດ ແລະ

ການເຄື່ອນຍ້າຍປະຊາກອນ (ເຊື້ອຊາດ) ອັນໄດ້ສ້າງຜົນກະທົບຕໍ່ສະພາບປະຊາກອນຂອງແຕ່ລະຂົງເຂດທີ່ມີການເຄື່ອນຍ້າຍມີການເພີ່ມຂຶ້ນ ແລະ ຫຼຸດລົງ, ເຮັດໃຫ້ໂຄງສ້າງ ຂອງປະຊາກອນແຕ່ລະປະເທດມີການປ່ຽນແປງ

- ປະເທດທີ່ມີຈຳນວນປະຊາກອນເຄື່ອນຍ້າຍເຂົ້າຫລາຍແມ່ນປະເທດທີ່ຂາດແຮງງານໃນການຜະລິດ, ເສດຖະກິດຂະຫຍາຍຕົວ, ສະພາບສັງຄົມມີການຮັບປະກັນ
- ປະເທດທີ່ມີການເຄື່ອນຍ້າຍອອກ ເປັນປະເທດທີ່ມີເສດຖະກິດບໍ່ຂະຫຍາຍຕົວ( ຂະຫຍສຍຕົວຊ້າ ), ສະພາບທຳມະຊາດບໍ່ອຳນວຍ, ສະພາບສັງຄົມບໍ່ສະຫງົບ.

**ການເຄື່ອນຍ້າຍຂອງປະຊາກອນໂລກແຕ່ບູຮານເຖິງປະຈຸບັນໄດ້ ແບ່ງເປັນ 5 ຄັ້ງໃຫຍ່ດັ່ງນີ້:**

- ຄັ້ງທີ1: ແມ່ນການອົບພະຍົບຂອງຊາວລ້ຽງສັດ ເຂດອາຊີກາງເຄື່ອນທີ່ໄປສູ່ເອີລົບ ໃນສະໄໝຕົ້ນ ຄຣິສຕ ສະກະລາດ, ຍ້ອນຂາດແຂນອາຫານສັດ, ມີການແກ້ງແຍ້ງທີ່ດິນເພື່ອດຳເນີນການລ້ຽງສັດ.
- ຄັ້ງທີ 2: ຍ້ອນການແຜ່ອຳນາດ ແລະ ການຂະຫຍາຍອຳນາດຂອງຊາວເອີຣົບເກີດຂຶ້ນໃນສະຕະວັດທີ 7-9 ເປັນຕົ້ນແມ່ນອົບພະຍົບເຂົ້າທາງພາກເໜືອຂອງອາຟຣິກາ, ພາກຕາເວັນອອກຂອງທະວີບເອີຣົບ. ນອກນັ້ນຍັງມີການ ອົບພະຍົບຍ້ອນການແຜ່ຂະຫຍາຍຂອງສາສະໜາອິສະລາມ ຈາກເຂດອາຊີກາງໄປສູ່ອາຊີໃຕ້, ການແຜ່ລາມຂອງສາ ສະໜາຮິນດູຈາກອິນເດຍໄປສູ່ອາຊີອາຄະເນ...
- ຄັ້ງທີ 3: ແມ່ນສະໄໝການອົບພະຍົບທີ່ຍິ່ງໃຫຍ່ທີ່ສຸດ ໃນປະຫວັດສາດການເຄື່ອນຍ້າຍຂອງມະນຸດ ນັ້ນ ແມ່ນການເຄື່ອນຍ້າຍຂອງຊາວເອີຣົບໄປສູ່ດິນແດນໄປສູ່ດິນແດນທະວີບຕ່າງໆໃນໂລກໃນສະຕະວັດທີ່ 15- 18 ເປັນການເຄື່ອນຍ້າຍ (ເຊື້ອຊາດ) ຊາວຜິວດຳ ຈາກທະວີບອາຟຣິກາສູ່ທະວີບອາເມຣິກາ, ເອີຣົບ ເພິ່ນເອີ້ນວ່າຂະບວນ ການຄ້າຂ້າທາດນັ້ນເອງ.



1. ຂະບວນໄປອາເມຣິກາເໜືອ
2. ຂະບວນໄປອາເມຣິກາກາງ ແລະ ໃຕ້
3. ຂະບວນໄປອາຟຣິກາ ແລະ ອົດສະຕາລີ
4. ຂະບວນຊາວອິນເດຍ
5. ຂະບວນຊາວຈີນ
6. ຂະບວນອາຣັບ
7. ຂະບວນຂ້າທາດຊາວຜິວດຳ

ແຜນທີ່ການເຄື່ອນຍ້າຍຂອງປະຊາກອນໂລກ ແຕ່ສະຕະວັດທີ 15 – 18

- ຄັ້ງທີ 4: ແມ່ນການເຄື່ອນຍ້າຍຂອງປະຊາກອນໃນສະຕະວັດທີ່ 19 ຮອດສະຕະວັດທີ 20 ເຊິ່ງເປັນການເຄື່ອນຍ້າຍຂອງພວກຈັກກະພັດ ແລະ ປະຊາກອນໃນປະເທດລ່າຫົວເມືອງຂຶ້ນໄປສູ່ບັນດາປະເທດຫົວເມືອຂຶ້ນຕ່າງໆ ໂດຍສະເພາະແມ່ນການເຄື່ອນຍ້າຍຂອງປະເທດຈັກກະພັດຝຣັ່ງ, ອັງກິດ




ແຜນທີ່ການເຄື່ອນຍ້າຍຂອງປະຊາກອນໂລກ ແຕ່ສະຕະວັດທີ 19 - 20

- ຄັ້ງທີ5: ແມ່ນການເຄື່ອນຍ້າຍຂອງເຊື້ອຊາດນັບແຕ່ສົງຄາມໂລກຄັ້ງທີ່ 2 ຈົນເຖິງປະຈຸບັນເຊິ່ງເປັນໄລຍະທີ່ຂະບວນການອົບພະຍົບເກີດຂຶ້ນຢູ່ທຸກທະວີບໃນທົ່ວໂລກ. ຂະບວນການອົບພະຍົບນີ້ແມ່ນເນື່ອງມາຈາກບັນຫາສົງຄາມ, ສະພາບການຂະຫຍາຍຕົວທາງດ້ານເສດຖະກິດ, ການແຕກສະຫຼາຍຂອງບັນດາຫົວເມືອງຂຶ້ນ... ເຊິ່ງໄດ້ເຮັດໃຫ້ປະຊາກອນມີການເຄື່ອນຍ້າຍຢ່າງສັບສົນ ທັງຢູ່ພາຍໃນ ແລະ ຕ່າງປະເທດ.

ໃນປະຈຸບັນ, ການເຄື່ອນຍ້າຍຂອງປະຊາກອນອອກຕ່າງປະເທດໄດ້ຫຼຸດຜ່ອນລົງຫຼາຍ ເຊິ່ງສ່ວນຫຼາຍແມ່ນການເຄື່ອນຍ້າຍຂອງກຳລັງແຮງງານ ແລະ ປັນຍາຊົນ ເຊິ່ງເອີ້ນວ່າ: ການເຄື່ອນຍ້າຍຂອງມັນສະໝອງ ຫຼື ສະໝອງໄຫຼ ການເຄື່ອນຍ້າຍພາຍໃນປະເທດແມ່ນຍັງສືບຕໍ່ເປັນປະຈຳອັນເນື່ອງມາຈາກສະພາບການພັດທະນາເສດຖະກິດ-ສັງຄົມຂອງປະເທດນັ້ນໆ.

# ບົດທີ 3
# ກຸ່ມຄົນສຳພັນ

## 1. ນິຍາມກຸ່ມຄົນສຳພັນ.

ຄົນ ແມ່ນສັດຊັ້ນສູງທີ່ມີປັນຍາ, ມີຄວາມສະຫຼາດ ແລະ ມີຫົວຄິດປະດິດສ້າງ, ມີພາສາປາກເວົ້າ ແລະ ຂຽນເປັນສື່, ແຕ່ສິ່ງທີ່ສຳຄັນຂອງຄວາມແຕກຕ່າງລະຫວ່າງສັດ ແລະ ມະນຸດນັ້ນຄືການອອກແຮງງານ. ການເລີ່ມຕົ້ນຂອງສັງຄົມມະນຸດຄືຕ້ອງໄດ້ອາໄສເຊິ່ງກັນ ແລະ ກັນ ໃນການເພີ່ມພູນຜະລິດຜົນ, ການຕໍ່ສູ້ຕ້ານກັບທຳມະຊາດ, ຕ້ານກັບສັດຮ້າຍ ເພື່ອຄວາມຢູ່ລອດຂອງມະນຸດຈຶ່ງເກີດມີກຸ່ມຄົນຂຶ້ນ. ຜ່ານຫຼາຍພັນປີ, ຫຼາຍສັດຕະວັດ ແລະ ຫຼາຍໄລຍະປະຫວັດສາດ ບັນດາກຸ່ມຄົນນັບມື້ນັບຂະຫຍາຍຈຳນວນພົນລະເມືອງ ແລະ ຈຳນວນກຸ່ມຄົນຂຶ້ນ ແຕ່ນ້ອຍເຖິງຫຼາຍແຕ່ຢູ່ຊໍາຊາເຖິງມີຜູ້ຄົນໜາແໜ້ນ ແລະ ດຳລົງຊີວິດຄົງທີ່ ເປັນບ້ານເປັນເມືອງ ແລະ ເປັນປະເທດ. ສະນັ້ນກຸ່ມຄົນສຳພັນໄດ້ກຳເນີດໃນເງື່ອນໄຂປະຫວັດສາດໃດໜຶ່ງ ແລະ ເວລາໃດເງື່ອນໄຂປະຫວັດສາດມີການປ່ຽນແປງມັນກໍຈະປ່ຽນແປງໄປຕາມເງື່ອນໄຂ ປະຫວັດສາດ ດັ່ງກ່າວ, ສະນັ້ນກຸ່ມຄົນສຳພັນເປັນກຸ່ມຄົນໜຶ່ງທີ່ໄດ້ກຳເນີດ ໃນເງື່ອນໄຂປະຫວັດສາດ ໃດໜຶ່ງ, ມີການພົວພັນເຊິ່ງກັນ ແລະ ກັນທາງດ້ານສັງຄົມ (ກົກເຄົ້າ, ພາສາ,ຂອບເຂດດິນແດນ), ເສດຖະກິດ ແລະ ວັດທະນະທຳ.

## 2. ກຸ່ມຄົນສຳພັນ.

### 2.1 ກຸ່ມຄົນບູຮານ.

ກ. ກຸ່ມຄົນມານດາສິດທິລາດ

ແມ່ນກຸ່ມຄົນທີ່ຢູ່ຮ່ວມກັນທີ່ກຳເນີດໃນຍຸກຫີນເກົ່າຕອນປາຍຫາຍຸກຫີນໃໝ່ ທີ່ປະກອບມີສະມາຊິກອາໄສຢູ່ຫຼາຍໃນໄລຍະຄົນປະຖົມບູຮານ ພວກເຂົາອາໃສຢູ່ຮ່ວມກັນເປັນຄອບຄົວໃຫຍ່ເຊິ່ງເອີ້ນວ່າ: ວົງຕະກູນ ຫຼື ກົກເຫຼົ່າ. ໃນວົງຕະກຸນທີ່ມີສາຍກາພົວພັນກັນຢ່າງໃກ້ສິດທາງສາຍເລືອດ. ມີຫົວໜ້າເຜົ່າ ການພົວພັນສະມາຊິກພາຍໃນວົງຕະກຸນ ມີລັກສະນະປະຊາທິະໄຕ, ສະເໝີພາບກັນ, ບໍ່ມີຊັບສົມບັດເປັນສ່ວນບຸກຄົນ ຫຼື ຂອງສ່ວນຕົວທຸກຄົນມີໜ້າທີ່ອອກແຮງງານຮ່ວມກັນ ແລະ ຊົມໃຊ້ຜົນປະໂຫຍດຮ່ວມກັນ, ມີການແບ່ງງານຕາມເພດ, ໄວແມ່ຍິງມີພາລະ

ບົດບາດສຳຄັນໃນອາຫານການກິນຢ່າງສະໝ່ຳສະເໝີ ແລະ ຄົງທີ່ກວ່າ ເມື່ອທຽບກັບການລ່າເນື້ອເປັນພາລະຂອງເພດຊາຍ ອີກບັນຫາໜຶ່ງທີ່ເຮັດໃຫ້ລະບອບມານດາກຳເນີດຂຶ້ນເນື່ອງມາຈາກການສົມລົດລວມໝູ່ ລູກເກີດມາຮູ້ແຕ່ແມ່ ບໍ່ຮູ້ພໍ່ດັ່ງນັ້ນແມ່ນຈຶ່ງກາຍເປັນຜູ້ທີ່ບົດບາດສຳຄັນຢູ່ໃນສັງຄົມ. ແມ່ຍິງມີໜ້າທີ່ໃນການແບ່ງງານ ຫຼັກການແບ່ງງານແມ່ນຢຶດຖືເອົາຜູ້ສູງອາຍຸເປັນຫົວໜ້າຄຸ້ມຄອງ, ມີບົນຮຽນ ແລະ ມີອິດທິພົນເປັນຫົວໜ້າ.

**ຂ.ກຸ່ມຄົນບິດາສິດທິລາດ**

ແມ່ນຍຸກທີ່ກຳເນີດຂຶ້ນໃນໄລຍະຍຸກຫີນໃໝ່ຕອນທ້າຍມີການປະດິດເຄື່ອງມືອອກແຮງງານ, ພາຫະນາເຄື່ອງໃຊ້ໃຫ້ດີຂຶ້ນທາງດ້ານຄຸນນະພາບເຮັດໃຫ້ລະບົບການຜະລິດມີການຂະຫຍາຍຕົວ ໂດຍສະເພາະພາຍຫຼັງມີການແບ່ງງານຢ່າງຈະແຈ້ງ ລະຫວ່າງການປູກຝັງ ແລະ ລ້ຽງສັດ ເຮັດໃຫ້ສອງຂະແໜງການນີ້ຂະຫຍາຍຕົວຢ່າງວ່ອງໄວການພົວພັນສັງຄົມເກີດຂຶ້ນຢ່າງຈະແຈ້ງ

ລະບອບບິດາ ຫຼື ກົກບິດາກຳເນີດຂຶ້ນໃນໄລຍະການປູກຝັງ-ລ້ຽງສັດມີການຂະຫຍາຍຕົວ, ໂດຍສະເພາະຍຸໂລຫະ ມະນຸດໄດ້ມີການນຳເອົາໂລຫະມາປະດິດເປັນເຄື່ອງມືໃນການຜະລິດທີ່ມີລັກສະນະແຂງ ແລະ ທົນທານກວ່າ. ປັດໄຈທີ່ເຮັດໃຫ້ລະບອບບິດາກຳເນີດຂຶ້ນ ແມ່ນມາຈາກການກຳເນີດລະບອບຄອບຄົວດຽວ( ຜົວດຽວ ) ເຂົ້າມາແທນໃຫ້ລະບອບສົມລົດລວມໝູ່ແບບນອກກຸ່ມ. ລູກເກີດມາຈຶ່ໃຊ້ນາມສະກຸນນຳພໍ ນອກນັ້ນຍັງມາຈາກການແບ່ງງານຄົນຊັດເຈນຢູ່ໃນສັງຄົມ

ເວົ້າລວມແລ້ວລະບອບບິດາ ແມ່ນລະບອບທີ່ການຜະລິດຂະຫຍາຍຕົວ ໄດ້ເຮັດໃຫ້ສັງຄົມມີການປ່ຽນແປງເຊິ່ງສິດອຳນາດລວມສູນ, ລະບອບກຳມະສິດລວມໝູ່ ແລະ ຄວາມສະເໝີພາບທີ່ມີມາໃນເມື່ອກ່ອນມາຮອດເວລານີ້ແມ່ນຖືກແຕກມ້າງ ອັນເປັນຜົນໃຫ້ເກີດມີກຳມະສິດສ່ວນຕົວ, ການຍຶກຈ່ອງຊັບ, ຜົນຜະລິດຫຼາຍຂຶ້ນ ຫົວໜ່ວຍການພົວພາຍ ແລະ ການຈັດຕັ້ງທາງສັງຄົມມີການປ່ຽນແປງ ແລ້ວຖືກປ່ຽນແທນດ້ວຍອັນໃໝ່ຄື: ຊຸມນຸມຊົນໃກ້ຄຽງທີ່ບໍ່ອີງໃສ່ຄວາມສຳພັນທາງດ້ານສາຍເລືອດ ແຕ່ອີງໃສ່ຂອບເຂດການທຳມາຫາກິນເປັນຫຼັກ.

**2.2 ກຸ່ມຄົນຊົນເຜົ່າ**

ແມ່ນວົງຄະນະຍາດຄົນ ທີ່ມີເສດຖະກິດ, ວັດທະນະທຳ ແລະ ສັງຄົມອັນດຽວກັນ ຊຶ່ງປະກົດຂຶ້ນໃນລະບອບຂ້າທາດ ແລະ ຄົງຕົວມາເຖິງປະຈຸບັນ.

**2.3 ກຸ່ມຄົນຊົນຊາດ**

ແມ່ນວົງຄະນະຍາດຄົນທີ່ມີຫຼາຍຊົນເຜົ່າດຳລົງຊີວິດຢູ່ຮ່ວມກັນໃນຂອບເຂດດິນແດນດຽວກັນ ແຕ່ມີຄວາມແຕກຕ່າງທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ ຊຶ່ງປະກົດຕົວຂຶ້ນໃນລະບອບສັກດີນາ ແລະ ຄົງຕົວມາເຖິງປະຈຸບັນ.

ກຸ່ມຄົນຊົນຊາດປະກົດຕົວພ້ອມກັບການປະກົດຕົວຂອງລະບອບສັກດີນາ ຊຶ່ງແມ່ນໄລຍະທີ່ເພດຊາຍມີອຳນາດສູງໃນສັງຄົມ ແລະ ໃຊ້ອຳນາດຂອງບຸກຄົນເພື່ອຍຶດເອົາດິນແດນທີ່ສາມາດທຳການຜະລິດໄດ້ຈາກບຸກຄົນ ແລະ ກຸ່ມຄົນຕ່າງໆມາເປັນກຳມະສິດຂອງພຽງຜູ້ດຽວຂະຫຍາຍດິນແດນ ແລະ ເຕົ້າໂຮມດິນແດນໃນສັງຄົມມະນຸດ

- ສິດທິ
- ເສດຖະກິດ
- ສັງຄົມ - ການພົວພັນໃນຄອບຄົວຜົວດຽວ ເມຍຫຼາຍຄົນ
- ສິດທິລະຫວ່າງຍິງ - ຊາຍ ໃນສັງຄົມ
- ການປົກຄອງອາດຍາສິດ

## 3.ລັກສະນະຄວາມແຕກຕ່າງທາງເພດພັນ.

ຄວາມເຂົ້າໃຈຊຶ່ງກັນ ແລະ ກັນກຸ່ມເຜົ່າພັນ ຈະສົ່ງເສີມໃຫ້ເກີດຄວາມສຳພັນທີ່ດີໄດ້, ຖ້າເຂົ້າໃຈວ່າຄວາມແຕກຕ່າງລະຫວ່າງກຸ່ມເຜົ່າພັນເກີດຂຶ້ນໄດ້ຢ່າງໃດ, ສາຍເຫດຂອງການເກີດການແບ່ງແຍກ ລະຫວ່າງກຸ່ມເຜົ່າພັນໃນລັກສະນະກຸ່ມນ້ອຍ ແລະ ຊົນກຸ່ມໃຫຍ່ພໍສະຫຼຸບໄດ້ 5 ລັກສະນະຄື:

**3.1 ປັດໄຈພາໃຫ້ເກີດມີຄວາມແຕກຕ່າງທາງດ້ານຊົນເຜົ່າ**

**(1) ເກີດຈາກການແບ່ງແຍກໂດຍວັດທະນະທຳ.**

ໃນສັງຄົມມີບາງສັງຄົມມີການແບ່ງຊົນຊັ້ນ ແລະ ຄົນທີ່ຢູ່ໃນຊົນຊັ້ນຕ່ຳທີ່ສຸດຄື ເປັນກຸ່ມຊົນທີ່ຢູ່ນອກລະບົບສັງຄົມນັ້ນເຊັ່ນ: ຈັນທານໃນອິນເດຍ, ເອທາ ຫຼື ບູຣາຄູ ໃນປະເທດຍີ່ປຸ່ນ ເປັນຕົ້ນ. ຄົນທີ່ຢູ່ໃນກຸ່ມເຜົ່າພັນດຽວກັນແຕ່ຖືກສັງຄົມລະບຸວ່າເປັນຄົນນອກລະບົບ ຫຼື ນອກຮີດ ແລະ ຖືວ່າເປັນຜູ້ທີ່ບໍ່ສະອາດ ແລະ ບໍ່ຄວນຢູ່ຮ່ວມສັງຄົມກັບສະມາຊິກສ່ວນຫຼາຍໄດ້ກາຍເປັນຊົນກຸ່ມນ້ອຍຂອງສັງຄົມນັ້ນ. ເປັນຜູ້ທີ່ປະສະຈາກສັກສີບໍ່ມີອຳນາດ ແລະ ບໍ່ມີສິດທິທາງສັງຄົມເທົ່າທຽມຄົນອື່ນ ປະຈຸບັນທັງປະເທດອິນເດຍ ແລະ ປະເທດຍີ່ປຸ່ນ ໄດ້ອອກກົດໝາຍເລີກຊົນຊັ້ນຈັນທານ ແລະ ບູຣາຄູ ແຕ່ໃນທາງປະຕິບັດການກົດກັນຍັງມີຢູ່ ແລະ ຄົນກຸ່ມນີ້ກຳລັງຮຽກຮ້ອງຄວາມສະເໝີພາບທາງກົດໝາຍ ແລະ ທາງສັງຄົມ, ເມື່ອໃດທີ່ລັດຖະບານສາມາດໃຫ້ຄວາມສະເໝີພາບທາງກົດຫມາຍ ແລະ ທາງສັງຄົມໃຫ້ແກ່ຄົນ, ກຸ່ມນີ້ໄດ້ ເມື່ອນັ້ນສະພາບຂອງຄວາມເປັນຊົນກຸ່ມນ້ອຍກໍຈະໝົດໄປ.

**(2) ເກີດຈາກການແບ່ງແຍກຈາກລັກສະນະພູມີສາດ.**

ກຸ່ມຊົນທີ່ມີກຸ່ມຊາດພັນ ຕ່າງຈາກສ່ວນໃຫຍ່ ແລະ ຕັ້ງຖິ່ນຖານຢູ່ໃນບໍລິເວນທີ່ຫ່າງໄກສອກຫຼີກເຊັ່ນ: ຊາວພູດອຍໃນປະເທດຕ່າງໆ ໃນອາຊີອາຄະເນ ພົບບັນຫາວ່າຖືກຕັດຂາດຈາກສັງຄົມສ່ວນໃຫ່ຍ. ບໍ່ໄດ້ຮັບຂ່າວສານຈາກສ່ວນກາງຢ່າງສະໝ່ຳສະເໝີ, ການຂາດການສື່ສານທີ່ດີນັ້ນມີຜົນເຮັດໃຫ້ເກີດຄວາມເຂົ້າໃຈຜິດ ແລະ ອາດເຮັດໃຫ້ຊົນກຸ່ມນ້ອຍມີປະຕິກິລິຍາຕໍ່ຕ້ານຊົນກຸ່ມໃຫຍ່ໄດ້.

**ຕົວຢ່າງ** ຊາວພູດອຍໃນ ປະເທດພະມ້າ ແລະ ຊາວພູດອຍໃນ ປະເທດລາວ ເປັນຕົວຢ່າງທີ່ຈະປຽບທຽບກັນໄດ້ ຊາວພູດອຍຖືເປັນຊົນກຸ່ມນ້ອຍທີ່ຖືກແຍກຈາກຊົນກຸ່ມໃຫຍ່ໂດຍລັກສະນະທາງພູມສາດ, ການຂາດການສື່ສານທີ່ດີເຮັດໃຫ້ລັດຖະບານພະມ້າມີບັນຫາກັບພວກກະຫຼ່ຽງ ແລະ ພວກຊານ ແຕ່ໃນກໍລະນີປະເທດລາວລັດຖະບານລາວໄດ້ພະຍາຍາມວາງນະໂຍບາຍຊົນເຜົ່າຕິດຕໍ່ສື່ສານກັບຊົນເຜົ່າຢູ່ສະເໝີເພື່ອສ້າງຄວາມເຂົ້າໃຈທີ່ດີຕໍ່ກັນ. ຄວາມສຳພັນລະຫວ່າງຊົນເຜົ່າ ກັບ ລັດຖະບານລາວ ຈຶ່ງເປັນ ຄວາມສຳພັນທີ່ມີບັນຫາໜ້ອຍກວ່າກໍລະນີຂອງປະເທດພະມ້າ.

**(3) ເກີດຈາກການເສີມດິນແດນ ຫຼື ການຂະຫຍາຍອະນາເຂດ.**

ການຂະຫຍາຍຕົວຂອງປະເທດໃດປະເທດໜຶ່ງ ໂດຍການເສີມດິນແດນເພີ່ມອາດເກີດຈາກການຕົກລົງກັນຂອງສົນທິສັນຍາ ຫຼື ສົງຄາມ ຕົວຢ່າງຂອງການຕົກລົງຕາມສົນທິສັນຍາຄື ກໍລະນີສະຫະລັດອາເມລິກາຊື້ດິນແດນຊຶ່ງປະຈຸບັນຄື: ລັດຕ່າງໆໃນພາກຕາເວັນອອກສ່ຽງໃຕ້ຕາມສັນຍາທີ່ເອີ້ນວ່າ "Louisiana Purchase " ໃນປີ ຄ.ສ 1803 ຫຼື ການທີ່ ສະຫະລັດອາເມລິກາ ຊື້ດິນແດນຊຶ່ງປະຈຸບັນຄື: ລັດອະລາສກາໃນປີ ຄ.ສ1867 ສ່ວນຕົວຢ່າງຂອງການສູ້ລົບລະຫວ່າງເພື່ອນບ້ານ ແລະ ຝ່າຍຊ້າຍຈະເສີມດິນແດນຂ້າງຄຽງ ຫຼື ກໍລະນີອານາຈັກຕ່າງໆໃນບໍລິເວນແຫຼມທອງຄຳຂອງທະວີບອາຊີຄື: ອານາຈັກສຸໂຂໄທ, ທະວາຣະວາດີ, ສີວິໄຊ, ລ້ານນາ, ລ້ານຊ້າງ, ອາໂຍທະຍາ ແລະ ອື່ນໆ ສາມາດຂະຫຍາຍດິນແດນໃຫ້ກວ້າງໃຫຍ່ຂຶ້ນໂດຍການຍົກທັບສູ້ລົບກັນ ແລະ ຝ່າຍຊະນະເປັນຝ່າຍທີ່ສາມາດຂະຫຍາຍອານາຈັກໄດ້.

ການເສີມດິນແດນໃນລັກສະນະຂອງການຕົກລົງກັນຕາມສົນທິສັນຍາກໍດີ, ໃນລັກສະນະຂອງການສູ້ລົບກໍ່ດີ ຖ້າດິນແດນທີ່ໄດ້ມາປະກອບດ້ວຍເຜົ່າທີ່ແຕກຕ່າງໄປຈາກຄົນສ່ວນໃຫຍ່ແລ້ວບັນຫາເລື່ອງຊົນເຜົ່າສ່ວນນ້ອຍແລະ ຊົນເຜົ່າສ່ວນໃຫຍ່ກໍຍ່ອມຈະເກີດຂຶ້ນໄດ້ເຖິງແມ່ນວ່າລັກສະນະໂດຍທົ່ວໄປຂອງຄົນສອງເຜົ່ານີ້ອາດບໍ່ແຕກຕ່າງກັນຫຼາຍປານໃດກໍຕາມ.

**(4).ເກີດຈາກການຍ້າຍຖິ່ນ.**

ລັກສະນະການເກີດຊົນເຜົ່າ ສ່ວນນ້ອຍທີ່ເກີດຈາກການຍ້າຍຖິ່ນມີສາຍເຫດມາຈາກການທີ່ຈຳນວນໜຶ່ງອົບພະຍົບຍ້າຍຖິ່ນເຂົ້າໄປຢູ່ໃນສັງຄົມອື່ນ ໂດຍທີ່ຄົນກຸ່ມນີ້ມີລັກສະນະທາງວັດທະນະທຳແຕກຕ່າງຈາກຄົນໃນສັງຄົມທີ່ຕົນຍ້າຍເຂົ້າໄປຢູ່ການເກີດຊົນເຜົ່າສ່ວນນ້ອຍຈາກການຍ້ານຖິ່ນມີໄດ້ຫຼາຍກໍລະນີເຊັ່ນ:

1. ການອົບພະຍົບທາດຈາກອາຟຣິກາໄປທະວີບອາເມລິກາ ແລະ ເອີລົບ.

2.ການອົບພະຍົບແຮງງານເກນຈາກບໍລິເວນໜຶ່ງໄປອີກບໍລິເວນໜຶ່ງ.

3. ການວ່າຈ້າງອົບພະຍົບຄົນເພື່ອໄປເປັນຄົນງານ.

4. ການອົບພະຍົບເຂົ້າເມືອງໂດຍຜິດກົດໝາຍ ຫຼືການຫຼີ້ໄພການເມືອງ.

5 ການຮັບຊົນຊາດອື່ນເຂົ້າປະເທດ ໂດຍການໂອນສັນຊາດ.

6. ການອົບພະຍົບຂອງຊົນຊາດທີ່ຈະເລີນກວ່າ ໄປຍັງພື້ນທີ່ທີ່ຊົນຊາດທີ່ດ້ອຍພັດທະນາກວ່າ.

ການຍ້າຍຖິ່ນໃນຮູບແບບຕ່າງໆທີ່ສະເໜີຂ້າງຕົ້ນ ແຕກຕ່າງກັນໃນລະດັບຂອງການບັງຂັບ ຄວບຄຸມໃນກໍລະນີທີ່ອົບພະຍົບທາດຂອງຟຣິກາໄປອາເມລິກາ ຫຼື ເອີລົບ ເປັນການອົບພະຍົບທີ່ມີການຄວບຄຸມຢ່າງໃກ້ສິດໂດຍຖືວ່າມີລັກສະນະບໍ່ຕ່າງໄປຈາກນັກໂທດທີ່ຕ້ອງຈອງຈຳ ແລະ ເຝົ້າເບິ່ງຢ່າງໃກ້ສິດ, ໃນທຳນອງດຽວກັນກັບການອົບພະຍົບແຮງງານເກນໄປໄວ້ໃນຄ້າຍກຳມະກອນອົບພະຍົບໃນ ເອີລົບ ກໍມີການຄວບຄຸມຂ້ອນຂ້າງໃກ້ສິດແຕ່ບໍ່ເຂັ້ມງວດເທົ່າກໍລະນີດອາການອົບພະຍົບຂ້າທາດ ແລະ ການອົບພະຍົບຄົນງານໄປເຮັດວຽກຮັບຈ້າງໃນປະເທດອື່ນກໍມີລັກສະນະເຂັ້ມງວດນ້ອຍລົງມາ ແຕ່ຄົນງານເຫຼົ່ານີ້ກໍ່ຍັງມີລັກສະນະຂາດສະຖຽນລະພາບ ເນື່ອງຈາກບໍ່ຮູ້ວ່າຈະຕ້ອງໄປທີ່ໃດຢ່າງໃດ ຕ້ອງຄ່ອຍອາໃສຈັດການອົບພະຍົບຢູ່ຕະຫລອດເວລາ ແລະ ມັກຈະບໍ່ແນ່ໃຈວ່າອະນາຄົດຈະມີບັນຫາ ຫຼື ບໍ່. ສ່ວນກໍລະນີຂອງອົບພະຍົບເຂົ້າເມືອງໂດຍຜິດກົດໝາຍເປັນການອົບພະຍົບໃນລະດັບບຸກຄົນ ຫຼືຄອບຄົວໂດຍບໍ່ມີການຈັດການຢ່າງເປັນລະບົບ, ຜູ້ອົບພະຍົບມີບັນຫາໃນຊ່ວງຂອງການເດີນທາງ ແລະ ຜ່ານດ່ານຕ່າງໆ ແຕ່ເມື່ອໄດ້ເຂົ້າມາຄ້າຍອົບພະຍົບຫຼີ້ໄພແລ້ວສະພາບຄວາມເປັນຢູ່ຈະບໍ່ມີຂໍ້ຮ້າຍເທົ່າໃດ ແລະ ບາງຄັ້ງຜູ້ອົບພະຍົບຈະໄດ້ສິດທິພິເສດດ້ວຍ ເຖິງແມ່ນວ່າຈະຢູ່ໃນການຄວບຄຸມແດ່. ອີກກໍລະນີໜຶ່ງຄືການໂອນສັນຊາດ ຊຶ່ງເປັນການອົບພະຍົບໃນລະດັບບຸກຄົນໃນລັກສະນະທີ່ບໍ່ມີການຄວບຄຸມ, ການຕັດສິນໃຈອົບພະຍົບເປັນການຕັດສິນໃຈ ສ່ວນຕົວ, ຊຶ່ງເຂົາເຈົ້າຄິດວ່າດີ ແລະ ເໝາະສົມ, ແຕ່ເມື່ອໄປຢູ່ປະເທດໃໝ່, ຜູ້ອົບພະຍົບອາດຢູ່ໃນສະພາບຊົນເຜົ່າສ່ວນນ້ອຍອັນເນື່ອງຈາກຖືກກີດກັນ ຫຼືຖືກຈຳກັດສິດທິໃຫ້ມີສິດທິທາງສັງຄົມດ້ອຍກວ່າເຈົ້າຂອງປະເທດທີ່ຢູ່ມາກ່ອນ.

ການອົບພະຍົບຂອງຊາວຕາເວັນຕົກ ຈາກເອີລົບໄປຍັງທະວີບອາເມລິກາ ແລະ ທະວີບອົດສເຕເລຍ ຄື ການອົບພະຍົບຊົນຊາດທີ່ຈະເລີນກວ່າເຂົ້າໄປຄອບຄອງ ແລະ ມີອິດທິພົນເໜືອກວ່າຜູ້ທີ່ຢູ່ເດີມ ແລະ ເຮັດໃຫ້ຜູ້ທີ່ຢູ່ເດີມກາຍເປັນຊົນເຜົ່າສ່ວນນ້ອຍໄດ້ເຊັ່ນດຽວກັນ.

**(5).ເກີດຈາກການຕົກເປັນປະເທດອານານິຄົມ ຫຼື ເມືອງຂຶ້ນ.**

ການເກີດຊົນເຜົ່າສ່ວນນ້ອຍໃນປະເທດອານານິຄົມນີ້ມີລັກສະນະແຕກຕ່າງຈາກກໍລະນີຕ່າງໆທີ່ກ່າວມາແລ້ວທັງ 4 ກໍລະນີ: ທັງນີ້ເພາະອານານິຄົມເກີດຈາກການທີ່ມະຫາອຳນາດເຂົ້າມາມີອຳນາດໃນເມືອງການປົກຄອງຂອງປະເທດອື່ນ. ຜູ້ອົບພະຍົບເຂົ້າມາເປັນຜູ້ທີ່ມີອຳນາຫລາຍກວ່າ ແລະ ສາມາດອອກກົດໝາຍບັງຄັບຕ່າງໆ ນານາ; ເຮັດໃຫ້ເຈົ້າຂອງ ປະເທດທີ່ມີຈຳນວນຫຼາຍກວ່າມີລັກສະນະຂອງຜູ້ຢູ່ໃຕ້ປົກຄອງ ແລະ ຕ້ອງຍອມຈຳນົນຕໍ່ຂໍ້ຮຽກຮ້ອງຂອງປະເທດມະຫາອຳນາດ, ປະເທດມະຫາອຳນາດມັກຈະຈັບຈອງທີ່ດິນຂະໜາດໃຫຍ່ ແລະ ວ່າຈ້າງຄົນພື້ນເມືອງໃຫ້ເປັນກຳມະກອນໃນໄຮ່ນາ, ມີຜົນເຮັດໃຫ້ຄົນພື້ນເມືອງມີລັກສະນະເປັນຜູ້ຢູ່ໃຕ້ການປົກຄອງລູກຈ້າງໃນຂອງປະເທດມະຫາອຳນາດ. ເຖິງວ່າມະຫາອຳນາດເປັນຜູ້ບຸກລຸກເຂົ້າມາໃນດິນແດນຂອງຕົນ, ໂດຍທົ່ວໄປຈຳນວນຂອງຜູ້ທີ່ອົບພະຍົບມາຈາກປະເທດມະຫາອຳນາດມັກຈະບໍ່ມີຫລາຍເທົ່າໃດ ແຕ່ເນື່ອງຈາກຄົນກຸ່ມນີ້ສາມາດຈັບຈອງທີ່ດິນ ແລະ ເຮັດທຸລະກິດຈົນເຖິງຂະນາດເປັນຜູ້ຄຸມອຳນາເສດຖະກິດ, ການເມືອງ ແລະ ສັງຄົມ ໃນກໍລະນີ້ ຊົນຂັບ

ເວ ໄດ້ປະກົດວ່າໃນປີ ຄ.ສ 1931 ຄົນຜິວຂາວເປັນເຈົ້າຂອງທີ່ດິນເກືອບຮ້ອຍລະ 50 ຂອງພື້ນທີ່ທັງໝົດແຕ່ ປະຊາກອນຜິວຂາວມີພຽງປະມານຮ້ອຍລະ 5 ເທົ່ານັ້ນ.

# ບົດທີ4

# ຕະກຸນພາສາໃນໂລກ

## 1. ເຄົ້າກຳເນີດຂອງພາສາ.

ເຄົ້າກຳເນີດຂອງພາສາ ແມ່ນບັນຫາໜຶ່ງທີ່ສຳຄັນໃນຂະແໜ່ງພາສາສາດ, ນອກຈາກວິຊາພາສາສາດແລ້ວ ວິຊາອື່ນເຊັ່ນ: ວິຊາປັດຊະຍາ, ຊົນຊາດວິທະຍາ, ປະຫວັດສາດ ... ກໍ່ໄດ້ເອົາໃຈໃສ່ຄົ້ນຄ້ວາບັນຫາເຂົ້າກຳເນີດຂອງພາສາ ຄືກັນບັນຫາເຂົ້າກຳເນີດຂອງພາສາ ບໍ່ແມ່ນເລື່ອງທີ່ງ່າຍດາຍ ເພາະບໍ່ມີເອກະສານຕົວຈິງຂອງຊາວບູຮານຢັ້ງຢືນ ການຄົ້ນຄ້ວາບັນຫານີ້ມີແຕ່ອີງໃສ່ພື້ນຖານດ້ານວິທະຍາສາດເພື່ອພິສູດ ແລະ ຢັ້ງຢືນ.

### 1.1 ທິດສະດີຕ່າງໆວ່າດ້ວຍເຄົ້າກຳເນີດຂອງພາສາ

ໃນສະໄໝບູຮານນັກທິດສະດີ ນັກຄົ້ນຄ້ວາຕ່າງໆກໍ່ໄດ້ເອົາໃຈໃສ່ເຖິງບັນຫາເຄົ້າກຳເນີດຂອງພາສາຄືກັນ. ແຕ່ຍ້ອນໂລກະທັດຂອງເຈົ້າເວລານັ້ນຢູ່ໃນຂອບເຂດຈຳກັດ, ສະນັ້ນ ເຂົ້າເຈົ້າຈຶ່ງພຽງແຕ່ແຕ່ງເປັນເທບນິຍາຍ ຫຼື ນິຍາຍປະຫວັດ ເພື່ອອະທິບາຍກ່ຽວກັບເຄົ້າກຳເນີດຂອງພາສາ ໃນສະໄໝບູຮານໄດ້ມີສອງຟັກຝ່າຍເຊິ່ງມີສອງທັດສະນະແຕກຕ່າງກັນຄື:

- ພວກນັກສາສະໜາເວົ້າວ່າ ເທບພະເຈົ້າເປັນຜູ້ສ້າງມະນຸດ, ສ້າງໂລກ ແລະ ປະທານພາສາແກ່ມະນຸດ. ບັນຫານີ້ພວກເຮົາເຫັນວ່າຂາດບ່ອນອີງ ເປັນເລື່ອງຈິດຕະນິຍົມ ແລະ ໃຝ່ຝັນ.
- ອີກພວກໜຶ່ງພັດເວົ້າວ່າ ມະນຸດເປັນຜູ້ໃຫ້ກຳເນີດພາສາ ແຕ່ພວກນີ້ກໍຍັງກູ້ເຫດຜົນ ແລະ ຂໍ້ອ້າງອີງ ບໍ່ທັນພຽງພໍ ໃນການພິສູດບັນຫາດັ່ງກ່າວ.

ນັບຕັ້ງແຕ່ສັດຕະວັດທີ 17 ເປັນຕົ້ນມາ ນັກທິດສະດີທັງຫຼາຍຈຶ່ງໄດ້ເອົາໃຈໃສ່ຄົ້ນຄວ້າກ່ຽວກັບເຄົ້າກຳເນີດຂອງພາສາຢ່າງເອົາຈິງເອົາຈັງ. ສະນັ້ນ ຈຶ່ງເກີດມີທິດສະດີຕ່າງໆວ່າ ດ້ວຍເຄົ້າກຳເນີດຂອງພາສາຢ່າງເປັນກົກເປັນປາຍ ຄັກແນ່ຄື:

**1). ທິດສະດີລອກແບບຈາກສຽງທຳມະຊາດ.**

ເມື່ອມາຮອດກາງສັດຕະວັດທີ 17 ໄດ້ມີນັກປັດຊະຍາຈິດຕະນິຍົມເຢຍລະມັນຫຼາຍຄົນ ຢັ້ງຢືນທິດສະດີນີ້ ຕົວແທນກໍ່ແມ່ນທ່ານ ແຮຣ໌ເດີ ( Herder ) ລາວເວົ້າວ່າ ເມື່ອຄົນເຮົາພົວພັນກັບທຳມະຊາດ ໄດ້ຍິນສຽງສັດຮ້ອງ, ນ້ຳໄຫຼ, ໄມ້ສີກັນ, ລົມພັດ... ແລ້ວກໍ່ຮຽກຊື່ຕາມສຽງນັ້ນທີ່ໄດ້ຍິນເຊັ່ນວ່າ:

- ສຽງແມວຮ້ອງວ່າ, ແມວໆ ກໍ່ເອີ້ນວ່າ ແມວ.
- ສຽງກັບແກ້ຮ້ອງວ່າກັບແກ້ໆ ກໍ່ເອີ້ນວ່າ ກັບແກ້.
- ສຽງກາຮ້ອງວ່າ ກ່າໆ ກໍເອີ້ນວ່າ ກາ.
- ສຽງແບ້ຮ້ອງວ່າ ແບ້ໆ ກໍ່ເອີ້ນວ່າ ແບ້.

ທິດສະດີນີ້ ໄດ້ສິ່ງຜົນສະທ້ອນ ແລະ ຂະຫຍາຍແຮງກວ່າໝູ່ໃນສະຕະວັດທີ 19 ແລະ ກໍ່ມີນັກພາສາສາດຫຼາຍຄົນໄດ້ວິທີພິສູດໃຫ້ແກ່ຄວາມຖືກຕ້ອງຂອງທິດສະດີນີ້ຕະຫຼອດມາ ພວກເຮົາບໍ່ປະຕິເສດທິດສະດີນີ້ຢ່າງສິ້ນເຊີງ ເພາະວ່າ ໃນແຕ່ລະພາສາກໍ່ມີຄຳສັບສຳນວນສອນສຽງຈຳນວນໜຶ່ງ ແຕ່ມີປະລິມານໜ້ອຍທີ່ສຸດຊ້ຳບໍ່ໜຳບາງເທື່ອສັບນີ້ຢູ່ໃນພາສານີ້ ແມ່ນສັບລອກແບບແຕ່ຢູ່ໃນພາສາອື່ນພັດບໍ່ແມ່ນ, ສະນັ້ນ ທິດສະດີນີ້ກໍ່ບໍ່ທັນຊັດເຈນເທົ່າທີ່ຄວນ .

**2) ທິດສະດີອຸທານ ( ທິດສະດີອາລົມຈິດ )**

ເມື່ອຮອດສະຕະວັດທີ 18 ມີນັກປັດຊະຍາຝຣັ່ງຜູ້ໜຶ່ງຊື່ວ່າ: ກົງດີຢັກ ( Condillac ) ໄດ້ໃຫ້ຄວາມເຫັນວ່າເຄົ້າເນີດຂອງພາສາ ແມ່ນມາຈາກການກະຕຸ້ນ, ເພາະໃນສະໄໝປະຖົມບູຮານນັ້ນ, ຄົນເຮົາໄດ້ຕິດພັນກັບໂລກອ້ອມຂ້າງຊຶ່ງບາງອັນກໍ່ເປັນສິ່ງແປກປະຫຼາດ, ອັດສະຈັນ ແລະ ສູງກ່ວາຄວາມຮັບຮູ້ຂອງຄົນສະໄໝນັ້ນສິ່ງເຫຼົ່ານີ້ໄດ້ກະທົບໃສ່ເຂົາເຈົ້າແລ້ວເຮັດໃຫ້ເຂົາເກີດມີຄວາມສະເທືອນໃຈ ແລ້ວເປັ່ງສຽງອຸທານອອກເຊັ່ນ: ອຸ່ຍ !,ໂອ໋ ! ໂຢວ໊! ອື໋!...ນີ້ແມ່ນສຽງພາສາເທື່ອທຳອິດຂອງມະນຸດ ແລະພາສາກໍ່ກຳເນີດມາຈາກສຽງອຸທານນີ້.

ທ່ານຣຸດໂຊ( Rousseau ) ກໍ່ໄດ້ສະໜັບສະໜູນທິດສະດີນີ້ຄືກັນ ທ່ານໄດ້ເວົ້າ ວ່າອາລົມຈິດໃຫ້ກຳເນີດສຽງເປັນເທື່ອທຳອິດ, ພາສາໃນຄັ້ງແລກແມ່ນເຕັມໄປດ້ວຍສຽງເພງອາລົມຈິດພາຍລຸນມາຈຶ່ງກາຍເປັນພາສາທີ່ລ່ຽນໄຫຼ ພາສາຂອງມະນຸດປະຖົມບູຮານ ບໍ່ແມ່ນພາສາຂອງນັກຊ່ຽວຊານ, ດ້ານຄະນິດສາດ, ມັນແມ່ນພາສາຂອງນັກກະວີ.

ທັງໝົດນີ້ຢາກຢັ້ງຢືນວ່າ ຄົນເຮົາມີອາລົມຈິດກ່ອນຈຶ່ງມີສຽງ, ຈາກນັ້ນຈຶ່ງເກີດມີຄວາມເວົ້າທຳມະດາ ພວກເຮົາເຫັນວ່າທິດສະດີນີ້ກໍ່ຜິດພາດ ເພາະບໍ່ມີບ່ອນອີງຄັກແນ່ຍັງບໍ່ທັນແກ້ໄຂບັນຫາເຄົ້າກຳເນີດຂອງພາສາໄດ້.

**3). ທິດສະດີກົດບັດ.**

ຜູ້ວາງທິດສະດີນີ້ອອກກໍຄືທ່ານຣຸດໂຊ ລາວເວົ້າວ່າ: ຊີວິດຂອງມະນຸດເຮົາແບ່ງອອກເປັນສອງໄລຍະຄື:

- ໄລຍະທີ 1: ເອີ້ນວ່າໄລຍະທຳມະຊາດ ໝາຍເອົາໄລຍະທີ່ມະນຸດຍັງແມ່ນພາກສ່ວນໜຶ່ງຂອງທຳມະຊາດ, ເວລານັ້ນຍັງບໍ່ມີຕັກກະຖານເທື່ອ ແຕ່ອາລົມຈິດຂອງເຮົາພັດສົມບູນແລ້ວ ສະນັ້ນ, ພາສາຈຶ່ງເລີ່ມເກີດມາຈາກອາລົມຈິດ.

- ໄລຍະທີ 2: ແມ່ນໄລຍະສີວິໄລ ໝາຍເອົາໄລຍະທີ່ມະນຸດເຮົາມີຕັກກະຖານ ຊຶ່ງເຂົ້າໃຈແບບມີເຫດຜົນແລ້ວ. ເວລານີ້ຄົນເຮົາຈຶ່ງພ້ອມກັນກຳນົດກົດບັດພາສາຂຶ້ນມາໃຊ້ທິດສະດີນີ້ກໍຍັງບໍ່ທັນສົມບູນແບບເທື່ອ, ເນື່ອງຈາກວ່າໄລຍະນັ້ນຊາວບູຮານບໍ່ຮູ້ຊິເອົາສິ່ງໃດມາປຶກສາຫາລືກັນເພື່ອກຳນົດກົດບັດພາສານັ້ນອອກ.

**4).ທິດນີ້ວ່າດ້ວຍທ່າທີ.**

ນັກຈິດຕະວິທະຍານິຍົມຂອງເຢຍລະມັນຊື່ວ່າ ເຮແກນ (Hegel) ແລະ ນັກຈິດຕະວິທະສາດຂອງເຢຍລະມັນຊື່ວ່າ ວູນ (Wundt) ເປັນຜູ້ໃຫ້ກຳເນີດແກ່ທິດສະດີນີ້, ຈາກນັ້ນກໍ່ມີນັກພາສາສາດລັດເຊຍຊື່ວ່າ ມາຣ (Mar) ເປັນຜູ້ສືບຕໍ່ຂະຫຍາຍທິດສະດີນີ້, ລາວເວົ້າວ່າໃນເບື້ອງຕົ້ນທີ່ຄົນເຮົາຍັງບໍ່ມີພາສາເປັນສຽງ ແລະ ຈິນຕະນາການນາມມະທຳ. ມີແຕ່ຈິນຕະນາການປະຈັບຕາ, ເວລາແລກປ່ຽນນຳກັນຄົນເຮົາຕ້ອງໄດ້ອາໃສທ່າທີ. ພາສາທ່າເກີດກ່ອນນີ້ປະມານ 1 ລ້ານ - 1 ລ້ານ 5 ແສນປີ, ສ່ວນພາສາເປັນສຽງຫາກໍ່ເກີດກ່ອນນີ້ປະມານ 5 ໝື່ນ5 ແສນປີ.

**5). ລັດທິມາກ ຕໍ່ກັບການກຳເນີດຂອງພາສາ.**

ຕາມທັດສະນະຂອງມາກ - ອັງແກນເວົ້າວ່າ ການອອກແຮງງານໃຫ້ກຳເນີດພາສາ ເພາະວ່າໃນເວລາທີ່ທະນີຄົນ ຍັງຢູ່ເທິງຕົ້ນໄມ້ນັ້ນຍັງບໍ່ທັນມີຈິນຕະນາການ ,ເພດານເທືອກ ແລະ ຄໍມີລັກສະນະເປັນເສັ້ນຊື່, ລົມທີ່ອອກຈາກປອດບໍ່ຖືກກີດກັນຫລາຍປານໃດ. ພາຍຫຼັງ ທີ່ລົງຢູ່ໜ້າດິນ ແລະ ຜ່ານການອອກແຮງງານເປັນເວລາດົນນານ ຕີນ ແລະ ຄ່ອຍໆມີການຈຳແນກ, ທະນີຄົນກໍຄ່ອຍຢືນຢູ່ເທື່ອລະກ້າວ. ເມື່ອຢືນຊື່ກໍ່ເຮັດໃຫ້ ແລະ ເພດານມີລັກສະຕັ້ງສາກ, ລົມອອກຈາກປອດຖືກກີດກັ້ນໃຫ້ຊຳລົງ, ສຽງທີ່ກະຈາຍອອກກໍ່ມີຫຼາຍສຽງຂຶ້ນ ແລະ ຄ່ອຍຈຳແນກສຽງໄດ້ແຈ້ງ.

ອັນນີ້ແມ່ນເງື່ອນໄຂຕົ້ນຕໍທີ່ເຮັດໃຫ້ການກຳເນີດພາສາ. ຜ່ານການອອກແຮງງານໃນເວລາດົນນານໄດ້ເຮັດໃຫ້ສະລີລະຕ່າງໆຂອງທະນີຄົນຄ່ອຍໆປ່ຽນເປັນສະລີລະຂອງຄົນໂດຍສົມບູນ, ວິນຍານທັງ 5 ກໍ່ຂະຫຍາຍ, ແສງຕາໄດ້ເຫັນໄກກວ່າເກົ່າ, ໄດ້ສຳຜັດກັບໂລກອອ້ມຂ້າງກວ້າງອອກ, ອອກປອງກຳນັບມື້ຂະຫຍາຍ, ຈິນຕະນາການນາມທຳກໍປະກົດສິ່ງທັງໝົດເຫຼົ່ານີ້ໄດ້ເປັນຂີດໝາຍຢ່າງຈະແຈ້ງທີ່ຢັ້ງຢືນວ່າຄົນເຮົາໄດ້ແຍກຕົວອອກຈາກໂລກແຫ່ງຄວາມເປັນສັດເດຍລະສານແລ້ວເຕົ້າໂຮມເປັນສັງຄົມ.

ຜົນສະທ້ອນຂອງການອອກແຮງງານເປັນເງື່ອນໄຂ ໃຫ້ແກ່ການກຳເນີດພາສາມະນຸດເຮົາສ້າງຫຍັງຂຶ້ນມາເຖິງວ່າມັນຈະໜ້ອຍ ຫຼື ຫຼາຍປານໃດກໍຕາມ ລ້ວນແຕ່ມີຈຸດປະສົງ ແລະ ຄາດໝາຍຄັກແນ່, ພາສາກຳເນີດຂຶ້ນກໍຍ້ອນຄວາມຮຽກຮ້ອງຕ້ອງການອັນຮີບຂອງສັງຄົມມະນຸດ ໃນສະໄໝນັ້ນເພື່ອແລກປ່ຽນຄົບຄ້າອາລົມຈິດນຳກັນ. ທ່ານອັງແກນເວົ້າວ່າ: " ການອອກແຮງງານມັນໄດ້ນຳໄປເຖິງຜົນທີ່ຈຳເປັນອັນໜຶ່ງ, ນັ້ນກໍຄືການຜູກພັນກັນລະຫວ່າງຄົນກັບຄົນຢູ່ໃນສັງຄົມ ດ້ວຍວິທີສ້າງຫຼາຍກິດຈະກຳຂຶ້ນເພື່ອໃຫ້ຄົນເຮົາໄດ້ແລກປ່ຽນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ເຮັດໃຫ້ທຸກຄົນຮັບຮູ້ ແລະເຂົ້າໃຈຜົນຂອງກິດຈະກຳເຫຼົ່ານັ້ນ".

ສະຫຼຸບແລ້ວພາສາ ເປັນສຽງແມ່ນກຳເນີດມາຈາກການອອກແຮງງານ, ກຳເນີດພ້ອມຈິນຕະນາການ ແລະ ການກຳເນີດພ້ອມ ກັບ ການກຳເນີດຂອງມະນຸດ ຍ້ອນຜົນສະທ້ອນຂອງການອອກແຮງງານຈຶ່ງເຮັດໃຫ້ພາສາຄ່ອຍໆກຳເນີດພ້ອມກັບວິວັດທະນາການຫັນປ່ຽນຕັ້ງແຕ່ທະນີຄົນມາເປັນຄົນ.

## 2. ພາສາ ແລະ ຄວາມສຳຄັນຂອງພາສາ.

**2.1 ຄວາມຮູ້ທົ່ວໄປກ່ຽວກັບພາສາ.**

ຕາມປົກກະຕິມະນຸດເຮົາມີຄວາມຮູ້ສຶກນຶກຄິດ ແລະ ເຂົ້າໃຈສິ່ງແວດລ້ອມອ້ອມຂ້າງຂອງຕົນເມື່ອມີໂອກາດ , ມະນຸດກໍ່ນຳເອົາສິ່ງທີ່ຕົນເຂົ້າໃຈມີຄວາມຮູ້ສຶກນຶກຄິດນັ້ນສະແດງຕໍ່ຜູ້ອື່ນ ພາຫານະເພື່ອນຳໃຊ້ເຂົ້າໃນການສະແດງອອກນັ້ນແມ່ນພາສາ. ພາສາ ແມ່ນພາຫະນະສຳລັບແລກປ່ຽນຄຸນຄ່າແນວຄິດອາລົມຈິດລະຫວ່າງຄົນກັບຄົນ. ພວກ

ເຮົາຢາກຮູ້ວ່າຄົນຜູ້ໜຶ່ງເປັນຢ່າງໃດກໍຕ້ອງເບິ່ງການສະແດງອອກຂອງຄົນຜູ້ນັ້ນ ແລະ ການສະແດງອອກນັ້ນ ກໍແມ່ນອາໃສພາສາເປັນຫຼັກ.

ພາຫະນະ ຫຼື ສື່ເພື່ອຄວາມເຂົ້າໃຈຂອງຄົນໃນສັງຄົມ, ນອກຈາກພາສາທີ່ໃຊ້ມີແລ້ວກໍ່ຍັງມີສິ່ງອື່ນອີກ ທີ່ສາມາດໃຊ້ເປັນທີ່ເພື່ອຄວາມເຂົ້າໃຈເຊັ່ນ ຜິວຮັກ ແລະ ຕົວອັກສອນ ແລະ ເຄື່ອງໝາຍຕ່າງໆເປັນຕົ້ນ, ເຖິງວ່າສິ່ງເຫຼົ່ານີ້ມີອັນຈຳກັດຫຼາຍດ້ານ, ແຕ່ພວກມັນກໍ່ມີອັນເດັ່ນຢູ່ບ່ອນວ່າມີສ່ວນຊ່ວຍໃຫ້ຄົນເຮົາເຂົ້າໃຈກັນໄດ້, ຍ້ອນແນວນັ້ນພວກເຮົາຈຶ່ງມາເຂົ້າໃຈກັນໄດ້ໂດຍຜ່ານຫຼາຍທາງເຊັ່ນ: ສາຍຕາ, ຫູ ຫຼື ການສຳຜັດ.

- ສິ່ງທີ່ເຮັດໃຫ້ຄົນເຮົາເຂົ້າໃຈກັນໄດ້ໂດຍຜ່ານສາຍຕາເອີ້ນວ່າ: “ ຈັກຂຸພາສາ ”
- ສິ່ງທີ່ເຮັດໃຫ້ຄົນເຮົາເຂົ້າໃຈກັນໄດ້ໂດຍຜ່ານຫູເອີ້ນວ່າ: “ໂສຕະພາສາ”
- ສິ່ງທີ່ເຮັດໃຫ້ຄົນເຮົາເຂົ້າໃຈກັນໄດ້ໂດຍຜ່ານການສຳຜັດ ເອີ້ນວ່າ: “ ສຳຜັດພາສາ ”

ໃນປະຈຸບັນ, ວົງການພາສາສາດໄດ້ເລັ່ງໃສ່ການຄົ້ນຄວ້າພາສາ ທີ່ໃຊ້ສຽງເປັນຈຸດໜັກເມື່ອເວົ້າເຖິງພາສາເວລາໃດພາສາທີ່ໃຊ້ສຽງກໍ່ອຸດົມສົມບູນກວ່າ ຍ້ອນແນວນັ້ນເພິ່ນ ຈຶ່ງເວົ້າເຖິງມັນເປັນອັນດັບທຳອິດຫາກບໍ່ມີສຽງກໍຈະບໍ່ມີພາສາ, ເພາະບໍ່ມີພາສາໃດໃນໂລກນີ້ເປັນພາສາ "ມິດງຽບ” ສ່ວນວ່າສື່ຄວາມເຂົ້າໃຈຊະນິດອື່ນ ພຽງແຕ່ເປັນສ່ວນປະກອບ ເພື່ອເຮັດໃຫ້ພາສາທີ່ສຽງມີສີສັນ ຫຼື ເພີ່ມຄວາມມີຊີວິດຊີວາຂຶ້ນຕື່ມ.

### 2.2 ພາສາແມ່ນຫຍັງ?

ພາສາ ແມ່ນພາຫະນະສຳລັບແລກປ່ຽນຄົບຄ້າອາລົມຈິດໃນສັງຄົມ, ແມ່ນຜະລິດຕະພັນຂອງສັງຄົມ ແລະ ສັງຄົມເປັນຜູ້ກຳນົດໃຊ້, ຖ້າພວກເຮົາເວົ້າເຖິງພາສາໃດໜຶ່ງແລ້ວ, ກໍ່ແມ່ນຄົນໃນຊາດນັ້ນກຳນົດໃຊ້ຢາກຄົ້ນຄວ້າວິວັດທະນາການກຳເນີດ, ການຂະຫຍາຍຕົວຂອງພາສາພາສາໃດກໍ່ຕ້ອງຄົ້ນຄວ້າເຖິງປະຫວັດສາດການຂະຫຍາຍຕົວຂອງຊາດນັ້ນ. ພາສາມັນແມ່ນ ລະບົບອັນໜຶ່ງ ຊຶ່ງມີຫຼັກການຊັບຊ້ອນຢ່າງລັກແນ່ ແລະ ໂດຍທົ່ວໄປແລ້ວ ພາກສ່ວນຕ່າງໆປະກອບເປັນລະບົບພາສານັ້ນມີ ອັກຂະຫຼະ, ວັດຈະນະ ແລະ ໄວຍະກອນ, ແຕ່ລະພາກສ່ວນທີ່ປະກອບເປັນລະບົບນີ້ລ້ວນແຕ່ມີການພົວພັນຊຶ່ງກັນແລະກັນຢ່າງຊະນິດແໜ້ນ ແລະ ແຕ່ລະພາກສ່ວນນີ້ລ້ວນແຕ່ ມີການຊັບຊ້ອນສະເພາະຂອງໃຜມັນບັນດາຫຼັກການ ແລະ ຫົວຫນ່ອຍທັງໝົດນີ້ເອີ້ນວ່າພາສາ.

ເປັນຫຍັງສິ່ງທີ່ພວກເຮົາເວົ້າອອກ ຫຼື ຂຽນອອກຈຶ່ງເຂົ້າໃຈກັນໄດ້? ພວກເຮົາເຂົ້າໃຈກັນໄດ້ກໍຍ້ອນວ່າ:

- ສິ່ງທີ່ເວົ້າຫຼືຂຽນອອກນັ້ນ ປະກອບດ້ວຍບັນດາສັບຫຼືຖ້ອຍຄຳຕ່າງໆ ຊຶ່ງພວກເຮົາໄດ້ຮັບຮູ້ທີ່ເຂົ້າໃຈກ່ອນແລ້ວ ນັບທັງຮູບການແລະ ເນື້ອໃນຂອງພວກມັນ.
- ຖ້ອຍຄຳສຳນວນເຫຼົ່ານັ້ນໄດ້ປະສົມເຂົ້າກັນຕາມຫຼັກການໃດໜຶ່ງ ຊຶ່ງທຸກຄົນໄດ້ ຮັບຮູ້ ແລະ ເຂົ້າໃຈແລ້ວເຊັ່ນກັນ, ປະມວນສັບ ແລະ ຫຼັກການຕ່າງນັ້ນແມ່ນພາສາ.

ສັງລວມແລ້ວ, ພາສາທີ່ພວກເຮົາຈຳແນກມານີ້ແມ່ນບັນດາຫົວໜ່ວຍ, ສາຍພົວພັນລະຫວ່າງພວກມັນດ້ວຍກັນ ແລະ ບັນດາຫຼັກການໄວຍະກອນ ທີ່ໄດ້ສັງລວມອອກມາຈາກ ຄວາມເວົ້າໃນຕົວຈິງ ນັບເປັນພັນໆຄຳພ້ອມກັນນັ້ນ, ເມື່ອເວົ້າເຖິງຫຼັກການກໍແນ່ນອນ ວ່າຕ້ອງມີການຜູກມັດ, ພາສາກໍມີລັກສະນະຜູກມັດ, ລັກສະນະຜູກມັດຂອງພາສາແມ່ນບັນຫາທີ່ເຫັນໄດ້ງ່າຍ ເຊັ່ນວ່າ ພວກເຮົາລ້ວນແຕ່ເຂົ້າໃຈຄວາມໝາຍຂອງຄຳວ່າ “ກິນ” ແລະ “ດື່ມ”, ໃຜຈະເວົ້າວ່າ “ ດື່ມເຂົ້າ ” ແມ່ນບໍ່ໄດ້, ຈະຕ້ອງເວົ້າວ່າ "ກິນເຂົ້າ” .

## 3. ຄວາມສຳຄັນຂອງພາສາ.

### 1. ພາສາກັບຊີວິດການເປັນຢູ່ຂອງສັງຄົມມະນຸດ.

ໃນສັງຄົມ, ການແລກປ່ຽນຄວາມຄິດຄວາມເຫັນລະຫວ່າງຄົນກັບຄົນ ແມ່ນຄວາມຮຽກຮ້ອງຕ້ອງການອັນຈຳເປັນຊຶ່ງຂາດບໍ່ໄດ້. ຫາກບໍ່ມີການແລກປ່ຽນຄວາມຄິດຄວາມເຫັນ ແລ້ວການເຄື່ອນໄຫວທຸກຢ່າງໃນສັງຄົມກໍຈະຢຸດຊະງັກ. ທຸກຂອບເຂດການເຄື່ອນໄຫວຂອງຄົນເຮົາຕ້ອງໃຊ້ພາສາເປັນສື່ບໍ່ໃຊ້ພາສາກໍບໍ່ສາມາດຈະມີຄວາມເຂົ້າໃຈກັນໄດ້; ພວກເຮົາມີຄວາມຄິດຄວາມເຂົ້າໃຈແນວກໍຈະບໍ່ມີໃຜຮູ້ ຫາກບໍ່ສະແດງອອກ, ພວກເຮົາໃຊ້ເພື່ອສະແດງອອກນັ້ນແມ່ນພາສາ.

ພາສາມີຄວາມສຳຄັນຕໍ່ຊີວິດຄວາມເປັນຢູ່ຂອງມະນຸດຫຼາຍທີ່ສຸດ ແລະ ຢູ່ບົນໜ້າໂລກນີ້ກໍມີຫຼາຍຊາດຫຼາຍພາສາ ການເປັນຢູ່ແຕ່ລະມື້, ຄົນຜູ້ໜຶ່ງຈະຕ້ອງໄດ້ໃຊ້ພາສາ ໃດໜຶ່ງເພື່ອເປັນພາຫະນະແລກປ່ຽນຄົບຄ້າສະມາຄົມກັບຄົນອື່ນ, ສະເພາະຜູ້ທີ່ຮູ້ພາສາຕ່າງປະເທດຫຼາຍພາສາ, ນອກຈາກໃຊ້ພາຫະນະ ຫຼືສື່ພື້ນຕົນພາສາແມ່ແລ້ວຍັງໄດ້ໃຊ້ພາສາອື່ນເປັນສື່ອີກດ້ວຍ.

**2. ພາສາກັບການຕໍ່ສູ້ເພື່ອຂະຫຍາຍສັງຄົມ**

ໃນສັງຄົມ, ຄົນເຮົາອາດບໍ່ດຳລົງຊີວິດຢູ່ຢ່າງໂດດດ່ຽວໄດ້, ຍ້ອນເງື່ອນໄຂສະພາບແວດລ້ອມ; ນັບແຕ່ຊາວບູຮານກໍຕ້ອງໄດ້ດຳລົງຊີວິດຢູ່ຮ່ວມກັນ, ເຂົາເຈົ້າໄດ້ໂຮມແຮງໂຮມໃຈກັນເພື່ອຕໍ່ສູ້ກັບໄພທຳມະຊາດ, ເພື່ອຍາດແຍ່ງແລະ ປົກປັກຮັກສາຊີວິດ ຕະຫລອດເຖິງສັບສົມບັດຂອງເຂົາເຈົ້າ,ທຸກການເຄື່ອນໄຫວຂອງມະນຸດ, ພາສາມີບົດບາດສຳຄັນທີ່ສຸດຖ້າບໍ່ມີພາສາກໍບໍ່ມີການແລກປ່ຽນຄວາມຄິດຄວາມເຫັນນຳກັນ ແລະ ເມື່ອບໍ່ມີການແລກປ່ຽນຄວາມຄິດຄວາມເຫັນນຳກັນແລ້ວ ກໍຈະກ້າວໄປເຖິງບ່ອນບໍ່ມີຄວາມສາມາດຜະລິດວັດຖຸສິ່ງຂອງອອກມາໄດ້, ເມື່ອເປັນແນວນັ້ນສັງຄົມກໍຈະບໍ່ຄົງຕົວ, ມັນຈະພັງທະລາຍໄປໃນທີ່ສຸດ, ຍ້ອນມີພາສາຄົນ ເຮົາຈຶ່ງຢູ່ຮ່ວມກັນໃນສັງຄົມໄດ້ຢ່າງສະດວກສະບາຍ. ພາສາໄດ້ປະກອບສ່ວນອັນສຳຄັນໃນວຽກງານເພີ່ມພູນຜະລິດຜົນ ແລະ ຕໍ່ສູ້ເພື່ອສັງຄົມຂະຫຍາຍຕົວ. ທ່ານສະຕາລິນໄດ້ເວົ້າກ່ຽວ ກັບບັນຫານີ້ວ່າ " ພາສາກໍແມ່ນພາຫະນະອັນໜຶ່ງສຳລັບຕໍ່ສູ້ເພື່ອຂະຫຍາຍຕົວຂອງສັງຄົມ".

ການຕໍ່ສູ້ໃນສັງຄົມກໍແມ່ນເງື່ອນໄຂອັນໜຶ່ງທີ່ຊຸກດັນໃຫ້ສັງຄົມຂະຫຍາຍຕົວ, ທ່ານມາກ ແລະ ທ່ານ ອັງແກນ ໄດ້ເວົ້າກ່ຽວກັບບັນຫານີ້ວ່າ “ປະຫວັດສາດຂອງສັງຄົມມະນຸດຕັ້ງແຕ່ກ່ອນຈົນເຖິງປະຈຸບັນ ແມ່ນປະຫວັດສາດແຫ່ງການຕໍ່ສູ້’’ ຈາກຄຳເວົ້ານີ້ພວກເຮົາຈະເຫັນວ່າການຕໍ່ສູ້ແມ່ນສິ່ງທີ່ດຳເນີນຢູ່ຕະຫຼອດ. ແຕ່ກໍຄວນເຂົ້າໃຈຕື່ມອີກວ່າ ຮູບການຂອງການຕໍ່ສູ້ມີຫລາຍດ້ານ ເຊັ່ນ ການຕໍ່ສູ້ດ້ານເສດຖະກິດ, ການເມືອງ ແລະ ແນວຄິດ ເປັນຕົ້ນ, ບັນດາຮູບການຕໍ່ສູ້ຕ່າງໆນີ້ມີສາຍພົວພັນກັນຢ່າງສະໜິດແໜ້ນ, ໃນນັ້ນພາສາສຳພັດມີບົດບາດສຳຄັນເປັນພິເສດຕໍ່ການຕໍ່ສູ້ດ້ານແນວຄິດ.

## 4. ທັດສະນະກ່ຽວກັບພາສາ.

### 1. ທັດສະນະຂອງນາຍທຶນ.

ມາຮອດກາງສະຕະວັດທີ່ 19 ວິທະຍາສາດທຳມະຊາດ ໄດ້ຂະຫຍາຍຕົວຂຶ້ນສູ່ລະດັບສູງແບບກະໂດດຂັ້ນໂດຍສະເພາະແມ່ນທິດສະດີວ່າດ້ວຍການພັນປ່ຽນດ້ານຊີວະສາດຂອງທ່ານ ດັກວິນ (Charler Darwin 1809-1882) ໄດ້ເຮັດໃຫ້ນັກພາສາສາດຫລາຍຄົນໄດ້ຢັ້ງຢືນວ່າ ພາສາກໍແມ່ນປາກົດການທຳມະຊາດອັນໜຶ່ງເຂົາເຈົ້າໄດ້ໃຫ້ຄວາມເຫັນວ່າ:

- ພາສາກໍຄືທີ່ຮ່າງກາຍ ທີ່ມີຊີວິດອັນໜຶ່ງ ຊຶ່ງໄດ້ຜ່ານວິວັດການກຳເນີດ, ເຕີບໃຫຍ່ ແລະ ຕາຍໄປຄືກັນກັບສິ່ງທີ່ມີຊີວິດທັງປວງເຊັ່ນ ຄົນ, ສັດ, ຕົ້ນໄມ້ໃບຫຍ້າ ແລະ ອື່ນໆ. ຖ້າຫາກວ່າພາສາຄືຮ່າງກາຍທີ່ມີຊີວິດ ແນ່ນອນວ່າມັນຕ້ອງມີການສືບເຊື້ອ ໝາຍຄວາມວ່າພາສາກໍ່ບໍ່ຕ່າງຫຍັງກັບເຊື້ອຊາດຜົວພັນຊຶ່ງມີການສືບເຊື້ອ. ພໍ່ແມ່ເປັນ

ແບວໃດ ລູກກໍເກີດມາເປັນແບວນັ້ນ, ຄົນເຮົາ ເມື່ອເກີດມາກໍຕ້ອງຮູ້ກິນ ແລະ ໄອຫຼືຊ້ຳກໍຈະຮູ້ຄານ, ຮູ້ຍ່າງ ແລະ ຮູ້ປາກ, ພໍ່ແມ່ມີຜິວພັນ ແບວໃດເມື່ອເກີດລູກມາກໍຈະມີຜິວພັນແບວນັ້ນ ແລະ ເວົ້າພາສານັ້ນ ໂດຍບໍ່ໄດ້ສັ່ງສອນແຕ່ປະການໃດ.

- ເດັກກໍມີພາສາ : ເດັກນ້ອຍທີ່ຫາກໍຮຽນປາກ ຈະແມ່ນເດັກຊາດໃດກໍລ້ວນແຕ່ມັກ ເວົ້າວ່າ ບາໆ, ບູໆ ຫຼືອື່ນໆ. ປາກົດການນີ້ກໍ່ຖືວ່າແມ່ນພາສາຄືກັນ ແລະ ກໍ່ສາມາດສ້າງພາສາເດັກລວມແກນາໆຊາດໄດ້.

- ສັດກໍມີພາສາ: ນອກຈາກຄົນ ແລ້ວສັດກໍມີພາສາຄືກັນ, ເພາະວ່າເວລາແມ່ໄກ່ຕ້ອງການຢາກໃຫ້ລູກມັນມາຫາ ມັນກໍໃຊ້ສຽງສັນຍາຊະນິດໜຶ່ງໃຫ້ລູກຮູ້ ແລະ ເມື່ອມີໄພອັນຕະລາຍມັນຈະໃຊ້ສຽງສັນຍາແບບອື່ນອີກເພື່ອບອກໃຫ້ລູກມັນລີ້ໄພ ຫຼື ປາກົດການຂອງສັດຊະນິດອື່ນໆ, ການເຄື່ອນໄຫວອັນນີ້ກໍບໍ່ຕ່າງຫຍັງກັບສຽງຮ້ອງບອກກັນຂອງຄົນເຮົາໃນເວລາມີເຫດການຕ່າງໆ ສະນັ້ນ, ສັດກໍມີພາສາຄືກັບຄົນ.

ທິດສະດີຕ່າງໆທີ່ຍົກຂຶ້ນມາຂ້າງເທິງນີ້, ເຖິງແມ້ວ່າຈະມີຄວາມແຕກຕ່າງກັນດ້ານເນື້ອໃນ, ແຕ່ທັງຫມົດນັ້ນແມ່ນມີຄວາມເອກະພາບກັນຢູ່ບ່ອນວ່າ ພາສາກໍແມ່ນປາກົດການທຳມະຊາດອັນໜຶ່ງ.

**2. ທັດສະນະທີ່ຕ້ານກັບນາຍທຶນ.**

ພາສາບໍ່ຄືຮ່າງກາຍທີ່ມີຊີວິດ, ຈິງຢູ່ວ່າພາສາກໍຜ່ານວິວັດແຫ່ງການກຳເນີດ, ເຕີບໃຫຍ່ຂະຫຍາຍຕົວ, ສູນເສຍ ແລະ ຕາຍໄປແທ້, ແຕ່ວັດການອັນນີ້ມັນຂຶ້ນຢູ່ກັບສັງຄົມເປັນຜູ້ຕັດສິນ. ສັງຄົມຮຽກຮ້ອງຕ້ອງການມັນ ມັນກໍ່ຈະກຳເນີດ, ສັງຄົມນຳໃຊ້ມັນ ມັນກໍຂະຫຍາຍຕົວ ແລະ ໃນເມື່ອສັງຄົມບໍ່ຕ້ອງການ, ມັນກໍ່ຈະຄ່ອຍສູນເສຍ ຫຼື ຕາຍໄປວິວັດການອັນນີ້ມັນຕ່າງຈາກວິວັດການກຳເນີດ, ຂະຫຍາຍຕົວ ແລະ ສູນເສຍໄປຂອງປາກົດກາງທຳມະຊາດ ເພາະປາກົດນາມທຳມະຊາດມັນໄດ້ກາຍເປັນກົດເກນອັນໜຶ່ງຊຶ່ງບໍ່ຂຶ້ນກັບໃຈມັກຂອງຜູ້ໃດ. ສ່ວນວ່າພາສາມັນພັດຂຶ້ນກັບສັງຄົມມັນຈະກຳເນີດ ຫຼື ບໍ່ກຳເນີດ, ຂະຫຍາຍຕົວ ຫຼື ບໍ່ຂະຫຍາຍ, ຈະສູນເສຍ ຫຼື ບໍ່ສູນເສຍ ແມ່ນຂຶ້ນກັບສັງຄົມທັງໝົດ, ສະນັ້ນຈຶ່ງເວົ້າ ພາສາ ແມ່ນປາກົດການຂອງສັງຄົມ.

- ພາສາບໍ່ມີລັກສະນະສືບເຊື້ອ, ການຮູ້ພາສາບໍ່ຄືກັບການຮູ້ກິນ ຮູ້ໄປມາຂອງຄົນເຮົາ ເພາະວ່າຄົນເຮົາເກີດມາແລ້ວຮູ້ກິນ. ຮູ້ຄານ, ຮູ້ເຄື່ອນໄຫວໄປມາໄດ້, ແຕ່ເດັດຂາດບໍ່ຮູ້ພາສາ, ຖ້າຫາກວ່າບໍ່ໄດ້ຮັບການສຶດສອນຈາກພໍ່ແມ່ຫຼືສັງຄົມ. ພາສາບໍ່ຄືກັບເຊື້ອຊາດ, ຜິວພັນຂອງຄົນເຮົາເຖິງວ່າພໍ່ແມ່ເປັນຄົນຊົນຊາດໜຶ່ງເມື່ອລູກເກີດມາສອນພາສາໃດໃຫ້ມັນ ມັນກໍຈະຮູ້ພາສານັ້ນ ທັງທີ່ວ່າຜິວພັນໜ້າຕາຄືພໍ່ແມ່ເກີດຂອງມັນຢູ່ ຫາກວ່າພາສາມີລັກສະນະສືບເຊື້ອແລ້ວ ພາສາໃດກໍຈະເປັນຂອງຄົນໃນຊາດນັ້ນເທົ່ານັ້ນ, ຄົນຊາດອື່ນຈະບໍ່ມີຄວາມສາມາດຮຽນພາສາຂອງຊາດນັ້ນໄດ້.

- ເດັກບໍ່ມີພາສາ ສຽງເດັກທີ່ຫາກໍຮຽນປາກກັບພາສາບໍ່ແມ່ນອັນດຽວກັນ, ເພາະມັນຍັງບໍ່ມີຄວາມໝາຍຍັງໝົດ ແລະ ກໍບໍ່ມີໃຜສາມາດເຂົ້າໃຈສຽງນັ້ນໄດ້. ຄວາມຈິງແລ້ວເດັກຊາດໃດ ກໍຕາມເມື່ອເລີ່ມຮຽນປາກ ລ້ວນແຕ່ເປັ່ງສຽງອອກຄ້າຍຄືກັນວ່າ: ບາໆ, ມາໆ, ປາໆ... ບັນຫານີ້ມັນຂຶ້ນກັບພື້ນຖານການປະກອບສ້າງທາງດ້ານສະລິລະສາດຂອງອັກຂະຫຼະເພາະວ່າສຽງໃດ ທີ່ໃຊ້ຮິມສົບຄູ່ເດັກຈະເວົ້າງ່າຍກວ່າໝູ່ ແລະ ສຽງທີ່ຈະກະຈາຍອອກນັ້ນ ກໍມີລັກສະນະທຳມະຊາດ ຫຼື ສັນຊາດຕະຍານຫລາຍກວ່າ, ສະນັ້ນຈຶ່ງເວົ້າວ່າ ສຽງເດັກທີ່ຫາກໍຮຽນ ປາກບໍ່ແມ່ນພາສາ ແລະ ກໍ່ສາມາດສ້າງພາສາເດັກລວມໃຫ້ແກ່ນາໆຊາດໄດ້.

- ສັດບໍ່ມີພາສາ ສຽງສັດບໍ່ແມ່ນພາສາ, ສັດບໍ່ມີການຄົ້ນຄິດ ແລະ ມັນກໍບໍ່ອາດມີພາສາໄດ້, ແຕ່ວ່າໃນຕົວຈິງນັ້ນ, ມີບາງກໍລະນີສັດມັນກໍຮູ້ໃຊ້ສຽງສັນຍານອັນໃດອັນໜຶ່ງ ເຊັ່ນວ່າ ແມ່ໄກ່ໃຊ້ສຽງສັນຍານເອີ້ນລູກ, ໝາເມື່ອມັນດີໃຈ ຫຼືເຈັບປວດ ມັນກໍຮູ້ເປັ່ງສຽງຢ່າງໃດຢ່າງໜຶ່ງອອກມາ ແລະ ອື່ນໆ ທັງໝົດປາກົດການຂ້າງເທິງນີ້ ແມ່ນມີລັກ

ສະສືບເຊື້ອທີ່ເໝາະກັບສະພາບແວດລ້ອມແລ້ວປາກົດຂຶ້ນເທົ່ານັ້ນ, ນີ້ແມ່ນເຫດການທໍາມະດາທີ່ສຸດ ຍັງມີສັດບາງຈໍາພວກອາດຈະຮູ້ສັນຍານສຽງບາງຢ່າງ ເຊັ່ນ ງົວ, ຄວາຍ, ຊ້າງ, ມ້າ.. ມັນອາດຈະຮູ້ຄໍາວ່າ ຣາມ, ຣຸຍ, ເລົ່າ.. ນອກຈາກນີ້ ກໍຍັງມີສັດບາງຊະນິດມີຄວາມສາມາດຮູ້ສອນສຽງຄົນ ຫຼື ເຮັດຕາມຄໍາສັ່ງຂອງຄົນ ປາກົດການທັງໝົດເຫຼົ່ານີ້ລ້ວນແຕ່ນອນຢູ່ໃນຂອບເຂດລະບົບສັນຍານທີ່ໜຶ່ງ ຊຶ່ງມີລັກສະນະສືບເຊື້ອເທົ່ານັ້ນ ສະນັ້ນຈຶ່ງສາມາດເວົ້າໄດ້ວ່າ ສັດບໍ່ມີພາສາ ແລະ ສຽງສັດບໍ່ແມ່ນພາສາ.

ພາສາເພື່ອແລກປ່ຽນຄົບຄ້າສາມາຄົມນໍາກັນຕະຫຼອດ ການເຄື່ອນໄຫວການຜະລິດສັງຄົມ ມັນນັບມື້ຂະຫຍາຍຕົວ, ຂອບເຂດການເຄື່ອນໄຫວໃນສັງຄົມນັບມື້ກວ້າງຂວາງອອກກໍ່ຈະເຮັດໃຫ້ພາສານັບມື້ຂະຫຍາຍຕົວ ແລະ ອຸດົມສົມບູນຂຶ້ນຊຸກໄຊ້, ແຕ່ກໍ່ບໍ່ຄວນເຂົ້າໃຈວ່າບັນດາສັບທີ່ຫາກໍ່ກໍາເນີດເກີດຂຶ້ນໃໝ່ນັ້ນ ຂຶ້ນກັບພື້ນຖານເສດຖະກິດ, ບັນຫານີ້ ມັນຂຶ້ນກັບການຕໍ່ສູ້ຢູ່ໃນວິວັດການຜະລິດໂດຍອາໃສການເຄື່ອນໄຫວຂອງຄົນເຮົາ. ທ່ານ ສະຕາລິນນັ້ນໄດ້ເວົ້າວ່າ "ພາສາບໍ່ສະເພາະແຕ່ພົວພັນກັບການຜະລິດໂດຍກົງ, ມັນຍັງພົວພັນກັບການເຄື່ອນໄຫວອື່ນໆຂອງຄົນເຮົາອີກດ້ວຍ, ສະນັ້ນພາສາຈຶ່ງສ່ອງແສງການປ່ຽນແປງຢູ່ໃນການຜະລິດຢ່າງທັນການ ແລະ ໂດຍກົງ, ບໍ່ແມ່ນວ່າຈະຖ້າໃຫ້ພື້ນຖານເສດຖະກິດປ່ຽນແປງໝົດຈຶ່ງຄ່ອຍສ່ອງແສງເຂົ້າໃນພາສາ. ຂອບເຂດຂອງພາສາແມ່ນກວ້າງຂວາງທີ່ສຸດ, ມັນມີຫລາຍຮູບຫລາຍແບບບໍ່ອາດມີຂົງເຂດໃດທີ່ບໍ່ໃຊ້ພາສາ.

**3. ພາສາບໍ່ມີລັກສະນະຊົນຊັ້ນ.**

ໃນສັງຄົມທີ່ມີຊົນຊັ້ນ ໂຄງປົກ ແລະ ພື້ນຖານເສດຖະກິດຕ້ອງຂຶ້ນກັບຊົນຊັ້ນໃດໜຶ່ງແນ່ນອນ, ສ່ວນວ່າພາສາມັນພັດເຮັດໜ້າທີ່ຮັບໃຊ້ລວມໃຫ້ແກ່ທຸກຊັ້ນຄົນໃນສັງຄົມ, ມັນມີລັກສະນະປວງຊົນທີ່ສຸດ ແລະ ມີລັກສະນະລວມເປັນເອກະພາບໃຫ້ແກ່ທຸກກຸ່ມຄົນໃນສັງຄົມນັ້ນ, ທ່ານ ສະຕາລິນ ໄດ້ເວົ້າວ່າ "ພາສາແຫ່ງຊາດບໍ່ແມ່ນພາສາຊົນຊັ້ນ, ມັນແມ່ນພາຫານະລວມໃຫ້ແກ່ທົ່ວປວງຊົນ, ໃຫ້ແກ່ທຸກໆຄົນ, ທຸກໆພາກສ່ວນໃນຊາດນັ້ນ.

ຍ້ອນເງື່ອນໄຂການດໍາລົງຊີວິດ, ພູມສັນຖານ, ວິຊາສະເພາະ ຫຼື ແໜ່ງຢູ່ໃນສັງຄົມ, ບັນດາກຸ່ມຄົນທີ່ຂຶ້ນກັບຊົນຊັ້ນຕ່າງກັນ, ນອກຈາກການນໍາໃຊ້ປະມວນຄໍາສັບຂອງສັງຄົມແລ້ວ, ເຂົາເຈົ້າອາດນໍາໃຊ້ສັບຈໍານວນໜຶ່ງ, ທີ່ເຂົາເຈົ້າໄດ້ກົດບັດນໍາກັນຢູ່ໃນວົງແຄບນັ້ນມານໍາໃຊ້ຕື່ມອີກ. ກ່ອນປະເທດຊາດໄດ້ຮັບການປົດປ່ອຍ ຢູ່ລາວເຮົາກໍເຄີຍມີຄໍາສັບຂອງພວກ ຂຸນມູນນາຍທີ່ວ່າ ສະເຫວີຍ, ຂ້າພະບາດ, ພະໂອງ, ສະເດັດ. ແຕ່ບັນຫາເຫຼົ່ານີ້ພຽງແຕ່ເປັນແງ່ນ້ອຍອັນໜຶ່ງຂອງພາສາແຫ່ງຊາດ ແລະ ຂອບເຂດການນໍາໃຊ້ກໍຢູ່ໃນວົງເຂບ ແລະ ຈໍາກັດທີ່ສຸດ. ສະນັ້ນພວກເຮົາບໍ່ຄວນຫຼົງປົນເປກັນລະຫວ່າງພາສາແຫ່ງຊາດກັບປະເພດຄວາມເວົ້າສະເພາະຂອງບັນດາກຸ່ມຄົນສ່ວນນ້ອຍຢູ່ໃນສັງຄົມ.

**4. ພາສາ ແລະວັດທະນະທໍາບໍ່ແມ່ນອັນດຽວ.**

ໃນລະບົບສັງຄົມທີ່ມີຊົນຊັ້ນ ວັດທະນະທໍາກໍ່ຕ້ອງຮັບໃຊ້ຊົນຊັ້ນໃດແນ່ນອນ, ນັກປະພັນ, ນັກກະວີ ລ້ວນແລ້ວ ແຕ່ໃຊ້ປາຍປາກກາຂອງຕົນເພື່ອຮັບໃຊ້ແກ່ຊົນຊັ້ນໃດແນ່ນອນ, ບໍ່ອາດມີວັດທະນະທໍາ ຫຼື ວັນນະຄະດີທີ່ຢືນຢູ່ເປັນກາງ ແລະ ຮັບໃຊ້ແກ່ທຸກຊັ້ນຄົນວັດທະນະທໍານາຍທຶນມັນຮັບໃຊ້ຊົນຊັ້ນນາຍທຶນ, ວັດທະນະທໍາສັກດີນາ ມັນກໍຮັບໃຊ້ຊົນຊັ້ນສັກດີນາ, ພາສາແມ່ນພາຫະນະສໍາລັບແລກປ່ຽນຄົບຄ້າລວມໃຫ້ແກ່ທຸກຊັ້ນຄົນໃນສັງຄົມໃດໜຶ່ງໂດຍບໍ່ຈໍາແນກຊົນຊັ້ນໃດໆທັງສິ້ນ. ພາສາ ແລະ ວັດທະນະທໍາມັນມີການພົວພັນກັນ, ພາສາແຫ່ງຊາດກໍ່ແມ່ນຮູບການວັດທະນະທໍາໜຶ່ງຂອງຊາດ, ພວກມັນມີການພົວພັນກັນຢ່າງສະໜິດແໜ້ນ, ແຕ່ຫາກບໍ່ແມ່ນອັນດຽວ. ພາສາບໍ່ແມ່ນລະບົບແນວຄິດ, ແຕ່ມັນແມ່ນສິ່ງໜຶ່ງທີ່ຕັດສິນທຸກການສະແດງອອກຂອງວັດທະນະທໍາ.

ຜ່ານການຈຳແນກມາຂ້າງເທິງນັ້ນ, ເຮົາສາມາດສະຫຼຸບໄດ້ວ່າ ພາສາບໍ່ແມ່ນປະກົດການຂອງທຳມະຊາດ, ມັນແມ່ນປະກົດການຂອງສັງຄົມ, ແຕ່ຫາກແມ່ນປະກົດການຂອງສັງຄົມແບບພິເສດ, ເພາະວ່າພາສາບໍ່ມີລັກສະນະຊົນຊັ້ນ, ບໍ່ຂຶ້ນກັບໂຄງປົນ ແລະ ກໍບໍ່ນອນ ໃນພື້ນຖານເສດຖະກິດ ຄືກັບປະກົດການຂອງສັງຄົມອື່ນໆ.

## 5. ຕະກຸນພາສາໃນໂລກ.

ໃນໂລກມີຫຼາຍໆຊົນຊາດຊົນເຜົ່າທີ່ມີພາສາໃຊ້ເປັນສື່ໃນສັງຄົມຂອງຊົນຊາດຊົນເຜົ່າເອງ ດັ່ງນັ້ນເພື່ອໃຫ້ງ່າຍໃນການສຶກສາພາສາຂອງແຕ່ລະຊົນຊາດຊົນເຜົ່ານັກພາສາສາດໄດ້ຈັດພາສາຂອງຊົນຊາດຊົນເຜົ່າຕ່າງໆໃນໂລກໃຫ້ເປັນ 4 ຕະກຸນໃຫຍ່ໆດັ່ງນີ້:

1) **ຕະກຸນ ຈີນ - ຕິເບດ** (Sino - Tibeten) ຊຶ່ງປະກອບດ້ວຍຕະກຸນພາສາຍ່ອຍຕ່າງໆດັ່ງນີ້:

- ໝວດພາສາ ລາວ - ໄທ(ໄຕ) ຊຶ່ງປະກອບດ້ວຍ ພາສາລາວ, ໄທ, ໄທດຳ, ໄທແດງ, ໄທພວນ, ໄທລື້, ໄທງ້ຽວ.... ພາສາຂອງຊົນເຜົ່າຕ່າງໆເຫຼົ່ານີ້ແມ່ນໄດ້ນຳໃຊ້ໃນບັນດາປະເທດໃນແຫຼມອິນດູຈີນເປັນຕົ້ນ ລາວ, ໄທ, ແລະອີກປະຊາກອນສ່ວນໜ້ອຍໃນປະເທດຫວຽດນາມ.
- ໝວດພາສາພະມ້າ- ຕິເບດ ລວມມີພາສາພະມ້າ, ພາສາຕິເບດ, ພາສາມູເຊີ, ພາສາພູນ້ອຍ, ພາສາໂລໂລ, ພາສາກໍ ຊຶ່ງເປັນພາສາຂອງບັນດາຊົນເຜົ່າ ໃນບັນດາປະເທດ ລາວ, ພະມ້າ ແລະ ຈີນ.
- ໝວດພາສາຈີນ (ຫໍ້) ລວມມີພາສາຈີນກາງ, ຈີນກວາງຕຸງ, ແຕ້ຈິວ, ໄຫຼກໍແຄະ ແລະ ຫໍ້ ຊຶ່ງເປັນພາສາຂອງບັນດາຊົນເຜົ່າທີ່ນອນໃນປະເທດຈີນ.
- ໝວດພາສາມົ້ງ - ຢ້າວ ລວມມີພາສາຊົນເຜົ່າມົ້ງ, ຊົນເຜົ່າຢ້າວ, ຊົນເຜົ່າແລນແຕນແລະ ອາຄາ...ບັນດາຊົນເຜົ່າເຫຼົ່ານີ້ສ່ວນໃຫຍ່ດຳລົງຊີວິດຢູ່ບັນດາປະເທດ ຈີນ, ລາວ,ໄທ, ຫວຽດນາມ ແລະພະມ້າ.

**2). ຕະກຸນອອດສະຕຣິກ (Austric).**

- ໝວດພາສາມອນ - ຂອມ ລວມມີພາສາຂອງຊົນເຜົ່າມອນ ລະເວນ,ລະເມດ,ລະແວ, ກຳມຸ ຢູ່ລາວ ແລະ ຫວຽດນາມ, ພາສາຂອງຂະແມຢູ່ກຳປູເຈຍ.
- ໝວດພາສາຫວຽດ - ເມື່ອງ ລວມມີພາສາຂອງຊົນເຜົ່າຫວຽດ, ພາສາຊົນເຜົ່າເມືອງ ຢູ່ຫວຽດນາມ ແລະ ຊົນເຜົ່າສະດາງ, ເຜົ່າຊົນຕຣີຢູ່ລາວ.
- ໝວດພາສາຊາວາ - ມາລາຍູ ລວມມີພາສາຂອງຊົນເຜົ່າມາລາຍູ, ຊົນເຜົ່າບາຫຼີ. ຊົນເຜົ່າບາຕັກ ຢູ່ອິນໂດເນເຊຍ ແລະ ຊົນເຜົ່າຕາລາລົກ ຢູ່ຟີລິບປິນ.

**3). ຕະກຸນດາວິດຽງ(Dravidien)**

ຕະກຸນນີ້ມີຢູ່ທາງພາກໃຕ້ຂອງອິນເດຍຊຶ່ງເປັນພາສາ ຂອງຊົນເຜົ່າທະມິນ, ຊົນເຜາເຕລຸຄູ, ຊົນເຜົ່າມາລາຍາລາມ, ຊົນເຜົ່າຕຸລຸ ... ພາສາທີ່ເວົ້າ ກັນໃນອິນເດຍ ມີ 281 ພາສາ( ຖ້ານັບທັງພາສາເລັກໆນ້ອຍໆຕື່ມແມ່ນ ມີ 845 ພາສາ, ຕາມລັດຖະທຳມະນູນໄດ້ບັນຍັດໄວ້ພາສາທີ່ໃຊ້ເປັນທາງການຢູ່ແຕ່ລະລັດທົ່ວປະເທດ ແມ່ນມີ 14 ພາສາ ສ່ວນພາສາທາງການທີ່ໃຊ້ທົ່ວປະເທດແມ່ນມີ 2 ພາສາ, ຄື ພາສາອັງກິດ ແລະ ພາສາຮິນດູ.

**4). ຕະກຸນອິນໂດ - ເອີລົບ (Indo - europ)**

ການທີ່ໃສ່ຊື່ແບບນີ້ກໍ່ເພາະວ່າພາສາທີ່ໃຊ້ຢູ່ແຕ່ອິນເດຍຮອດເອີລົບ.

- ໝວດພາສາເຢຍລະມັນນິກ (Germanic) ລວມມີພາສາຂອງຊົນເຜົ່າເຢຍມັນບູຮານ ແລະ ປະຈຸບັນພາສາຂອງຊົນເຜົ່າໂຣລັງເດ, ພາສາສະກັງດີນາວຊຶ່ງເປັນພາສາຂອງດານມາກ, ຊູແອດ, ນອກແວ, ໄອແລນ.

- ໝວດພາສາ ເສີລະເວີ (Slave) ລວມມີພາສາລັດເຊຍ, ໂປໂລຍ, ສະໂລວັກ, ແຊກໂກ (ນອກນັ້ນຍັງໃຊ້ຢູ່ບັນດາປະເທດເຊັ່ນ: ຢູໂກສະລະວີ, ແລດໂຕນີ, ອູກແຣນ, ເຊັກໂກ,ບູນກາຣີ..).

- ຫມວດໂຣມັນ(Roman) ລວມມີພາສາລາແຕງ, ອີຕາລີ, ໂຣມັງເຊີ, ຝລັ່ງ, ແອສປາຍ.

- ຫມວດພາສາ ກະເຣັກ (Greer) ຫມວດນີ້ສ່ວນໃຫຍ່ແມ່ນໃຊ້ຢູ່ແທບທະເລເອເຊ (Egee), ປະເທດອານບານີ, ຢູໂກສະລະວີ, ບູນກາລີ, ຕວກກີ, ດ່ຣຽງ, ພາສາກະເຣັກເອງ, ພາສາອີໂອນຽນ, ອັດຕິກ ,ຣຽງ ແລະ ພາສາໄຊປະຣັດ.

- ຫມວດພາສາອິນໂດ) - ອາລະບັນ (Indo - Arajan) ແມ່ນພາສາຂອງຊົນເຜົ່າອາຣາຍັນໃນປະເທດອິນເດຍໄດ້ແກ່ ພາສາບາລີສັນສະກິດ,ຮິນດູ....

- ຫມວດພາສາອີຣານ (Iran) ລວມມີພາສາເປີເ ຊຍ, ກຽກເດ (ພາສາຕາເວັນອອກຕວັກ ກີ) ແລະ ພາສາອັບການີສະຖານ.

• ນອກນີ້ຍັງມີຕະກຸນອື່ນໆອີກເຊັ່ນ:

- ຕະກຸນອູຣານ - ອັນໂຕ ລວມມີພາສາຮຸງກາລີ, ແຟງລັງ, ມົງໂກນ, ແມນຈູ .

- ຕະກຸນຊາບີຕິກ - ເຊນິດ ລວມມີພາສາ ເອທີໂອປີ, ອາຣັບ, ເອຢິບ, ລີບີ, ຊີລີ...

- ຕະກູນອິນໂດ - ອາເມລິກາ ລວມມີພາສາອິນເດຍແດງ ແລະ ເຜົ່າພື້ນເມືອງຕ່າງໆໃນ ທະວີບອາເມລິກາ.

ຕົວຢ່າງການສົມທຽບກັບສໍາລັບພາສາຕ່າງໆໃນຕະກູນອິນໂດ - ເອີລົບ. ລັດເຊຍ, ຝລັ່ງ, ອັງກິດ, ເຢຍລະມັນ, ລາແຕງ, ກະເຣັກເປີເຊຍ, ສັນສະກິດບຣັດແຟຣເຣີ, ປູະເທີຣ໌ບຣູແດຟາເຕີ, ຟຣາເຕຍບຣາຕະ ພຣາຕະ ( Bpat ) ( Frere ) ( Brother ) ( Brudder ) ( Pharater ) ( pharater ) ( Brata ) ( Bhrala )

ມັດແມເຣີມາຣເທີຣມຸດເດີມາເຕີມີເຕຍມາຕາຣ໌ມາຕາ (Mere) (Mother) (Muter) (Mater) (Meter) (Mata) (Matar) (Mate)

| | | | | | | |
|---|---|---|---|---|---|---|
| ອາຕຽສແປເຣີ | ຟາເທີຣ໌ | ວາເຕີ | ປາເຕີ | ປາເຕຍ | ປີຕາຣ໌ | ປີຕາ |
| (Oteu) | (Pere) | (Father) | (Vater) | (Pater) | (Pater) | (Pitar) |

# ບົດທີ 5
# ແນວຄິດທິດສະດີກ່ຽວກັບຊົນເຜົ່າ

## 1. ແນວຄິດທິດສະດີໂຄງສ້າງເລື່ອງຄວາມສຳພັນລະຫວ່າງງກຸ່ມຊົນເຜົ່າ.

### 1. ແນວຄິດລະບົບລວມ (system approach)

ການວິເຄາະໂຄງສ້າງໜ້າທີ່ ແລະ ການປັບຕົວຂອງກຸ່ມຊົນເຜົ່າ. ຄວາມຄິດພື້ນຖານຂອງທິດສະດ ລະບົບລວມ ຄື ລະບົບ: ປະກອບດ້ວຍສ່ວນ... ໃນປະສານກັນ ແລະ ມີຄວາມລັບເຊິ່ງກັນ ແລະ ກັນ ໃນ ສະພະທີ່ສົມວນ .. ຄຳທີ່ຄວນປະກອບຍ່ອຍຂອງສັງຄົມອາດມີຮູບແບບແນວ ໃດກໍໄດ້ ແຕ່ໂຄງສ້າງ ແລະ ປະກອບຂອງສັງຄົມນັ້ນຈະມີລັກສະນະສະເພາະຂອງສັງຄົມນັ້ນໆ. ມື່ອເກີດການປ່ຽນແປງ ໃນສ່ວນໃດສ່ວນໜຶ່ງຂອງອົງປະກອບ ຫຼື ໂຄ່ງສ້າງ ຈຳເປັນຈະຕ້ອງມີການປ່ຽນແປງໃນສ່ວນອື່ນດ້ວຍ, ເມື່ອຄົງໄວ້ສະເຖຍລະພາບ ແລະ ຄວາມສົມດູນຂອງສັງຄົມ, ການບໍ່ ) ຂອງສັງຄົມໃນແງ່ລະບົບລວມນີ້ເປັນການເບິ່ງວ່າສັງຄົມທັງລະບົບຄື ສິ່ງທີ່ສຳຄັນທີ່ສຸດ ແລະ ອົງປະກອບສ່ວນຍ່ອຍຕ່າງໆ ມີຄວາມສຳຄັນ ໃນອັນດັບຮອງ.. ສະນັ້ນຖ້າສ່ວນຍ່ອຍສ່ວນຫນຶ່ງ 1 ປ່ຽນແປງໄປ, ສ່ວນຍ່ອຍສ່ວນອື່ນຈະຕ້ອງປ່ຽນຕາມໄປ ເພື່ອສ້າງຄວາມສົມດຸນຂອງລະບົບ ລວມ.

ການເບິ່ງສັງຄົມໃນລັກສະນະທີ່ເໜັ້ນໂຄງສ້າງໜ້າທີ່ຍອມຮັບວ່າ ໂຄງສ້າງປະກອບ ດ້ວຍສ່ວນຍ່ອຍທີ່ມີຖານະ ແລະດູນຄ່າຕ່າງກັນ. ໂຄງສ້າງສັງຄົມອາດປັນຊົນຊັ້ນ ຊຶ່ງຈະປະກອບດວ້ຍ ຄົນຮັ່ງມີ ແລະ ຄົນທຸກ ຫຼື ເຈົ້ານາຍ /ຄົນໃຊ້, ນາຍທຶນ/ກຳມະກອນ ແລະ ໃນສັງຄົມທີ່ປະກອບດ້ວຍຊົນເຜົ່າທີ່ຕ່າງກັ່ນ, ໂຄງສ້າງສັງຄົມຈະປະກອບດ້ວຍກຸ່ມເຜົ່າ ພັນຕ່າງໆ ໃນປະເທດບາງປະເທດໃນອາຟະຣິກາທີ່ໂຄງສ້າງສັງຄົມອາດເປັນຄົນເຜົ່າຕ່າງໆ ຈະເຫັນໄດ້ວ່າຄົນແຕ່ລະສ່ວນ ແຕ່ລະກຸ່ມນັ້ນ ມີຖານະທາງສັງຄົມທີ່ບໍ່ເທົ່າກັນ ແລະ ນອກ ຈາກນີ້ ເນື່ອງຈາກການເບິ່ງເຊິ່ງໂຄງສ້າງເບິ່ງວ່າ ລະບົບລວມຍ່ອມມີຄວາມສຳຄັນເໜືອລະບົບຍ່ອຍ, ການສຶກສາເລື່ອງຊົນເຜົ່າກຸ່ມນ້ອຍ ຊົນເຜົ່າກຸ່ມໃຫຍ່ໂດຍທິດສະດີໂຄງສ້າງໜ້າທີ່ຈຶ່ງເປັນໃຫ້ຄວາມສຳຄັນຕໍ່ຊົນກຸ່ມໃຫຍ່ເພື່ອເນັ້ນເລື່ອງສະຖຽນລະພາບຂອງສັງຄົມ.

ການສຶກສາດ້ວຍທິດສະດີໂຄງສ້າງຫນ້າທີ່ນີ້ມີບັນຫາຂອງການວິເຄາະໃນກໍລະນີທີ່ ເກີດຄວາມຂັດແຍ້ງຂອງອົງປະກອບຍ່ອຍຂອງສັງຄົມ, ເນື່ອງຈາກທິດສະດີນີ້ເໜັ້ນສະຖຽນລະພາບຂອງສັງຄົມ, ການປ່ຽນແປງ ຫຼື ການຂັດ

ແຍ້ງຂອງອົງປະກອບຍ່ອຍໃນລັກສະນະຮຸນແຮງຈະເກີດຂຶ້ນບໍ່ໄດ້ຖ້າສັງຄົມຍັງຄົງຢູ່ ສະນັ້ນຈຶ່ງຕ້ອງຫາທາງລະງັບຄວາມຂັດແຍ້ງ ຫຼື ປັບອົງປະກອບຕ່າງໆໃຫ້ເຂົ້າກັນໄດ້ທິດສະດີໂຄງສ້າງທີ່ຂຽນໃນໜັງສືຕ່າງໆ ແລະ ຜູ້ຂຽນຈະບໍ່ໃຫ້ລະອຽດໃນໜັງສືເຫຼັ້ມນີ້.

ໃນການສຶກສາເລື່ອງກຸ່ມຊົນເຜົ່າ ເບິ່ງຈາກທິດສະດີໂຄງສ້າງໜ້າທີ່ຈະພົບວ່າກຸ່ມຊົນເຜົ່າຍ່ອຍຖືເປັນອົງປະກອບໂຄງສ້າງ ຫຼື ລະບົບລວມຂອງສັງຄົມ. ໃນໄລຍະເລີ່ມຕົ້ນຈຶ່ງມີການພະຍາຍາມລວມກຸ່ມຊົນເຜົ່າຍ່ອຍໃຫ້ເປັນສ່ວນຂອງສັງຄົມໃຫຍ່ ໃນສະຫະລັດອາເມລິກາ, ລັດຖະບານພະຍາຍາມລວມກຸ່ມເຜົ່າພັນຕ່າງໆໃຫ້ເຂົ້າເປັນອັນໜຶ່ງອັນດຽວ ກັນໃນຂະບວນການຂອງການສ້າງຊາດໂດຍສ້າງຄວາມສຳນຶກຂອງຄວາມເປັນ" ຄົນອາເມລິກາ" ໃຫ້ກັບທຸກຄົນເຖິງ ແມ້ຈະມີບັນພະບູລຸດທີ່ມາຈາກຕ່າງເຜົ່າ ຕ່າງຊາດ, ຕ່າງພາສາກັນ, ໃນທາງປະຕິບັດແລ້ວ ລັດຖະບານອາມລິກາ ສາມາດສ້າງສຳນຶກຂອງຄວາມເປັນ " ອາເມລິກາ " ໄດ້ ແຕ່ບໍ່ສາມາດແກ້ບັນຫາຊົນກຸ່ມນ້ອຍ/ຊົນກຸ່ມໃຫຍ່ໃນແງ່ຄວາມສຳພັນລະຫວ່າງຊົນກຸ່ມນ້ອຍ ແລະ ຊົນກຸ່ມໃຫຍ່ ເພື່ອສັງຄົມສ່ວນລວມຈະໄດ້ມີລັກສະນະອ່ອມກັນ ແລະ ບໍ່ເກີດຄວາມຂັດແຍ່ງ.

ການປັບຕົວຂອງກຸ່ມເຜົ່າພັນມີຫຼາຍຮູບແບບ, ເມື່ອສະຖານະການປ່ຽນໄປຄວາມສຳພັນຂອງກຸ່ມເຜົ່າພັນຈຳເປັນຈະຕ້ອງປ່ຽນ, ເຮັດໃຫ້ເກີດການປະເມີນສະຖານະການ ແລະ ປະເມີນຕົວເອງອາດເຫັນໄດ້ຈາກການທີ່ບຸກຄົນສ້າງເອກະລັກໃໝ່ ຫຼື ປັບຄວາມຫມາຍປັບຄວາມໝາຍຂອງເອກະລັກເດີມບໍ່ວ່າຈະເປັນຮູບແບບໃນການປັບປ່ຽນທີ່ເກີດຂຶ້ນຈະເຖິງຈຸດສົມດຸນ ແລະ ເຮັດໃຫ້ເກີດສະຖຽນລະພາບຜົສົມຄວນ ຕົວຢ່າງຂອງການປັບຕົວຄື ການປະສົມກົມກືນທາງວັດທະນະທຳເຜົ່າພັນສອງກຸ່ມ ຫຼື ການບູລະນະການທາງວັດທະນະທຳໂດຍແຕ່ລະກຸ່ມເຜົ່າພັນຮັກສາເອກະລັກຂອງວັດທະນະທຳຂອງຕົນໄວ້ ກໍລະນີທີ່ກຸ່ມເຜົ່າພັນໜຶ່ງອົບພະຍົບເຂົ້າມາຢູ່ໃນດິນແດນໃໝ່ທີ່ມີກຸ່ມເຜົ່າພັນເດີມຢູ່ແລ້ວ, ກຸ່ມໃໝ່ອາດອົບພະຍົບເຂົ້າມາ ເປັນຄົນງານ ຫຼື ລູກຈ້າງ, ເປັນຊົນຊັ້ນລ່າງຂອງສັງຄົມ ແລະ ຄ່ອຍໆເລື່ອນຖານະທາງສັງຄົມ ໂດຍການປ່ຽນອາຊີບຫຼື ປ່ຽນຖານະທາງເສດຖະກິດ, ຈົນໃນທີ່ສຸດກໍເປັນທີ່ຍອມຮັບ ແລະ ຖືວ່າເກີດການປະສົມກົມກືນທາງວັດທະນະທຳໄດ້.

ບາງຄັ້ງການປັບຕົວຂອງກຸ່ມເຜົ່າພັນບໍ່ເກີດຂຶ້ນດ້ວຍເຫດຜົນວ່າ, ວັດທະນະທຳບໍ່ເຂົ້າກັນ ເຊັ່ນ ຄົນຢິວໃນປະເທດທີ່ມີວັດທະນະທຳອາລັບ ຊຶ່ງປະສົມກົມກືນບໍ່ໄດ້ດ້ວຍເຫດຜົນທາງສາສະໜາ, ແຕ່ກໍມີລັກສະນະຂອງການປັບຕົວ, ສາມາດຢູ່ໃນສັງຄົມດຽວກັນໄດ້ ໂດຍບໍ່ມີຄວາມຂັດແຍ້ງຮຸນແຮງ ແລະ ເກີດບູລະນະການທາງວັດທະນະທຳໄດ້.

**2. ແນວຄິດທິດສະດີຄວາມຂັດແຍ້ງເລື່ອງຊີວະພາບ ຫຼື ສີຜິວ, ເລື່ອງອະຄະຕິ ແລະ ການເລືອກປະຕິບັດ.**

ການສຶກສາເລື່ອງຄວາມສຳພັນ ຂອງກຸ່ມຊົນຊາດໃນປະເທດຕາເວັນຕົກໃນອາດີດ. ມັກມຸ່ງພິຈາລະນາຈາກແງ່ມຸມຂອງຄວາມສຳພັນລະຫວ່າງເຊື້ອຊາດ (racial relation) ເປັນສ່ວນໃຫຍ່, ເພາະເປັນບັນຫາທີ່ເກີດຂຶ້ນມັກເປັນບັນຫາເລື່ອງສີຜິວ ເຊັ່ນ ບັນຫາລະຫວ່າງຄົນຜິວຂາວກັບຄົນຜິວດຳ, ຄົນຜິວຂາວ ກັບ ອິນເດຍແດງ, ຂໍ້ແຕກຕ່າງເລື່ອງລັກສະນະທາງຊີວະພາບຄືຂໍ້ແຕກຕ່າງທີ່ເຫັນໄດ້ຊັດ ແລະ ໄດ້ເປັນຕົ້ນເຫດຂອງການກີດກັນຄວາມລຳອຽງ ແລະ ການເລືອກປະຕິບັດ (discrimination) ທີ່ເກີດຂຶ້ນຈາການທີ່ຄົນຜິວຂາວເຊື່ອວ່າ ຕົນເປັນກຸ່ມເຊື້ອຊາດທີ່ຈະເລີນກວ່າ ແລະ ດີກວ່າ (white supremacy ).

ຄວາມເຊື່ອທີ່ຍັງບໍ່ທັນໄດ້ພິສູດ ແລະ ບໍ່ແມ່ນຄວາມຈິງສະເໝີໄປທີ່ບຸກຄົນມີອະຄະຕິ (prejudice) ຕໍ່ຄົນທີ່ມີຊີວະພາບຕ່າງຈາກຕົວ, ເຮັດໃຫ້ບຸກຄົນນັ້ນບໍ່ສາມາດຍອມຮັບໄດ້ ວ່າຄົນທີ່ມີລັກສະນະນັ້ນໆມີຖານະທາງສັງຄົມເທົ່າທຽມກັບຕົນ ບຸກຄົນທີ່ມີອະຄະຕິຈະບໍ່ສາມາດໃກ້ສິດ ແລະ ຄວາມໄວ້ວາງໃຈຕໍ່ຄົນທີ່ຕ່າງຈາກຕົວໄດ້.
ນອກຈາກນັ້ນບຸກຄົນທີ່ມີອະຄະຕິຈະສະແດງອອກໂດຍການສະແດງຄວາມລັງກຽດ ແລະ ເລືອກປະຕິບັດໂດຍບໍ່ໃຫ້ຄວາມຍຸຕິທຳຕໍ່ຜູ້ທີ່ມີເຊື້ອຊາດຕ່າງໆຈາກຕົວ, ການເລືອກປະຕິບັດອາດບໍ່ຊັດເຈນ ເຊັ່ນ ການພະຍາຍາມບໍ່ຢູ່ໃກ້ສິດ

ເປັນຕົ້ນ, ການເລືອກປະຕິບັດອາດຊັດເຈນ ແລະ ບໍ່ຮຸນແຮງເຊັ່ນ: ການປະຕິເສດທີ່ຈະຂຶ້ນລົດໂດຍສານຄັນດຽວກັນ, ການຈະປະຕິເສດທີ່ສ້າງບ້ານເຮືອນຢູ່ໃກ້ຄຽງກັນ ຫຼື ອາດມີການກີດກັນໃນເລື່ອງຄວາມກ້າວໜ້າທາງການງານ ແລະ ການກີດກັນບໍ່ໃຫ້ເຂົ້າສັງຄົມເປັນຕົ້ນ.

ເນື່ອງຈາກກຸ່ມເຊື້ອຊາດ ຫຼື ກຸ່ມເຜົ່າພັນ (ເຊັ່ນ ຄົນຜິວດຳ) ຖືກເລືອກປະຕິບັດຈິງເປັນກຸ່ມດ້ອຍໂອກາດ ແລະ ບໍ່ສາມາດປັບປຸງຕົນເອງໃຫ້ດີຂຶ້ນໄດ້, ຜົນກໍ່ຄືກຸ່ມດ້ອຍໂອກາດກໍ່ຈະເປັນກຸ່ມດ້ອຍໂອກາດຕະຫລອດໄປ. ອະຄະຕິທີ່ຄົນຜິວຂາວເຄີຍມີຕໍ່ຄົນຜິວດກໍຍັງມີຕໍ່ໄປ ຫຼື ຍິ່ງໄດ້ຮັບການຢືນຢັນວ່າອະຄະຕິນັ້ນຖືກຕ້ອງ.

ແນວຄິດເລື່ອງຄວາມແຕກຕ່າງທາງເຊື້ອຊາດມີຜົນເຮັດໃຫ້ການກີດກັນ ແລະ ຄວາມບໍ່ສະເໝີພາບນີ້ເປັນທີ່ຍອມຮັບກັນ ແລະ ມີຜົນເຮັດໃຫ້ລັດຖະບານຂອງບາງປະເທດ ພະຍາຍາມອອກກົດໝາຍຫ້າມການກີດກັນຜິວ ແລະ ໃຫ້ສິດທິພິເສດແກ່ກຸ່ມຜູ້ດ້ອຍໂອກາດເພື່ອຫາທາງໃຫ້ຄົນກຸ່ມນີ້ສາມດຊ່ວຍຕົນເອງ ແລະ ເລືອກຖານະທາງສັງຄົມໄດ້ຈົນເປັນທີ່ຍອມຮັບຂອງຄົນທົ່ວໄປຫຼາຍຂຶ້ນ, ເປັນການພະຍາຍາມສ້າງຄວາມສະເໝີພາບໃນ ຊົນຕ່າງຜິວໃຫ້ມີຫຼາຍຂຶ້ນ.

ການພິຈາລະນາເລື່ອງຄວາມແຕກຕ່າງຂອງສີຜິວ ແລະ ບັນຫາເລື່ອງຄວາມບໍ່ສະເໝີພາບນີ້ເປັນການເບິ່ງຈາກແງ່ມຸມຂອງທິດສະດີວ່າດ້ວຍການຂັດແຍ້ງ ແລະ ຄວາມເຂົ້າໃຈ ກັນບໍ່ໄດ້ຂອງກຸ່ມຄົນທີ່ມີລັກສະນະທາງຊີວະພາບຕ່າງກັນ ເປັນການເບິ່ງວ່າກຸ່ມຜູ້ມີອຳນາດ ຕ້ອງການຮັກສາອຳນາດເອົາໄວ້ ແລະ ຄວາມຂັດແຍ້ງລະຫວ່າງສີຜິວທີ່ເກີດຂຶ້ນ ເປັນເພາະກຸ່ມໃຕ້ປົກຄອງຖືກກີດກັນບໍ່ໃຫ້ມີອຳນາດ.

ເທົ່າທີ່ເວົ້າມານີ້ເປັນການພະຍາຍາມສະຫຼຸບແນວຄິດຂອງທິດສະດີ ໂດຍມາພິຈາ ລະນາບັນຫາເລື່ອງຄວາມຂັດແຍ້ງລະຫວ່າງກຸ່ມຄົນທີ່ມີລັກສະນະທາງຊີວະພາບຕ່າງກັນເປັນຫຼັກ. ແຕ່ທິດສະດີຄວາມຂັດແຍ້ງອາດນຳມາວິເຄາະບັນຫາກຸ່ມເຜົ່າພັນລະຫວ່າງ ຊົນເຜົ່າສ່ວນນ້ອຍ ແລະ ຊົນເຜົ່າສ່ວນໃຫຍ່ ທີ່ບໍ່ໄດ້ເກີດຈາກລັກສະນະທາງຊີວິພາບໄດ້ເຊັ່ນດຽວກັນ.

ບັນຫາຄວາມສຳພັນລະຫວ່າງກຸ່ມເຜົ່າພັນ ມັກເກີດຂຶ້ນໂດຍທີ່ກຸ່ມເຜົ່າພັນກຸ່ມໜຶ່ງກີດກັ້ນ ແລະ ບໍ່ໄດ້ຮັບຄວາມຍຸດຕິທຳ ບາງຄັ້ງກຸ່ມເຜົ່າພັນທີ່ເປັນຊົນກຸ່ມສ່ວນໃຫຍ່ບໍ່ຮູ້ຕົວວ່າໄດ້ກະທຳການໃນລັກສະນະທີ່ລຳອຽງຕໍ່ຊົນກຸ່ມສ່ວນນ້ອຍຖ້າບໍ່ເຄີຍມີປະວັດວ່າບໍລິເວນທີ່ອາໃສທີ່ຊົນກຸ່ມນ້ອຍຕ້ອງການອາໄສຢູ່ເປັນບໍລິເວນທີ່ເຄີຍເປັນທີ່ຢູ່ຂອງຊົນກຸ່ມໃຫຍ່ທີ່ເປັນຊົນຊັ້ນສູງເທົ່ານັ້ນ ການທີ່ຊົນກຸ່ມນ້ອຍຈະເຊົ່າບ້ານໃນບໍລິເວນນັ້ນ ແລະ ຖືກປະຕິເສດກະວ່າບ້ານບໍ່ວ່າງອາດຖືເປັນເລື່ອງທຳມະດາ ແຕ່ຖ້າຊົນກຸ່ມນ້ອຍເຂົ້າໃຈວ່າຖືກກີດກັນບໍ່ໃຫ້ອາໃສຢູ່ໃນບໍລິເວນນັ້ນກໍ່ຖືວ່າເປັນບັນຫາເລື່ອງການເລືອກປະຕິບັດໄດ້.

ໃນອາດີດ " ການເລືອກປະຕິບັດ " ດ້ວຍເຫດຜົນທາງດ້ານເຊື້ອຊາດ ຫຼື ລັກສະນະທາງຊີວະພາບ ແລະ ເຫດຜົນທາງເຜົ່າພັນເປັນເລື່ອງທີ່ເກີດຂຶ້ນອັນແທ້ຈິງ ຄົນຜິວຂາວມັກຖືວ່າຕົນເອງເປັນເຊື້ອຊາດທີ່ຈະເລີນກວ່າ ແລະ ຄິດວ່າຊົນຊາດ, ເຜົ່າອື່ນດ້ອຍກວ່າ ບໍ່ຈະເລີນ, ສົກກະປົກ, ຂີ້ຄ້ານ (ເພາະຂີ້ຄ້ານຈຶ່ງບໍ່ຈະເລີນ) ໆລໆ ດັ່ງນັ້ນການທີ່ຊົນກຸ່ມໃຫຍ່ມັກຈະດູຖູກຫຍຽບຫຍາມຊົນກຸ່ມນ້ອຍກວ່າດ້ອຍກວ່າທັງທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມ ປລະ ການທີ່ຊົນກຸ່ມນ້ອຍມີຄວາມຮູ້ສຶກມີປົມດ້ອຍ ແລະ ຮູ້ສຶກວ່າບໍ່ໄດ້ຮັບ ຄວາມຍຸດຕິທຳເປັນເລື່ອງທີ່ມີມູນ ແລະ ຄວນທີ່ຊົນກຸ່ມໃຫຍ່ຈະພະຍາຍາມເຂົ້າໃຈຄວາມຮູ້ສຶກຂອງຊົນກຸ່ມນ້ອຍໃຫ້ຫຼາຍຂຶ້ນ.

ນອກຈາກກນີ້ໃນຖານະທີ່ຊົນກຸ່ມໃຫຍ່ເປັນຜູ້ທີ່ມີ ໂອກາດດີກວ່າຊົນກຸ່ມນ້ອຍໂດຍ ທົ່ວໆໄປຊົນກຸ່ມໃຫຍ່ຈຶ່ງຄວນຢ່າງຍິ່ງທີ່ຄວນຈະສຶກສເຖິງຄວາມຮູ້ສຶກ ແລະ ການປະຕິບັດຕໍ່ກັນ ແລະ ກັນລະຫວ່າງຊົນກຸ່ມໃຫຍ່ ແລະ ຊົນກຸ່ມນ້ອຍໃຫ້ທ່ອງແທ້ ແລະ ພະຍາຍາມເບິ່ງບັນຫາຈາກແງ່ມຸມຂອງຊົນກຸ່ມນ້ອຍດ້ວຍ. ການເບິ່ງບັນຫາຈາກແງ່ມຸມຂອງຊົນກຸ່ມໃຫຍ່ ແຕ່ຝ່າຍດຽວຈະບໍ່ໄດ້ພາບທີ່ສົມບູນ ແລະ ບໍ່ສາມາດປັບຄວາມສຳພັນໃຫ້ດີຂຶ້ນໄດ້.

**3. ການໃຊ້ທິດສະດີວິເຄາະຄວາມສຳພັນລະຫວ່າງກຸ່ມເຜົ່າພັນ.**

ຈະເຫັນໄດ້ວ່າແນວຄິດ ຫຼື ທິດສິດີກ່ຽວກັບກຸ່ມເຜົ່າພັນທີ່ສະເໜີມານີ້ມີຄວາມແຕກຕ່າງກັນ ໃນຄວາມຄິດພື້ນຖານ. ໃນທິດສະດີແນວທຳອິດທີ່ສະເໜີການເບິ່ງສັງຄົມເປັນລະບົບທີ່ປິດໃນລັກສະນະທີ່ຄ່ອນຂ້າງສົມບູນ ແລະ

ໃຫ້ຄວາມສຳຄັນກັບຄວາມສົມດຸນໃນລະບົບ ເປັນແນວຄິດທີ່ເໝາະສຳລັບໃຊ້ວິເຄາະສັງຄົມທີ່ແຍກຢູ່ຕ່າງຫາກຈາກສັງຄົມອື່ນ ແລະ ມີລະບົບ ທີ່ເປັນຂອງຕົວເອງຊັດເຈນ. ການພິຈາລະນາເລື່ອງຄວາມສົມດຸນພາຍໃນສັງຄົມຈຶ່ງເປັນເລື່ອງທີ່ເໝາະສົມ, ແຕ່ໃນສັງຄົມປະຈຸບັນທີ່ມີການສື່ສານແລກປ່ຽນ ແລະ ຖ່າຍທອດວັດທະນະທຳກັນລະຫວ່າງສັງຄົມ, ການເບິ່ງສັງຄົມເປັນລະບົບສະເພາະຈຶ່ງບໍ່ສອດຄອງກັບຄວາມເປັນຈິງ ໃນຂະນະດຽວກັນ ທິດສະດີກ່ຽວກັບເລື່ອງຄວາມແຕກຕ່າງທາງສີຜິວ ແລະ ລັກສະນະທາງກາຍຍະພາບນັ້ນເໝາະທີ່ຈະນຳມາໃຊ້ສະເພາະສ່ວນທີ່ກ່ຽວກັບຄວາມແຕກຕ່າງທາງຊີວະພາບ ຊຶ່ງສ່ວນຫຼາຍແລ້ວກໍຈະພົບວ່າມີຄວາມແຕກຕ່າງທາງວັດ ທະນະທຳດ້ວຍ, ສະນັ້ນການນຳທິດສະດີນີ້ມາໃຊ້ຈຶ່ງຕ້ອງພິຈາລະນາສະເພາະສ່ວນທີ່ເໝາະສົມ.

ທິດສະດີເໜັ້ນເລື່ອງການນປະສານປະໂຫຍດຈະສອດຄ່ອງກັບຄວາມເປັນຈິງໃນກໍລະນີທີ່ຄວາມສຳພັນລະຫວ່າງກຸ່ມຜົ່າພັນເປັນຄວາມສຳພັນທີ່ເຂົ້າກັນໄດ້ ແລະ ບໍ່ມີບັນຫາແລະ ທິດສະດີເລື່ອງຄວາມຂັດແຍ່ງຈະເໝາະສົມທີ່ຈະນຳມາວິເຄາະ ໃນກໍລະນີທີ່ຄວາມສຳພັນລະຫວ່າງກຸ່ມເຜົ່າພັນມີບັນຫາຂັດແຍ່ງ ແລະ ກຸ່ມເຜົ່າພັນທີ່ຢູ່ໃກ້ຄຽງກັນບໍ່ໄດ້.

ອາດວິເຄາະຄວາມສຳພັນລະຫວ່າງກຸ່ມເຜົ່າພັນໄດ້ໃນສອງລັກສະນະຄື: ລັກສະນະທີ່ເຂົ້າກັນໄດ້ ແລະລັກສະນະທີ່ເຂົ້າກັນບໍ່ໄດ້.

1. ຄວາມສຳພັນທີ່ກຸ່ມເຜົ່າພັນທີ່ຕ່າງກັນທີ່ພໍຈະເຂົ້າກັນໄດ້ ຈະເກີດຂຶ້ນເມື່ອຊົນກຸ່ມນ້ອຍມີຄວາມຮູ້ສຶກວ່າ ຕົນເປັນສ່ວນໜຶ່ງຂອງສັງົມໃຫຍ່ ໃນກໍລະນີຂອງປະເທດລາວ ຖ້າສະມາຊິກຂອງຊົນກຸ່ມນ້ອຍສ່ວນຫຼາຍມີຄວາມຮູ້ສຶກວ່າ ເຖິງແມ່ນວ່າຕົນຈະເປັນຊົນກຸ່ມນ້ອຍ ແຕ່ກໍຍັງມີຄວາມສຳນຶກຂອງຄວາມເປັນພົນລະເມືອງລາວ ກໍຖືໄດ້ວ່າຄວາມສຳພັນລະຫວ່າງຊົນກຸ່ມນ້ອຍ ແລະ ຊົນກຸ່ມໃຫຍ່ຢູ່ໃນລັກສະທີ່ວ່າພໍເຂົ້າກັນໄດ້ ຄຳທາງວິຊາການທີ່ໃຊ້ກັນຢູ່ມີຫຼາຍຄຳເຊັ່ນ: assimilation (ການປະສົມກົມກືນທາງວັດທະນະທຳ) aeculturation (ການປັບຮັບວັດທະນະທຳ) ແລະ integration (ບູລະນະການທາງວັດທະນະທຳ) ຫຼື pluralism (ການນຮ່ວມເປັນພະຫູສັງຄົມ) ເປັນຕົ້ນ.

2. ຄວາມສຳພັນທີ່ກຸ່ມເຜົ່າພັນເຂົ້າກັນບໍ່ໄດ້ເກີດຂຶ້ນເມື່ອຊົນກຸ່ມນ້ອຍມີຄວາມຮູ້ສຶກວ່າຖືກຊົນກຸ່ມໃຫຍ່ກີດກັ້ນ ແລະ ດູຖູກ, ເຮັດໃຫເມີຄວາມສຳນຶກເປັນສ່ວນໜຶ່ງຂອງສັງຄົມໃຫຍ່, ໃນກໍລະນີຂອງ separatist group. (ກຸ່ມແຍກດິນແດນ) ຫຼື militant group (ກຸ່ມຜູ້ກໍ່ການຮ້າຍ) ເປັນຕົວຢ່າງຂອງການແຕກແຍກ ແລະ ຄວາມຂັດແຍ່ງລະຫວ່າງຊົນກຸ່ມນ້ອຍ ແລະ ກຸ່ມໃຫຍ່ ເຖິງຂະໜາດທີ່ກຸ່ມແຍກດິນແດນຕ້ອງການທີ່ຈະແຍກຕົນເອງອອກໄປຕັ້ງປະເທດໃໝ່ ແລະ ກຸ່ມຜູ້ກໍ່ການຮ້າຍ ຕ້ອການຈະຍົກຕົວເອງອອກຈາກພາຍໃຕ້ການປົກຄອງຊົນກຸ່ມໃຫຍ່ ແລະ ຕັ້ງຕົນເອງເປັນໃຫຍ່ແທນ ໃນກໍລະນີນີ້ຊົນກຸ່ມນ້ອຍ ອາດກັບກາຍເປັນຊົນກຸ່ມໃຫຍ່ ແລະ ຊົນກຸ່ມໃຫຍ່ອາດກັບກາຍເປັນຊົນກຸ່ມນ້ອຍ (ຖ້າການປະຕິວັດເຮັດສຳເລັດ).

ຈະເຫັນໄດ້ວ່າ: ເລື່ອງຊົນກຸ່ມນ້ອຍຈະເກີດເປັນບັນຫາຂຶ້ນຖ້າຄວາມສຳພັນລະຫວ່າງກຸ່ມເຜົ່າພັນຢູ່ໃນລັກສະນະເຂົ້າກັນບໍ່ໄດ້ ຫຼື ມີຄວາມຂັດແຍ່ງ ແຕ່ຖ້າເປັນຄວາມສຳພັນທີ່ເຂົ້າກັນໄດ້ບໍ່ມີການແຍ່ງຊີງອຳນາດທາງການເມືອງ ແລະ ທາງເສດຖະກິດ ກຸ່ມເຜົ່າພັນກໍອາດຈະຮ່ວມມືໃນລັກສະນະສ້າງສັນໄດ້.

ທັງນີ້ບໍ່ໄດ້ໝາຍຄວາມວ່າຈະຕ້ອງເກີດການປະສົມກົມກືນສະເໝີໄປຄວາມປະສົມກົມກືນເກີດຂຶ້ນບໍ່ໄດ້ງ່າຍຖ້າຊົນເຜົ່າສອງກຸ່ມມີຄວາມແຕກຕ່າງທາງດ້ານຊີວະພາບຢ່າງເຫັນໄດ້ຊັດເຊັ່ນ: ຄົນຜິວຂາວ ແລະ ຄົນຜິວດຳ ຫຼື ຖ້າມີຄວາມເຊື່ອທາງສາສະໜາ ແລະ ວັດທະນະທຳທີ່ແຕກຕ່າງກັນຫຼາຍເຊັ່ນ: ສາສະໜາອິດສະລາມ ແລະ ສາສະໜາພຸດການປະສົມກົມກືນຄົງເກີດຂຶ້ນໄດ້ຍາກ ຖ້າຊົນກຸ່ມນ້ອຍ ແລະ ຊົນກຸ່ມໃຫຍ່ ຈະຢູ່ຮ່ວມກັນຢ່າງມີສັນຕິໄດ້ ກໍໝາຍຄວາມວ່າ ຈະຕ້ອງຮ່ວມກັນເປັນສັງຄົມໜຶ່ງບໍ່ຕ້ອງສິ່ງເສີມຄົນກຸ່ມນ້ອຍໃຫ້ເປັນສ່ວນໜຶ່ງຂອງສັງຄົມໃຫຍ່.

ຖ້າກຸ່ມເຜົ່າພັນຕ່າງໆມີຄວາມຄິດກົງກັນ(ຕົກັນ)ວ່າຈະຢູ່ຮ່ວມກັນໃນສັງຄົມດຽວກັນຢ່າງປະສານປະໂຫຍດເພື່ອວັດຖຸປະສົງຂອງການຢູ່ລອດຂອງປະເທດຊາດ. ນະໂຍບາຍ ແລະ ວິທີການປະສານປະໂຫຍດ ຍ້ອນເປັນນະໂຍບາຍທີ່ໃຫ້ສິດທິເສລີພາບທາງຄວາມຄິດ, ຄວາມເຊື່ອທາງສາສະໜາ ແລະ ຍຶດໝັ້ນໃນຄວາມສະເໝີພາບຢ່າງ

ເທົ່າທຽມກັນ. ຄາມເສລີ ແລະຄວາມສະເໝີພາບນັບເປັນປັດໄຈສຳຄັນທີ່ຈະຊ່ວຍສ້າງຄວາມເປັນສະມາຊິກທີ່ເທົ່າທຽມກັນຂອງສັງຄົມ. ຄວາມຮູ້ສຶກວ່າຊົນກຸ່ມນ້ອຍເລືອກປະຕິບັດ ແລະ ຄວາມຂັດແຍ່ງລະຫວ່າງກຸ່ມເຜົ່າພັນຈະບໍ່ເກີດຂຶ້ນ. ຄວາມສຳພັນລະຫວ່າງຊົນກຸ່ມນ້ອຍ ແລະ ຊົນກຸ່ມໃຫຍ່ ຈະຢູ່ໃນລັກສະນະຄວາມສຳພັນທີ່ພໍເຂົ້າກັນໄດ້, ເກີດການປະສານປະໂຫຍດ ແລະ ຄວາມຕ້ອງການທີ່ຈະແຍກດິນແດນ ຫຼື ປະຕິບັດໂຄ່ນລົ້ມຄົງຈະບໍ່ມີ.

ພຶດຕິກຳຂອງກຸ່ມເຜົ່າພັນທີ່ມີຕໍ່ກັນ ແລະ ກັນ ຈະເປັນຕົວກຳນົດວ່າຄວາມສຳພັນ ລະຫວ່າງຊົນກຸ່ມໃຫຍ່ ແລະ ຊົນກຸ່ມນ້ອຍມີລັກສະນະການທີ່ພໍຈະເຂົ້າໃຈກັນໄດ້ ຫຼື ຂັດແຍ່ງ, ຖ້າຄວາມຂັດແຍ່ງຮຸນແຮງຫຼາຍ ການແຍກດິນແດນອາດຈະເປັນທາງອອກສຸດທ້າຍ, ສ່ວນທາງລືອກອື່ນ ເຊັ່ນ ຄວາມສຳພັນແບບປະສົມກົມກືນຈະໃຊ້ຕໍ່ເມື່ອພຶດຕໍ່ກຳຂອງຊົນກຸ່ມໃຫຍ່ທີ່ຕໍ່ຊົນກຸ່ມນ້ອຍມີລັກສະນະທີ່ບໍ່ແມ່ນພຶດຕິກຳຂອງການເລືອກປະຕິບັດທີ່ ເກີດຈາກຄວາມລຳອຽງ. ເນື່ອງຈາກຕົວຢ່າງທີ່ເກີດຂຶ້ນໃນອາດີດທີ່ຊົນກຸ່ມໃຫຍ່ມັກຂົ່ມເຫັງຊົນກຸ່ມນ້ອຍ, ຊົນກຸ່ມນ້ອຍມີ ໂອກາດທີ່ຈະຕີຄວາມພຶດຕິກຳຂອງຊົນກຸ່ມໃຫຍ່ບໍ່ໄປໃນບາງລົບໄດ້ງ່າຍ, ຊົນກຸ່ມໃຫຍ່ຈຳເປັນຕ້ອງແກ້ພາບພົດທີ່ບໍ່ດີໃນອາດີດໃຫ້ເປັນພາບພົດຂອງຄວາມເຂົ້າໃຈກັນ ເສຍກ່ອນ ບັນຫາຊົນກຸ່ມນ້ອຍ ແລະ ຊົນກຸ່ມໃຫຍ່ຈຶ່ງຈະຫຼາບລື່ນໄປໂດຍດີ.

**ສະຫຼຸບ**

ຄົນທີ່ຢູ່ໃນສັງຄົມທີ່ມີວັດທະນະທຳຕ່າງກັນເອີ້ນວ່າ: ມີເຜົ່າພັນຕ່າງກັນ ຊຶ່ງໝາຍຄວາມວ່າ ມີເຄົາລົບທຳນຽມ, ປະເພນີ, ຄວາມເຊື່ອ ແລະ ສາສະໜາຕ່າງກັນ. ຖ້າແຕ່ລະກຸ່ມເຜົ່າພັນຕ່າງຄົນຕ່າງຢູ່ບໍ່ມີຄວາມກ່ຽວຂ້ອງກັນ, ຄວາມຂັດແຍ້ງກໍບໍ່ເກີດ, ແຕ່ຖ້າກຸ່ມເຜົ່າພັນກຸ່ມໃດກຸ່ມໜຶ່ງມີຖານະເສດຖະກິດ, ສັງຄົມ ແລະ ການເມືອງເຫນືອກວ່າກຸ່ມອື່ນ, ເຮັດໃຫ້ຂາດຄວາມສະເໝີພາບຄວາມສຳພັນລະຫວ່າງກຸ່ມເຜົ່າພັນກໍອາດກາຍເປັນຄວາມຂັດແຍ້ງໄດ້, ບັນຫາເລື່ອງຄວາມສຳພັນລະຫວ່າງກຸ່ມໃຫຍ່ ແລະ ກຸ່ມນ້ອຍຄື ຕົວຢ່າງຂອງປະເດັນບັນຫາທີ່ກ່ຽວຂ້ອງກັບວັດທະນະທຳ ໂດຍກົງ ແລະ ຄວາມສຳພັນລະຫວ່າງກຸ່ມເຜົ່າພັນເປັນເລື່ອງທີ່ກຳລັງໄດ້ຮັບຄວາມສົນໃຈ ເພີ່ມຫຼາຍຂຶ້ນ ເພາະປະກົດວ່າ ຄວາມຂັດແຍ່ງລະຫວ່າງກຸ່ມເຜົ່າພັນມີຜົນເຮັດໃຫ້ເກີດສົງຄາມໄດ້.

# ບົດທີ 6
# ບັນດາຊົນເຜົ່າໃນລາວ

## 1. ໂຄງສ້າງຂອງຊົນເຜົ່າຢູ່ໃນລາວໃນສະໄໝການປະຕິວັດຊາດເຖິງຄ.ສ 1975 - 1986

ປະເທດລາວເປັນເປັນປະເທດໜຶ່ງທີ່ມີພົນລະເມືອງບໍ່ຫລາຍ ແຕ່ເປັນດິນແດນທີ່ຄຶງຕົວ ດ້ວຍກັນຫລາຍຊົນເຜົ່າ, ຊຶ່ງແຕ່ລະຊົນເຜົ່າລ້ວນແຕ່ມີປະຫວັດການເປັນມາ , ມີພາສາເວົ້າ, ມີຂະນົບທຳນຽມ ແລະ ມີຮີດຄອງປະເພນີທີ່ທີ່ແຕກຕ່າງກັນ, ການຂະຫຍາຍຕົວທາງດ້ານເສດຖະກິດສັງຄົມແມ່ນຫຼຸດໂຕນກັນ ແລະ ແຕ່ລະຊົນເຜົ່າກໍ່ລ້ວນແຕ່ມີຊື່ຮຽກໂດຍເຜົ່າຕົນເອງຕັ້ງຂຶ້ນ ແລະ ກໍມີຊື່ຮຽກອື່ນໆທີ່ບໍ່ແມ່ນເຜົ່າຕົນເອງຕັ້ງຂຶ້ນ ດ້ວຍເປົ້າໝາຍ ແລະຈຸດປະສົງທີ່ແຕກຕ່າງກັນ.

### 1.1. ໂຄງສ້າງຊົນເຜົ່າຢູ່ລາວກ່ອນປີ 1975.

ກ່ອນການປະຕິວັດ ບາງຊົນເຜົ່າມີຊື່ຮຽກຊຶ່ງຕິດພັນກັບສັບທີ່ມີລັກສະນະດູໝິ່ນ, ດູຖູກວ່າຂ້າແຊງ, ຂ້າມູ, ຂ້າປວກ,ຂ້າຕະໂອ້ຍ, ຂ້າລະແວ, ແມ້ວ ດັ່ງນີ້ເປັນຕົ້ນ. ແຕ່ເມື່ອມີການປະຕິວັດປົດປ່ອຍຊາດ , ພັກ-ລັດ ເຮົາໄດ້ເຄົາລົບຊື່ຮຽກຂອງບັນດາກຸ່ມຄົນໃນອົງຄະນະຍາດແຫ່ງຊາດລາວດ້ວຍການວາງນະໂຍບາຍສະເໝີພາບລະຫວ່າງຊົນເຜົ່າຕ່າງໆ ເພື່ອເຕົ້າໂຮມຄວາມສາມັກຄີທີ່ເປັນປຶກແຜ່ນ ແລະ ສະຕິຊາດອັນໜຶ່ງອັນດຽວ ແນ່ໃສ່ຮັບໃຊ້ການປະຕິວັດ ປົດປ່ອຍຊາດ. ບັນດາກຸ່ມຄົນ ໃນວົງຄະນະຍາດແຫ່ງຊາດ ເວລານັ້ນຖືກວັດ ແລະ ຮຽກຕາມ ເຂດທີ່ຕັ້ງພູມລຳເນົາ ແລະ ລ້ວນແຕ່ມີຊື່ຂຶ້ນຕົ້ນວ່າ “ ລາວ ” ເຊັ່ນ: ຊົນຊາດລາວລຸ່ມ, ຊົນຊາດລາວສູງ ແລະ ຊົນຊາດລາວເທິງ ໂດຍລວມ ມີ 68 ຊົນເຜົ່າ

- ຊົນຊາດລາວລຸ່ມ (ກຸ່ມປາກພາສາລາວ-ໄທ) ໝາຍເຖິງວົງຄະນະຍາດຄົນລາວທີ່ ຕັ້ງພູມລຳເນົາ ແລະ ທຳມາຫາກິນຢູ່ຕາມເຂດທົ່ງພຽງລຽບຕາມແຄມແມ່ນ້ຳໃຫຍ່, ໃນນີ້ມີ ເຜົ່າລາວ, ເຜົ່າພວນ, ເຜົ່າລື້, ເຜົ່າຜູ້ໄທ,(ໄທຂາວ, ໄທດຳ, ໄທແດງ, ໄທເມືອງ, ໄທຍັງ..).
- ຊົນຊາດລາວເທິງ ຫຼື ລາວກາງ ( ເປັນກຸ່ມຊົນເຜົ່າທີ່ປາກພາສາ ມອນ-ຂະແມ) ໝາຍເຖິງກຸ່ມວົງຄະນະຍາດຄົນລາວທີ່ຕັ້ງພູມລຳເນົາ ແລະ ທຳມາຫາກິນຢູ່ລະຫວ່າງກາງຂອງເຂດທົ່ງພຽງ ແລະ ເຂດພູສູງຊັນ (ບາງທ້ອງຖິ່ນຈຶ່ງຮຽກກຸ່ມຊົນເຜົ່ານີ້ວ່າ ລາວກາງ). ໃນນີ້ພາກເໜືອມີ ຊົນເຜົ່າກຳມຸ, ຊົນເຜົ່າຜ້ອງ, ຊົນເຜົ່າຊາມຕາວ, ຊົນເຜົ່າຊິງມູນ ... ພາກໃຕ້ລວມມີບັນດາຊົນເຜົ່າເຊັ່ນ ຊົນເຜົ່າມາກອງ, ຊົນເຜົ່າຕະໂອ້ຍ, ຊົນເຜົ່າລະເວນ ຊົນ ເຜົ່າລະແວ, ຊົນເຜົ່າກະຕູ, ຊົນເຜົ່າກະຕາງ, ຊົນເຜົ່າຍາເຫີນ…
- ຊົນຊາດລາວສູງ (ກຸ່ມປາກພາສາມົ້ງ - ຢ້າວ ຫຼື ຕິເບດ-ພະມ້າ) ໝາຍເຖິງກຸ່ມວົງຄະນະຍາດຄົນລາວ ທີ່ຕັ້ງພູມລຳເນົາ ແລະ ທຳມາຫາກິນຢູ່ເຂດພື້ນທີ່ສູງຊັນ ໃນ ນີ້ລວມມີຊົນເຜົ່າມົ້ງ, ຊົນເຜົ່າຢ້າວ ແລະ ຊົນເຜົ່າ ແລນແຕນ, ຊົນເຜົ່າກໍ, ຊົນເຜົ່າສີລາ(ສີດາ), ຊົນເຜົ່າໂລໂລ, ຊົນເຜົ່າຜູ້ນ້ອຍ, ຊົນເຜົ່າຫໍ້, ຊົນເຜົ່າມູເຊີ...

ຈາກຊື່ຮຽກເຂດທີ່ຕັ້ງພູມລຳເນົ່າຄື ຊົນຊາດລາວລຸ່ມ, ຊົນຊາດລາວເທິງ ແລະ ລາວສູງແລ້ວໃນສະພາບຄວາມເປັນຈິງທີ່ອີງຕາມການເອີ້ນຊື່ຂອງແຕ່ລະຊົນເຜົ່າຂອງລາວໃນສະໄໝການປະຕິວັດປົດປ່ອຍຊາດຂອງລາວນັ້ນ ບັນດາຊົນຊາດຊົນເຜົ່າໃນລາວມີ 68 ຊົນເຜົ່າ ຕາມເອກະສານສູນກາງແນວລາວຮັກຊາດໃນເມື່ອກ່ອນດັ່ງນີ້:

| ລຳດັບ | ຊື່ຊົນເຜົ່າ | ພົນລະເມືອງ | ໝາຍເຫດ |
|---|---|---|---|
| 1. | ລາວ | 2,576.457 | ບໍ່ຮູ້ວັນເດືອນປີ |
| 2 | ລາວພວນ | 5381, | |
| 3. | .ລື້ | | |
| 4. | ລາວໄທຂາວ | 27731 | |
| 5. | ລາວໄທດຳ | 33112 | |
| 6. | ລາວໄທແດງ | 33112 | |
| 7. | ລາວໄທຍັງ<br>ລາວໄທເມື່ອຍ | 33112 | |
| 8. | ລາວຢວນ | …….. | |
| 9. | ລາວນີ(ໄທຍີ) | 20695 | |
| 10. | ລາວເໜືອ(ໄທເໜືອ)<br>ຂະມຸ | 8692 | |
| 11. | ຂະເມ່ດ | …….. | |
| 12. | ປີດ | 16556 | |
| 13. | ຜ້ອງ | 139737 | |
| 14. | Caru(jru)ຢຸດ | 8402 | |
| 15. | ຜູ້ນ້ອຍ(ພູນ້ອຍ)<br>ແຊງ(ຂ້າແຊງ) | 1656 | |
| 16. | ມູເຊີຂາວ(ລາຫູ) | 4139 | |
| 17. | ຊາມຕາວ | ….. | |
| 18. | ກຸ່ຍ | 20960 | |

| | | | |
|---|---|---|---|
| 19. | ປວກ(ຊິງມູນ) | 13973 | |
| 20. | ດອຍ<br>ໄຟ(ໄຟຣຫຼືໄປຣ) | ……. | |
| 21. | ມັງກອງ(ບຣູ) | …….. | |
| 22. | ແຊກ | 41390 | |
| 23. | ກະຕາງ | ……. | |
| 24. | ປາໂກະ<br>ລະເວນ | ……. | |
| 25. | ລະແວ | ……. | |
| 26. | ຍາເຫີນ | 6209 | |
| 27. | ຕຣຸຍ(trui) | 11175 | |
| 28. | ສຸ | 8386 | |
| 29. | ສະປວນ<br>ຊອກ | 18212 | |
| 30. | ຕະລຽງ | 4139 | |
| 31. | ຕະໂອຍ | ……. | |
| 32. | ອາວັກ | 5215 | |
| 33. | ກະຕູ<br>ແຢະ(ກະຣຽງ) | 4139 | |
| 34. | ຂ້າພະແກ້ວ(ລາຫູພະແກ້ວ) | 1738 | |
| 35. | ສ່ວຍ | 1573 | |
| 36. | ເຈງ | 1035 | |
| 37. | Tio<br>ດັກກາງ | 4139 | |
| 38. | ລະວີ | 19114 | |
| 39. | ອາລັກ | ……… | |
| 40. | Ong(oy) | 27938 | |
| 41. | ກົ້ງຊາດ<br>ມຸເຊີດຳ(ລາຫູດຳ)<br>ສະລາງ(ຕອງເຫຼືອງ) | 5588 | |
| 42. | ກໍປູລີ(ບູລີ) | 62085 | |
| 43. | ກໍຈິຈາມ | ……… | |
| 44. | ກໍເຟ<br>ມົ້ງຂາວ | 2794 | |
| 45 | ມົ້ງລາຍ | ………. | |
| 46. | ມົ້ງດຳ | ………. | |
| 47. | ຢ້າວ(ອິນມຽນ) | ………. | |
| 48. | ແລນແຕນ(ລານແຕນ)<br>ຖິ່ນ | 1656 | |

| | | | |
|---|---|---|---|
| 49. | ກໍປານາ(ພານາ) | 5588 | |
| 50. | ກໍສີດາ | ……… | |
| 51. | ກໍມູຈີ | 8278 | |
| 52. | Kodoc(ກໍດອຍ) | 2070 | |
| 53. | ກໍພູຊາງ | ………. | |
| 54. | ກໍພູຢອນ | ………. | |
| 55. | ກໍພູຕິນ | ………. | |
| 56. | ຮ່າຢີ່ | 45529 | |
| 57. | | 46357 | |
| 58. | | 47559 | |
| 59. | | 83844 | |
| 60. | | 7026 | |
| 61. | | 8386 | |
| 62. | | 704 | |
| 63. | | ……. | |
| 64. | | ………. | |
| 65. | | 6285 | |
| 66. | | …... | |
| 67. | | 1242 | |
| 68. | | ………….. | |
| | | 12417 | |

**2. ໂຄງສ້າງຊົນເຜົ່າຢູ່ລາວແຕ່ປີ 1975 ເຖິງປີ 1986**

ຫຼັງປີ 1975 ອີງຕາມນະໂຍບາຍຂອງພັກປະຊາຊົນປະຕິວັດລາວໃນເວລານັ້ນຕໍ່ກັບ ບັນດາຊົນເຜົ່າໃນລາວ ເພື່ອໜ້າທີ່ຍຸດທະສາດສອງຢ່າງຄື ປົກປັກຮັກສາ ແລະ ສ້າງສາປະເທດຊາດ, ດັ່ງນັ້ນສູນກາງພັກຈຶ່ງໄດ້ຈັດຕັ້ງສຳນັກງານຊົນເຜົ່າໜຶ່ງຂຶ້ນໃຫ້ຊື່ວ່າ " ຄະນະກຳມະການສູນກາງບັນດາເຜົ່າ " ມີພາລະໜ້າທີ່ຄື ຄົ້ນຄວ້າຫາຈຸດພິເສດກ່ຽວກັບດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳຂອງຊົນເຜົ່າຕ່າງໆໃນລາວເພື່ອວາງນະໂຍບາຍໃນການພັດທະນາແກ່ຊົນເຜົ່າຕ່າງໆ, ໃຫ້ແທດເໝາະກັບສະພາບຕົວຈິງຂອງແຕ່ລະຊົນເຜົ່າ. ຄະນະກຳມະການສູນກາງບັນດາເຜົ່າໄດ້ອີງໃສ່ດ້ານພາສາ ແລະ ວັດທະນະທຳ ແລ້ວຈັດຊົນເຜົ່າ ຕ່າງໆທີ່ມີພາສາ ແລະ ວັດທະນະທຳໃກ້ຄຽງກັນມາເປັນຊົນເຜົ່າໜຶ່ງຈາກຈຳນວນ 68 ຊົນເຜົ່າທີ່ມີຢູ່ໃນເມື່ອກ່ອນມາເປັນ 40 ຊົນເຜົ່າດັ່ງລຸ່ມນີ້:

1. ຊົນເຜົ່າລາວ (ລວມມີຊົນເຜົ່າລາວ ແລະ ລາວພວນ)
2. ຊົນເຜົ່າລື້

3. ຊົນເຜົ່າໄຕ (ລວມມີຊົນເຜົ່າຜູ້ໄທ, ໄທຂາວ,ໄທດໍາ, ໄທແດງ, ໄທເມືອຍ, ລາວຍວນ, ໄທຍີ, ໄທເຫນືອ)

4. ຊົນນເຜົ່າຢັ້ງ

5. ຊົນເຜົ່າກໍາມຸ

6. ຊົນເຜົ່າລະເມດ

7. ຊົນເຜົ່າບິດ

8. ຊົນເຜົ່າຜ້ອງ

9, ຊົນເຜົ່າລະເວນ (ລວມມີຊົນເຜົ່າລະເວນ ແລະ ຊົນເຜົ່າຢຸ)

10. ຊົນເຜົ່າຜູ້ນ້ອຍ(ລວມມີຊົນເຜົ່າ ພູນ້ອຍ, ກໍພູຍອດ, ແຊງ ແລະໄຟ)

11. ຊົນເຜົ່າມູເຊີ ( ລວມມີຊົນເຜົ່າມູເຊີຂາວ ແລະ ມຸເຊີດໍາ)

12. ຊົນເຜົ່າສາມຕາວ(ລວມມີຊົນເຜົ່າສາມຕາວ, ດອຍ ແລະ ກໍດອຍ)

13. ຊົນເຜົ່າກຸ່ຍ

14.ຊົນເຜົ່າຊີງມູນ(ລວມມີຊົນເຜົ່າປວກ ແລະ ລາວໃໝ່)

15.ຊົນເຜົ່າມາກອງ(ລວມມີຊົນເຜົ່າມັງກອງ ແລະ ຕຣູຍ)

16.ຊຸນເຜົ່າແຊກ

17.ຊົນເຜົ່າກະຕາງ

18.ຊົນເຜົ່າປາໂກະ

19.ຊົນເຜົ່າລະແວ

20.ຊົນເຜົ່າຍາເຫີນ

21.ຊົນເຜົ່າໂອຍ

22.ຊົນເຜົ່າຕະລຽງ

23.ຊົນເຜົ່າຕະໂອຍ (ລວມມີເຜົ່າຕະໂອຍ ແລະ ong (oy)

24.ຊົນເຜົ່າກະຕູ (ຊົນເຜົ່າກະຕູ ແລະ ດັກກາງ

25.ຊົນເຜົ່າແງະ

26.ຊົນເຜົ່າສ່ວຍ (ລວມມີຊົນເຜົ່າສ່ວຍ, ອາວັກ ແລະ ຂ້າພະແກ້ວ)

27.ຊົນເຜົ່າເຈັງ

28.ຊົນເຜົ່າລະວີ

29.ຊົນເຜົ່າອາລັກ

30.ຊົນເຜົ່າກໍ (ລວມມີເຜົ່າກົ້ງຊາດ, ກໍບູລີ, ກໍຈີຈາມ, ກໍເຟ, ກໍປານາ, ກໍມູຈີ, ກໍພຊາງ, ກໍຍອດ ແລະ ກໍພູເຕີນ)

31.ຊົນເຜົ່າສະລາງ (ລວມມີຊົນເຜົ່າສະລາງ ຫຼື ຕອງເຫຼືອງ (ສະດາງ)

32.ຊົນເຜົ່ມົ້ງ (ລວມມີຊົນເຜົ່າມົ້ງຂາວ, ມົ້ງດໍາ, ມົ້ງລາຍ)

33.ຊົນເຜົ່າຍາວ (ລວມມີຊົນເຜົ່າຍາວ ແລະ ຊົນເຜົ່າແລນແຕນ)

34.ຊົນເຜົ່າຖິ່ນ

35.ຊົນເຜົ່າສີລາ (ຄືຊົນເຜົ່າກໍສີດາ)

36.ຊົນເຜົ່າຮ່າຢີ່

37.ຊົນເຜົ່າTio

38.ຊົນເຜົ່າສຸ

39.ຊົນເຜົ່າສະປວນ
40.ຊົນເຜົ່າຊອກ

ການຈັດແບ່ງຊົນເຜົ່າຂອງຄະນະກຳມະການສູນກາງບັນດາເຜົ່ານີ້, ເປັນການຈັດແບ່ງຊົນເຜົ່າຄັ້ງທຳອິດຂອງບັນດານັກຊົນເຜົ່າລຸ້ນທຳອິດຂອງລາວ, ດັ່ງນັ້ນຈາກ 68 ຊົນເຜົ່າມາເປັນ 40 ຊົນເຜົ່ານັ້ນອາດຍັງຈະບໍ່ຊັດເຈນແຕ່ເຖິງຢ່າງໃດກໍ່ຕາມນີ້ເປັນບາດກ້າວທຳອິດຂອງນັກຄົ້ນຄວ້າບັນດາເຜົ່າໃນລາວ ແລະ ມີຄວາມສຳຄັນຢ່າງຍິ່ງສຳລັບນັກຄົ້ນຄວ້າຊົນເຜົ່າໃນລຸ້ນຕໍ່ໄປ. ເຖິງແມ່ນວ່າໃນປັດຈຸບັນຄະນະກຳມະການສູນກາງບັນດາເຜົ່າໄດ້ຍຸບໄປແລ້ວ ( 1986) ກໍ່ຕາມ ແຕ່ຜົນງານທາງວິຊາການກ່ຽວກັບຊົນເຜົ່າ ໃນລາວຍັງຢູ່ກັບຄົນລາວທຸກຄົນຫລອດໄປ.

### 3. ໂຄງສ້າງຊົນເຜົ່າໃນລາວປະຈຸບັນ

ໃນໄລຍະທີ່ຜ່ານມາ ນັກຊົນເຜົ່າວິທະຍາ, ມະນຸດວິທະຍາຕ່າງກໍມີທັດສະນະ ແລະ ຫຼັກການວັດຊົນເຜົ່າໃນລາວແຕກຕ່າງກັນດັ່ງເຊັ່ນ:

#### 3.1 ທັດສະນະການຈັດແບ່ງຊົນເຜົ່າໃນລາວເປັນ 4 ກຸ່ມຄົນຄື:

- ກຸ່ມຄົນຊົນເຜົ່າລະວາ
- ກຸ່ມຄົນຊົນເຜົ່າມອນ - ຂອມ
- ກຸ່ມຄົນຊົນເຜົ່າໄຕ - ລາວ ຫຼື ລາວ - ໄຕ
- ກຸ່ມຄົນຊົນເຜົ່າມົ້ງ - ຢ້າວ

**• ກຸ່ມ ຄົນຊົນເຜົ່າລະວາ**

ຕາມການຄົ້ນຄວ້າ ຂອງນັກຄົ້ນຄວ້າມະນຸດວິທະຍາ ແລະ ຊົນເຜົ່າວິທະຍາ ໄດ້ໃຫ້ຮູ້ວ່າກຸ່ມຄົນຊົນເຜົ່າລະວາແມ່ນກຸ່ມໜຶ່ງທີ່ມາຕັ້ງຖິ່ນຖານຫຼັກແຫຼ່ງທຳອິດຢູ່ດິນລາວ, ກຸ່ມຄົນຊົນເຜົ່າລະວານີ້ເປັນພຽງກຸ່ມຊົນເຜົ່າສ່ວນນ້ອຍໜຶ່ງຢູ່ໃນເຊື້ອຊາດອົດສຕາໂລອິດ, ແຕ່ຢ່າງໃດ ກໍ່ຕາມກຸ່ມຄົນຊົນເຜົ່ານີ້ ເຄົ້າແທ້ມັນຢູ່ໃສ່ນັ້ນ ນັກຄົ້ນຄວ້າທັງຫຼາຍສັນນິຖານວ່າເຄົ້າແທ້ອາດຢູ່ບໍລິເວນຕາເວັນອອກສຽງໃຕ້ຂອງປະເທດຈີນ, ກຸ່ມຄົນຊົນເຜົ່ານີ້ຍັງສືບເຊື້ອສາຍມາຮອດປະຈຸບັນເຊັ່ນ ພວກມາເລ, ຈາມ ແລະ ຊົນເຜົ່າສ່ວນນ້ອຍທີ່ອາໃສຢູ່ເຂດແຂວງຈຳປາສັກ, ອັດຕະປື, ສາລະວັນ ແລະ ເຂດພູດອຍທາງພາກເຫນືອຂອງປະເທດລາວ ແລະ ປະເທດໄທ, ກຸ່ມຄົນຊົນເຜົ່າເຫຼົ່ານີ້ດຳລົງຊີວິດດ້ວຍການເຮັດໄຮ່ປູກເຂົ້າ, ປູກມັນ...

**• ກຸ່ມຄົນຊົນເຜົ່າມອນ - ຂອມ**

ອີງໃສ່ຫລັກຖານທາງພາສາດ ແລະ ວັດທະນະທຳແລ້ວກຸ່ມຄົນຊົນເຜົ່າມອນ-ຂອມ ເປັນກຸ່ມຄົນທີ່ສອງທີ່ມາຕັ້ງຖິ່ນຖານຢູ່ໃນດິນລາວ, ກຸ່ມຄົນຊົນເຜົ່າມອນ-ຂອມໄດ້ເຂົ້າມາຢູ່ໃນດິນລາວລະຫວ່າງສັດຕະວັດທີ່ 5 ແລະ 8 ຢູ່ບໍລິເວນແມ່ນຂອງຕອນກາງ, ເຂດທົ່ງຮາບ ແຂວງວຽງຈັນ, ກຸ່ມຄົນຊົນເຜົ່າມອນ-ຂອມນີ້ໄດ້ເຄື່ອນຍ້າຍມາຈາກໃສນັ້ນ ນັກຄົ້ນຄວ້າທັງຫຼາຍຍັງສັນນິຖານວ່າ ຕົ້ນກຳເນີດຂອງເຂົາເຈົ້າຢູ່ຕອນໃຕ້ຂອງປະເທດຈີນ ແລະ ພາກຕາເວັນເວັນອອກສ່ຽງໃຕ້ຂອງ ປະເທດອິນເດຍ, ດັ່ງນັ້ນກຸ່ມຄົນນີ້ໄດ້ນຳເອົາວັດທະນະທຳອິນເດຍມາສູ່ດິນແດນແຫ່ງນີ້.

**• ກຸ່ມຊົນເຜົ່າລາວ - ໄຕ**

ກຸ່ມຄົນຊົນເຜົ່າລາວ - ໄທແມ່ນກຸ່ມຄົນໜຶ່ງ ໃນພາກພື້ນອາຊີອາຄະເນ ໂດຍສະເພາະຢູ່ລາວ ແລະ ໄທ, ກຸ່ມຄົນຊົນເຜົ່ານີ້ມີບົດບາດນຳໜ້າທາງດ້ານເສດຖະກິດ, ການເມືອງ, ວັດທະນtທຳ ແລະ ສັງຄົມ. ແຕ່ກ່ອນເຂົາເຈົ້າມີຖິ່ນຖານເດີມຢູ່ບໍລິເວນລ້ອງແມ່ນຍັງຊີກຽງ. ລ້ອງແມ່ນ້ຳຂອງຕອນເຫນືອ ແລະ ພາກໃຕ້ຂອງຈີນ ປະມານ 3000 ປີ ຫາ 40oo ປີກວ່າມາ ແລ້ວ ເມື່ອປະມານກ່ອນ ຫຼື ຫຼັງຄຣິສຕະສະກະລາດເລັກໜ້ອຍ, ກຸ່ມຄົນໃນຕະກຸນລາວ -ໄທໄດ້ເຄື່ອນຍ້າຍລົງມາທາງໃຕ້ຕາມລອງແມ່ນ້ຳຂອງ, ສາລະວິນ, ອີລາວະດີ ແລະ ສາຂຂອງແມ່ນ້ຳຕ່າງໆ ເຂົ້າມປະສົມ

ກັບຄົນຊົນເຜົ່າອື່ນໆ ທີ່ມີພື້ນຖານຫຼັກແຫຼ່ງຢູ່ແລ້ວຂອງແຫຼມອິນດູຈີນ. ເສດຖະກິດຕົ້ນຕໍຂອງກຸ່ມຄົນນີ້ແມ່ນປູກຝັງ ແລະ ລ້ຽງສັດ ໂດຍສະເພາະແມ່ນປູກເຂົ້າ ແລະ ພືດຕ່າງໆ.

**• ຊົນເຜົ່າມົ້ງ - ຢ້າວ**

ກຸ່ມຄົນນີ້ເປັນກຸ່ມຄົນທີ່ດຳລົງຊີວິດຢູ່ຕາມເຈື້ອຍພູຕ່າງໆ ທຳມາຫາກິນດ້ວຍການເຮັດໄຮ່,ລ້ຽງສັດ ແລະ ປູກຝັງພືດແປ້ງເປັນຕົ້ນ. ສະເພາະຊົນເຜົ່າມົ້ງໃນເມື່ອກ່ອນມີຖິ່ນຖານເດີມຢູ່ພາກໃຕ້ຂອງປະເທດມົງໂກລີ ແລະ ພາກເໜືອຂອງປະເທດຈີນ ແຕ່ຖືກສັກດີນາຈີນບຽດຍຶດ ແລະ ປາບປາມ, ຊົນເຜົ່ານີ້ຈຳຕ້ອງອົບພະຍົບລົງມາເລື້ອຍໆ ແລະ ເຂົ້າມສູ່ດິນລາວລະຫວ່າງກາງສະຕະວັດທີ 19 (ປະມານປີ 16850) ແລະ ດຳລົງຊີວິດຮ່ວມຊົນເຜົ່າອື່ນໆຈົນເຖິງປັດຈຸບັນ.

ສະເພາະຊົນເຜົ່າຢ້າວເປັນກຸ່ມຄົນໜຶ່ງທີ່ເກົ່າແກ່ຂອງລາວ, ແຕ່ປະຈຸບັນນີ້ປະກົດວ່າມີຈຳນວນໜ້ອຍ, ມີສະເພາະບາງແຂວງພາກເໜືອຂອງລາວເຊັ່ນ: ບໍ່ແກ້ວ, ນ້ຳທາ,ຊຳເໜືອ,ອຸດົມໄຊ ແລະ ໄຊຍະບູລີ.

**3.2 ທັດສະນະທີ່ແບ່ງຊົນເຜົ່າໃນລາວເປັນ 5 ກຸ່ມໂດຍອີງໃສ່ພາສາເປັນຫຼັກ.**

- ກຸ່ມຄົນຊົນເຜົ່າທີ່ປາກພາສາລາວ
- ກຸ່ມຄົນຊົນເຜົ່າມອນ - ແມ
- ກຸ່ມຄົນຊົນເຜົ່າມົ້ງ - ຢ້າວ
- ກຸ່ມຄົນຊົນເຜົ່າຕິເບດ - ພະມ້າ
- ກຸ່ມຄົນຊົນເຜົ່າຫໍ້ - ຫ່ານ

• ກຸ່ມຄົນຊົນເຜົ່າທີ່ປາກພາສາລາວ: ລວມມີ 6 ຊົນເຜົ່າ ເຜົ່າແຊ, ເຜົ່າລາວ, ເຜົ່າຍວນ, ເຜົ່າລື້ ແລະ ເຜົ່າຍັ້ງ. ບັນດາເຜົ່າເຫຼົ່າກວມອັດຕາສ່ວນ 68% ຂອງຈຳນວນທັງໝົດ.

• ກຸ່ມຄົນຊົນເຜົ່າມອນ - ຂະແມ: ລວມມີ 24 ຊົນເຜົ່າຄື: ເຜົ່າຕຣີ, ເຜົ່າມາກອງ, ເຜົ່າຕະໂອຍ, ເຜົ່າສ່ວຍ, ເຜົ່າກະຕ່າງ, ເຜົ່າກະຣ່ຽງ ( ແງະ), ເຜົ່າກະຕູ, ເຜົ່າຕະລຽງ, ເຜົ່າຂະແມ,ເຜົ່າເມືອງ, ເຜົ່າຕຸມ, ເຜົ່າງວນ,ເຜົ່າກຣິດ, ເຜົ່າສາມຕາວ, ເຜົ່າລະເມດ,ເຜົ່າຊິງມູນ,ເຜົ່າຟ້ອງ,ເຜົ່າລື້ວ, ເຜົ່າລະແວ, ເຜົ່າປາໂກະ, ເຜົ່າໂອຍ, ເຜົ່າເຈັງ, ເຜົ່າຍາເຫີນ ແລະ ເຜົ່າກຳມຸ. ບັນດາເຜົ່າເຫຼົ່ານີ້ກວມອັດຕາສ່ວນປະມານ 23% ຂອງພົນລະເມືອງທັງໝົດ.

• ກຸ່ມຄົນຊົນເຜົ່າມົ້ງ - ຢ້າວ: ລວມມີສອງຊົນເຜົ່າຄື: ເຜົ່າມົ້ງງ ແລະ ເຜົ່າຢ້າວ ທັງສອງເຜົ່າ ນີ້ກວມອັດຕາສ່ວນ 7% ຂອງພົນລະເມືອງທັງຫມົດ.

• ກຸ່ມຄົນຊົນເຜົ່າຕິເບດ - ພະມ້າ: ລວມມີ 7 ຊົນເຜົ່າຄື ເຜົ່າຜູ້ນ້ອຍ, ເຜົ່າອາຂາ, ເຜົ່າລາຫູ, ເຜົ່າຮ່າຍີ່, ເຜົ່າໂລໂລ, ເຜົ່າມູເຊີ ແລະ ເຜົ່າສີດາ, ບັນດາເຜົ່າເຫຼົ່ານີ້ກວມອັດຕາສ່ວນ 3% ຂອງພົນລະເມືອງທັງຫມົດ.

• ກຸ່ມຄົນຊົນເຜົ່າຫໍ້ - ຫ່ານ: ມີພຽງເຜົ່າດຽວຄື ເຜົ່າຫໍ້, (ເຜົ່ານີ້ກວມອັດຕາສ່ວນ) 0,17% ຂອງພົນລະເມືອງທັງຫມົດ.(ສີຊະນະສີສານ,1990,5)

**4. ບາງຫຼັກການໃນການຈັດຊົນເຜົ່າ.**

ບັນດານັກຊົນເຜົ່າວິທະຍາ, ມະນຸດວິທະຍາໃນໂລກຕ່າງກໍ່ມີຫຼັກການໃນການຈັດຊົນເຜົ່າຂອງຕົວເອງ. ຢູ່ລາວເຮົາມັກຈັດກຸ່ມຊົນເຜົ່າຈາກກຸ່ມພາສາເປັນຕົ້ນຕໍ ຊຶ່ງໃນປະຈຸບັນ ນັກວິຊາການຊົນເຜົ່າວິທະຍາ ໄດ້ຈັດຊົນເຜົ່າຕ່າງໆຢູ່ລາວເຮົາເປັນ 6 ກຸ່ມພາສາຕ່າງກັນດັ່ງເຊັ່ນ:

1) ກຸ່ມຊົນເຜົ່າໃນຕະກຸນພາສາລາວ - ໄທໃນນີ້ມີຊົນເຜົ່າລາວ ແລະ ຊົນເຜົ່າໄຕ.

2) ກຸ່ມຊົນເຜົ່າໃນຕະກຸນພາສາມອນ - ຂະແມ ໃນນີ້ມີຊົນເຜົ່າຕະໂອ້ຍ, ຊົນເຜົ່າກຳມຸ, ຊົນເຜົ່າລະແວ, ຊົນເຜົ່າລະເວນ.

3) ກຸ່ມຊົນເຜົ່າໃນຕະກຸນພາສາມົ້ງ - ຢ້າວ ໃນນີ້ມີຊົນເຜົ່າມົ້ງ, ຊົນເຜົ່າຢ້າວ ແລະຊົນເຜົ່າແລນແຕນ.

4) ຊົນເຜົ່າໃນຕະກຸນພາສາຕິເບດ - ພະມ້າ ໃນນີ້ມີຊົນເຜົ່າມູເຊີ, ຊົນເຜົ່າຜູ້ນ້ອຍ ແລະ ຊົນເຜົ່າໂລໂລ.

5) ກຸ່ມຊົນເຜົ່າໃນຕະກຸນພາສາຫວຽດ - ເມື່ອງ ໃນນີ້ມີຊົນເຜົ່າສະລາງ

6) ກຸ່ມຊົນເຜົ່າ ໃນຕະກຸນພາສາຫ່ານ ໃນນີ້ມີຊົນເຜົ່າຫໍ້.

ຈາກ 6 ກຸ່ມພາສາດັ່ງກ່າວເທິງນີ້ເຂົາເຈົ້າຈຶ່ງອີງໃສ່ 4 ດ້ານເພື່ອເປັນຫຼັກການໃນການແບ່ງຊົນເຜົ່າດັ່ງນີ້:

- ພື້ນຖານດ້ານພາສາປາກເວົ້າ
- ພື້ນຖານດ້ານເສດຖະກິດ
- ພື້ນຖານດ້ານວັດທະນະທຳ
- ພື້ນຖານຖິ່ນທີ່ຢູ່.

ດັ່ງນັ້ນ, ອີງຕາມຫລັກການໃນການຈັດຊົນເຜົ່າດັ່ງກ່າວບັນດານັກວິຊາການຊົນເຜົ່າ ວິທະຍາຂອງສູນກາງແນວລາວສ້າງຊາດ ຈຶ່ງຈັດຊົນເຜົ່າຕ່າງໆໃນລາວເປັນ 47 ຊົນເຜົ່າດັ່ງລຸ່ມນີ້:

1. ລາວ Lao
2. ໄຕ Phuthai
3. ກຳມູ Kamu(Khmu)
4. ມົ້ງ Hmong
5. ລື້ Lue
6. ກະຕ່າງ KaTang
7. ມະກອງ Makong
8. ກໍ Kaw(Akha)
9. ສ່ວຍ Souei
10. ຍວນ Nhuon
11. ລະເວນ Lavan
12. ຕະໂອ້ຍ Ta-oi
13. ຕະລຽງ Taliang
14. ພູນ້ອຍ Phu Noi
15. ຈລີ Chli(Jri)
16. ຜ້ອງ Phong
17. ຢ້າວ Yao(Mien)
18. ລະແວ Lavae
19. ກະຕູ Katu
20. ລະເມດ Lamet

21. ຖິ່ນ Thin
22. ອາລັກ Alak
23. ປາໂກະ Pakoh
24. ໂອຍ Oi
25. ມູເຊີ Museu(Musso)
26. ແຈະ Ngae
27. ກຸ່ຍ Kui(Lahu)
28. ຫໍ້ Haw(Yunnaea)
29. ເຈັງ Cheng
30. ຍະເຫີນ Nhaheun
31. ຢັ້ງ Yang
32. ແຢະ Yae
33. ແຊກ Saek
34. ສາມຕ່າວ Samtao
35. ຊີງມູນ Singmun
36. ຕຸ້ມ Tum
37. ມອນ Mon
38. ບິດ Bit
39. ສີລາ Sila
40. ຫງວນ Nguon
41. ໂລໂລ Lolo
42. ຮ່າຍີ່ Ha-nhi
43. ລະວີ Lavi
44. ສະດາງ Sadang
45. ຂະແມ Kame(Khmer)
46. ກຣີ Kri
47. Yumbri

**ວັດທະນະທຳ ແລະ ວິຖີຊີວິດ ບັນດາເຜົ່າ:** ເປັນອີກທາງເລືອກໜຶ່ງ ຂອງຜູ້ສະຫງວນມັກ ໃນການສຶກສາ, ຄົ້ນຄວ້າ ຊົນເຜົ່າວິທະຍາ, ຄວາມເຊື່ອຖື, ພາສາ, ຮີດຄອງປະເພນີ, ພິທີກຳອາຫານທອ້ງຖິ່ນ ເຊັ່ນ: ເຜົ່າໂອຍ, ເຜົ່າເບຣົາ, ເຜົ່າຕຽງ...ທີ່ມີຄວາມ ໂດດເດັ່ນ ເປັນເອກະລັກ.

ໃນ ສປປລາວມີ 50 ຊົນເຜົ່າທີ່ໄດ້ຈັດເຂົ້າຢູ່ໃນ 4 ໝວດພາສາ

The Lao P.D.R is lived by 50 ethnic groups, being classified into 4 different language groups

I. ໝວດພາສາ ລາວ - ໄຕ ມີ 8 ຊົນເຜົ່າ

The Lao - Tai Language Family (8 Ethnic groups)

1. ຊົນເຜົ່າແຊກ (Xaek/Xek)
2. ຊົນເຜົ່າຍວນ (Nhouan)
3. ຊົນເຜົ່າໄຕ (Tai)
4. ຊົນເຜົ່າໄທເໜືອ (Thaneua)
5. ຊົນເຜົ່າຜູ້ໄທ (Phouthay)
6. ຊົນເຜົ່າຢັ້ງ (Yang)
7. ຊົນເຜົ່າລາວ (Lao)
8. ຊົນເຜົ່າລື້ (Lue)

II. ໝວດພາສາ ມອນ - ຂະແມ ມີ 32 ຊົນເຜົ່າ

The Mon - khmer Language Family (32 Ethnic Groups)

1. ຊົນເຜົ່າກຶມມຸ (Khmou)
2. ຊົນເຜົ່າກະຕາງ (Katang)
3. ຊົນເຜົ່າກະຕູ (Katu)
4. ຊົນເຜົ່າກຣຽງ (Kriang)
5. ຊົນເຜົ່າກຣີ (Kree/Kri)
6. ຊົນເຜົ່າຂະແມ (Khmer)
7. ຊົນເຜົ່າງວນ (Ngouan)
8. ຊົນເຜົ່າເຈັງ (Cheng)
9. ຊົນເຜົ່າສາມຕ່າວ (Samtao)
10. ຊົນເຜົ່າສະດາງ (Sadang)
11. ຊົນເຜົ່າຊ່ວຍ (Xuay)
12. ຊົນເຜົ່າຊິງມູນ (Xingmoun)
13. ຊົນເຜົ່າຍະເຫີນ (Nhaheun)
14. ຊົນເຜົ່າຕະໂອ້ຍ (Ta - Oy)
15. ຊົນເຜົ່າຕຣຽງ (Triang)
16. ຊົນເຜົ່າຕຣີ (Tri)
17. ຊົນເຜົ່າຕູມ (Toum)

18. ຊົນເຜົ່າແທ່ນ (Thaen)
19. ຊົນເຜົ່າບິດ (Bid/Bit)
20. ຊົນເຜົ່າເບຣົາ (Brao)
21. ຊົນເຜົ່າປະໂກະ (Pakoh/Pacoh)
22. ຊົນເຜົ່າໄປຣ (Pray)
23. ຊົນເຜົ່າຜ້ອງ (Phong)
24. ຊົນເຜົ່າມະກອງ (Makong)
25. ຊົນເຜົ່າມ້ອຍ (Moy)
26. ຊົນເຜົ່າຢຣຸ (Yrou)
27. ຊົນເຜົ່າແຢະ (Yae/Ye)
28. ຊົນເຜົ່າລະເມດ (Lamed/Lamet)
29. ຊົນເຜົ່າລະວີ (Lavi/Lavy)
30. ຊົນເຜົ່າໂອຍ (Oy)
31. ຊົນເຜົ່າເອີດູ (Oedou)
32. ຊົນເຜົ່າຮ່າຣັກ (Harak)

III. ໝວດພາສາ ຈີນ - ຕິເບດ ມີ 7 ຊົນເຜົ່າ

The Chine - Tibet Language Family (7 Ethnic Groups)

1. ຊົນເຜົ່າສີງສີລີ (Singsily)
2. ຊົນເຜົ່າສີລາ (Sila)
3. ຊົນເຜົ່າລາຫູ (Lahu)
4. ຊົນເຜົ່າໂລໂລ (LoLo)
5. ຊົນເຜົ່າຫໍ້ (Hor)
6. ຊົນເຜົ່າອາຄາ (Akha)
7. ຊົນເຜົ່າຮ່າຍີ່ (Hanyi)

IV. ໝວດພາສາ ມົ້ງ - ອີວມຽນ ມີ 2 ຊົນເຜົ່າ

The Hmong - Iu Mien Language Family (2 Ethnic Groups)

1. ຊົນເຜົ່າມົ້ງ (Hmong)
2. ຊົນເຜົ່າອີວມຽນ (Iewmien)

## 5. ການແຈກຢາຍຊົນເຜົ່າໃນລາວ.

**1 ປັດໃຈທີ່ສົ່ງຜົນສະທ້ອນເຖິງການແຈກຢາຍຂອງຊົນເຜົ່າໃນລາວ.**

- **ການແຈກຢາຍຊົນເຜົ່າຕາມຕະກູນພາສາ.**

ລາວເປັນປະເທດທີ່ມີຫຼາຍຕະກຸນພາສາ ແຕກຕ່າງກັນທີ່ໄດ້ສະເໜີແລ້ວນັ້ນ ດັ່ງນັ້ນພວກເຮົາຈະເຫັນວ່າ ການແຈກຢາຍຊົນເຜົ່າ ໃນລາວສ່ວນຫລາຍຈະເປັນການແຈກຢາຍຕາມຕະກຸນພາສາ ເຊັ່ນ ຊົນເຜົ່າທີ່ຢູ່ໃນຕະກຸນພາສາມົ້ງ - ຢ້າວ ແລະ ຕິເບດ - ພະມ້າຈະກະຈາຍຢູ່ ເຂດພາກເໜືອ ເປັນສ່ວນໃຫຍ່ ສ່ວນຊົນເຜົ່າທີ່ຢູ່ໃນຕະກຸນພາສາມອນ - ຂະແມ ຈະກະຈາຍຢູ່ເຂດພາກໃຕ້ປັນສ່ວນຫລາຍ ແລະ ຕະກຸນລາວ - ໄຕ ຈະກະແຈກກະຈາຍຕາມເຂດທົ່ງພຽງຕ່າງໆຂອງປະເທດເຊັ່ນ ທົ່ງພຽງວຽງຈັນ, ສະຫວັນນະເຂດ, ຈຳປາສັກ, ແລະ ຕາມທົ່ງພຽງໜ້ອຍຢູ່ລຽບຕາມແຄມແມ່ນ້ຳຂອງ ແລະ ສາຂາຕ່າງໆຂອງມັນ.

• **ການແຈກຢາຍຊົນເຜົ່າຕາມລະບົບເສດຖະກິດ**

ຢູ່ປະເທດລາວເຮົາມີຫຼາຍຊົນເຜົ່າດ້ວຍກັນ, ແຕ່ລະຊົນເຜົ່າມີລະບົບເສດຖະກິດຂອງຊົນເຜົ່າເອງມາແຕ່ດຶກດຳບັນ ແລະສືບທອດກັນມາຊົ່ວລູກຊົ່ວຫຼານເປັນຕົ້ນ ຊົນເຜົ່າລາວ ແລະ ຊົນເຜົ່າຜູ້ໄທ ແຕ່ໃດມາພວກເຂົາຊຸ້ນເຄີຍກັບການເຮັດນາເປັນຕົ້ນຕໍ ການເຮັດໄຮ່ ແລະ ສວນເປັນອາຊີບຮອງ ດັ່ງນັ້ນພວກເຂົາຈະດຳລົງຊີວິດຢູ່ເຂດທົ່ງພຽງ. ສ່ວນຊົນເຜົ່າມົ້ງ,ຢ້າວ, ໂລໂລ.. ແຕ່ ໃດມາພວກເຂົາຊຸ້ນເຄີຍກັບການເຮັດໄຮ່ເຫດນັ້ນຖິ່ນທີ່ຢູ່ຂອງພວກເຂົາຄືເຂດພູດອຍ.

• **ການແຈກຢາຍຊົນເຜົ່າຕາມພູມອາກາດ.**

ດິນລາວນອຢູ່ໃນເຂດອາກາດຮ້ອນຊຸ່ມມີລົມມໍລະສຸມ ອຸນຫະພູມສະເລ່ຍຕໍ່າສຸດໃນຮອບໜຶ່ງງປີ 17°C - 33°C, ແຕ່ໃນຕົວຈິງແລ້ວພູມອາກາດຢູ່ລາວມີຄວາມແຕກຕ່າງກັນລະຫວ່າງເຂດເຊັ່ນ ເຂດທົ່ງພຽງ ແລະ ເຂດພູສູງຕ່າງກັນລະຫວ່າງພາກເໜືອ, ພາກກາງ ແລະ  ພາກໃຕ້, ແຕ່ລະຊົນເຜົ່າມີຄວາມນິຍົມກ່ຽວກັບອຸນຫະພູມຂອງອາກາດ ແຕກຕ່າງ ເຊັ່ນ ຊົນເຜົ່າມົ້ງ ມັກຈະຢູ່ຊິ່ງເຂດທີ່ມີອາກາດເຢັນເຫດນັ້ນພວກເຮົາຈະເຫັນຊົນເຜົ່າມົ້ງ ກະຈາຍຢູ່ຕາມບັນດາແຂວງເຂດພາກເໜືອ ແລະ ພາກກາງຂອງປະເທດເປັນຕົ້ນ.

**2 ລັກສະນະຂອງການແຈກຢາຍ.**

ຈຸດພິເສດພື້ນຖານດ້ານການແຈກຢາຍຊົນເຜົ່າ ໃນລາວ ແມ່ນບໍ່ສະໝໍ່າສະເໝີ ຫວ່າງເຂດທົ່ງພຽງ ແລະ ເຂດພູສູງ, ລະຫວ່າງຕົວເມືອງ ແລະ ຊົນນະບົດແລະ ລະຫວ່າງ ບັນດາແຂວງດ້ວຍກັນເຊັ່ນ :

ເຂດທີ່ມີຊົນເຜົ່າຕ່າງໆເຕົ້າໂຮມກັນຢ່າງໜາແໜ້ນເປັນຕົ້ນແມ່ນຊົນເຜົ່າລາວຄື 3 ເຂດທົ່ງພຽງ ເຊັ່ນ ທົ່ງພຽງວຽງຈັນ , ສະຫວັນນະເຂດ, ຈຳປາສັກແລະຕາມທົ່ງພຽງນ້ອຍ ລຽບຕາມແຄມແມ່ນ້ຳຂອງ ແລະ ສາຂາຕ່າງໆຂອງແມ່ນ້ຳຂອງ ເປັນຈຳນວນຫລາຍກວ່າຊົນເຜົ່າອື່ນໆ. ຍ້ອນວ່າເຂດທົ່ງພຽງນີ້ເປັນເຂດທີ່ມີດິນອຸດົມສົມບູນ ແລະ ເໝາະສົມກັບການຜະລິດກະສິກຳ. ມີຄວາມສະດວກດ້ານການຄົມມະນາຄົມຂົນສົ່ງ, ການອຸດສາຫະກຳ ແລະ ການບໍລິການອື່ນໆ. ພິເສດ ເຂດທົ່ງພຽງໄດ້ເປັນເຂດທີ່ມີການພັດທະນາ ແຕ່ດົນນານ ແລະ ປະຈຸບັນເຂດນີ້ໄດ້ກາຍເປັນເຂດເສດຖະກິດ - ສັງຄົມ - ວັດທະນະທຳທີ່ສຳຄັນຂອງຊາດ.

- ເຂດທີ່ມີບັນດາຊົນເຜົ່າດຳລົງຊີວິດເບົາບາງ, ກະແຈກກະຈາຍ ແມ່ນຢູ່ເຂດພູສູງທາງ ພາກເໜືອ, ທາງພາກຕາເວັນອອກ, ເຂດພູພຽງທາງງພາກກາງ ແລະ ພາກໃຕ້, ເຂດນີ້ເປັນ ເຂດທີ່ມີຊັບພະຍາກອນທຳມະຊາດຫຼາຍຊະນິດແຕ່ພັດເປັນເຂດທຸລະກັນດານ, ການຄົມມະນາຄົມພົບຄວາມຫຍຸ້ງຍາກຫຼາຍ, ພື້ນຖານເສດຖະກິດຂະຫຍາຍຕົວຊ້າ, ລະດັບການສຶກສາຕໍ່າເປັນເຂດຂອງຊົນເຜົ່າສ່ວນຫນ້ອຍຕ່າງດັ່ງເຊັ່ນ ຜູ້ນ້ອຍ, ມົ້ງ, ຢ້າວ, ໂລໂລ, ກໍ, ມາກອງ,ຕະໂອຍ, ລະເວນ, ລະແວ, ລະເມດ, ເຈັງ ...
- ໃນປະຈຸບັນເສດຖະກິດ ແລະ ສັງຄົມຕົວເມືອງຕ່າງໆທັງໃນກຳແພງນະຄອນວຽງຈັນ ແລະ ຕ່າງແຂວງມີຄວາມຈະເລີນຂຶ້ນ, ຊົນເຜົ່າສ່ວນໜ້ອຍຂອງລາວທີ່ດລົງຊີວິດຢູ່ເຂດພູດອຍ ແລະທຸລະກັນດານເຂົ້າມາດຳລົງຊີວິດໃນຕົວເມືອງໜາແໜ້ນຂຶ້ນ.

- ລັກສະນະການແຈກຢາຍຂອງຊົນເຜົ່າຢູ່ແຕ່ລະແຂວງບໍ່ສະໝໍ່າສະເໝີ ດັ່ງເຊັ່ນ ຊົນເຜົ່າຜູ້ນ້ອຍດໍາລົງຊີວິດເປັນຈໍານວນຫຼາຍຢູ່ແຂວງຜົ້ງສາລີ, ຊົນເຜົ່າ,າກອງດໍາລົງຊີວິດສ່ວນຫຼາຍຢູ່ແຂວງເຊກອງ , ຊົນເຜົ່າກຶມມຸດໍາລົງຊີວິດຕົ້ນຕໍຢູ່ບັນດາແຂວງ ອຸດົມໄຊ, ໄຊຍະບູລີ ແລະ ຫຼວງພະບາງ, ຫຼືຊົນເຜົ່າຕະໂອ້ຍ, ຊົນເຜົ່າເຈັງດໍາລົງຊີວິດສະເພາະຢູ່ແຂວງອັດຕະປື ເປັນຕົ້ນ.

## 6. ການຍ້າຍຖິ່ນຂອງຊົນເຜົ່າໃນລາວ.

ການຍ້າຍຖິ່ນຂອງຊົນເຜົ່າ ເປັນການເຄື່ອນຍ້າຍຂອງຊົນເຜົ່າຈາກທ້ອງຖິ່ນໜຶ່ງໄປສູ່ອີກທ້ອງຖິ່ນໜຶ່ງຈາກປະເທດໜຶ່ງໄປສູ່ອີກປະເທດໜຶ່ງ ການຍ້າຍຖິ່ນນີ້ກ່ຽວຂ້ອງກັບສອງສະຖານທີ່ຄືທ້ອງຖິ່ນຕົ້ນທາງ ແລະ ທ້ອງຖິ່ນປາຍທາງ, ໃນການຍ້າຍຖິ່ນແຕ່ລະຄັ້ງນັ້ນທ້ອງຖິ່ນຕົ້ນທາງຈະສູນເສຍເສຍສະມາຊິກຂອງຊົນເຜົ່າໄປ ໃນຂະນະທີ່ທ້ອງຖິ່ນປາຍທາງຈະໄດ້ຮັບສະມາຊິກໃໝ່.

### 6.1. ປັດໄຈທີ່ມີຜົນກະທົບຕໍ່ການຍ້າຍຖິ່ນ

ຕາມປົກກະຕິແລ້ວຊົນເຜົ່າຕ່າງໆຈະມີຄວາມຜູກພັນກັບພໍ່ແມ່ ຍາດພີ່ນ້ອງ, ສັງຄົມ ແລະ ສະພາບແວດລ້ອມທີ່ຕົນອາໃສຢູ່ ດັ່ງນັ້ນເມື່ອພໍໃຈກັບສະພາບຕ່າງໆໃນທ້ອງຖິ່ນດິນນາຂອງຕົນແລ້ວເຂົາເຈົ້າຈະບໍ່ມັກຄິດ ຫຼືບໍ່ຕ້ອງການທີ່ຈະປະລະຖິ່ນຖານຄອບຄົວ ແລະ ຍາດຕິພີ່ນ້ອງໄປຢູ່ບ່ອນອື່ນ, ແຕ່ກໍຍັງມີບາງຄັ້ງຄາວທີ່ໂຄງປະກອບທາງດ້ານເສດຖະກິດ, ສັງຄົມ, ການເມືອງ ແລະ ສະພາວະອື່ນໆມີການປ່ຽນແປງ ໃນລະດັບທີ່ຕົນເອງບໍ່ພໍໃຈແລ້ວ ຈໍາເປັນຕ້ອງມີການຍ້າຍຖິ່ນໄປອາໃສຢູ່ບ່ອນອື່ນທີ່ຄາດວ່າຊີວິດການເປັນຢູ່ຈະດີຂຶ້ນ.

ການຍ້າຍຖິ່ນ ສ່ວນຫຼາຍແມ່ນການຍ້າຍຖິ່ນອອກຈາກທ້ອງຖິ່ນທີ່ສະພາບເສດຖະກິດ ແລະ ສັງຄົມມີຄວາມຫຍຸ້ງຍາກສັບສົນ (ເຂດທຸລະກັນດານ, ເຂດຫ່າງໄກສອກຫຼີກ, ເຂດພູສູງ... ) ເຂົ້າໄປຢູ່ບ່ອນທີ່ມີສະພາວະທາງດ້ານເສດຖະກິດ ແລະ ສັງຄົມດີກວ່າ ( ຕົວເມືອງ ຫຼື ນະຄອນຫຼວງ), ຍ້ອນມີການສົມທຽບສະພາບຊີວິດການເປັນຢູ່ລະຫວ່າງທ້ອງຖິ່ນຕົນກັບທ້ອງຖິ່ນອື່ນທີ່ຈະຍ້າຍເຂົ້າໄປຢູ່ ແລະ ຄາດວ່າເມື່ອຍ້າຍຖິ່ນແລ້ວ ຊີວິດການເປັນຢູ່ຈະດີຂຶ້ນກວ່າເກົ່າ. ກ່ອນຈະຕັດສິນໃຈຍ້າຍຖິ່ນ ຕ້ອງໄດ້ຄິດໄລ່ຄ່າໃຊ້ຈ່າຍໃນການເດີນທາງ ແລະ ຄ່າໃຊ້ຈ່າຍອື່ນໆ ກັບຜົນປະໂຫຍດທີ່ຄາດວ່າຈະໄດ້ຮັບ, ຖ້າຄຸ້ມຄ່າກໍຈະຕົກລົງຍ້າຍຖິ່ນ ກົງກັນຂ້າມຫາກປຽບທຽບທາງສອງຢ່າງບໍ່ຄຸ້ມຄ່າແລ້ວຈະບໍ່ມີການຍ້າຍອອກຈາກບ້ານເກີດເມືອງນອນຂອງຕົນເອງ. ເມື່ອສັງລວມເບິ່ງແລ້ວ ເຫັນວ່າປັດໄຈທີ່ມີຜົນກະທົບຕໍ່ການ ຍ້າຍຖິ່ນປະກອບມີສອງປັດໄຈຄື :

ປັດໄຈພາຍນອກເຊັ່ນ ປັດໄຈທາງດ້ານເສດຖະກິດ, ສັງຄົມ, ການເມືອງ ແລະ ອື່ນໆ ທີ່ສົ່ງຜົນຕໍ່ການຍ້າຍຖິ່ນໃນທາງບວກ ແລະ ທາງລົບ, ທາງຊຸກດັນ ແລະ ຕ້ານການຍ້າຍຖິ່ນອອກຈາກທ້ອງຖິ່ນໃດທ້ອງຖິ່ນໜຶ່ງ ແລະ ທາງດຶງດູດ ແລະ ຕ້ານການຍ້າຍຖິ່ນເຂົ້າສູ່ທ້ອງຖິ່ນນັ້ນ.

- ປັດໄຈພາຍໃນ ຊຶ່ງໄດ້ແກ່ ຈໍານວນຊົນເຜົ່າ, ການແຈກຢາຍປະຊາກອນຊົນເຜົ່າຕາມທ້ອງຖິ່ນ, ພາວະການຕາຍ ແລະ ການຈະເລີນພັນ ເຫຼົ່ານີ້ເປັນຕົ້ນທີ່ເຮັດໃຫ້ປະຊາກອນເກີດມີການຍ້າຍຖິ່ນຖານໄດ້.

### 6.2. ສະພາບເຄື່ອນຍ້ານຂອງບັນດາຊົນເຜົ່າໃນລາວ.

ໃນສະໄໝກ່ອນກໍຄືປະຈຸບັນ ສະພາບການເຄື່ອນຍ້າຍຂອງບັນດາຊົນເຜົ່າໃນລາວ ແມ່ນມີຄວາມສັບສົນສົມຄວນ ແລະ ບັນດາເອກະສານທີ່ຈະຢັ້ງຢືນຢ່າງຊັດເຈນນັ້ນຍັງມີໜ້ອຍ. ກະແສການເຄື່ອນຍ້າຍໃນໄລຍະທີ່ຜ່ານມາຕົ້ນຕໍແມ່ນການເຄື່ອນຍ້າຍຈາກພູສູງລົງສູ່ທົ່ງພຽງ ແລະ ຈາກຊົນນະບົດເຂົ້າສູ່ຕົວເມືອງໃຫຍ່.

ເພື່ອປະຕິບັດນະໂຍບາຍ ການຈັດແບ່ງປະຊາກກອນໃຫ້ເໝາະກັບເງື່ອນໄຂຊັບພະຍາກອນ ແລະ ການປົກຄອງຮັກສາສະພາບແວດລ້ອມນັ້ນ ລັດຖະບານ ໄດ້ອອກມະຕິຕົກລົງສະບັບໜຶ່ງໃນ ເດືອນ ກຸມພາ ປີ 1986ເພື່ອຢຸດຕິການຖາງປ່າເຮັດໄຮ່ ແລະ ກໍ່ໄດ້ຍົກຍ້າຍປະຊາກອນຊົນເຜົ່າຈໍານວນໜຶ່ງເພື່ອຈັດສັນທີ່ຢູ່ອາໄສໃຫ້ເປັນປົກກະຕິ

ຖາວອນ ພ້ອມດຽວກັນນີ້ລັດຖະບານກໍໄດ້ບຸກເບີກ ແລະ ຂະຫຍາຍເນື້ອທີ່ການຜະລິດ (ອຸດສາຫະກໍາ, ກະສິກໍາ, ເສັ້ນທາງ... ) ນັບທັງການຂະຫຍາຍຕົວເມືອງຕ່າງໆກໍສາມາດເຮັດໃຫ້ຈໍານວນພົນມີການເຄື່ອນຍ້າຍອອກໄປອາໃສຢູ່ຕາມຫົວໜ່ວຍເສດຖະກິດ ແລະ ຕາມຕົວເມືອງໃໝ່ດັ່ງກ່າວນັ້ນ.

ຕໍ່ກັບການເຄື່ອນຍ້າຍອອກໄປຕ່າງປະເທດມີດັ່ງນີ້ ພາຍຫຼັງທີ່ ປະເທດຊາດໄດ້ຮັບການປົດປ່ອຍ ( 1975) ໄດ້ມີຊົນເຜົ່າຕ່າງໆ ຈໍານວນໜຶ່ງອົບພະຍົບໄປຕ່າງປະເທດເຊັ່ນ: ໄທ, ຝລັ່ງ, ອາເມລິກາ, ອົດສຕາລີ, ການາດາ, ຕາມຂໍ້ມູນຂອງຄະນະກໍາມະການແຜນການແຫ່ງລັດປີ 1986ໄດ້ໃຫ້ຮູ້ວ່າ ຈໍານວນຄົນລາວທີ່ອົບພະຍົບໄປຢູ່ຕ່າງປະເທດມີປະມານ 30360 ຄົນ, ແຕ່ມາຮອດສະໄໝປະຈຸບັນນີ້ ຈໍານວນຄົນທີ່ໄປຢູ່ຕ່າງປະເທດນັ້ນໄດ້ມີຈໍານວນຫຼາຍກໍ່ໄດ້ກັບຄືນສູ່ບ້ານເກີດເມືອງນອນຂອງຕົນເອງ. ຕາມຂໍ້ມູນຂອງສູນສະຖິຕິແຫ່ງຊາດໄດ້ໃຫ້ຮູ້ວ່າ ແຕ່ປີ 1980 - 1995 ໄດ້ມີຄົນລາວກັບສູ່ປະເທດແລ້ວປະມານ 26.307 ຄົນ.

# ບົດທີ 7
# ວັດທະນະທໍາບາງຊົນເຜົ່າໃນລາວ.

## 1. ຄວາມໝາຍວັດທະນະທໍາ.

ຄວາມເຂົ້າໃຈໃນເລື່ອງວັດທະນະທໍາຍັງມີລັກສະນະຫຼາກຫຼາຍເພື່ອຄວາມເຂົ້າໃຈເຊິ່ງກັນ ແລະ ກັນໃນຂັ້ນຕົ້ນນີ້ ເຮົາອາດສະຫຼຸບສັ້ນໄດ້ກ່ອນວ່າ ວັດທະນະທໍາຄືສິ່ງທີ່ມະນຸດສ້າງຂຶ້ນ ກໍານົດຂຶ້ນ ບໍ່ແມ່ນສິ່ງທີ່ມະນຸດເຮັດຕາມສັນສາດຕະຍານ, ອາດເປັນການປະດິດວັດຖຸສິ່ງຂອງຂຶ້ນໃຊ້ ຫຼື ອາດເປັນການກໍານົດພຶດຕິກໍາ ແລະ ແນວຄວາມຄິດຕະຫຼອດຈົນວິທີການ ຫຼື ລະບົບການເຮັດວຽກ, ສະນັ້ນວັດທະນະທໍາກໍຄືລະບົບໃນສັງຄົມມະນຸດທີ່ມະນຸດສ້າງຂຶ້ນ ບໍ່ແມ່ນລະບົບທີ່ເກີດຂຶ້ນໂດຍທໍາມະຊາດຕາມສັນສາດຕະຍານ.

ເມື່ອພິຈາລະນາວັດທະນະທຳໃນສັງຄົມເຮົາອາດຈະແບ່ງອອກເປັນສອງລັກສະນະ ຄື ວັດທະນະທຳໃນລັກສະນະທີ່ເປັນສັນຍາລັກ ແລະ ຈັບຕ້ອງບໍ່ໄດ້ເປັນຕົ້ນວ່າ ພາສາປາກເວົ້າ, ລະບົບຄວາມເຊື່ອ, ໂລກກະທັດ, ກິລິຍາມາລະຍາດ, ເຄົານົບທຳນຽມປະເພນີ ແລະ ວັດທະນະທຳທາງດ້ານວັດຖຸເປັນຕົ້ນວ່າ ອາຄານບ້ານເຮືອນ, ວັດ ແລະ ສິນລະປະກຳ, ປະຕິມາກຳຕ່າງໆຕະຫຼອດຈົນສິ່ງຂອງເຄື່ອງໃຊ້ຕ່າງ ທີ່ໃຊ້ເປັນປະຈຳທຸກມື້, ການແບ່ງພິຈາລະນາວັດທະນະທຳໃນສອງລັກສະນະທີ່ກ່າວມານີ້ຈະເຮັດໃຫ້ເຮົາສາມາດພິຈາລະນາວັດທະນະທຳທັງໝົດໄດ້ຄົບຖ້ວນຢ່າງບໍ່ຂາດຕົກບົກຜ່ອງ. ວັດທະນະທຳທັງໝົດກໍ່ຄືສິ່ງທີ່ຄອບງຳຊີວິດມະນຸດເຮົາຢູ່ ທັງໃຊ້ໃນຊີວິປະຈຳວັນ.

### 1.1. ວັດທະນະທຳຊົນເຜົ່າມົ້ງ.

ໃນວົງຄະນະຍາດແຫ່ງຊາດລາວໃນປັດຈຸບັນມີຊາວລາວຊົນເຜົ່າມົ້ງປະມານ 2 ແສນກວ່າຄົນ. ຊຶ່ງສັງກັດຢູ່ນຳ 4 ປະເພດເຊັ່ນ: ມົ້ງຂາວ, ມົ້ງລາຍ, ມົ້ງດຳ ແລະ ມົ້ງແດງ. ຊົນເຜົ່າມົ້ງທັງ 4 ປະເພດນີ້ຈະກະແຈກກະຈາຍຕາມຖິ່ນສູງ ຫຼື ຕາມເປພູທາງພາກກາງ ແລະ ພາກເໜືອຂອງປະເທດລາວ. ຈຸດທີ່ມີພົນລະເມືອງຊົນເຜົ່າມົ້ງດຳລົງຊີວິດຫຼາຍກວ່າໝູ່ແມ່ນແຂວງຊຽງຂວາງ.

- ການຕັ້ງຊື່ຊົນເຜົ່າມົ້ງຈະເອີ້ນຕົນເອງວ່າ ‘‘ມົ້ງ’’ ແຕ່ຊົນເຜົ່າລາວ ແລະ ຊົນເຜົ່າອື່ນໆເອີ້ນຊົນເຜົ່າມົ້ງວ່າ ‘‘ແມ້ວ’’.
- ແຊ ຫຼື ນາມສະກຸນ
- ທີ່ຢູ່ອາໃສ
- ການກິນ
- ການເຊື່ອຖື(ພິທີກຳທາງສະສະໜາ)
- ການແຕ່ງງານ
- ບຸນກິນຈຽງ

## ❖ ຊົນເຜົ່າລາວ

### 1. ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ

ຊົນເຜົ່າລາວ ເປັນຊົນເຜົ່າໜຶ່ງທີ່ເກົ່າແກ່ບູຮານ ແລະ ຕັ້ງຖິ່ນຖານຢູ່ດິນດອນຕອນນີ້ໄດ້ຫຼາຍຮ້ອຍປີແລ້ວ. ສ່ວນຫຼາຍແມ່ນມີທ່າອ່ຽງວ່າຖິ່ນຖານເດີມຂອງຊົນເຜົ່າລາວຢູ່ບໍລິເວນແມ່ນ້ຳຂອງຕອນເໜືອທີ່ຮາບພຽງ. ລຸ່ມແມ່ນ້ຳຍັງຊີກຽງພາກໃຕ້ຂອງປະເທດຈີນໄດ້ເຄື່ອນຍ້າຍ ແລະ ອົບພະຍົບລົງມາພາກໃຕ້ຂອງຈີນແລ້ວເຂົ້າສູ່ແຫຼມອິນດູຈີນພາຍຫຼັງການແຜ່ອຳນາດຂອງພວກມົງໂກນ, ພ້ອມກັບການເຊື່ອມເສຍບົດບາດຂອງບັນດາຊົນເຜົ່າຢູ່ໃນໝວດພາສາມອນ - ຂະແມທີ່ໄດ້ອາໄສຢູ່ຖິ່ນຖານນີ້ກ່ອນ.

ຊົນເຜົ່ານີ້ເອີ້ນຕົນເອງວ່າ : "ລາວ" ຊົນເຜົ່າອື່ນເຂົາເຈົ້າກໍ່ແມ່ນ "ລາວ" ແລະຊື່ທີ່ເຂົາເຈົ້າມັກທີ່ສຸດກໍ່ແມ່ນ "ລາວ" ສ່ວນຄໍາວ່າລາວມີຄວາມໝາຍແນວໃດ?, ແລະມີກົກເຄົ້າເຫຼົ່າກໍມາແຕ່ໃສແລະເປັນຫຍັງຈຶ່ງເອີ້ນວ່າ: "ລາວ " ນັກສຶກສາແລະນັກວິທະຍາສາດໄດ້ສັນນິຖານໄປຫຼາຍຢ່າງແຕກຕ່າງກັນເຊັ່ນຄໍາວ່າ: "ລາວ" ມາຈາກຄໍາວ່າ: ເຫຼະ, ລົວະ, ລາວະ, ລ້ຽງ, ດາວ ແລະ ອື່ນໆ



## 2. ອາຊີບຂອງຊົນເຜົ່າລາວ

ການດໍາເນີນວິຖີຊີວິດທາງດ້ານເສດຖະກິດຂອງ ຊົນເຜົ່າລາວ ເຂົາເຈົ້າມີອາຊີບແບບປະສົມປະສານແຕ່ຕົ້ນຕໍແມ່ນການເຮັດນາປູກເຂົ້າໜຽວ, ເຂົ້າຈ້າວ, ເຮັດສວນຄົວປູກພືດຜັກແລະລ້ຽງສັດຕາມລະດູການຜະລິດໃນວົງຈອນຊີວິດຮອບປີໜຶ່ງໆໂດຍອີງໃສ່ປະຕິທິນລາວຊຶ່ງແຕກຕ່າງຈາກປະຕິທິນສາກົນ. ພ້ອມກັນນີ້ກໍຍັງເຮັດການຄ້າຂາຍນ້ອຍເພື່ອເສີມລາຍໄດ້ແກ່ຄອບຄົວ, ກ່ອນທີ່ຈະໄປທໍາການຜະລິດປູກພືດພັນທັນຍາຫານ, ໄປຊອກຢູ່ຫາກິນແລະອື່ນໆໃນຊີວິດຂອງເຂົາເຈົ້າຈະມີການໄລ່ມື້ໄລຍາມຢ່າງຄັກແນ່ເຊັ່ນ: ມື້ໃດເປັນມື້ງາມຍາມດີແລະມື້ບໍດີກໍ່ຄື: ມື້ວັນສິນດັບ, ມື້ຮວງ, ມື້ຮວາຍ, ເດືອນດັບ , ເດືອນເພັງເປັນຕົ້ນ

ການດໍາເນີນວິຖີຊີວິດທາງດ້ານເສດຖະກິດຂອງຊົນເຜົ່າລາວເຂົາເຈົ້າມີອາຊີບແບບປະສົມປະສານແຕ່ຕົ້ນຕໍແມ່ນການເຮັດນາປູກເຂົ້າໜຽວ, ເຂົ້າຈ້າວ, ເຮັດສວນຄົວປູກພືດຜັກແລະລ້ຽງສັດຕາມລະດູການຜະລິດໃນວົງຈອນຊີວິດຮອບປີໜຶ່ງໆໂດຍອີງໃສ່ປະຕິທິນລາວຊຶ່ງແຕກຕ່າງຈາກປະຕິທິນສາກົນ. ພ້ອມກັນນີ້ກໍ່ຍັງເຮັດການຂາຍນ້ອຍເພື່ອເສີມລາຍໄດ້ແກ່ຄອບຄົວ, ກ່ອນຈະໄປທໍາການຜະລິດປູກພືດພັນທັນຍາຫານ, ໄປຊອກຢູ່ຫາກິນແລະອື່ນໆໃນຊີວິດຂອງເຂົາເຈົ້າຈະມີການໄລ່ມື້ໄລ່ຍາມຢ່າງຄັກແນ່ເຊັ່ນ: ມື້ໃດເປັນມື້ງາມຍາມດີແລະມື້ບໍ່ດີກໍ່ຄື: ມື້ວັນສິນດັບ, ມື້ຮວງ, ມື້ຮາຍ, ເດືອນດັບ , ເດືອນເພັງເປັນຕົ້ນ.







ການປູກເຂົ້ານາປີຂອງຊົນເຜົ່າລາວ

## 3. ທີ່ຕັ້ງບ້ານແລະເຮືອນ

ຄຸນລັກສະນະເຮືອນຂອງຊົນເຜົ່າລາວ ຕາມປະເພນີແລ້ວເຂົາເຈົ້າມັກປຸກສ້າງເຮືອນເປັນເຮືອນຮ້ານ, ກ່ອນຈະປຸກເຮືອນ ຫຼື ຕັ້ງເຮືອນແຕ່ລະຄັ້ງຈະຕ້ອງເຮັດພິທີກຳຍ້າຍດິນ, ຍ້າຍດອນ (ຄວາມໝາຍກໍ່ຄືຍ້າຍເຈົ້າຖິ່ນເຈົ້າຖານເສຍກ່ອນແລ້ວຈຶ່ງຂຸດຂຸມບ່ອນຝັງເສົາ) ໂດຍຈະເລີ່ມຈາກເສົາຂ້ວນ, ຊຶ່ງສ່ວນຫຼາຍແລ້ວມັກຈະເອົາເຄື່ອງສິນ, ຂັນທີ່ສານດ້ວຍໄມ້ປ່ອງ, ຕົ້ນກ້ວຍ, ຕົ້ນອ້ອຍມັດໃສ່ພ້ອມທັງຕິດຄາຖາ ຫຼື ຍັນໃສ່ແລ້ວຈຶ່ງເອົາເສົາອື່ນລົງຕາມກັນ. ຊົນເຜົ່າລາວມັກຈະປຸກເຮືອນແຕ່ 3 ຫ້ອງຂຶ້ນໄປ໌ການຈັດແບ່ງຫ້ອງພາຍໃນເຮືອນແມ່ນອີງຕາມຈຳນວນສະມາຊິກໃນຄອບຄົວຊຶ່ງອາດຈະແບ່ງເຮືອນອອກເປັນສອງສ່ວນຄື: ສ່ວນທີໜຶ່ງໄວ້ສຳລັບນອນ, ຮັບແຂກ ແລະ ສ່ວນທີສອງເປັນສະຖານທີ່ແຕ່ງຢູ່ຄົວກິນ, ສຳລັບລັກສະນະຂອງເຮືອນຈະປິ່ນໜ້າໃສ່ທິດເໜືອແລະປິ່ນຫຼັງໃສ່ທິດໃຕ້, ຂັ້ນໃດຂຶ້ນເຂົາເຈົ້າຈະມັກເຮັດຢູ່ທາງໜ້າເອີ້ນວ່າຂັ້ນໃດເຊຍ, ແຕ່ຕ້ອງເປັນຂັ້ນໃດຄີກເຊັ່ນ: 3, 5, 7, 9 ເຫຼົ່ານີ້ເປັນຕົ້ນ. ກ້ອງຕະລ່າງເຮືອນຈະເປັນສະຖານທີ່ເກັບມ້ຽນອູປະກອນການຜະລິດແລະໃນເມື່ອກ່ອນບໍ່ທັນມີໂຮງສີເຂົ້າເຂົາເຈົ້າມັກຈະເຮັດຄົກມອງຕຳເຂົ້າຢູ່ໃກ້ກັບຂັ້ນໃດເບື້ອງທາງໜ້າ.




ຮູບເຮືອນຂອງເຜົ່າລາວ

## 4. ເຄື່ອງນຸ່ງຫົ່ມ

ສຳລັບເຄື່ອງນຸ່ງຫົ່ມ ແລະ ການແຕ່ງກາຍຕາມປະເພນີຂອງຊົນເຜົ່າລາວແລ້ວແມ່ນມີເອກະລັກສະເພາະເພດຍິງແລະເພດຊາຍບໍ່ຄືກັນເພດຊາຍຕັດຜົມສັ້ນ, ນຸ່ງເສື້ອຄໍມຸນແຂນບັ້ງມັດແໜ່ງຢູ່ໜ້າເອິກ, ໂສ້ງຫົວຮູດ ຫຼື ຜ້າສະໂຫຼ້ງ, ແມ່ຍິງຈິ່ງຜົມຍາວແລ້ວເກົ້າຜົມຄຽນດ້ວຍສ້ອຍເງິນ, ຄຳຫຼືໝາກປັດ, ເອົາປິ່ນເກົ້າປັກຄັດໃຫ້ແໜ້ນ, ເຄື່ອງປະ

ດັບໃສ່ຕຸ້ມຫູ, ສ້ອຍຄໍ, ນຸ່ງເສື້ອຄໍມຸນແຂນບັ້ງນຸ່ງສິ້ນບ່ຽງແພເຄື່ອງຈາກຜ້າແພທີ່ເຂົາເຈົ້າຜະລິດເອົາເອງເປັນຕົ້ນກໍ່ແມ່ນຜ້າດໍານິນ, ຜ້າໄໝມ້ອນ ແລະ ອື່ນໆ ປັດຈຸບັນຍິ່ງເປັນການປະຍຸກມີການຕົບແຕ່ງໃນຍົກຂອງແຟຊັ້ນ, ມີການອອກແບບຕ່າງໆຕາມຄ່ານິຍົມຂອງສັງຄົມໃໝ່.



ຮູບການແຕ່ງກາຍຂອງເຜົ່າລາວ

### 5. ອາຫານ ແລະ ເຄື່ອງດື່ມ

ສໍາລັບຊົນເຜົ່າລາວ ແຕ່ສະໄໝບູຮານນະການແມ່ນຍັງມີຄວາມນິຍົມກິນເຂົ້າໜຽວເປັນສ່ວນຫຼາຍ ແລະ ກິນອາຫານປະເພດລາບສຸກ, ລາບດິບ, ປີ້ງ, ຈີ່, ເອາະ, ໝົກ, ໜຶ້ງ ແລະ ອື່ນໆ ສິ່ງທີ່ຂາດບໍ່ໄດ້ໃນພາເຂົ້າທຸກໆຄັ້ງແມ່ນແຈ່ວ, ມີການດື່ມນໍ້າຕົ້ມ, ດື່ມນໍ້າດິບ (ທີ່ຂຸດເປັນນໍ້າສ້າງໄວ້) , ເຫຼົ້າຂາວ, ເຫຼົ້າສະໂທ, ສູບຢາເສັ້ນ, ຄ້ຽວໝາກ ແລະ ອື່ນໆໃນປັດຈຸບັນໄດ້ມີການພັດທະນາທາງດ້ານອາຫານການກິນໄປຕາມຍຸກໄໝ່ແຕ່ຍັງຮັກສາສິ່ງທີ່ເປັນເອກະລັກໄວ້.



ອາຫານປະເພດຕ່າງໆຂອງລາວ

### 6. ຄວາມເຊື່ອຖື

ຊົນເຜົ່າເປັນຊົນເຜົ່າທີ່ມີຮີດຄອງປະເພນີ, ວັດທະນະທຳຢ່າງຫຼວງຫຼາຍ, ອຸດົມສົມບູນ, ຊົນເຜົ່ານີ້ຖືພຸດທະສາສະໜາໂດຍຍຶດຖືເອົາວັດວາອາຮາມເປັນສູນກາງ, ເປັນທີ່ເພິ່ງອັນສຳຄັນ, ເປັນບ່ອນເຕົ້າໂຮມຄວາມສະມັກຄີຂອງຊຸມຊົນ, ບ່ອນເຕົ້າໂຮມດ້ານຮີດຄອງປະເພນີ ແລະ ຫຼັກທຳຄຳສອນທາງສາສະໜາ ນອກນັ້ນຍັງໄດ້ມີຄວາມເຊື່ອຖືຜີເຊັ່ນ: ຜີພໍ່ຜີແມ່, ຜີ (ເຮືອນ, ບ້ານ, ເມືອງ) ຜີແມ່ນໍ້າ, ຜີປ່າຊ້າ ແລະ ອື່ນໆ

7. **ງານບຸນ**

ຊົນເຜົ່າລາວມີຮີດ 12 ຄອງ 14 ຮີດຍີ່ - ຄອງຈຽງ, ຮີດຜົວ - ຄອງເມຍ, ເຂົາເຈົ້າມີຄວາມເຊື່ອໃນພະພຸດທະສາສະໜາທີ່ວ່າ " ຖ້າທຳດີຈະໄດ້ດີ " " ຖ້າທຳຊົ່ວຈະໄດ້ຊົ່ວ " ແລະ ການເຮັດບຸນສົນທານໃນຊາດນີ້ເພື່ອຈະໄດ້ເປັນການສາສົມເກີດດອກອອກຜົນສະໜອງຕອບໃນຊາດໜ້າ (ຖ້າຊາດນີ້ຍັງບໍ່ໄດ້ຜົນຕອບແທນ) ສະນັ້ນ, ໃນປີໜຶ່ງໆເຂົາຈະມີບຸນຕາມປະເພນີທີ່ສຳຄັນໃນຄວາມໝາຍຂອງຮີດ 12 ແມ່ນອີງໃສ່ປະຕິທິນລາວກໍ່ຄື:

- ເດືອນຈຽງ (ລ້ຽງຜີຟ້າຜີແຖນ)
- ເດືອນຍີ່ (ເຮັດບຸນເຂົ້າຄູນລານ)
- ເດືອນສາມເພັງ (ບຸນເຂົ້າຈີ່-ບຸນມາຄະບູຊາ , ບຸນວັດພູ, ບຸນທາດອິງຮັງ, ບຸນພະທາດສີໂຄດ)
- ເດືອນສີ່ ( ບຸນພະເຫວດ, ບຸນມະຫາຊາດ)
- ເດືອນຫ້າ (ບຸນປີໃໝ່ລາວ, ຫົດນໍ້າຜູ້ຫຼັກຜູ້ໃຫຍ່)
- ເດືອນຫົກ( ບຸນວິສາຂາບູຊາ ແລະ ບຸນບັ້ງໄຟ)
- ເດືອນເຈັດ (ບຸນເບີກສຳລະບ້ານມາລ້ຽງປູຕາເພື່ອກະກຽມເຂົ້າການຜະລິດ)
- ເດືອນແປດ (ບຸນເຂົ້າພັນສາແມ່ນເຂົ້າກຳຂອງພະສົງສຳມະເນນເປັນເວລາສາມເດືອນ)
- ເດືອນເກົ້າ (ບຸນເຂົ້າປະດັບດິນເຊິ່ງແມ່ນມີຄວາມເຊື່ອແຕ່ບູຮານນະການເປັນການຖວາຍໃຫ້ບັນດາຜູ້ທີ່ລ່ວງລັບໄປນັ້ນໃຫ້ມາຮັບເອົາ)
- ເດືອນສິບ (ບຸນເຂົ້າສະຫຼາກກໍ່ແມ່ນການກະກຽມເກັບຜົນຜະລິດ ຫຼື ຄວາມໝາຍໜຶ່ງແມ່ນການເສັ້ນເຂົ້າກ່ອນການເກັບກ່ຽວ)
- ເດືອນສິບເອັດ (ບຸນອອກພັນສາແມ່ນການອອກກຳລັງຂອງພະສົງສຳມະເນນທີ່ໄດ້ປະຕິບັດມາເປັນໄລຍະສາມເດືອນ)
- ເດືອນສິບສອງ ( ບຸນກະຖິນ ແລະ ບຸນນະມັດສະການພະທາດຫຼວງຊຶ່ງເປັນບຸນທີ່ປະຊາຊົນລາວເຮົາໄດ້ເຄົາລົບບູຊາແລະໄດ້ສະຖິດໄວ້ໃນປະຫວັດສາດຂອງຊາດລາວເຮົາ.

ຊົນເຜົ່ານີ້ນັບຖືພຸດທະສາສະໜາໂດຍມີການປະຕິບັດສືບຕໍ່ກັນມາແຕ່ຍຸກສະໄໝດຶກດຳບັນເຊັ່ນ: ພິທີບາສີສູ່ຂວັນໃນວັນສຳຄັນຕ່າງໆຄື: ແຕ່ງດອງ, ຂຶ້ນເຮືອນໃໝ່, ແຂກທີ່ມາຢ້ຽມຢາມ, (ປະເພນີຄົບງັນຈະມີງັນເຮືອນດີ, ງັນກຳ, ງັນດອງ, )ປະເພນີເຮັດບູນມີບຸນກອງບວດ, ບຸນກອງງຫົດ, ກອງອະຖາ, ກອງບຸນເຖິງເຈົ້າກຳນາຍເວນ, ເຈົ້າຖິ່ນ , ເຈົ້າຖານ, ແລະອື່ນໆ. ປະເພນີໃນການສະສົມມາເຊັ່ນ: ວັນສິນ, ວັນພະຕາມຄວາມນັບຖືແລະເຄີຍປະຕິບັດມາແມ່ນມີຂັນຫ້າ, ໝາກເບັງຂຶ້ນຮ້ານບູຊາເຮືອນຊານທໍ່ພະພູມພ້ອມທັງມີຄວາມໝາຍເຖິງການຈູດທູບເຊັ່ນ: ຈະມີຄຳເວົ້າສືບຕໍ່ກັນມາຄືກຢູ່ຄູ່ໜີ, ໃນຄວາມໝາຍທາງຫຼັກທຳຈູດທູດ 3 ດອກໝາຍເຖິງພະພຸດ, ພະທຳ, ພະສົງ.



**ຕົວຢ່າງ:**

ບຸນບັ້ງໄຟໝາຍເຖິງບຸນໜຶ່ງທີ່ຄົນລາວເຮົາເຄີຍເຊື່ອຖືກັນມາຢູ່ຮີດ 12 ຂອງລາວແລະທາງເປັນປາງບຸນໃຫ່ຍອັນໜຶ່ງທີ່ເຄີຍເຮັດກັນມາຢູ່ໃນເດືອນ 6 ລາວຂອງທຸກໆປີ ຈຸດປະສົງຂອງການເຮັດບຸນບັ້ງໄຟແມ່ນເພື່ອຂໍຟ້າ, ຂໍຝົນ, ບູຊາເທວະດາ, ຟ້າແຖນ, ບູຊາເຈົ້າຖິ່ນ, ເຈົ້າຖານມະຫາສັກຫຼັກບ້ານພ້ອງນັ້ນບັງເຮັດເພື່ອການຊຸ່ງໂຊກຊາຕາວາດສະໜາແຕ່ຊຸ່ງຟ້າຝົນໃນແຕ່ລະປີເຊິ່ງບຸນບັ້ງໄຟມີເຄົ້າກຳເນີດມາຈາກເລື່ອງຂອງທ້າວຜາແດງແລະນາງໄອ່.

8. **ເຄື່ອງດົນຕີແລະສິລະປະພື້ນເມືອງ**

ເອກະລັກດ້ານວັນນະຄະດີ ແລະ ສິລະປະ ຊົນເຜົ່າລາວໃນແຕ່ລະທ້ອງຖິ່ນຈະມີກອນຂັບລຳ, ມີຄຳສຸພາສິດ, ຄຳຜະຫຍາ, ຄຳໂຕ່ງໂຕຍແລະອື່ນໆທີ່ແຕກຕ່າງກັນຕາມສຽງສຳນຽງມີແຄນເປັນເອກະລັກທາງດ້ານເຄື່ອງດົນຕີເພື່ອເປົ່າປະສານກັບການຂັບລຳແລະຮ້ອງເພງ. ຊົນເຜົ່າລາວມີຄຳເວົ້າຕໍ່ໆກັນມາວ່າ: ຢູ່ເຮືອນຮ້ານ, ກິນເຂົ້າໜຽວ, ຈໍ້າປາແດກ ແລະ ເປົ່າແຄນໄດ້ແມ່ນເອກະລັກອັນແທ້ຈິງຂອງເຂົາເຈົ້າ

9. **ພາສາປາກເວົ້າ**

ພາສາຂອງ ຊົນເຜົ່າລາວ ຈັດເຂົ້າໃນໝວດພາສາລາວ - ໄຕ, ຊົນເຜົ່າລາວ ມີຕົວໜັງສືຂຽນແລະໄດ້ເປັນຕົວໜັງສືທີ່ໃຊ້ຂຽນໃນທາງລັດທະການ, ພາສາປາກເວົ້າກໍ່ເປັນພາສາກາງຂອງທຸກຊົນເຜົ່າໃນວົງຄະນາຍາດແຫ່ງຊາດລາວ.

## ❖ ຊົນເຜົ່າກະຕ່າງ

1. **ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ**

ຊົນເຜົ່າກະຕ່າງ ແມ່ນເປັນຊົນເຜົ່າໜຶ່ງທີ່ນອນຢູ່ໃນວົງຄະນາຍາດແຫ່ງຊາດລາວກ່ອນພຸດທະສັງກະລາດສະໄໝເຈົ້າຈັນອາຫຼວຍ. ພາສາມອນ - ຂະແມ. ສາຂາມອນບູຮານແມ່ນໄດ້ຕັ້ງຫຼັກຖານຢູ່ພາກເໜືອ ແລະ ໄດ້ເຄື່ອນ

ຍ້ານເຂົ້າມາຕັ້ງພູມລຳເນົາຢູ່ເຂດເມືອງນອງ, ເມືອງເຊໂປນ ໂດຍຜ່ານແຄວ້ນທົ່ງສາວະດີແຫ່ງອານາຈັກມອນປະເທດມຽນມາແຄວ້ນລົບບູລີແຫ່ງອານາຈັກມອນປະເທດມ່ຽນມາ, ແຄວ້ນລົບບູລີແຫ່ງອານາຈັກສະຫຍາມ.

ຈາກນັ້ນຈຶ່ງມີກຸ່ມຄົນຈຳນວນໜຶ່ງເຄື່ອນຍ້າຍເຮືອນຊານຢູ່ບ້ານຕັ່ງຫວາຍແລະກໍ່ເຄື່ອນຍ້າຍລົງໄປແລ້ວທົ່ວທຸກເມືອງຂອງແຂວງສະຫວັນນະເຂດໃນປັດຈຸບັນ.  ພອ້ມກັນນັ້ນໄດ້ມີກຸ່ມຄົນຈຳນວນໜຶ່ງບໍ່ນ້ອຍເຄື່ອນຍ້າຍລົງມາຢູ່ເຂດເມືອງຕຸ້ມລານເມືອງສາລະວັນແຂວງຫວັນກໍ່ຂະຫຍາຍຕົວລົງມາຢູ່ເຂດເມືອງຂອງແຂວງຈຳປາສັກຈົນຮອດປັດຈຸບັນ. ໃນສະໃໝນັ້ນກຸ່ມຄົນຊົນເຜົ່າກະຕ່າງຈຳນວນໄດ້ພົບພະພຸດທະຮູບໃນຖ້ຳແຫ່ງໜຶ່ງແລ້ວກໍ່ເອົາໄປໄວ້ໃນເຮືອນແຕ່ມີຄົນຊົນເຜົ່າລາວພົບເຫັນກໍ່ເລີຍຂໍເອົາວ່າຈະເອົາໄປໄວ້ຢູ່ແຄ້ວຈຳປາສັກ. ໃນຂະນະຂ້າມນ້ຳຂອງຍ່ານເມືອງເກົ່າ, ເມືອງໂພນທອງ, ພະພຸດທະຮູບອົງນັ້ນຕົກນ້ຳ, ຜູ້ປົກຄອງແຄ້ວນຈຳປາສັກໄດ້ປຸກລະດົມກຳລັງຄົນບໍຈັກວ່າເທົ່າໃດໝຸດນ້ຳຂອງເພື່ອເອົາພະອົງນັ້ນຄືນມາໃຫ້ໄດ້ເຫັນຜູ້ລົ້ມຕາຍຢ່າງຫຼວງຫຼາຍ, ແຕ່ກໍສາມາດເອົາພະອົງນັ້ນໄດ້. ດັ່ງນັ້ນຜູ້ປົກຄອງແຄວ້ນຈຳປາສັກໃນສະໃໝ່ນັ້ນໄດ້ແຕ່ງເສນາອາມາດຂອງພະອົງໄດ້ນຳເອົາຊົນເຜົ່າກະຕ່າງຢູ່ບ້ານອົງຣັງເມືອງຂັນທະບູລີ - ແຂວງສະຫວັນນະເຂດປັດຈຸບັນມາເອົາພະພຸດທະຮູບອົງນັ້ນເຂົາເຈົ້າໝຸດຂອງບໍພໍເທົ່າ. ກໍສາມາດນຳພະພຸດທະຮູບ.ນັ້ນຂຶ້ນມາໄດ້ແລ້ວນຳໄປແລ້ວໃວ້ໃນວັດພະແກ້ວ ທີ່ເມືອງເກົ່າຂຶ້ນກັບເມືອງໂພນທອງແຂວງຈຳປາສັກ.ນັ້ນແຕ່ນັ້ນມາເຈົ້າລາຊະການແຄ້ວຈຳປາສັກໄດ້ມອບໝາຍໃຫ້ເຂົາເຈົ້າເປັນຜູ້ປົກຄອງປົກປັກຮັກສາພະພຸດທະຮູບໄດ້ສິ່ງລົງນັ້ນແລ້ວກໍກາຍເປັນຊື່ວ່າ: ຊົນເຜົ່າພະແກ້ວຕົກມາໃນສະໃໝສັກດີນາສະຫຍາມ ໄດ້ແຫ່ແຕ່ເມືອງເກົ່າເມືອປະເທດ.ພວກມັນໃນຄະນະພັດມີ 6-7 ຄອບຄົວຍອມໄປປະເທດເຂົາເມືອງເພິ່ນກໍໂຕນໜີ - ເຂົ້າໄປລີ້ຊ່ອນຢູ່ຕາມປ່າຕຶບດົງໝາຍອດຫ້ອຍພູເຂົາຜ່ານຂະບວນວິວັດແຫ່ງການດຳລົງຊີວິດ - ແຫ່ງການການດຳລົງຄົງຕົວເຂົາເຈົ້າກໍລົງເຄື່ອນຍ້າຍຢູ່ທົ່ງພຽງ ແລະ ກໍຂະຫຍາຍລວມບ້ານຈົນຮອດປັດຈຸບັນຊົນເຜົ່ານີ້ເອີ້ນຕົນເອງ: "ບູກະຕາງ" ຊົນເຜົ່າອື່ນເອີ້ນເຂົາເວົ້າວ່າ "ກະຕາງ " ຊື່ເອີ້ນ. ຊື່ທີ່ເຂົາມັກເອີ້ນຊື່ທີ່ໃຊ້ທາງການໃນປັດຈຸບັນແມ່ນຊົນເຜົ່າ."ກະຕາງ"ສຳລັບຄວາມໝາຍເຖິງ  ຂີ້ສູດປະກອບມີ 2. ແຊງຊົນເຜົ່າຄື: ກະຕາງ ແລະ ແກ້ວ…

## 2. ອາຊີບຂອງຊົນເຜົ່າກະຕາງ

ຊີວິດທາງດ້ານເສດຖະກິດ. ຂອງຊົນກະຕາງສ່ວນລວງລາຍເພິ່ນປະກອບອາຊີບທາງດ້ານການກະເສດເປັນຕົ້ນການເຮັດໄຮ່ນາປູກເຂົ້າໜຽວ. ນອກຈາກນັ້ນຍັງປູກພືດທີ່ມີທາດແປງ ແລະ ພືດພັນຕາງໆ ເພື່ອຮັບໃຊ້ຄອບຄົວຊົນເຜົ່າກະຕາງ. ນິຍົມລ້ຽງສັດ. ປະເພດເຊັ່ນ: ງົວ, ຄວຍ, ໝູ່, ສັດປີກ ເພື່ອໄວ້ໃນງານວິທີກຳຕ່າງໆຄຽງຄູ່ກັບການກະເສດເຂາເຈົ້າໃຫ້ສຳນານໃນວິຊາຫັດຖະກຳຈັກສານ, ການຊອກຫາເຄື່ອງປ່າຂອງດົງລ່າເນື້ອປ່າມາປຸງແຕ່ງເປັນອາຫານເພື່ອບໍລິໂພກໃນແຕ່ລະວັນ

## 3. ທີ່ຕັ້ງບບ້ານແລະເຮືອນ

ລັກສະນະເຮືອນຂອງ ຊົນເຜົ່າກະຕ່າງ ຕາມປະເພນີຂອງເຂົາເຈົ້າມັກປຸກເຮືອນ ແລະ ຢູ່ເຮືອນຮ້ານການປະກອບຫາໄດ້ຕາມທຳມະຊາດ. ປັດຈຸບັນເຂົາເຈົ້າກໍມີການປ່ຽນແປງຫັນມາປຸກເຮືອນທີ່ມີລັກສະນະຄືເຮືອນຂອງ ຊົນເຜົ່າຜູ້ໄທ ການຈັດແບ່ງຫ້ອງຮູບພາຍນອກເຮືອນອີງຕາມຈຳນວນພົນໃນຄອບຄົວຮີດຄອງກ່ຽວກັບ ຂໍ້ຫ້າມ ແລະການຄະລຳຢູ່ໃນເຮືອນແມ່ນບໍ່ໃຫ້ວາງພາເຂົ້າຊີ້ກັບຂື່ເຮືອນ...



ຮູບພາບສະແດງໃຫ້ເຫັນລັກສະນະເຮືອນ

**4. ເຄື່ອງນຸ່ງຫົ່ມ**



**ຮູບພາບການແຕ່ງກາຍຂອງເຜົ່າກະຕາງ**

ໃນສະໄໝບູຮານຜູ້ຊາຍ ຊົນເຜົ່າກະຕ່າງ ແມ່ນນຸ່ງກະຕ່ຽວຈີ່ງຜົມຍາວ, ເກົ້າຜົມ, ບ່ອງຫູ, ໃສ່ຕ້າງຄືກັບແມ່ຍິງທີ່ເຮັດດ້ວຍກົ່ວ ຫຼື ເງິນ, ສັກຂາລາຍ ທີ່ສະແດງເຖິງຄວາມເກັ່ງກ້າ, ຄວາມຄຶງມີລິດເດດຕັດແຂ້ວແລະເອົາໜັງຄວາມຍເຮັດເກີບ, ສຳລັບແມ່ຍິງແມ່ນນຸ່ງສິ້ນຫົ່ມເສື້ອ, ເກົ້າຜົມ, ບ່ອງຫູ, ໃສ່ຕ້າງທີ່ເຮັດດ້ວຍເງິນ ຫຼື ກົ່ວໃສ່ປອກແຂນ, ໝາກປັດໃສ່ຄໍຍ້ອມແຂນດ້ວຍການເອົາສີໄມ້ເມືອດ, ຍ່າງຕີນເປົ່າ ຫຼື ບາງຄັ້ງກໍ່ຕັດໜັງຄວາຍເຮັດເກີບ. ພາຍ

ຫຼັງຮູ້ທໍ່ຜ້າ, ຕໍາຫູກພວກຜູ້ຊາຍຈຶ່ງມີຄວາມນິຍົມນຸ່ງສິ້ງຂາສັ້ນແບບຊົນເຜົ່າຜູ້ໄທ. ເຄື່ອງນຸ່ງຂອງເຂົາເຈົ້າບໍ່ວ່າຍິງຫຼືຊາຍແມ່ນນຸ່ງເຄື່ອງສີດໍາຍ້ອມດ້ວຍນໍ້າເງິນ, ເດັກນ້ອຍອາຍຸ 6 ປີລົງມາສ່ວນຫຼາຍໄດ້ເປືອຍໂຕ.

## 5. ອາຫານແລະເຄື່ອງດື່ມ

ຊົນເຜົ່າກະຕ່າງ ມັກບໍລິໂພກເຂົ້າໜຽວອາຫານປະເພດແກງ, ປີ້ງ, ຈີ່, ລາບດິບດ້ວຍທີ່ມີລົດຊາດເຜັດອາຫານສ່ວນຫຼາຍແມ່ນໄດ້ມາຈາກທໍາມະຊາດເປັນຕົ້ນແມ່ນປາ, ຊີ້ນສັດປ່າ ແລະ ອື່ນ. ສ່ວນທີ່ສັດລ້ຽງເຂົາເຈົ້າຮັບປະທານໄດ້ສະເພາະໃນເວລາເຮັດຮີດຄອງຄື: ບຸນລະປີບ ເວລາຮັບປະທານອາຫານໄດ້ມີຂໍ້ຫ້າມ ແລະ ຂະລໍາລູກທີ່ມີຜົວ ຫຼື ເມຍແລ້ວ (ໄພ້ ຫຼື ເຂີຍ) ກິນເຂົ້າຮ່ວມນໍາແມ່ພໍ່ໄດ້ສະເພາະຜູ້ທີ່ມລູກເມຍ ຫຼື ຜົວກໍ່ກິນເຂົ້າເປັນຄູ່ພ້ອມຄອບຄົວລູກເຕົ້າຂອງຕົນ.



ຮູບອາຫານຫຼັກຂອງຊົນເຜົ່າ

ຊົນເຜົ່າກະຕາງມັກດື່ມເຫຼົ້າໄຫ, ດື່ມນໍ້າດິບ, ມັກສູບຢາປຸກງດ້ວຍກອກດິນ, ກອກໄມ້ທີ່ເຂົາເຈົ້າປູກຢູ່ແຄມຫ້ວຍ ຫຼື ໄຮ່ ໂດຍບໍ່ຈໍາແນກປະເພດຫຼືວ່າຮຸ່ນຄົນ.

## 6. ຄວາມເຊື່ອຖື ແລະ ງານບຸນ

ວັດທະນະທໍາຮີດຄອງປະເພນີ, ຄວາມເຊື່ອຖືຂອງ ຊົນເຜົ່າກະຕ່າງ ແມ່ນມີລັກສະນະແຕກກັນຄື: ບັນດາເຜົ່າພັນໃນຕະກຸນບຣູເຂົາເຈົ້າມີຄວາມເຊື່ອຖືມາທາງເລື່ອງຜີເຊັ່ນ: ຜີພໍ່ແມ່, ຜີບັນພະບຸລຸດ,(ຜີເຮືອນ) , ເຮືອນກະດຽດ (ຜີຮັກແຕ່ລະສະໄໝ່ແຕ່ລະເສັ້ນຄົນ)ຜີກໍາເນີດ, ຜີກິນເຂົ້າ, ຜີນີ້ແມ່ນສໍາຄັນທີ່ສຸດ, ຖ້າຜິດຕ້ອງຂ້າຄວາຍດໍາ ແລະຄວາຍດ່ອນເຊື່ອຖືງືມງວາຍຄຽງຄູ່ແມ່ນສໍາຄັນທີ່ເຜົ່າກະຕ່າງມີຄວາມສໍາຄັນນິຍົມຮຽນວິຊາອາຄົມຮຽນເວດມົນກົມກະຖາຮຽນເປັນໝໍດູ, ໝໍເຢົາ, ໝໍຜີ ຄວາມເຊື່ອນີ້ແມ່ນສະແດງໃຫ້ເຫັນລິດເດດເຮັດໃຫ້ຄົນອື່ນເຄົາລົບນັບຖືຕົນເອງ

ປະເພນີທີ່ສຳຄັນຂອງຊົນເຜົ່າກະຕ່າງໃນຮອບປີໜຶ່ງເຂົາເຈົ້າໄດ້ເຮັດບຸນປີໃໝ່ເຊິ່ງພາສາເຂົາເຈົ້າເອີ້ນວ່າ: “ຈະງະ “ ນອກຈາກນັ້ນຍັງມີພິທີກຳລ້ຽງຜີຫຼາຍຄັ້ງເປັນຕົ້ນ: “ລະປີບ” ໂດຍຈະມີການຂ້າຄວາຍເພື່ອຖວາຍຜີດັ່ງກ່າວ.

**ກ. ປະເພນີງານການແຕ່ງດອງ**

ເຂົາເຈົ້າມີການປຶກສາຫາລືກັນກ່ອນວ່າ: ຍິງຕ້ອງໄປຢູ່ກັບຝ່າຍຊາຍເພາະຮີດຄອງປະເພນີນັບຖື ຫຼື ເຊື່ອແນວນັ້ນເພາະຍິງຕ້ອງໄປທຳຄວາມເຂົ້າໃຈ ແລະ ນັບຖືຫຼືວ່າເປັນການໃຫ້ກຽດຝ່າຍຊາຍກ່ອນ. ວິທີການຈັດງານແຕ່ງດອງແມ່ນເອົາຊີ້ນຄວາຍເປັນຫຼັກເພາະຜີພໍ່, ຜີແມ່ມີວົງຕະກຸນນັ້ນຈະຕ້ອງໄດ້ຮັບຮູ້ນຳຫຼືເວົ້າອີກຢ່າງໜຶ່ງວ່າວັດທະນະທຳຂອງຊົນເຜົ່າກະຕ່າງ

**ຂ. ປະເພນີການຕາຍ**

ເມື່ອປະຊາຊົນຊົນເຜົ່າກະຕ່າງມີການຊີວິດແລ້ວຕ້ອງມີການທຳພິທີກຳເຊັ່ນ: ຮຽກຮ້ອງເອົາຄົນໃນບ້ານຈະທຳພິທີງານສົບຕ້ອງຈັດຂຶ້ນໃນຕອນນັ້ນເອົາໄປຝັງໄວ້. ນອກນັ້ນງານວິທີກໍ່ແລ້ວວິທີຂອງເຂົາຈະຕ່າງກັບເຜົ່າອື່ນເພາະເຂົາບໍ່ມີການເຮັດບຸນທຳທານ, ບໍ່ມີການຈັດພິທີກຳຕ່າງໆ

## 7. ສິລະປະ, ເຄື່ອງດົນຕີພື້ນເມືອງ

ສຳລັບເຄື່ອງດົນຕີພື້ນເມືອງປະຈຳເຜົ່າແມ່ນມີກອງແລະດ້ານສິລະປະວັນນະຄະດີຊົນເຜົ່າກະຕາງແມ່ນມີບົດຮ້ອງ, ທຳນອງເສບກອນຂັບລຳພື້ນສືບບູຮານ, ກອນຜະຫຍາ, ຄຳສຸພາສິດແລະນິທານພື້ນເມືອງ.



ຮູບພາບເຄື່ອງດົນຕີພື້ນເມືອງ

## 8. ດ້ານພາສາປາກເວົ້າ

ພາສາຊົນເຜົ່າກະຕາງຈັດເຂົ້າໃນໝວດພາສາມອນ-ຂະແມສາຂາພາສາບຣູອິກຫຼືມອນບູຮານເຂົາເຈົ້າມີຕົວໜັງສື ຂຽນພາສາປາກເວົ້າຂອງຊົນເຜົ່າກະຕ່າງຄ້າຍຄືກັບພາສາປາກເວົ້າຂອງຊົນເຜົ່າຕຣີ, ມະກອງ, ຕະໂອ້ຍ, ຊວ່ຍ, ປະ ໂກະ, ເຂົາເຈົ້າສາມາດເວົ້າພາສາລາວແລະພາສາຕ່າງປະເທດໄດ້ດີເຊິ່ງມີຄວາມສະດວກໃນການພົວພັນແລກປ່ຽນ ເສດຖາກິດ, ວັດທະນະທຳກັບບັນດາຊົນເຜົ່າເຫຼົ່ານັ້ນໄດ້ດີ

**ການສົມທຽບພາສາລາວກັບພາສາກະຕ່າງ**

| ລ/ດ | ພາສາລາວ | ພາສາກະຕ່າງ |
|---|---|---|
| 1 | ສະບາຍດີ | ກວາອອັດ |
| 2 | ໂຊກດີ | ອອນໄມໃຊ |
| 3 | ຂອບໃຈ | ຕ້ອຍມິດ |
| 4 | ຂໍໂທດ | ແຕະເອີ |
| 5 | ເຈົ້າຊື່ຫຍັງ? | ມະນິດໄມແອນເຈົາ? |
| 6 | ເຮັດຫຍັງຢູ່? | ຕຽວມິດສະນົວໃນ? |
| 7 | ກິນເຂົ້າແລ້ວບໍ? | ຈາດອຍແລະບໍ? |
| 8 | ລາກ່ອນ | ເກົາເຈົານໍ? |
| 9 | ບໍ່ເປັນຫບັງ | ຕະກັອດອັງເຕົາ |
| 10 | ພົບກັນໃໝ່ | ປະລຳພົບນະອາຍມໍ |

❖ **ຊົນເຜົ່າລາຫູ**

**1. ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ**

ຊົນເຜົ່າລາຫູ ມີຖິ່ນຖານລຳເນົາເດີມຕັ້ງຢູ່ທິດຕາເວັນອອກສ່ຽງໃຕ້ຂອງປະເທດຈີນ, ອົບພະຍົບລົງມາທາງພາກໃຕ້ ແລະ ຕັ້ງພູມລຳເນົາຢູ່ບໍລິເວນເຂດດິນແດນມຽນມາ - ຈີນທາງທິດຕາເວັນຕົກຂອງເມືອງວ້າແລະທິດຕາເວັນອອກຢູນານ, ຕໍ່ມາຮອດຕົ້ນສາຕະວັດທີ 19 ເຂົາເຈົ້າໄດ້ມາຕັ້ງບ້ານເຮືອນ, ຢູ່ເຂດກວາງຕຸງ, ຂອງປະເທດມຽນມາແລະທ້າຍສາຕະວັດທີ 19 ຊົນເຜົ່ານີ້ໄດ້ເຄື່ອນຍ້າຍລົງມາທາງຕອນໃຕ້ໃນຂະນະດຽວກັນນີ້ກໍ່ມີການແຍກກັນຕັ້ງຖິ່ນຖານຢູ່ລາສະອານາຈັກໄທປະເທດຫວຽດນາມແລະມີຈຳນວນໜຶ່ງກໍ່ເຂົ້າມາຢູ່ບັນດາແຂວງພາກເໜືອຂອງປະເທດລາວເຮົາ.

ຊົນເຜົ່ານີ້ເອີ້ນຕົນເອງວ່າ: "ມູເຊີ" ຄຳວ່າ "ມູເຊີ" ມີຄວາມໝາຍແນວໃດນັ້ນກໍ່ຍັງບໍ່ທັນຮູ້ຊັດເຈນຄຳວ່າ "ລາຫູ" ມາຈາກຄຳວ່າ : " ລ້າຮູ " ເຊິ່ງເຜົ່າອື່ນເອີ້ນເຂົາເຈົ້າວ່າ: " ມູເຊີ " ມາຈາກຄຳວ່າ: " ລ້າຮູ " ໃນຄວາມໝາຍຂອງຊົນເຜົ່ານີ້ແປວ່າ: " ລ້ຽງເສືອ ". " ລ້າ " ແປວ່າ: " ເສືອ " ແລະ " ຮູ " ແປວ່າ: " ລ້ຽງ " ຄວາມໝາຍທີ່ແທ້ຈິງກໍ່ຄື: " ຜູ້ລ້ຽງເສືອນັ້ນເອງ ".

ຊົນເຜົ່າລາຫູປະກອບຫຼາຍດ້ວຍຫຼາຍເຊື້ອແຊງເຊັ່ນ: ລາຫູນະ( ມູເຊີຂາວ ), ລາຫູຊີ( ມູຊີດຳ) ແລະ ລາຫູເຊ ( ມູຊີແດງ ຫຼື ກຸ່ຍ )



ມູເຊີດຳເອີ້ນຕົນເອງວ່າ: ລະຫູນະ ອາດກ່າວໄດ້ວ່າພວກນີ້ເປັນມູເຊີດັ້ງເດີມທີ່ອົບພະຍົບມາຈາກທາງຕາເວັນອອກສ່ຽງເໜືອຂອງມຽນມາ ແລະ ຢູນານ

ມູເຊີແດງເອີ້ນຕົນເອງວ່າ: ລາຫູນິຢ່າ ທີ່ເອີ້ນວ່າມູເຊີແດານັ້ນມີຄວາມໝາຍ 2 ຢ່າງຄືແຖບສີແດງຜືນຜ້າຂອງຜູ້ຍິງ ຫຼື ອາດໝາຍເຖິງພະລານປ່າກໍ່ໄດ້

ມູລາຫູຍີ ຫຼື ມູເຊີເຫຼືອງເຊິ່ງຄົນໄທ ແລະ ໄທໃຫຍ່ເອີ້ນວ່າ: ມູເຊີກຸ່ຍ ພວກນີ້ເປັນມູເຊີທີ່ມາຈາກທາງໃຕ້ແບ່ງເປັນກຸ່ມຍ່ອຍໄດ້ 4 ກຸ່ມຄື: ມູເຊີຊີນະຕໍ, ມູເຊີຊີອະຄໍອະພາທັງ 2 ກຸ່ມນີ້ຢູ່ທາງໃຕ້ຂອງຢູນານອີກ 2 ກຸ່ມຄື: ມູເຊີຊີບາຫຼາ ແລະ ມູເຊີຊີບາກຽວອາໄສຢູ່ໃນລັດຊຽງຕຸງ, ໃນມຽນມາ ແລະ ໃນປະເທດໄທ.

ມູເຊີເນເລ ເອີ້ນຕົນເອງວ່າ: ນະໝ່ຽວມາແຕ່ຄັ້ງທີ່ຍັງຕັ້ງຫຼັກແຫຼ່ງຢູ່ໃນຢູນານ ແລະ ພວມມາເອີນຕົນເອງວ່າມູເຊີເນເລເມື່ອອົບພະຍົບເຂົ້າມາປະເທດໄທ ຄົນໄທເອີ້ນພວກນີ້ວ່າ: ມູເຊີດຳ ໂດຍຈາກລັກສະນະການແຕ່ງກາຍດ້ວຍເສື້ອຜ້າຊຸດສີດຳ ມູເຊີເນເລໃນ ປະເທດໄທ ມີສາມກຸ່ມໄດ້ແກ່: ມູເຊີພະຄໍ, ມູເຊີນະມີ, ແລະ ມູເຊີມະເຫຼາະ(ມະລໍ).

ປັດຈຸບັນໃນປະເທດໄທມີ ຊົນເຜົ່າລາຫູ ອາໄສໂດຍກະຈາຍຢູ່ຕາມໝູ່ບ້ານຕ່າງໆຕາມແນວຊາຍແດນໄທ-ພະມ້າ ກວ່າ 800 ໝູ່ບ້ານພື້ທີ່ທີ່ມີຊາວລາຫູອາໄສຢູ່ຫຼາຍໄດ້ແກ່: ຊຽງລາຍ, ແມ່ຮ້ອງສອນຊຽງໃໝ່ ແລະ ລຳປາງ

ໂດຍສະເພາະພື້ນທີ່ຕິດຊາຍແດນສ່ວນໃຫຍ່ແລ້ວຊົນເຜົ່າລາຫູມັກອາໄສປະປົນກັບຊົນເຜົ່າອື່ນໆ. ຫຼື ຄົນໄທມີພຽງສ່ວນນ້ອຍທີ່ຢູ່ລວມກັນເປັນກຸ່ມ ຫຼື ເປັນໝູ່ບ້ານເຜົ່າລາຫູທີ່ໃຫຍ່ທີ່ສຸດໃນປະເທດໄທຄືລາຫູແດງຊຶ່ງມີການນັບຖືຜີໂດຍໂຕໂບ ຫຼື ຜູ້ທາງສາສະໜາສ່ວນລາຫູດຳ ແລະ ລາຫູເຫຼືອງກໍ່ມີການນັບຖືຜີເຊັ່ນກັນນອກຈາກນີ້ເຜົ່າລາຫູກໍ່ຍັງມີການນັບຖືສາສະໜາຄິດອີກດ້ວຍ.

## 2. ອາຊີບຂອງຊົນເຜົ່າລາຫູ

ການດຳເນີນວິຖີຊີວິດທາງດ້ານເສດຖະກິດໃນເມື່ອກ່ອນ ຊົນເຜົ່າລາຫູ ມີອາຊີບເຮັດໄຮ່ປູກເຂົ້າ, ປູກຢາຝິ່ນ , ເຂົາເຈົ້າມີຄວາມສຳນານໃນການຖາງປ່າຟັນຕົ້ນໄມ້ເພື່ອເປັນບ່ອນທຳການຜະລິດ, ລ້ຽງຊີວິດປະຈຳວັນຍ້ອນໃນອາດີດຜ່ານມາເຂົາເຈົ້າຍັງບໍ່ທັນເຂົ້າໃຈວ່າ: ການຕັດໄມ້ທຳລາຍປ່າ, ໄມ້ເປັນຂອງທຳມະຊາດມີການຈະເລີນເຕີບໂຕຂຶ້ນມາແທນກັບສິ່ງທີ່ຖືກທຳລາຍໄປທັງໆທີ່ວ່າ: ຊີວິດຂອງເຂົາມີການຜູກພັນກັບປ່າໄມ້ ປ່າໄມ້ເປັນແຫຼ່ງອາຫານ, ເປັນສະໜອງສິ່ງຕ່າງໆໃຫ້ແກ່ການດຳລົງຊີວິດ, ຂອງເຂົາເຈົ້າເຖິງຢ່າງໃດກໍ່ຕາມ. ເມື່ອການເວລາໄດ້ມີການປ່ຽນແປງໄປປະກອບກັບການເພີ່ມຂຶ້ນຂອງຈຳນວນປະຊາກອນຊົນເຜົ່າລາຫູໄດ້ພະຍາຍາມປັບຕົນເອງມີວິຖີຊີວິດການດຳລົງຊີວິດໃຫ້ສອດຄ່ອງເໝາະສົມກັບການເວລາ.

ປັດຈຸບັນມີການເຮັດໄຮ່ແບບໝູນວຽນປະສົມປະສານກັບການເຮັດນານອກຈາກນີ້ກໍ່ຍັງປູກພືດ, ສຳຮອງອີກຫຼາຍຊະນິດ, ສັດທີ່ເຂົາເຈົ້າມັກລ້ຽງໄດ້ແກ່: ໄກ່ແລະໝູ. ທັງນີ້ກໍ່ຍ້ອນວ່າ: ສັດດັ່ງກ່າວມີຄວາມສຳຄັນໃນການປະກອບເຂົ້າໃນພິທີກຳຕ່າງໆທີ່ພົວພັນເຖິງຊີວິດປະຈຳວັນຂອງເຂົາເຈົ້າ, ສ່ວນສັດປະເພດງົວ, ຄວາຍ, ບໍ່ນິຍົມລ້ຽງ, ຄຽງຄູ່ກັນນີ້ຊົນເຜົ່າລາຫູຍັງມີມູນເຊື້ອໃນການຫຍິບປັກຖັກແສ່ວ, ສັກກສານເຄື່ອງຫັດຖະກຳແລະເຄື່ອງປ່າຂອງດົງເພື່ອຮັບໃຊ້ການດຳລົງຊີວິດແລະການແລກປ່ຽນສິ່ງຂອງທີ່ຈຳເປັນເຊິ່ງບໍ່ສາມາດຜະລິດໄດ້ໃນຊຸມຊົນ.



## 3. ພາສາປາກເວົ້າຂອງຊົນເຜົ່າລາຫູ

ພາສາຊົນເຜົ່າລາຫູ ຈັດເຂົ້າໃນໝວດພາສາຈີນ - ຕິເບດ, ສາຂາຕິເບດ-ມຽນມາ, ເຂົາເຈົ້າບໍ່ມີຕົວໜັງສືຂຽນ, ການປາກເວົ້າແຕ່ລະແຂວງຈະຜິດສຳນຽງແຕກຕ່າງກັນເລັກນ້ອຍ, ແຕ່ກໍ່ສາມາດສື່ສານກັນໄດ້ບໍ່ວ່າຈະຢູ່ລາວ, ຈີນ, ມຽນມາ, ຫວຽດນາມ, ແລະ ລາຊະອານາຈັກໄທ

ການສົມທຽບລະຫວ່າງພາສາລາວກັບພາສາລາຫູ

| ລ/ດ | ພາສາລາວ | ພາສາລາຫູ |
|---|---|---|
| 1 | ສະບາຍດີ | ຂະແລຢາແມ |
| 2 | ໂຊກດີ | ແຊຈະສາແມ |
| 3 | ຂອບໃຈ | ແຊຈາຊາຈະແມ |
| 4 | ຂໍໂທດ | ປີສີມະແຮະແມ |
| 5 | ເຈົ້າຊື່ຫັຍງ? | ນໍອອໍສຈີອາຫູເລ? |
| 6 | ເຮັດຫຍັງຢູ່? | ອາຫູເປເລ? |
| 7 | ກິນເຂົ້າລະບໍ? | ອາຈ່າໂປລາ? |
| 8 | ລາກ່ອນ | ກອຍສານີ |
| 9 | ພົບກັນໃໝ່ | ເຕເປະມໍຕະມໍເກາະ |
| 10 | ບໍ່ເປັນຫຍັງ | ປີຊິມະເຮະ |
| 11 | ໄປຫຍັງ | ອາໄລເລ |

## 4. ທີ່ຕັ້ງບ້ານ ແລະ ເຮືອນ

ຊົນເຜົ່າລາຫູ ມັກຕັ້ງບ້ານເຮືອນຢູ່ບ່ອນທີ່ສູງຕາມສັນພູ ຫຼື ເຈິ້ຍພູທີ່ມີຄວາມສູງແຕ່ 1000 m ເໜືອລະດັບນ້ຳທະເລຂຶ້ນໄປ. ປັດຈຸບັນຄ່ອຍໆຍ້າຍລົງມາບ່ອນຕ່ຳລັກສະນະຂອງເຮືອນຕາມປະເພນີເຂົາເຈົ້າຈະມັກສ້າງແບບເຮືອນຮ້ານ, ແຜນຜັງເຮືອນອາດຈະແຕກຕ່າງກັນໄປຕາມຖານະຄວາມເປັນຢູ່ແລະຈຳນວນສະມາຊິກພາຍໃນຄອບຄົວ. ໂດຍທົ່ວໄປແລ້ວຈະປະກອບດ້ວຍ 2 ຫ້ອງນອນຂຶ້ນໄປຄື: ຈະມີຫ້ອງນອນ, ຫ້ອງຮັບແຂກ ຫຼື ຫ້ອງພັກຜ່ອນ ແລະ ສະຖານທີ່ແຕ່ງກິນ, ການປຸກເຮືອນແມ່ນບໍ່ໄດ້ເລືອກມື້ເລືອກຍາມປຸກເວລາໃດນັ້ນຕ້ອງອີງໃສ່ພາບຕົວຈິງ.

ເວລາປຸກເຮືອນບໍ່ໃຫ້ຫຼັງຄາເຮືອນຊື່ກັນຍ້ອນເຂົາເຈົ້າເຊື່ອວ່າຖ້າຫຼັງຄາເຮືອນຊື່ກັນຈະເຮັດໃຫ້ຢູ່ບໍ່ສະບາຍມັກເຈັບເປັນ ເວລາຂຶ້ນເຮືອນໃໝ່ເຂົາເຈົ້າຈະມີພິທີກຳຄຶກຄື້ນທີ່ສຸດເພາະຊົນເຜົ່ານີ້ມີຄວາມເຊື່ອວ່າຍິ່ງຄຶກຄື້ນ, ຍິ່ງມ່ວນຊື່ນເທົ່າໃດກໍ່ຈະເຮັດໃຫ້ຄອບຄົວອຸດົມສົມບູນຂຶ້ນເທົ່ານັ້ນ,ຈຶ່ງໄດ້ມີການຂ້າສັດຕ່າງໆເພື່ອຍາດຕິພີ່ນ້ອງທີ່ມາຊ່ວຍໃນການແຕ່ງເຮືອນກິນຕາມຖານະເສດຖາກິດຄອບຄົວ.



ຮູບ ພາບລັກນະຂອງເຮືອນຊົນເຜົ່າລາຫູ

## 5. ເຄື່ອງນຸ່ງຫົ່ມ

ເຂົາເຈົ້າມີການແຕ່ງການມີການນຸ່ງຫົ່ມທີ່ຖືເປັນເອກະລັກສະເພາະຂອງເຜົ່າຕົນເຊິ່ງປະດັບເອ້ຍ້ອງ, ຖັກແສ່ວດ້ວຍສີສັນລວດລາຍຕ່າງໆທີ່ສວຍສົດງົດງາມຈາກສີໄມ້ລາຍມືອັນຄ່ອງແຄ້ວຂອງເອື້ອຍນ້ອງແມ່ຍິງສ່ວນຫຼາຍແມ່ຈະເຫັນໃນເວລາເທສະການຈັດງານບຸນປະຈຳປີ,



ຮູບພາບການແຕ່ງກາຍຂອງເຜົ່າລາຫູ

## 6. ອາຫານ ແລະ ເຄື່ອງດື່ມ

ຊົນເຜົ່າລາຫູ ແມ່ນນິຍົມກິນອາຫານລົດຊາດຈາງ ອາຫານທີ່ພວກເຂົາເຈົ້າເຮັດກິນໃນແຕ່ລະວັນນັ້ນແມ່ນຈະກິນອາຫານປະເພດແກງໄກ່, ແກງໝູ, ຂົ້ວຜັກ, ແຈ່ວນ້ຳປາ, ລາບຊີ້ນໝູ, ປີ້ງປາ, ດື່ມນ້ຳດິບ, ເຫຼົ້າໃນເວລາມີງານບຸນໃນບ້ານ ຫຼື ມີແຂກມາຢ້ຽມຢາມ.



ຮູບພາບອາຫານຫຼັກປະເພດຕ່າງໆ

## 7. ຄວາມເຊື່ອຖື

ຊົນເຜົ່າລາຫູມີພື້ນຖານຄວາມເຊື່ອຖືໃນເລື່ອງຜີ, ຜີມີອຳນາດທີ່ສຸດໄດ້ແກ່ຜີຟ້າ, ແລະແມ່ນບັນດາຜີດີສຳລັບພວກເຂົາ, ແຕ່ກົງກັນຂ້າມຜີຮ້າຍຜີຊົນເຜົ່ານີ້ເກັງກົວນັ້ນກໍ່ມີຢູ່ຫຼາຍເຊັ່ນ: ຜີນ້ຳ, ຜີປ່າ, ຜີໄຮ່, ຜີພູເຂົາແລະອື່ນໆ.

**ງານບຸນປະເພນີ:** ໃນຮອບວຽນປີໜຶ່ງຂອງຊົນເຜົ່າລາຫູ ຈະມີການຈັດບຸນປະເພນີ ແລະ ມີພິທີກຳຕ່າງໆ. ພິທີກຳອັນສຳຄັນຂອງເຂົາເຈົ້າແມ່ນເທສະການປີໃໝ່ເຊິ່ງຈັດຂຶ້ນໃນລະຫວ່າງເດືອນມັງກອນຫາເດືອນກຸມພາຄຽງຄູ່ກັນນັ້ນ, ເຂົາເຈົ້າຍັງມີພິທີກຳທີ່ພົວພັນເຖິງລະດູການຜະລິດໃນການຂໍພອນສິ່ງສັກສິດເພື່ອໃຫ້ພືນລະປູກຈະເລີນງອກງາມມີຄວາມອຸດົມສົມບູນຕະຫຼອດປີ.

**ສິລະປະວັນນະຄະດີ:** ຊົນເຜົ່າລາຫູມີເຄື່ອງດົນຕີພື້ນເມືອງປະຈຳເຜົ່າຂອງຕົນເອງແມ່ນ: ແຊ່ງ, ກອງ, ປີ່, ແລະ ມີບົດກອນລຳ, ກອນຂັບ, ກອນຜະຫຍາ ແລະ ອື່ນໆ. ສິ່ງທີ່ກ່າວມານັ້ນແມ່ນເຂົາເຈົ້າຈະຮ້ອງເສບໃນເວລາມີງານປະຈຳຊົນເຜົ່າ, ງານແຕ່ງດອງ ແລະ ອື່ນໆ.





ຮູບພາບກອງແລະແຊ່ງເປັນສິລະປະພື້ນເມືອງ

## ❖ ຊົນເຜົ່າໄທເໜືອ

### 1. ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ

ຊົນເຜົ່າໄທເໜືອ ແມ່ນຊົນເຜົ່າໜຶ່ງທີ່ນອນຢູ່ໃນວົງຄະນາຍາດແຫ່ງງຊາດລາວເຂົາເຈົ້າໄດ້ຕັ້ງພູມລຳເນົາບົນດິນດອນຕອນນີ້ຫຼາຍສາຕະວັດມາແລ້ວ, ມີປະຫວັດຄວາມເປັນມາ ແລະ ເຄື່ອນຍ້າຍມາຈາກດິນແດນຕອນໃຕ້ຂອງປະເທດຈີນເຊິ່ງເຄື່ອນຍ້າຍເຂົ້າມາປະເທດລາວໃດມີຫຼາຍໄລຍະ ແລະຫຼາເສັ້ນທາງທີ່ແຕກຕ່າງກັນຄືເຄື່ອນຍ້າຍເຂົ້າມາລາວໂດຍຜ່ານແຂວງໄລເຈົາ ແລະ ແຂວງເຊີນລາ ຂອງ ປະເທດຫວຽດນາມ ມີບາງກຸ່ມກໍເຄື່ອນຫຍ້າຍມາຈາກດິນແດນຕອນໃຕ້ປະເທດສປຈີນ

ຊົນເຜົ່ານີ້ເອີ້ນວ່າ: " ໄທເໜືອ" ຊົນເຜົ່າອື່ນເອີ້ນ, ຊື່ທີ່ເຂົາເຈົ້າມັກແມ່ນຊື່ທີ່ໃຊ້ທາງການໃນປັດຈຸບັນກໍ່ແມ່ນຊົນເຜົ່າໄທເໜືອ. ສຳລັບຊື່ເອີ້ນໄທເໜືອການນຳເອົາສອງຄຳເວົ້າມາລວມເຂົ້າກັນຄື: ໄທໝາຍເຖິງ "ທິດເໜືອ" ໝາຍຄວາມວ່າ: ສະໄໝທີ່ຕັ້ງຫຼັກປັກຖານຢູ່ປະເທດຈີນໃນໄລຍະປະຫວັດສາດ.






ຮູບພາບວິຖີຊີວິດຂອງເຜົ່າໄທເໜືອ

### 2. ອາຊີບຂອງເຜົ່າໄທເໜືອ

ການດຳເນີນຊີວິດທາງເສດຖະກິດຂອງຊົນເຜົ່າໄທເໜືອແມ່ນປະກອບອາຊີບທາງການກະເສດເປັນຕົ້ນ: ການເຮັດນາປູກເຂົ້າໜຽວ, ເຮັດສວນ, ລ້ຽງສັດນາໆຊະນິດ, ດຳເນີນຫັດຖາກຳຈັກສານຕຳຫູກ, ທໍໄໝ, ສ່ວນໄທເໜືອຢູ່ເມືອງສິງນອກຈາກທີ່ກ່າວມາແລ້ວນັ້ນຍັງມີຄວາມສຳນານໃນການເຮັດນ້ຳສະອິວ, ເຂົ້າປຸ້ນ, ໝາກຖົ່ວເໜົ່າເປັນສ






ຮູບພາບເຄື່ອງຫັດຖະກຳຈັກສານ ຕັດຫຍິບ

## 3. ທີ່ຕັ້ງບ້ານແລະເຮືອນ




ຮູບພາບລັກສະນະເຮືອນຂອງໄທເໜືອ

ຊົນເຜົ່າໄທເໜືອ ມັກຕັ້ງເຮືອນຊານບ້ານຊ່ອງຢູ່ເຂດທີ່ມີຫ້ວຍນ້ຳໄຫຼຕະຫຼອດປີທີ່ມີຄວາມເໝາະສົມໃນການເຮັດເໝືອງຝາຍເພື່ອເອົານ້ຳເຂົ້າມາເຂົາເຈົ້າມີພິທີກຳໃນການຊອກທີ່ດິນຕັ້ງເຮືອນເປັນຕົ້ນ: ເມື່ອຊອກເຫັນທີ່ດິນມີຄວາມເໝາະສົມຈຶ່ງຈະຕັ້ງບ້ານເຮືອນແລ້ວໄດ້ສ່ຽງໂດຍການຂຸດຂຸມເອົາເຂົ້າເປືອກສາມເມັດບັນຈຸໃສ່ຫົວກັນລົງຂຸມ, ເອົາໃບໄມ້ອັດປາກຂຸມສາມສິບນາທີຈຶ່ງຄ່ອຍໄຂເບິ່ງສ່ວນໄທເໜືອຢູ່ເມືອງສິງແມ່ນເຮັດເຂົ້າຕົ້ມຄື: ຂຸດຂຸມເປັນວົງມຸນລົງສອກໜຶ່ງຕອກເຫຼັກເຄິ່ງກາງເອົາເຂົ້າເປືອກວ່ານອ້ອມເຫຼັກເສົາ, ເອົາໃບໄມ້ປົກຄືນໜຶ່ງຖ້າຫາກເມັດເຂົ້າຂະຫຍາຍຕັ້ງບ້ານບໍ່ໄດ້.

ລັກສະນະເຮືອນຂອງ ຊົນເຜົ່າໄທເໜືອ ແມ່ນມີຄວາມແຕກຕ່າງກັນ ແລະ ຄ້າຍຄືກັນໃນແຕ່ລະທ້ອງຖິ່ນເຊັ່ນ: ໄທເໜືອຢູ່ເມືອງຍອດອູແມ່ນປຸກສ້າງເຮືອນແບບຕິດດິນ, ເສົາເຮັດດ້ວຍໄມ້ແກ່ 4 ຫຼ່ຽມ, ແອ້ມດ້ວຍການຕຳດິນໃສ່, ມຶງດ້ວຍຫຍ້າຄາ ແລະ ໃບຄໍ້ ມີລວງຍາວ 8-10 ແມັດ, ກ້ວາງ 4-6 ແມັດ ປະກອບມີ 3-5 ຫ້ອງ (ນັບຫວ່າງເອົາ) ແລະແບ່ງອອກເປັນ 2-3 ຫ້ອງຂະໜານກັນຕາມລວງກ້ວາງ, ສ່ວນໄທເໜືອຢູ່ເມືອງສິງແມ່ນປຸກເຮືອນຮ້ານປູແປ້ນ ແລະ ແອ້ມແປ້ນ, ມຸງດ້ວຍຫຍ້າ, ລວງຍາວ 6-20 ແມັດ, ກວ້າງ 6 ແມັດ, ມີ 3-10 ຫ້ອງ (ນັບຫ່ວາງເສົາ) ການຈັດແບ່ງຫ້ອງເຮືອນແມ່ນອີງຕາມສາມາຊິກຂອງຄອບຄົວ, ສຳລັບຂໍ້ຫ້າມ ແລະ ການຄາລຳພາຍໃນຫ້ອງເຮືອນກໍ່ຄ້າຍກັນກັບຊົນເຜົ່າອື່ນໆເຊັ່ນ: ຫ້າມເຂົ້າຫອ້ງນອນໂດຍສະເພາະຫ້ອງນອນຂອງພໍ່ແມ່ເຊິ່ງຖືວ່າ

ເປັນຫ້ອງຂອງຜີເຮືອນ. ສ່ວນຄົນທາງນອກແມ່ນເຂົ້າຫ້ອງນອນບໍ່ໄດ້, ກໍລະນີລວງເຂົ້າກໍ່ຖືກປັບໄໝ ສອງກໍລະນີຄື: ເງິນ 5 ໝື່ນ, ພາເຂົ້າ 1 ພາ, ເພື່ອແປງຜີ, ຖ້າມີເຄື່ອງເສຍກໍ່ຕ້ອງໃຊ້ຕາມມູນຄ່າບວກກັບແປງຜີເຮືອນ. ສ່ວນຊົນເຜົ່າໄທ ເໜືອຢູ່ເມືອງຍອດອູກໍລະນີເຄື່ອງບໍ່ເສຍຈະຕ້ອງປັບໄໝດ້ວຍເຫຼົ້າ 1 ລິດ, ໄກ່ 2 ໂຕ, (ຜູ້ 1 ແມ່ 1 ) ແລະ ເງິນ 2 ໝື່ນ.

## 4. ເຄື່ອງນຸ່ງຫົ່ມ

ເຜົ່າໄທເໜືອກໍ່ມີວັດທະນະທຳການນຸ່ງຖືເອ້ຍ້ອງທີ່ມີຄຸນລັກສະນະຂອງຊົນເຜົ່າຕົນຕາມແຕ່ລະທ້ອງຖິ່ນຄື: ຜູ້ຊາຍນຸ່ງໂສ້ງສີດຳຫົວໃຫ່ຍສອງໜ້າໃຫ່ຍ, ຫົ່ມເສື້ອແຂນຍາວ, ແຂນສັ້ນສີດຳ, ຜ້າດຳທີ່ຍ້ອມດ້ວຍນ້ຳນິນຄຽນຫົວຍາວສາມວາຈິ່ງຜົມຍາວ,ເກົ້າຜົມງ່ຽງໄປທາງຫຼັງມີປອກແຂນເຮັດດ້ວຍເງິນ, ສັກຂາ, ສັກແຂນ, ແອວ,ເອິກແລະຫຼັງລາຍໂດຍຈ້າງໃຫ້ຄົນອື່ນສັກໃຫ້ດ້ວຍລາຄາສີ່ໝື່ນຂຶ້ນໄປສຳລັບແມ່ຍິງນຸ່ງສິ້ນສີດຳມີແພເຈ້ປົກທາງໜ້າແມ່ຍິງຊົນເຜົ່າໄທເໜືອຢູ່ເມືອງຍອດອູແມ່ນນຸ່ງໂສ້ງສີດຳ,ສີເຫຼືອງຫົວໃຫ່ຍ, ຂາລີບ, ຫົ່ມເສື້ອແຂນຍາວແລະຍາວຮອດຫົວເຂົ່າ, ຄໍເສື້ອໃດແສ່ວລາຍສີສະດັບກັນ, ມີຜ້າພຽງຫົວ, ຜ້າມັດແອວ, ບ່ອງຫູໃສ່ຕ່າງ, ມີປອກແຂນເຮັດດ້ວຍເງິນ ມີສາຍແອວ ແລະ ໝາກປັດເຮັດດ້ວຍແກ້ວ, ຈິ່ງຜົມຍາວ, ເກົ້າຜົມ.




ຮູບພາບການແຕ່ງກາຍ

## 5. ອາຫານ ແລະ ເຄື່ອງດື່ມ



ຮູບພາບອາຫານຫຼັກຂອງເຜົ່າ

ເຜົ່າໄທເໜືອມີຄວາມນິຍົມກິນເຂົ້າໜຽວປະເພດອາຫານສ່ວນຫຼາຍແມ່ນເຄື່ອງທີ່ໄດ້ດອງເຊັ່ນ: ຊີ້ນດອງ, ຜັກດອງ, ໝາກຖົ່ວເໜົ່າ, ໝາກໄມ້ດອງ, ແກງ, ລາບດິບ, ລາບເລືອດ, ປີ້ງ, ຈີ່, ທີ່ເປັນລົດຊາດເຜັດ, ແລະມີຄວາມນິຍົມອາຫານທີ່ໄດ້ອຸ່ນຫຼາຍເທື່ອມັກດື່ມເຫຼົ້າເດັດ, ດື່ມນໍ້າຮ້ອນ, ນໍ້າດິບສູບຊາປູກາງດ້ວຍກອກແລະກິນຝິ່ນໃນເວລາແຂກເຂົ້າມາເຮືອນໃຫ້ກິນເຂົ້າໄລຍະໜຶ່ງແລ້ວຄ່ອຍດື່ມເຫຼົ້າສະຫຼັບກັນໄປ, ສ່ວນຢູ່ເມືອງສິງແມ່ນໃຫ້ແຂກດື່ມເຫຼົ້າສີ່ຈອກລຽນຕິດແລ້ວຈິ່ງກິນເຂົ້າ.

## 6. ຄວາມເຊື່ອຖື

ຍ້ອນການດຳລົງຊີວິດ ແລະການຍົກຍ້າຍຂອງຊົນເຜົ່າໄທເໜືອມີຫຼາຍໄລຍະແລະຫຼາຍເສັ້ນທາງທີ່ແຕກຕ່າງກັນສະນັ້ນຈຶ່ງໄດ້ເຮັດຮີດຄອງປະເພນີຄວາມເຊື່ອຖືແລະວັດທະນະທຳຊົນເຜົ່າໄທເໜືອໄດ້ມີຄວາມແຕກຕ່າງກັນໄປຕາມແຕ່ລະທ້ອງຖິ່ນຄື: ໄທເໜືອຢູ່ເມືອງສິງແຂວງຫຼວງນໍ້າທາເຂົາເຈົ້າໄດ້ມີຄວາມເຊື່ອຖືພຸດທະສາສະໜາ ແລະ ເຊື່ອຖືຜີພ້ອມໆກັນ. ສຳລັບໄທເໜືອຢູ່ເມືອງຍອດອູ ແຂວງຜົ້ງສາລີເຂົາເຈົ້າເຊື່ອຖືຜີໝາຍຄວາມວ່າ: ໄດ້ມີການເຄົາລົບບູບີງການເຊື່ອຖືບັນພະບູລຸດ, ຜີຟ້າ, ຜີແຖນ, ຜີປາແຫ່ວ, ຫວ້ຍ, ຮ່ອງຄອງບຶງ,ການເຊື່ອຖືບັນພະບູລຸດໄດ້ສະແດງໃຫ້ເຫັນວ່າ: ເມື່ອຄົບຮອດປີໜຶ່ງໆກໍ່ໄປຖາງຫຍ້າບ່ອນຝັງສົບຂ້າໄກ່ຢູ່ເຮືອນເມື່ອຕົ້ມສຸກແລ້ວໄປຖວຍໃຫ້ຜີຢູ່ປ່າຊ້າ.

**ງານບຸນປະເພນີ:** ຊົນເຜົ່າໄທເໜືອໃນຮອບວຽນປີໜຶ່ງໆເຂົາເຈົ້າຈະຈັດງານບຸນທີ່ສຳຄັນຄື: ບຸນກິນຈຽງໃຫ່ຍແລະບຸນກິນຈຽງນ້ອຍຈຶ່ງຈະໄດ້ຈັດຂຶ້ນໃນລະຫວ່າງເດືອນມັງກອນ, ເດືອນກຸມພາຂອງທຸກໆປີ.

## 7. ເຄື່ອງດົນຕີ ແລະ ສິລະປະພື້ນເມືອງ

ສຳລັບເຄື່ອງດົນຕີຂອງ ຊົນເຜົ່າໄທເໜືອ ແມ່ນຈະປະກອບມີກອງ, ແສ່ງ, ເຄື່ອງເສບດົນຕີ ແລະກໍ່ມີກອນຂັບ, ກອນລຳຂອງຊົນເຜົ່າໄທເໜືອເຊິ່ງເຂົາເຈົ້າຈະຂັບລຳໃນເວລາທີ່ມີງານບຸນງານແຕ່ງດອງຈະມີຜູ້ເຖົ້າຂັບລຳຕໍ່ກອນກັນໄປມາຢ່າງມ່ວນຊື່ນ.

## 8. ພາສາປາກເວົ້າ

ພາສາຊົນເຜົ່າໄທເໜືອຈະຈັດເຂົ້າໃນໝວດພາສາລາວ - ໄຕສໍາລັບຊົນເຜົ່າໄທເໜືອທີ່ອາໄສຢູ່ ເມືອງ ສິງ ແຂວງຫຼວງນໍ້າທາ ມີຕົວໜັງສືຂຽນຄ້າຍຄືໜັງສືທໍາສຽງສໍານຽງຂອງພາສາຊົນເຜົ່າໄທເໜືອກັບສໍານຽງພາສາຊົນເຜົ່າລື້, ຍວນ ແລະ ຢັ້ງ.

**ພາສາລາວກັບພາສາໄທເໜືອ**

| ລ/ດ | ພາສາລາວ | ພາສາໄທເໜືອ |
|---|---|---|
| 1 | ສະບາຍດີ | ຢູ່ດີກິນບານ |
| 2 | ໂຊກດີ | ໂຈກດ |
| 3 | ຂອບໃຈ | ດີໃຈ |
| 4 | ຂໍໂທດ | ຂໍອາໄພໂທດ |
| 5 | ເຈົ້າຊື່ຫັຍງ? | ເຈົ້າມັນຈື່ສັງ? |
| 6 | ເຮັດຫຍັງຢູ່? | ເຮັດຕີສັງຢູ່? |
| 7 | ກິນເຂົ້າແລ້ວບໍ? | ຈິນເຂົ້າແລ້ວບໍ? |
| 8 | ລາກ່ອນ | ປອກກໍາ |
| 9 | ພົບກັນໃໝ່ | ກ່ອຍມາໃໝ່ |
| 10 | ບໍ່ເປັນຫຍັງ | ເປົ່າເປັນສັງ |

- **ຊົນເຜົ່າສີລາ**

## 1. ປະຫວັດຄວາມເປັນມາ

“ ສີລາ” ແມ່ນຊົນເຜົ່າໜຶ່ງທີ່ນ້ອຍໃນຄະນາຍາດແຫ່ງຊາດລາວໃນເມື່ອກ່ອນເຂົາເຈົ້າຕັ້ງພູມລໍາເນົາແລະອາໄສຢູ່ເຂດກໍາແພງຍັກແຫ່ງປະເທດຈີນແຕ່ກ່ອນສົງຄາມເສິກຫໍ້ໃນປະຫວັດສາດທີ່ຍາວນານເຂົາເຈົ້າຈຶ່ງເຄື່ອນຍ້າຍອົບພະຍົບລົງມາທາງພາກໃຕ້ເລື້ອຍໆໂດຍຜ່ານເຂດລາຊະຄຸນມິງແລະເຂດຢູນານລົງມາຕັ້ງຫຼັກປັກຖານຢູ່ທາງພາກເໜືອຂອງລາວ.

ຕາມນິທານເລື່ອງສືບຕໍ່ກັນບໍ່ໄດ້ຢັ້ງຢືນ: “ ຊົນເຜົ່າສີລາ “ ເຄື່ອນຍ້າຍຈາກປະເທດຈີນ ມາຢູ່ ປະເທດລາວປັດຈຸບັນໂດຍແມ່ນນາຍຈ່າເຖະແລະນາງໂກອີ້ (ຜົວເມຍ) ເປັນຜູ້ນໍາພາຂະບວນການເຄື່ອນຍ້າຍລວມມີ 2 ຈຸ, ພວກ

ຮັ່ງມີແມ່ນການເຄື່ອນຍ້າຍດ້ວຍການຂີ່ມ້າ ແລະ ພວກທຸກຍາກເຄື່ອນຍ້າຍໂດຍການບ່າງດ້ວຍຕີນເປົ່າຈຶ່ງເປັນສາເຫດເຮັດໃຫ້ການເດີນທາງບໍ່ທັນກັນເປັນຕົ້ນ: ພວກທີ່ຮັ່ງມີໄດ້ເດີນທາງຮອດບ່ອນໃດກໍ່ພັກເຊົາເອົາໃບຕອງມາເຮັດຕູບ, ເມື່ອໃບຕອງກ້ວຍເຫຼືອງແລະຍອດກ້ວຍບ່ອນຖືກຕັດນັ້ນປົ່ງອອກເຂົາເຈົ້າກໍ່ເດີນທາງຕໍ່ໄປ ແລະ ໃນທີ່ສຸດກໍ່ມາຕັ້ງຫຼັກປັກຖານຢູ່ແຂວງຫຼວງນໍ້າທາ ໃນປັດຈຸບັນສ່ວນພວກຜູ້ທຸກຍາກເມື່ອເວລາເຂົາເຈົ້າເດີນທາງຮອດເຂດຍອດອູກໍ່ເຫັນໃບຕອງກ້ວຍທີ່ມຸງຕູບນັ້ນເຫຼືອງ ແລະ ໜໍ່ກ້ວຍໄດ້ຍາວກໍ່ເລີຍຄິດວ່າຈະໄປນຳພວກຮັ່ງມີບໍ່ທັນ, ຈຶ່ງຕັ້ງຫຼັກປັກຖານຢູ່ເຂດຍອດອູ ແຂວງຜົ້ງສາລີຈົນຮອດປັດຈຸບັນນີ້.

ຊົນເຜົ່າສີລາ ມີຫຼາຍຊື່ເອີ້ນຄື: ຢູ່ເຂດຍອດອູມີຊື່ວ່າ: "ເປີນຊູ, ເວີເຢີ, ເຢີເຫໍ່, ສ່ວນພວກຢູ່ແຂວງຫຼວງນໍ້າທາໃນເບື້ອງຕົ້ນມີຊື່ວ່າ: ເສັງ  ແລະ ຕໍ່ມາແມ່ນສີລາ ຊື່ທີ່ເຂົາເຈົ້າມັກໃຈ ແລະ ຊື່ໃຊ້ໃນທາງລັດຖະການແມ່ນຊົນເຜົ່າສີລາ

## 2. ອາຊີບຂອງຊົນເຜົ່າສີລາ

ການດຳເນີນວິຖີຊີວິດທາງດ້ານເສດຖະກິດຂອງຊົນເຜົ່າສີລາຢູ່ເມືອງຍອດອູແຂວງຜົ້ງສາລີແມ່ນເມືອງຫຼວງນໍ້າທາແຂວງຫຼວງນໍ້າທາມີຄວາມຄ້າຍຄືກັນເປັນຕົ້ນເຂົາເຈົ້າໄດ້ເຮັດໄຮ່ຂຸດ, ໄຮ່ໄຖ, ປູກເຂົ້າຕົ້ນຕໍ ແລະ ເຂົ້າໜຽວເປັນສຳຮອງພ້ອມກັນນີ້ກໍ່ລ້ຽງສັດປະເພດຕ່າງໆຄື: ໝູ, ງົວ, ຄວາຍ, ໝາ, ແລະ ມາເພື່ອເປັນອາຫານ ແລະ ໃຊ້ເປັນແຮງງານລາກແກ່, ຜູ້ຊາຍຊົນເຜົ່າ ສີລາ ຍັງມີຄວາມຊຳນິຊຳນານໃນວິຊາຕີເຫຼັກ, ວິຊາຫັດຖະກຳຈັກສານ, ເຮັດໂຕະ, ຕັ່ງ ແລະ ເຄື່ອງໃຊ້ໃນຄອບຄົວ. ສ່ວນແມ່ຍິງມີຄວາມລະອຽດອ່ອນໃນການຫຍິບປັກຖັກແສ່ວເຄື່ອງນຸ່ງຫົ່ມທີ່ມີສີສັນລວດລາຍ ແລະ ຖືວ່າເປັນເອກະລັກສະເພາະຂອງເຂົາເຈົ້າ. ຊົນເຜົ່າສີລາ ຢູ່ ແຂວງ ຫຼວງນໍ້າທາ ເສດຖາກິດຕົ້ນຕໍຂອງເຂົາເຈົ້າສ່ວນຫຼາຍແມ່ນເຮັດໄຮ່ປູກເຂົ້າຈ້າວ, ສາລີ, ຝິ່ນ, ຖົ່ວເຫຼືອງ, ຖົ່ວດິນ ແລະ ສຳຮອງແມ່ນການລ້ຽງສັດປະເພດຕ່າງໆຄື: ໝູ, ໄກ່, ງົວ, ໝາ ແລະ ມ້າເພື່ອເປັນອາຫານ ແລະ ໃຊ້ເປັນແຮງງານຕ່າງເຄື່ອງ. ນອກຈາກນີ້, ຍັງມີການຜະລິດຝິ່ນ ແລະ ເກືອເປັນສິນຄ້າ.

## 3. ທີ່ຕັ້ງບ້ານ ແລະ ເຮືອນ

ຕາມປົກກະຕິ ແລະ ເຂົາເຈົ້ານິຍົມປຸກເຮືອນໃນລັກສະນະພື້ນຕິດດິນ ແລະ ເຮືອນຮ້ານ, ເສົາເຮັດດ້ວຍໄມ້ແກ່ນ 4 ຫຼ່ຽມແອ້ມດ້ວຍໄມ້ຫີກ, ມຸງດ້ວຍຫຍ້າຄາ, ລວງຍາວ 6 ວາ ແລະ ກ້ວາງສາມວາພາຍໃນຫ້ອງເຮືອນເປັນສອງຫ້ອງໃຫ່ຍ ແລະ ນ້ອຍຂະໜານກັນ, ສຳລັບຫ້ອງນ້ອຍຍັງແບ່ງເປັນຫຼາຍຫ້ອງຄື: ຫ້ອງນອນພໍ່ແມ່, ລູກສາວທີ່ຍັງໂສດລູກຊາຍກົກ, ລູກຊາຍກາງທີ່ສ້າງຄອບຄົວແລ້ວ. ສ່ວນຫ້ອງໃຫ່ຍມີບ່ອນນອນຂອງແຂກ, ລູກຊາຍໂສດ ແລະ ເຕົາໄຟ. ຊົນເຜົ່າສີລາຢູ່ແຂວງຫຼວງນໍ້າທາເຂົາເຈົ້າມີການຄະລຳໃນການຊອກໄມ້ເຮັດເສົາເຮືອນເຊັ່ນ: ມື້ພໍ່ແມ່ຕາຍ ແລະ ມື້ສິ່ງສ ... ຂາດ.



ຮູບພາບລັກສະນະບ້ານເຮືອນ



ຮູບພາບລັກສະນະບ້ານເຮືອນ

## 4. ເຄື່ອງນຸ່ງຫົ່ມ

ຊົນເຜົ່າສີລາມີເອກະລັກສະເພາະກ່ຽວການເຄື່ອງນຸ່ງຫົ່ມ ແລະ ການເອ້ຢ້ອງ: ຜູ້ຊາຍນຸ່ງໂສ້ງສີດໍາ, ຫົວກ້ວາງ, ຂາໃຫ່ຍ, ຫົ່ມເສື້ອແຂນສັ້ນສີດໍາ, ມີກະດຸມທາງຂ້າງຕາມເອິກ, ຍາວລົງຮອດແອວ, ຜ້າດໍາຍາວ 1 ວາ, ກ້ວາງ 20 cmຄຽນຫົວ, ມີສາຍມັດແອວເວລາເປັນບ່າວບໍ່ເອົາຜ້າດໍາຄຽນຫົວແຕ່ຈິ່ງຜົມຍາວຝັ້ນເປັນສາມກໍ້ວ, ເກົ້າຜົມຕັ້ງ, ໃສ່ສາຍສ້ອຍກ້ຽວແຂນ ແລະ ປອກແຂນສໍາລັບແມ່ຍິງນຸ່ງສິ້ນແຊງດອກສີດໍາ, ລ່າມລົງຮອດກາງແຂ່ງ, ຫົ່ມເສື້ອຫຼາຍສີສະຫຼັບກັນຄື: ດໍາ, ຂາວ, ຂຽວ, ລາຍດອກຕັ້ງ, ຢູ່ແອວກໍ່ມີການເອ້ຍ້ອງດ້ວຍເງິນນາໆຊະນິດ, ຜ້າຂາວຄຽນຫົວ, ສິ້ນແພປະຫຼັບດ້ວຍໝາກປັດຮ້ອຍຈັບ, ຜ້າຄຽນຫົວແບບກົ້ນຫອຍກ້ຽວຜົມ ແລະ ຜ້າຂາວປົກຫົວ .ສໍາລັບຊົນເຜົ່າສີລາຢູ່ແຂວງຫຼວງນໍ້າທາຜູ້ຊາຍຈະນຸ່ງໂສ້ງຂາຍາວສີຂາວ, ຫົ່ມເສື້ອສີດໍາ, ແມ່ຍິງນຸ່ງສິ້ນສີແດງກ່ານຂາວ, ຫົ່ມເສື້ອແຂນຍາວສີຂຽວ, ສ່ວນຜູ້ເຖົ້າ ແລະ ເດັກນ້ອຍແມ່ນນຸ່ງເຄື່ອງທໍາມະດາ.



ຮູບພາບການແຕ່ງກາຍຂອງເຜົ່າສີລາ

## 5. ອາຫານ ແລະ ເຄື່ອງດື່ມ

ຊົນເຜົ່າສີລາມັກກິນເຂົ້າຈ້າວໂດຍເອົານໍ້າຮ້ອນລວກແລ້ວໜຶ້ງໃສ່ໄຫ, ກິນອາຫານປະເພດຕ່າງໆຄື: ແກງ, ຂົ້ວ, ເອາະ, ປີ້ງ ແລະ ໝົກທີ່ມີລົດຊາດພໍດີ, ສ່ວນຊົນເຜົ່າສີລາຢູ່ຫຼວງນໍ້າທາມັກກິນລາບດິບ, ເລືອດດິບ, ມີລົດຊາດເຜັດ ແລະ ເຄັມ. ດື່ມນໍ້າດິບເວລາໄປອອກແຮງງານ, ດື່ມນໍ້າຕົ້ມເວລາຢູ່ເຮືອນ, ນິຍົມດື່ມເຫຼົ້າເດັດ, ເຫຼົ້າສ້ຽວ, ດື່ມນໍ້າຊາຄ້ຽວໝາກ, ສູບຢາດ້ວຍກອກທີ່ພັນດ້ວຍໃບຕອງກ້ວຍ ແລະ ກິນຝິ່ນ. ເວລາມີແຂກນອນແວ່ຢາມໃຫ້ແຂກດື່ມເຫຼົ້າ 5-8 ຈອກລຽນຕິດຈຶ່ງຄ່ອຍກິນເຂົ້າ ແລະ ອັດທ້າຍດ້ວຍເຫຼົ້າ 5 ຈອກ.



ຮູບພາບອາຫານປະເພດຕ່າງໆ

## 6. ຄວາມເຊື່ອຖື ແລະ ງານບຸນ

ຊົນເຜົ່າສີລາໄດ້ມີຄວາມເຊື່ອຖືບັນພະບູລຸດທີ່ສືບທອດມາແຕ່ບູຮານນະການເຂົາເຈົ້າມີຄວາມເຄົາລົບ ແລະ ເຊື່ອຖືຜີຄື: ຜີບັນພະບູລຸດ, ຜີພໍ່ແມ່, ຜີຟ້າ, ຜີແຖນ, ຜີເຮືອນ, ຜີເຈົ້າບ້ານ, ຜີນາຍຈາສເຖະ ແລະ ນາງໂກອໍ້ ເຊິ່ງເຂົາເຈົ້າຖືວ່າຜູ້ປົກປັກຮັກສາມວນມະນຸດ, ບາງເຂດກໍ່ມີຄວາມເຄົາລົບບູຊາ 4 ເທື່ອຕໍ່ປີ.

ໃນຮອບວຽນປີໜຶ່ງຂອງຊົນເຜົ່າສີລາມີພິທີກຳຫຼາຍຢ່າງ, ແຕ່ສິ່ງທີ່ສຳຄັນຂອງເຂົາເຈົ້າໄດ້ຈັດງານບຸນ ກິນຈຽງ 2 ເທື່ອຄື: ເທື່ອທີ 1 ຈັດຂຶ້ນໃນເດືອນໜຶ່ງເຊິ່ງເອີ້ນວ່າ: ບຸນໃໝ່ໃນນີ້ມີການຂ້າໝູໃຫ້ຊາວບ້ານທັງໝົດມີກິນຮ່ວມກັນ. ພ້ອມກັນນັ້ນ, ກໍ່ໄດມີການໂຍນໝາກຄອນຫຼິ້ນມ່ວນຊື່ນປະມານ 2-3 ວັນ, ບຸນເທື່ອທີ 2 ຈັດຂຶ້ນໃນເດືອນສິບເຊິ່ງຖືວ່າ: ເປັນໜ້ອຍ ແລະ ວິທີຈັດງານບຸນ, ແມ່ນມີຮວງເຂົ້າໃໝ່ 2-3 ຮວງ, ນໍ້າອ້ອຍ, ມັນ , ເຜືອກ, ໝາກກ້ວຍ, ມັນຕົ້ນ, ໝາກແຕງລາຍ ແລະ ໝາກໄມ້ອື່ນໆ.

## 7. ເຄື່ອງດົນຕີ ແລະ ສິລະປະພື້ນເມືອງ

ຊົນເຜົ່າສີລາຈະມີເຄື່ອງດົນຕີພື້ນເມືອງປະຈຳເຜົ່າຂອງຕົນເອງແມ່ນແຊ່ງ, ກອງ, ປີ່ ແລະ ກໍ່ມີບົດກອນລຳ, ກອນຂັບ, ກອນຜະຫຍາ ແລະ ອື່ນໆຊຶ່ງທີ່ກ່າວມານັ້ນແມ່ນເຂົາເຈົ້າຈະຮ້ອງ, ຈະເສບໃນເວລາທີ່ມີງານບຸນປະຈຳເຜົ່າ, ງານແຕ່ງດອງ ແລະ ອື່ນໆ.

## 8. ພາສາປາກເວົ້າ

ຊົນເຜົ່າສີລາບໍ່ມີຕົວໜັງສືຂຽນ, ມີພາສາປາກເວົ້າຂອງຕົນຈຶ່ງຈັດເຂົ້າໃນໝວດພາສາຈີນ-ຕີເບດຄ້າຍຄື: ພາສາຂອງເຜົ່າອາຄາ, ຮ່າຍີ, ໂລໂລ ແລະ ຍັງສາມາດເວົ້າພາສາຈີນຊັດເຈນ, ຫໍ້, ລື້ ແລະ ຍັ້ງໄດ້ດີຊຶ່ງມີຄວາມສະດວກໃນການແລກປ່ຽນເສດຖະກິດ, ວັດທະນະທຳສັງຄົມກັບບັນດາຊົນເຜົ່າດັ່ງກ່າວ.

**ການສົມທຽບພາສາລາວກັບພາສາສີລາ**

| ລ/ດ | ພາສາລາວ | ພາສາສີລາ |
|---|---|---|
| ໑ | ສະບາຍດີ | ໂຈມີເຈີມີອໍ |
| ໒ | ຂອບໃຈ | ມີລໍເຈີລໍ |
| ໓ | ຂໍໂທດ | ຊຶມໍ |
| ໔ | ເຈົ້າຊື່ຫຍັງ? | ເນມືອາເຈີແລະ? |

| | | |
|---|---|---|
| ໕ | ເຮັດຫຍັງຢູ່? | ອານິອີງເນີ |
| ໖ | ກິນເຂົ້າແລ້ວບໍ? | ອູຈູລໍ່ແລ່? |
| ໗ | ລາກ່ອນ | ກໍຍີລໍເຕ |
| ໘ | ພົບກັນໃໝ່ | ຖືທໍກໍພູພົວ |
| ໙ | ບໍ່ເປັນຫັຍງ | ອາເຈິ້ນາຊິລໍ |

❖ **ຊົນເຜົ່າກຣຽງ**

## 1. ປະຫວັດຄວາມເປັນມາຂອງຊົນເຜົ່າກຣຽງ

ຊົນເຜົ່າກຣຽງ ມີປະຫວັດຄວາມເປັນມາແຕ່ຕົ້ນກຳເນີດຄືກັນກັບບັນດາຊົນເຜົ່າໃນໝວດພາສາມອນ-ຂະແມ, ໝາຍຄວາມວ່າ: ເຂົາເຈົ້າໄດ້ມາອາໄສແລະດຳລົງຊີວິດຢູ່ໃນດິນແດນລາວຂອງພວກເຮົາໄດ້ຫຼາຍສະຕະວັດແລ້ວ. ປັດຈຸບັນຊົນເຜົ່າກຣຽງໄດ້ຕັ້ງຖິ່ນຖານແລະທຳມາຫາກິນຢູ່ບັນດາແຂວງພາກໃຕ້ຂອງລາວຫຼາຍກົ່ວໝູ່ຢູ່ເມືອງກະລືມ, ເມືອງທ່າແຕງ ແລະ ເມືອງລະມາມແຂວງເຊກອງ, ນອກຈາກນີ້, ເຂົາເຈົ້າຍັງດຳລົງຊີວິດຢູ່ເມືອງສາລະວັນແລະ ເມືອງປາກຊ່ອງແຂວງຈຳປາສັກ.







## 1. ຊື່ເອີ້ນຂອງຊົນເຜົ່າ.

ຊົນເຜົ່າອື່ນເອີ້ນພວກເຂົາວ່າ: " ແງະ " ຊື່ທີ່ເຂົາເຈົ້າມັກ ແລະ ຊື່ນຳໃຊ້ໃນລັດຖະການປັດຈຸບັນແມ່ນ " ຊົນເຜົ່າກຣຽງ" ຊົນເຜົ່າກຣຽງປະກອບດ້ວຍ 2 ແຊງຄື : ເກາະ ແລະ ຈະຕ່ອງ

## 2. ອາຊີບຂອງຊົນເຜົ່າກຣຽງ

ຊົນເຜົ່າກຣຽງ ສ່ວນຫຼາຍມີອາຊີບເຮັດໄຮ່ປູກເຂົ້າພ້ອມໆກັບການປູກເຂົ້າກໍ່ຍັງປູກພືດຜັກເພື່ອໄວ້ບໍລິໂພກເຊັ່ນ: ໃນໄຮ່ພື້ນດຽວນັ້ນເຂົາເຈົ້າຈະປູກຫຼາຍຢ່າງຄື: ພືດຜັກ, ເຜືອກ, ມັນ, ໝາກອຶ, ໝາກເຜັດ, ໝາກເຂືອ, ໝາກໂຕ່ນ, ໝາກແຕງ, ສາລີແລະອື່ນໆ. ເພື່ອໄວ້ກິນໃນເວລາຂາດເຂີນເຂົ້າ, ການລ້ຽງສັດປະເພດໄກ່ແລະໝູ, ຈະລ້ຽງເກືອບທຸກຄົວເຮືອນຊຶ່ງມີເປົ້າໝາຍເພື່ອໄວ້ປະກອບພິທີກຳແລະ ກິນເປັນອາຫານໃນບາງໂອກາດເທົ່ານັ້ນ, ສ່ວນສັດປະເພດງົວຄວາຍກໍ່ລ້ຽງແຕ່ບໍ່ຫຼາຍເຂົາເຈົ້າຈະຫາເວລາຫວ່າງໄປຊອກຫາເຄື່ອງປ່າຂອງດົງເພື່ອໄປຂາຍ ແລະ ແລກປ່ຽນສິ່ງຂອງກໍ່ຄືເຄື່ອງໃຊ້ສອຍຕ່າງໆທີ່ຈຳເປັນໃນການດຳເນີນຊີວິດປະຈຳວັນ,ປັດຈຸບັນມີຈຳນວນໜຶ່ງໄດ້ມີການຫັນມາປູກຕົ້ນໄມ້ກິນໝາກເຊັ່ນ: ກະເຟ, ຢາສູບ ແລະ ອື່ນໆ. ຄຽງຄູ່ກັບບັນຫາທີ່ກ່າວມານັ້ນຍັງມີມູນເຊື້ອທາງດ້ານຫັດຖາກຳ, ຈັກສານ, ຫຍິບປັກຖັກແສ່ວອີກດ້ວຍ.

## 3. ທີ່ຕັ້ງບ້ານ ແລະ ເຮືອນຊົນເຜົ່າກຣຽງ

ຊົນເຜົ່າກຣຽງ ສ່ວນຫຼາຍໄດ້ຕັ້ງຖິ່ນຖານບ້ານຊ່ອງເຂດຮ່າງໄກສອກຫຼີກລັກສະນະຂອງບ້ານເປັນຮູບວົງມົນມີສາລາກວານການປຸກສ້າງເຮືອນກໍ່ຍັງປະຕິບັດຕາມປະເພນີຂອງເຂົາເຈົ້າຄື: ກຣຽງມັກຈະປຸກສ້າງແລະເຮືອນຮ້າງ. ການຈັດແບ່ງຫ້ອງໃນເຮືອນນັ້ນແມ່ນອີງຕາມຈຳນວນສຳມາຊິກຂອງຄົວເຮືອນເຊິ່ງມີລັກສະນະຄ້າຍຄືກັນກັບຊົນເຜົ່າກະຕູ.

ຊົນເຜົ່າກຣຽງອາໄສຕັ້ງຖິ່ນຖານແລະດຳລົງຊີວິດຢູ່ແຂວງສາລະວັນແລະແຂວງເຊກອງມີປະຊາກອນທັງໝົດ 12,879 ຄົນ , ຍິງ 6,540 ຄົນ, ເທົ່າກັບ 0,2% ຂອງພົນລະເມືອງໃນທົ່ວປະເທດ.




ຮູບພາບລັກສະນະຂອງເຮືອນ

## 4. ເຄື່ອງນຸ່ງຫົ່ມຂອງຊົນເຜົ່າກຣຽງ

ສຳລັບການນຸ່ງຖືເອ້ຍ້ອງທີ່ເປັນເອກະລັກຂອງຊົນເຜົ່າກຣຽງນັ້ນແມ່ນນິຍົມໃສ່ເວລາມີພິທີກຳຫຼືງານບຸນປະເພນີເທົ່ານັ້ນ, ແຕ່ໃນວັນທຳມະດາທົ່ວໄປເຂົາເຈົ້າຫັນມານຸ່ງເຄື່ອງທີ່ຊື້ຈາກຕະຫຼາດເປັນສ່ວນຫຼາຍ.

ການນຸ່ງຫົ່ມເອ້ຍ້ອງຂອງຊົນເຜົ່າກຣຽງກໍ່ຄ້າຍຄືກັນກັບບັນດາຊົນເຜົ່າທີ່ນອນໃນໝວດພາສາມອນ- ຂະແມຢູ່ພາກໃຕ້ ເປັນຕົ້ນຜູ້ມັກນຸ່ງກະຕ່ຽວ, ບໍ່ຫົ່ມເສື້ອ, ແຕ່ເຂົາເຈົ້າປ່ຽງຜ້າແພແລະຫົ່ມຜ້າປ່ຽງ, ຍາມໜາວເອົາຜ້າກາໂດພັນຄືງແບບຫົ່ມເສື້ອຍາວຢ່ອນລົງຮອດບີແຂ່ງ.

ປະເພນີຕັດແຂ້ວ, ບ່ອງຫູແລະສັກລາຍຕາມຕົນຕົວເພື່ອສະແດງເຖິງຄວາມເກັ່ງກ້າ, ຄວາມອົດທົນແລະຄວາມຮັ່ງມີເຫຼົ່ານີ້ເປັນຕົ້ນ.



ຮູບພາບການແຕ່ງກາຍຂອງເຜົ່າກຣຽງ

## 5. ອາຫານ ແລະ ເຄື່ອງດື່ມຂອງຊົນເຜົ່າກຣຽງ

ຊົນເຜົ່າກຣຽງແມ່ນກິນເຂົ້າໜຽວ, ອາຫານແມ່ນນິຍົມກິນປະເພດຫຼາມ, ດື່ມເຫຼົ້າໄຫ, ສູບຢາດ້ວຍກອກເດີ, ປັດຈຸບັນແມ່ນໄດ້ຫັນປ່ຽນມານິຍົມກິນອາຫານແບບລາວ ແລະ ຊົນເຜົ່າອື່ນໆທີ່ຢູ່ໃກ້ຄຽງ, ໄປຕາມການດຳລົງຊີວິດຢູ່ແຕ່ລະທ້ອງຖິ່ນ.



ຮູບພາບອາຫານຫຼັກປະເພດຕ່າງໆ

## 6. ງານບຸນປະເພນີ ແລະ ຄວາມເຊື່ອຂອງຊົນເຜົ່າກຣຽງ

ສຳລັບບຸນປະເພນີ ແລະ ພິທີກຳທີ່ສຳຄັນຂອງ ເຜົ່າກຣ່ຽງ ເຂົາເຈົ້າມີການສະເຫຼີມສະຫຼອງດ້ວຍຫຼາຍຮູບການ ແລະ ໃນປີໜຶ່ງໆຈະເຮັດຫຼາຍຄັ້ງເປັນຕົ້ນແມ່ນການເຮັດພິທີກຳເພື່ອລະນຶກເຖິງຈິດວິນຍານຂອງພໍ່ແມ່ເຊິ່ງເພິ່ນມັກ ຈັດຂຶ້ນໃນເດືອນສີ່, ບຸນປີໃໝ່(ບຸນງະ) ສະຖານທີ່ສຳລັບຈັດພິທີກຳສ່ວນຫຼາຍແລ້ວແມ່ນເຮືອນສາລາກວານ, ເມື່ອມີ ພິທີກຳດ້ານຄວາມເຊື່ອຖື ແລະ ງານບຸນປະເພນີສ່ວນຫຼາຍແລ້ວເຂົາເຈົ້າຈະຂ້າຄວາຍເພື່ອຖວາຍ ແລະ ເປັນອາຫານ ນອກຈາກນີ້, ຊົນເຜົ່າກຣຽງຍັງມີພິທີກຳໃນຮອບປີໜຶ່ງໆທີ່ກ່ຽວກັບການຜະລິດແລະເກີດໄພພິບັດຕ່າງໆເຊັ່ນ: ການ ເຮັດພິທີກຳກ່ອນຈະຮູດ ຫຼື ເກັບກ່ຽວເຂົ້າຊຶ່ງມີການຄະລຳບ້ານເປັນເວລາສາມວັນ.

ຄວາມເຊື່ອຖືຂອງ ຊົນເຜົ່າກຣຽງ ນີ້ເຊິ່ງໄດ້ມາຈາກການສືບທອດຈາກປູ່ຍ່າຕາຍາຍເຊິ່ງເຂົາເຈົ້າເຄີຍປະຕິບັດ ແລະ ສືບຕໍ່ກັນມາຈົນເຖິງທຸກວັນນີ້ເຊິ່ງຈະມີຄວາມເຊື່ອທາງດ້ານວິນຍານ, ຜີພໍ່ແມ່ ເຊິ່ງອາດເວົ້າໄດ້ວ່າມີການເຊື່ອຖືເ ໜືອກວ່າທຳມະຊາດ



ຮູບພາບງານບຸນປະເພນີຕ່າງໆ

❖ **ແຕ່ງງານ**

ຜູ້ຍິງຈະເປັນຜູ້ເລືອກຄູ່ຄອງຂອງເຈົ້າສາວຈະຕ້ອງທໍເສື້ອຜ້າ, ໂສ້ງໄວ້, ໃຫ້ເຈົ້າບ່າວແລ້ວແລ້ວບ່າວເຈົ້າສາວຂ້າໝູແລະ ຂ້າໄກ່ທຳພິທີກຳບອກຕໍ່ບັນພະລຸດເປັນອາຫານລ້ຽງແຂກ, ແຕ່ງງານແລ້ວຝ່າຍຊາຍຕ້ອງມາຢູ່ບ້ານຝ່າຍຍິງ 1 ປີເກັບກ່ຽວແລ້ວຈຶ່ງລົງເຮືອນຕ່າງປູກເຮືອນໃຫ້ກັນກັບພໍ່ແມ່ຕົນ

❖ **ພິທີກຳປົງສົບ**

ເມື່ອຊົນເຜົ່າກຣຽງ ເປັນຊົນເຜົ່າທີ່ເຊື່ອຖືທາງດ້ານວິນຍານ, ຜີພໍ່ຜີແມ່ແນ່ນອນວ່າພິທີກຳຂອງເຂົາເຈົ້ານັ້ນເມື່ອຄົນຕາຍໄປແລ້ວຈະເຮັດພິທີກຳຄົບງັນ, ອາລົບແລ້ວເອົາຄົນຕາຍໄປຝັງລົງດິນ.

## 7. ເຄື່ອງດົນຕີ ແລະ ສິລະປະພື້ນເມືອງຂອງຊົນເຜົ່າກຣຽງ

ດ້ານສິລະປະວັນນະຄະດີຂອງ ຍ້ອນຊົນເຜົ່າກຣຽງ ມີພາສາປາກເວົ້າທີ່ເປັນເອກະລັກຂອງຕົນຊຶ່ງຈັດຢູ່ໃນໝວດພາສາມອນ-ຂາແມເຂົາເຈົ້າມີຕົວໜັງສືຂຽນ, ເຂົາເຈົ້າມີກອນລຳ, ມີນິທານພື້ນເມືອງມີການເຕັ້ນລຳຕາມຈັງຫວະຂອງດົນຕີ ແລະ ອື່ນໆ, ເຊິ່ງເປັນເອກະລັກຂອງເຂົາເຈົ້າ.



ຮູບພາບເຄື່ອງດົນຕີປະຈຳຊົນເຜົ່າ

## 8. ພາສາປາກເວົ້າຂອງຊົນເຜົ່າກຣຽງ

ຊົນເຜົ່າກຣຽງ. ມີພາສາປາກເວົ້າທີ່ເປັນເອກະລັກສະເພາະຂອງຕົນຊຶ່ງຈັດຢູ່ໃນໝວດພາສາ-ຂະແມ, ບໍ່ມີຕົວໜັງສືຂຽນ

ການສົມທຽບພາສາລາວກັບພາສາກຣຽງ

| ລ/ດ | **ພາສາລາວ** | **ພາສາກຣຽງ** |
|---|---|---|
| ໑ | ສະບາຍດີ | ສະບາຍດີ |
| ໔ | ໂຊກດີ | ໂຊກດີ |

| | | |
|---|---|---|
| ໓ | ຂອບໃຈ | ຂອບໃຈ |
| ໔ | ຂໍໂທດ | ຂໍໂທດ |
| ໕ | ເຈົ້າຊື່ຫຍັງ? | ອາແມ່ະຈາຣແມະ? |
| ໖ | ເຮັດຫຍັງຢູ່? | ໄມແມ່ະຕັກ? |
| ໗ | ກິນເຂົ້າແລ້ວບໍ? | ຈາເປີຍເປີ? |
| ໘ | ລາກ່ອນ | ໂຈເຮີ່ຍ |
| ໙ | ພົບກັນໃໝ່ | ແກະພົບຕຳແມ່ະ |
| ໑໐ | ບໍ່ເປັນຫຍັງ | ແງະແມ່ະແມ່ະ |

## ❖ ຊົນເຜົ່າຜູ້ໄທ

ປະຈຸບັນຊົນເຜົ່າຜູ້ໄທ ໄດ້ຕັ້ງຖິ່ນຖານພູມລຳເນົາຢູ່ແຂວງພາກກາງຄື: ແຂວງບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ ແລະ ຈຳປາສັກ. ຊົນເຜົ່າຜູ້ໄທຢູ່ ສປປ ລາວ ມີປະຊາກອນທັງໝົດ 187. 391 ຄົນ, ຍິງ 95.757 ຄົນ ເທົ່າກັບ 3,3% ຂອງຈຳນວນພົນລະເມືອງທົ່ວປະເທດ ຄັ້ງທີ 3 ປີ 2005.

ຊົນເຜົ່າຜູ້ໄທທີ່ແຈກຢາຍຢູ່ແຕ່ລະບ່ອນ

- ແຂວງ ບໍລິຄຳໄຊ: ເມືອງ ຄຳເກີດ
- ແຂວງ ຄຳມ່ວນ: ເມືອງ ທ່າແຂກ, ເມືອງ ນາກາຍ, ເມືອງ ຍົມມະລາດ, ເມືອງ ໜອງບົກ, ເມືອງ ເຊບັ້ງໄຟ
- ແຂວງ ສະຫວັດນະເຂດ: ມີທຸກເມືອງ
- ແຂວງ ສາລະວັນ: ເມືອງ ວາປີ, ເມືອງ ເລົ່າງາມ
- ແຂວງ ຈຳປາສັກ: ເມືອງ ຊະນະສົມບູນ

## 1. ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ

ຊົນເຜົ່າຜູ້ໄທ (ໄຕ, ໄທ໌, ຫຼື ໄທ) ມີປະຫວັດສາດ ແລະ ຕົ້ນກຳເນີດຄ້າຍຄຽງກັບຊົນເຜົ່າອື່ນໆໃນຕະກຸນພາສາ - ໄຕ ພວກເຂົາອົບພະຍົບຈາກທົ່ງນານ້ອຍອ້ອຍໜູຜືນແຜນດິນແດນຕອນໃຕ້ຂອງ ສປຈີນ ໄປຫຼາຍແຫ່ງຫົນໃນທ້າຍສະຕາວັດທີ17 – 18 ເປັນຕົ້ນມາ, ລຽບຕາມສາຍແມ່ນ້ຳຂອງ, ແມ່ນ້ຳກົງຫຼືສາລະວັນແລະລຽບຕາມສາຍແມ່ນ້ຳແດງ,ຕະກຸນຕາມສາຍແມ່ນ້ຳແກງກໍໄດ້ແຍກກັນອີກເຊັ່ນ: ພວກເຂົາໄດ້ແຍກໄປຕາມສາຍແມ່ນ້ຳດຳ ແລະ ໄທເມົາກໍມີຊື່ວ່າ: ໄທດຳ ແລະໄທເມົາ, ໄທ ດັ່ງກ່າວໄດ້ໄປຕັ້ງປັກຖານຢູ່ຫຼາຍບ່ອນ. ສະເພາະຢູ່ລາວເຮົາແມ່ນຕາມແຄມເຊບັ້ງໄຟ, ແມ່ນນ້ຳຫີນບູນ, ເຂດເຊນ້ຳນ້ອຍຈົນໄປຮອດພູຊ້າງແຮ່, ທົ່ງນາຕູນບໍລິເວນສາຍແດນລະຫວ່າງເຂດແຂວງຄຳມ່ວນ ແລະ ສະຫວັນນະເຂດຊົນເຜົ່າຜູ້ໄທມີຊື່ເອີ້ນວ່າ: “ ຜູ້ໄທ “ ເຂົາເຈົ້າມັກເອີ້ນຕົນເອງ, ຊົນເຜົ່າອື່ນເອີ້ນ

ຊື່ໃຊ້ທາງລັດທາງລັດທະການກໍ່ແມ່ນ "ຜູ້ໄທ". ສໍາລັບຜູ້ໄທແມ່ນມາຈາກຄໍາສັບທີ່ວ່າ: "ໄທ້ , ໄທ ຫຼື ໄຕ " ອີກຢ່າງໜຶ່ງແມ່ນມາຈາກຄໍາສັບທີ່ວ່າ: "ໄທພູ " ໝາຍຄວາມວ່າ: ຊົນເຜົ່ານີ້ໄດ້ອົບພະຍົບໄປຕາມສາຍພູແລ້ວລົງມາຕັ້ງບ້ານເຮືອນຢູ່ເຂດທົ່ງພຽງແຄມແມ່ນໍ້າ, ຊື່ " ໄທພູ " ແມ່ນບໍ່ເໝາະສົມກັບສະຖານທີ່ຢູ່ອາໄສຂອງພວກເຂົາເຈົ້າຈຶ່ງຫັນມາເອີ້ນຊື່ໃຫ້ຖືກຕ້ອງແລະເໝາະສົມກັບສະພາບຄວາມເປັນຈິງ, ຈຶ່ງກາຍມາເປັນ "ຜູ້ໄທ" ຈົນເຖິງປັດຈຸບັນນີ້.



## 2. ອາຊີບຂອງຊົນເຜົ່າຜູ້ໄທ

ສໍາລັບເສດຖະກິດຂອງຊົນເຜົ່າຜູ້ໄທໃນເມື່ອກ່ອນເຂົາເຈົ້າເຄີຍດໍາເນີນການຜະລິດທາງດ້ານກະສິກໍາເປັນຕົ້ນ: ເຮັດໄຮ່, ເຮັດນາ, ແລະເຮັດສວນເພື່ອປູກເຂົ້າ, ພືດທາດແປ້ງ, ເຜືອກ, ມັນ ແລະ ອື່ນໆ. ປະເພດສັດລ້ຽງເຊັ່ນ: ງົວ, ຄວາຍ, ໝູ, ໝາ ແລະ ສັດປີກຕ່າງໆ.

ປັດຈຸບັນການປູກຝັງລ້ຽງສັດຂອງເຂົາເຈົ້າຍິ່ງມີຄວາມສໍານານ, ຜູ້ຊາຍຊົນເຜົ່າຜູ້ໄທນີ້ມີມູນເຊື້ອໃນການຕີເຫຼັກ, ປັ້ນໝໍ້, ຫູ່ໄຫ, ແລະ ວິຊາຈັກສານເຊັ່ນ: ກະບຸງ, ກະຕ່າ, ກະເປ໋, ກະຢັ້ງ, ຕິບເຂົ້າ, ສານສາດແລະເຮັດເຄື່ອງປະດັບເພດຊີງຂອງຊົນເຜົ່າຕົນເອງໄດ້ຢ່າງຫຼວງຫຼາຍເປັນເສດຖະກິດຂອງຄອບຄົວທີ່ສ້າງລາຍຮັບໃຫ້ຄອບຄົວສູງພໍສົມຄວນ. ມັນໄດ້ສ້າງຄວາມນິຍົມຊົມຊອບໃຫ້ແກ່ລູກຄ້າທັງພາຍໃນແລະຕ່າງປະເທດ, ເຂົາເຈົ້າແມ່ນໜຶ່ງໃນ 49 ຊົນເຜົ່າທີ່ມີລະບົບເສດຖະກິດມີການຂະຫຍາຍຕົວແຮງເມື່ອທຽບໃສ່ກັບຊົນເຜົ່າອື່ນໆໃນສປປລາວ.




ຮູບພາບອາຊີບຂອງ ແລະ ສິນຄ້າຂອງຊົນເຜົ່າຜູ້ໄທ

## 3. ທີ່ຕັ້ງບ້ານ ແລະ ເຮືອນ

ຊົນເຜົ່າຜູ້ໄທໃນສະໄໝກ່ອນຈະຕັ້ງບ້ານແມ່ນຕ້ອງໄດ້ຊອກຫາມື້ສັນວັນດີແລ້ວຂຸດຂຸມປັກໄມ້ເອົາມິດເຂົ້າຈຸ້ມຫົວໃສ່ກັນ, ຖ້າເມັດເຂົ້າສານບໍ່ຫັກ, ບໍ່ເປື່ອຍ, ບໍ່ແຍກອອກຈາກກັນແມ່ນຕັ້ງບ້ານໄດ້.

ລັກສະນະເຮືອນຂອງຊົນເຜົ່າຜູ້ໄທເປັນເຮືອນຮ້ານສາມຫຼັງຕິດກັນຄື: ເຮືອນນອນ, ເຮືອນເຊຍ, ເຮືອນໄຟມີຊານ (ເຮືອນຄົວ) ມີເກົ້າເສົາ, ປະກອບດ້ວຍສາມຫ້ອງນອນ, ມີປະຕູເຂົ້າ-ອອກ 2 ປ່ອງແລະປ່ອງຢ້ຽມ 2 ປ່ອງ, ຫ້ອງນອນທຳມະດາ, ຂັ້ນດ້ວຍຝາທາງສົ້ນເບື້ອງໜຶ່ງຈະມີຫ້ອງໂຖງເຊິ່ງເປັນຮ້ານບູຊາທັງເປັນບ່ອນນອນຂອງແຂກ ແລະລູກຊາຍ, ຖ້າລະບົບເຮືອນນ້ອຍເຕົາໄຟຫຼື (ຄີໄຟ) ເອົາໄວ້ໃນຄົກຕຳເຂົ້າເພິ່ນຈະເຮັດຕ່າງຫາກ.





ຮູບພາບລັກສະນະບ້ານເຮືອນຂອງເຜົ່າຜູ້ໄທ

## 4. ເຄື່ອງນຸ່ງຫົ່ມ

ເຄື່ອງນຸ່ງຫົ່ມຂອງຊົນເຜົ່າຜູ້ໄທສໍາລັບຜູ້ຊາຍນຸ່ງໂສ້ງດໍາໝົ້ນິນມັດຫົວ, ຜ້າສະໂລ່ງ, ຜ້າຫາງ, ເສື້ອດໍາໝົ້ນິນ, ຍ້ອມດ້ວຍນໍ້າເບີ, ນໍ້າຄາມ, ສັກຂາລາຍ, ແມ່ຍິງນຸ່ງສິ້ນມີຫົວ, ສິ້ນມຸກ, ສິ້ນມັດໝີ່, ເສື້ອດໍາມີສັກລາຍ, ຄໍລາຍ, ໃສ່ກະຕິ່ງເງິນ, ແພກະຊະ, ແພຕາລ່ອງຄຽນຫົວ, ຜ້າບ່ຽງ, ບາງຊະນິດໃຊ້ເວລາເຮັດ 1-2 ປີ, ມີກະຈ້ອນໃສ່ຫູ, ກ້ອງແຂນ, ເກີບ, ໃນເມື່ອກ່ອນໃສ່ເກີບໜັງຄວາຍ, ເກີບສູງເຮັດດ້ວຍໄມ້, ໄມ້ກ








ຮູບພາບການແຕ່ງກາຍຂອງເຜົ່າ

## 5. ອາຫານ ແລະ ເຄື່ອງດື່ມ



ຮູບພາບອາຫານຫຼັກຂອງເຜົ່າ

ຕາມປົກກະຕິອາຫານການກິນດື່ມຂອງ ຊົນເຜົ່າຜູ້ໄທ ມັກລົດຊາດເຜັດແຊບຊ້ອຍດີ, ກິນເຂົ້າໜຽວ ແລະ ອາຫານປະເພດຕ່າງໆ. ພາເຂົ້າແຕ່ລະເທື່ອຂາດແຈ່ວບໍ່ໄດ້, ພາເຂົ້າຈະບໍ່ໃຫໃຫ້ວາງກ້ອງຂື່ເຮືອນ, ດື່ມນ້ຳດິບ, ນ້ຳຕົ້ມ, ດື່ມເຫຼົ້າເດັດ, ເຫຼົ້າໄຫ ຫຼື ເລົ້າສະໂທ.

## 6. ຄວາມເຊື່ອຖື

ຕາມຄວາມເຊື່ອຂອງ ຊົນເຜົ່າຜູ້ໄທ ມີຮີດຄອງປະເພນີຢ່າງຫຼວງຫຼາຍທີ່ອຸດົມສົມບູນໃນນັ້ນມີພຸດທະສາສະໜາ ແລະ ຜີຄຽງຄູ່ກັນໄປຕ່າງແຕ່ພາກປະຕິບັດຕົວຈິງຄື: ສາສະໜາພຸດຢູ່ວັດ ແລະ ຜີຢູ່ເຮືອນ ຊຶ່ງມັນສະແດງອອກວ່າແຕ່ລະເຮືອນລ້ວນແຕ່ມີຮ້ານບູຊາຜີ້ການເສັ້ນ, ການເຢົາ ແລະ ອື່ນໆ ກໍ່ຍັງເປັນສິ່ງຈຳເປັນແກ່ຊີວິດ, ການບູຊາ ຫຼື ການລ້ຽງຜີພໍ່, ແມ່ຍິງຕ້ອງໄດ້ປະຕິບັດເລື້ອຍໆ, ຄວາມສຳນຶກຂອງເຂົາເຈົ້າຕໍ່ຜີພໍ່ແມ່ແມ່ນໄດ້ມີໜ້າທີ່ປົກປັກຮັກສາລູກຫຼານເປັນຜີທີ່ມີອຳນາດໃນເຮືອນ, ຜີມົນ ຫຼື ຜີເປົ້າມີລັກສະນະທີ່ສາມາດໃນການສື່ສານກັບຜີໂຕອື່ນໆ ຜີກະໄທ້, ຜີທີ່ມີອຳນາດປົກປັກຮັກສາບ້ານເມືອງໃຫ້ມີຄວາມຢູ່ເຢັນເປັນສຸກກໍ່ແມ່ນຫໍບ້ານ (ຜີບ້ານ) ແຕ່ລະປີຊາວບ້ານກໍ່ຈະພາກັນຈັດພິທີລ້ຽງເປັນປະຈຳ, ຄຽງຄູ່ກັບການເຊື່ອຖືຜີ, ຍັງມີພຸດທະສາສະໜາເຊິ່ງເປັນສູນວັດທະນະທຳ, ຂະນົບທຳນຽມທີ່ດີງາມມາແຕ່ບູຮານນະການຂອງ ຊົນເຜົ່າຜູ້ໄທລາວ ໂດຍສະເພາະພຸດມີຄວາມຜູກພັນກັບຜີ ແລະ ພາມທີ່ແຍກອອກຈາກກັນບໍ່ໄດ້ທັງ 3 ຢ່າງນີ້ມັນມີການພົວພັນເຊິ່ງກັນ ແລະ ກັນ.



ຮູບພາບການເຊື່ອຖືຄືກັບເຜົ່າຜູ້ໄທ

**ງານບຸນປະເພນີ:** ສໍາລັບງານບຸນປະຈໍາຂອງເຂົາເຈົ້າໂດຍທົ່ວໄປແລ້ວແມ່ນອີງຕາມປະທິນລາວ ແລະ ໄດ້ຈັດງານບຸນຕາມແຕ່ລະເດືອນຂອງຮີດ 12 ຄອງ 14 ຄືກັນກັບຊົນເຜົ່າລາວໃນຮອບວຽນປີໜຶ່ງ.

**ພິເສດງານບຸນຂອງຊົນເຜົ່າຜູ້ໄທ ຈະມີບຸນຄູນຂວັນເຂົ້າ ຫຼື ບຸນໄຂປະຕູເລົ້າ ຫຼື ບຸນເດືອນ 3 ອອກໃຫມ່ 3 ຄໍ່າ**

## 9. ເຄື່ອງດົນຕີ ແລະ ສິລະປະພື້ນເມືອງ

ດ້ານສິລະປະວັນນະຄະດີຂອງຊົນເຜົ່າຜູ້ໄທແມ່ນໄດ້ມີຫຼາຍຢ່າງເປັນຕົ້ນ: ແຄນ, ກອງ, ກະຈັບປີ່, ຊໍແລະອື່ນໆ, ມີຄໍາຜະຫຍາ, ຄໍາສຸພາສິດ, ກອນຂັບ, ກອນລໍາ, ແລະວາດຟ້ອນໄປຕາມຈັງຫວະໃນເວລາເຂົາເຈົ້າເຮັດພິທີກໍາ, ການເປົ່າ ແລະ ອື່ນໆ

## 10. ພາສາປາກເວົ້າ

ຊົນເຜົ່າຜູ້ໄທ ມີພາສາປາກເວົ້າຄືກັນກັບຊົນເຜົ່າອື່ນໆບໍ່ມີຕົວໜັງສືຂຽນແລະຈັດເຂົ້າໃນໝວດພາສາລາວ-ໄຕ

**ການສົມທຽບພາສາລາວກັບພາສາຜູ້ໄທ**

| ລ/ດ | ພາສາລາວ | ພາສາຜູ້ໄທ |
| --- | --- | --- |

| | | |
|---|---|---|
| 1 | ສະບາຍດີ | ສາບາຍດີ |
| 2 | ໂຊກດີ | ໂຊກດີ |
| 3 | ຂອບໃຈ | ຂອບເຈີ |
| 4 | ຂໍໂທດ | ຂໍໂທດ |
| 5 | ເຈົ້າຊື່ຫຍັງ? | ເຈົ້າຊືຫຍັງ? |
| 6 | ເຮັດຫຍັງຢູ່? | ເຮັດຫຍັງຢູ່? |
| 7 | ກິນເຂົ້າແລ້ວບໍ? | ກິນເຂົ້າແລ້ວບໍ? |
| 8 | ລາກ່ອນ | ລາກ່ອນ |
| 9 | ພົບກັນໃໝ່ | ພົບກັນເໝີ |
| 10 | ບໍ່ເປັນຫຍັງ | ບໍ່ເປັນພິເລີ |
| 11 | ໄປໃສ | ໄປເຊີ |

## ❖ ຊົນເຜົ່າກຣີ

## 1. ປະຫວັດຄວາມເປັນມາ

ຊົນເຜົ່າກຣີ ແມ່ນຊົນເຜົ່າໜຶ່ງທີ່ດຳລົງຊີວິດຢູ່ລາວເປັນເວລາດົນນານຊົນເຜົ່າກຣີມີ ປະຫວັດສາດ ການເຄື່ອນຍ້າຍທີ່ສັບສົນ ແລະ ແຕກຕ່າງກັນ ຊົນເຜົ່າກຣີ ຢູ່ແຂວງບໍລິຄຳໄຊ, ແຂວງຄຳມ່ວນ ແມ່ນເຄື່ອນຍ້າຍຈາກຊາຍແດນຫວຽດນາມ ສ່ວນຢູ່ ແຂວງບໍລິຄຳໄຊ ແມ່ນເຄື່ອນຍ້າຍຈາກທິດຕາເວັນອອກສ່ຽງເໜືອຂອງລາຊະອາຈັກໄທ.



## 2. ຊື່ເອີ້ນຂອງຊົນເຜົ່າກຣີ

ຊົນເຜົ່າກຣີມີຫຼາຍຊື່ເອີ້ນເຊັ່ນ: ກຣີ, ລາບຣີ, ຢູ-ຣີ, ສະລາງຄອມ, ອາເຣມແລະອື່ນໆ. ຊົນເຜົ່າອື່ນມັກເອີ້ນເຂົາເຈົ້າວ່າ: “ຕອງເຫຼືອງ” ແຕ່ເຂົາເຈົ້າບໍ່ມັກຊື່ທີ່ເຂົາເຈົ້າມັກໃຊ້ທາງການ ໃນປັດຈຸບັນແມ່ນກຣີພາສາຂອງເຂົາເຈົ້າແມ່ນຄົນປ່າ

## 3. ອາຊີບຂອງຊົນເຜົ່າກຣີ

ການດໍາລົງຊີວິດຂອງ ຊົນເຜົ່າກຣີ ຢູ່ຕາມປ່າລັກສະນະເລື່ອນລອຍແບບປະຖົມປະຖານມີການເຄື່ອນຍ້າຍໄປມາໃນເລື້ອຍໆ, ການກິນແບບທໍາມະຊາດເຊັ່ນ: ລ່າເນື້ອສັດປ່າ, ຫາປາ, ເກັບເດັດຜັກປ່າສ່ວນຈໍານວນຢູ່ບ້ານຄົງທີ່ກໍ່ຈະເຮັດໄຮ່, ປູກເຂົ້າ, ປຸກຜັກທີເປັນທາດແປ້ງ, ເພື່ອບໍ່ລິໂພກປະຈໍາວັນສໍາລັບເຄື່ອງໃຊ້ຕ່າງໆແມ່ນມີການແລກປ່ຽນຈາກຊົນເຜົ່າທີ່ໃກ້ຄຽງ.

## 4. ທີ່ຕັ້ງບ້ານ ແລະ ເຮືອນ

ລັກສະນະບ້ານເຮືອນຂອງ ຊົນເຜົ່າກຣີ ແມ່ນແບບປະຖົມປະຖານກະທັດຮັດງ່າຍດາຍບໍ່ແໜ້ນໜາຖາວອນເຊິ່ງສ້າງຂຶ້ນໂດຍອາໃສເຄື່ອງທີ່ຫາໄດ້ຕາມທໍາມະຊາດເທົ່ານັ້ນ. ຊົນເຜົ່າກຣີ ຈໍານວນໜຶ່ງຍັງຍົກຍ້າຍໄປມາໃນປ່າທີ່ພູຜາ ແລະປ່າດົງຕຶບໜາເພື່ອອາໄສການເຮັດຕູບນ້ອຍ, ໂກນໄມ້, ຖໍ້າເປັນບ່ອນນອນ ໃນປັດຈຸບັນແມ່ນອີງໃສ່ຂອງພັກ- ລັດ ເຂົາເຈົ້າກໍ່ຕັ້ງຖິ່ນຖານບ້ານຊ່ອງເປັນບ່ອນທີ່ຄົງທີ່ຄືກັບຊົນເຜົ່າອື່ນໆ ແລະ ກໍ່ຍັງມີບາງເລັກນອ້ຍມີຈໍານວນ 10 ກວ່າຄົນເທົ່ານັ້ນ.



ຮູບພາບສະແດງໃຫ້ເຫັນລັກສະນະທີ່ຢູ່ອາໄສຂອງຊົນເຜົ່າ

## 5. ເຄື່ອງນຸ່ງຫົ່ມ

ວັດທະນະທໍາກ່ຽວກັບການນຸ່ງຫົ່ມເຂົາເຈົ້ານຸ່ງຫົ່ມແບບເປືອກໄມ້ຕ່າງໆ ນອກຈາກນັ້ນກໍ່ຫຍິບໃບໄມ້ເຮັດເປັນເຄື່ອງນຸ່ງຫົ່ມ, ສະພາບການປັດຈຸບັນດັ່ງກ່າວກໍ່ໄດ້ມີການປ່ຽນແປງຍ້ອນການດໍາລົງຊີວິດ ແລະ ຄວາມເອົາໃຈໃສ່ຂອງບັນດາຊົນເຜົ່າທີ່ໃກ້ຄຽງພັກ - ລັດທະບານ ແລະ ອົງການສາກົນອື່ນໆ ໃຫ້ການຊ່ວຍເຫຼືອທັງພາຍໃນແລະຕ່າງປະເທດ.



ຮູບພາບການແຕ່ງກາຍ

## 6. ອາຫານ ແລະ ເຄື່ອງດື່ມ

ອາຫານຂອງ ຊົນເຜົ່າກຣີ ກໍ່ຍັງກິນແບບປະຖົມປະຖານແບບທຳມະຊາດເຊັ່ນ: ເຜືອກ, ມັນປ່າ, ໝາກໄມ້ປ່າ, ຜັກປ່າ ແລະ ອື່ນໆ ນອກຈາກນັ້ນພວກເຂົາຍັງມີຄວາມຊຳນິຊຳນານໃນການລ່າສັດປ່າດ້ວຍໜ້ອງແລ້ວມາປຸງແຕ່ງເປັນອາຫານປະເພດຕ່າງໆເຊັ່ນ: ປີ້ງ, ຫຼາມ, ໝົກດ້ວຍໃບຕອງ ແລະ ຄວາມນິຍົມກິນຍອດໝາກຕາວຕາກແຫ້ງແລ້ວປະສົມກັບນ້ຳເຜີ້ງ ແລະ ອື່ນໆ ສ່ວນຈຳນວນທີ່ໄດ້ຢູ່ບ້ານແລ້ວກໍ່ໄດ້ກິນເຂົ້າເປັນອາຫານຄືກັບຊົນເຜົ່າອື່ນ, ການດື່ມແມ່ນດື່ມນ້ຳດິບທີ່ຕັກຈາກຫ້ວຍຮ່ອງ, ຫ່ອມພູຜາຫຼືນ້ຳຍອດໄມ້.

## 7. ຄວາມເຊື່ອຖື

ຊົນເຜົ່າກຣີ ດຳລົງຊີວິດຢູ່ຫ່າງໄກສອກຫຼີກບໍ່ມີເສັ້ນທາງຄົມມະນາຄົມ, ການພົວພັນສັງຄົມພາຍນອກຍັງມີໜ້ອຍຈຶ່ງເຮັດໃຫ້ເຂົາເຈົ້າຍັງມີຄວາມເຊື່ອຖືໃນເລື່ອງໂຊກຊາຕາຂອງຄົນ ແລະ ສິ່ງທີ່ມີຊີວິດເຊັ່ນ: ຜີບັນພະບຸລຸດ, ຜີພໍ່ແມ່, ຜີຫ້ວຍຮ່ອງ, ຜີພູຜາປ່າດົງ, ຜີຟ້າ, ຜີແຖນຖືວ່າຜີເຫຼົ່ານີ້ເປັນຜູ້ນຳໂຊກຊະຕາຂອງທຸກຄົນ.

## 8. ງານບຸນປະເພນີ

ຊົນເຜົ່າກຣີ ມີງານບຸນປະຈຳເຜົ່າຄື: ບຸນປີໃໝ່, ບຸນກິນເຂົ້າໃໝ່, ບຸນທີ່ກ່າວມານີ້ແມ່ນຫຼັງຈາກທີ່ໄດ້ເກັບກ່ຽວເຂົ້າແລ້ວກໍ່ເລີ່ມເຮັດທັນທີຮຽນແບບຊົນເຜົ່າທີ່ຢູ່ໃກ້ຄຽງ

## 9. ສິລະປະພື້ນເມືອງ

ດ້ານສິລະປະວັນນະຄະດີພື້ນເມືອງຂອງຊົນເຜົ່າກຣີບໍ່ອຸດົມສົມບູນບໍ່ພໍເທົ່າໃດແຕ່ເຂົາເຈົ້າຍັງມີ "ຂັບກະເຕັມ" ທີ່ເປັນພາສາຂອງຕົນນອກຈາກນັ້ນກໍ່ແມ່ນລອກລຽນແບບຈາກຊົນເຜົ່າທີ່ຢູ່ໃກ້ຄຽງ

## 10. ດ້ານພາສາປາກເວົ້າ

ດ້ານພາສາປາກເວົ້າຂອງ ຊົນເຜົ່າກຣີ ໄດ້ຈັດເຂົ້າໃນ ໝວດພາສາມອນ - ຂະແມ ແຕ່ສາຂາແຕກຕ່າງກັນ ເຊັ່ນ: ພາກສ່ວນບໍ່ລິຄຳໄຊແຂວງຄຳມ່ວນຈັດເຂົ້າໃນພາສາຫວຽດເມືອງພາກສ່ວນທີ່ດຳລົງຊີວິດຢູ່ແຂວງໄຊຍະບຸລີ ຈັດເຂົ້າໃນສາຂາກຶມມຸອິກ ຊົນເຜົ່າກຣີ ທັງສອງພາກນີ້ບໍ່ມີຕົວໜັງສືຂຽນ.

## 11. ການສົມທຽບພາສາລາວແລະພາສາກຣີ

| ລ/ດ | ພາສາລາວ | ພາສາກຣີ |
|---|---|---|
| 1 | ສະບາຍດີ | ຕະອາຍນອກກີເດ້ |
| 2 | ໂຊກດີ | ມານເຫາກີຄໍ |
| 3 | ຂອບໃຈ | ແມ່ນຕ່ອງ |
| 4 | ເຈົ້າເຮັດຫຍັງ? | ຈັກມີຝັກມີ້? |
| 5 | ເຮັດຫຍັງຢູ່? | ເມຕູເອກຈີຈີ? |
| 6 | ກິນເຂົ້າລະບໍ? | ອັນນັ້ນແລ້ວບໍ? |
| 7 | ລາກ່ອນ | ລາເອີດ |
| 8 | ຂໍໂທດ | ນຸຍປາດ |
| 9 | ພົບກັນໃໝ່ | ເຮວຈັກຈໍຈັກມຣາ |

## ຊົນເຜົ່າລື້
## ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ

ຊົນເຜົ່າລື້ແມ່ນຊົນເຜົ່າໜຶ່ງຂອງຄະຍາດແຫ່ງຊາວລາວເຊິ່ງໄດ້ຕັ້ງຖິ່ນຖານແລະທຳມາຫາກິນຢູ່ປະເທດລາວພ້ອມດຽວກັບໝວດພາສາລາວ-ໄຕຊົນເຜົ່ານີ້ໄດ້ອົບພະຍົບມາຈາກຕາເວັນອອກສ່ຽງໃຕ້ຂອງປະເທດຈີນບໍລິເວັນມົນທົນ 12 ພັນນະລື້ເຂົ້າສູ່ບັນດາແຂວງພາກເໜືອຂອງລາວເຮົາໃນຕອນທ້າຍສະຕະວັດ XIIIເປັນຕົ້ນມາຊົນເຜົ່າລື້ເອີ້ນຕົນວ່າ : ລື້ຊົນເຜົ່າອື່ນເອີ້ນໃຫ້ພວກເຂົາວ່າ: ລື້ເຂົາເຈົ້າມັກຊື່ທີ່ໃຊ້ໃນທາງການໃນປັດຈຸບັນກໍ່ແມ່ນຊົນເຜົ່າລື້ສຳ

ລັບການເອີ້ນລື້ຫຼືໄທລື້ຕາມປື້ມໃນວິງສະອະດານໄດ້ຂຽນໄວ້ວ່າ: ແມ່ນພວກນີ້ຍັງຕົກຄ້າງຢູ່ປະເທດຈີນຕອນໃຕ້ຫຼື ມີນທົນຢູນານ. ພາຍຫຼັງລາວສູນເສຍອານາຈັກແລະພາກັນແຍກອອກມາເປັນຫຼາຍຈຸ້ມຫຼາຍພວກເອີ້ນກັນດ້ອຍຊື່ໃໝ່ ແຕ່ກໍຍັງເອີ້ນວ່າ: " ໄທ" ເພື່ອສະແດງໃຫ້ຮູ້ວ່າເປັນພວກດຽວກັນ. ຄຳວ່າ:" ລື້ " ໄດ້ມາຈາກສອງຄຳຕ່າງກັນຄື: ໜຶ່ງ ໄດ້ມາຈາກຄຳວ່າ: " ດື້" ສອງໄດ້ມາຈາກຄຳວ່າ "ລືຊາ"



ຮູບທີ ການແຕ່ງກາຍຂອງເຜົ່າລື້

## 1. ອາຊີບຂອງຊົນເຜົ່າລື້

ຊົນເຜົ່າລື້ມີອາຊີບຕົ້ນຕໍທາງການກະສິກຳເຊັ່ນ: ການເຮັດນາ,ການເຮັດໄຮ່.ປູກເຂົ້າໜຽວພ້ອມນີ້ຍັງປູກພືດ ຜັກ, ລ້ຽງສັດ. ເຮັດວຽກງານຫັດຖະກຳຕ່າງໆເພື່ອຮັບໃຊ້ຊີວິດປະຈຳວັນແລະສາມາດສ້າງຫຼາຍໄດ້ແກ່ຄອບຄົວອີກ ດ້ວຍ. ໂດຍພື້ນຖານຊົນເຜົ່າລື້ຂ້ອນຂ້າງມີອາຊີບໝັ້ນຄົງຊີວິດການເປັນຢູ່ແມ່ນລະດັບພໍຢູ່ພໍກິນທັງນີ້ກໍເພາະພວກເຂົາ ເປັນຄົນດຸໝັ່ນ. ໃນການຜະລິດ. ການເຮັດນາເປັນຕົ້ນຕໍປະກອບດ້ວຍການຕັ້ງບ້ານເຮືອນທີໝັ້ນຄົງຖາວອນພິເສດ ແມ່ຍິງຊົນເຜົ່າລື້ຈະມີໃນການດຸໝັ້ນໃນການປູກມອນ, ລ້ຽງມ້ອນ, ຕຳຫູກ, ທໍໄໝ. ແລະ ຄ້າຂາຍເປັນອາຊີບເສີມ ເພື່ອສ້າງລາຍໄດ້ໃຫ້ແກ່ຄອບຄົວ.

## 2. ທີ່ຕັ້ງ ແລະ ບ້ານເຮືອນ

ລັກສະນະບ້ານເຮືອນຂອງຊົນເຜົ່າລື້ເຂົາເຈົ້າມັກຕັ້ງຢູ່ບອນຮາບພຽງຕາມລ້ອງແມ່ນ້ຳທີ່ມີເງື່ອນໄຂສະດວກ.ໃນ ການເຮັດນາ, ຮູບແບບເຮືອນ, ເປັນເຮືອນຮ້ານສູງແຕ່ກ່ອນແມ່ນນິຍົມຕັ້ງເຮືອນໃຫຍ່ຫຼືເຮືອນແຝດ (ສອງຫຼັງຄາພື້ນ ດຽວກັນຫຼືຫຼັງຄາດຽວແຕ່ຕໍ່ຊານອອກຫາເລົ້າເຂົ້າໃນເຮືອນຈະແຍກອອກເປັນສອງສ່ວນຄື: ສ່ວນໜຶ່ງແມ່ນສຳລັບຮັບ ແຂກນອນ, ເກັບມ້ຽນເຄື່ອງທີສຳຄັນແລະອີກສ່ວນໜຶ່ງແມ່ນສຳລັບແຕ່ງກິນນອກຈາກນີ້ເຂົາຍັງປະຫ້ອງໜຶ່ງໄວ້ເອີ້ນ ວ່າ " ເຊຍ" ພາສາລື້ເອີ້ນວ່າ: "ໜ້າວາງ " ເພື່ອເປັນບ່ອນນັ່ງຫຼິ້ນ ຫຼື ຮັບແຂກຕ່າງແຕ່ລະເຮືອນຈະມີຫ້ອງບູຊາຜີດັ່ງ ນັ້ນ, ຢູ່ໃນເຮືອນຂອງເຂົາເຈົ້າຈະມີການຄະລຳໃນເວລາເຂົ້າຫ້ອງນອນແລ້ວມີອີກບ່ອນໜຶ່ງບໍ່ໃຫ້ນັ່ງບ່ອນ ຫຼື ເບາະນັ່ງ ຂອງເຈົ້າຂອງເຮືອນສ່ວນຢູໃນບ້ານຈະມີການຄະລຳໃນຮີດຄອງປະເພນີບ້ານເຊັ່ນ: ຫ້າມບໍ່ໃຫ້ຄົນເຂົ້າໃນເວລາເຫັນ ເຄື່ອງໝາຍຕາແຫຼວ ຫຼື ພົດໄມ້ດິບຢູ່ປາກປະຕູໂຂງຂອງບ້ານ. ຖ້າລະເມີດຈະຖືກປັບໃໝຫຼືດັດແປງຜີບ້ານ, ຜີເຮືອນ ແລະ ຜີອື່ນໆ.



ຮູບທີ ລັກສະນະທີ່ຕັ້ງບ້ານ ແລະ ເຮືອນ

### 5.4. ເຄື່ອງນຸ່ງຫົ່ມ

ຄຽງຄູ່ກັບສິ່ງທີ່ກ້າວມາຊົນເຜົ່າ "ລື້ " ກໍ່ຍັງມີເຄື່ອງນຸ່ງຫົ່ມ,ເອ້ຍ້ອງທີ່ມີເອກະລັກປະຈຳເຜົ່າສ່ວນຫຼາຍຜູ້ຊາຍຈະນຸ່ງໂສ້ງ, ເສື້ອດຳຜ້າຄຽນຫົວສີດຳຫຼືລາຍດຳຂາວແມ່ຍິງຈະນຸ່ງສິ້ນແຊງເຄື່ອດຳຈົກດອກລວດລາຍຕາມມັກນຸ່ງເສື້ອສີດຳຫຼືຟ້າແກ່ແຂບປາຍຫຼືຄໍແຂນ ແລະ ແຂບເສື້ອພັບນອກແລ້ວປາຍມັດຂ້າງ.



ລັກສະນະການແຕ່ງກາຍຂອງເຜົ່າ

### 4.5. ອາຫານ ແລະ ເຄື່ອງດື່ມ.

ສຳລັບອາຫານການກິນຂອງຊົນເຜົ່າ " ລື້" ມັກລົດຊາດເຜັດ, ແຊບຊ່ອຍດີແລະກິນເຂົ້າໜຽວຕາມປົກກະຕິພາເຂົ້າຂອງຊົນເຜົ່າລື້ແຕ່ລະເທື່ອຈະຂາດແຈ່ວບໍ່ໄດ້. ເວລາວາງພາເຂົ້າບໍ່ໃຫ້ວາງກ້ອງຂື່ເຮືອນຕ້ອງໄດ້ພະຍາຍາມຫ່າງອອກຈາກຂື່ຂ້າງໃດຂ້າງໜຶ່ງກໍ່ໄດ້ເຄື່ອງມືແມ່ນເຫຼົ້າໄຫ, ເຫຼົ້າເດັດ, ເຫຼົ້າສະໂທ.

## ຄວາມເຊື່ອຖື.

ຊົນເຜົ່າລື້ມີຮີດຄອງປະເພນີຄວາມເຊື່ອຖືແລະວັດທະນະທຳຄ້າຍຄືຊົນເຜົ່າລາວເຂົາເຈົ້າມີຄວາມເຊື່ອຖືແລະນັບຖືພຸດທະສາສະໜາທີຂອນຂ້າງເຄັ່ງຄັດແລະແໜ້ນແຟ້ນ. ສັງເກດຈາກສະຖານທີທາງສາສະໜາທີ່ໃຫ່ຍໂຕກ້ວາງຂວາງ

ສະຫງ່າງາມຮີດຄອງທາງສາສະໜາສົ່ງລູກຊາຍມີອາຍຸແຕ່ 10 ຂຶ້ນໄປ. ເຂົ້າບວດໃນຊວງໄລຍະໃດໜຶ່ງແລ້ວຈຶ່ງສິກອອກມາສ້າງຄອບຄົວຫຼືເຮັດວຽກອື່ນໆ. ນອກຈາກນັບຖືສາສະໜາພຸດແລ້ວຍັງເຊື່ອຜີເຊັ່ນ: ຜີພໍ່, ຜີແມ່, ຜີເຮືອນ,ຜີເມືອງເປັນຕົ້ນວັດທະນາທຳທີ່ຄ້າຍຄືລາວມີຄື:

- ການຈູດຜີແມ່ນເຂົາເຈົ້າຫອ້ງໄດ້ເອົາພະອິງສວດແລ້ວຈຶ່ງມາຈູດແລ້ວຈະມີການຍາດພີ່ນ້ອງໄປນຳຫຼືຄົນຮູ້ຈັກຫຼາຍໆຄົນ.
- ການແຕ່ງດອງເຂົາເຈົ້າໃຫ້ພໍ່ແມ່ຫຼືຜູ້ໃຫຍ່ທາງຝ່າຍຊາຍມາສູ່ຂໍໄວ້ແລ້ວຂັດກັນມື້ແຕ່ງເມື່ອຮອດມື້ແຕ່ງຂະບວນຂັນໝາກຝ່າຍຊາຍຫຼືແຫເຂີຍເພື່ອໄປເຮືອນເຈົ້າສາວໃນງານແຕ່ງງານເຂົາເຈົ້າຈະເຮັດພາຂວັນແລະມີພໍ່ໝໍຈະເປັນຜູ້ສູດພາຂວັນເພື່ອເອີ້ນຂວັນເຈົ້າບ່າວເຈົ້າສາວຫຼັງຈາກບາສີຂວັນແລ້ວບ່າວສາວກໍຈະຂຶ້ນເຮືອນຫໍເຊິ່ງເປັນເຮືອນຝ່າຍຍິງ.

❖ **ງານບຸນປະຈຳປີເຜົ່າລື້**

ງານບຸນປະຈຳປີເຜົ່າລື້ມີ 5 ງານຄື: ບຸນທານທຳຫຼວງບໍກຳນົດເວລາ, ບຸນເຂົ້າສະຫຼາກ, ບຸນຂຶ້ນທາດແມ່ນຈະຈັດຂຶ້ນ 5 ເຜັງແລະບຸນຊ່ວງເຮືອທີ່ເປັນຫຼັກຫຼືບຸນປະຈຳຊົນເຜົ່າລື້.

## 4.6. ເຄື່ອງດົນຕີແລະສິລະປະພື້ນເມືອງ

ຊົນເຜົ່າລື້ມີເຄື່ອງດົນຕີປະຈຳເຜົ່າຄື: ກ້ອງ, ແຄ້ນ, ປີ່, ຄ້ອງທີ່ນຳມາສະແດງໃນງານບຸນຂອງເຂົາເຈົ້າ.

## 4.7. ພາສາປາກເວົ້າ

ໝວດພາສາຂອງຊົນເຜົ່າລື້ຈັດເຂົ້າໃນໝວດພາສາລາວ-ໄຕເຂົາເຈົ້າມີຕົວໜັງສືຂຽນສ່ວນຫຼາຍຈະພົບເຫັນໃນໃບລານ. ຕົວອັກສອນຫຼືຕົວໜັງສືຂຽນ. ຂອງຊົນເຜົ່າລື້ຄ້າຍຄືໄຕທຳ

**ການສົມທຽບພາສາລື້ກັບພາສາລາວ**

| ລ/ດ | ພາສາລາວ | ພາສາລື້ |
|---|---|---|
| 1 | ສະບາຍດີ | ສະບາຍດີ |
| 2 | ໂຊກດີ | ໂຊກດີເນີ |
| 3 | ຂອບໃຈ | ຂອບໃຈເນີ |
| 4 | ຂໍໂທດ | ສູ່ມາເລີ |
| 5 | ເຈົ້າຊື່ຫຍັງ | ເຈົ້າຊື່ຫຍັງ |
| 6 | ເຮັດຫຍັງຢູ່ | ເຮັດຫຍັງຢູ່ |
| 7 | ກິນເຂົ້າແລ້ວບໍ | ກິນເຂົ້າລະ |
| 8 | ລາກອນ | ເມື່ອກອນເນີ |

## ຊົນເຜົ່າອິວມຽນ

## ປະຫວັດຄວາມເປັນມາ

ອິວມຽນເປັນຊົນເຜົ່າທີ່ມີປະຫວັດຄວາມເປັນມາແຕ່ດົນນານ, ແຕ່ສະໄໝສົງຄາມກາງເມືອງໃນປະເທດຈີນ ເປັນຊົນເຜົ່າທີ່ມີຖິ່ນຖານດັ້ງເດີມແມ່ນຕັ້ງຢູ່ຕອນກາງຂອງປະເທດຈີນ, ໄດ້ເລີ່ມອົບພະຍົບເຂົ້າມາສູ່ມົນທົນກວາງຕຸງ, ກຸຍໂຈວ, ກວາງສີ ແລະ ຢູນານຊຶ່ງຢູ່ທິດຕາເວັນຕົກສຽງໃຕ້ຂອງສປປຈີນໃນລາດສະວົງຂິນຣັ່ນ. ບາງສ່ວນກໍ່ເຄື່ອນຍ້າຍເຂົ້າຢູ່ພາກເໜືອຂອງສສຫວຽດນາມໃນສະຕະວັດທີ 14-16 ຈາກນັ້ນກໍກະຈາຍເຂົ້າສູ່ປະເທດລາວ, ປະເທດມຽນມາແລະລາຊາອານາຈັກໄທ. ສຳລັບການເຄື່ອນຍ້າຍເຂົ້າສູ່ປະເທດລາວໄດ້ແບ່ງອອກເປັນຫຼາຍໄລຍະແລະຫຼາຍເສັ້ນທາງທີ່ແຕກຕ່າງກັນຄື: ເຄື່ອນຍ້າຍເຂົ້າສູ່ລາວໂດຍຜ່ານບັນດາແຂວງພາກຕາເວັນຕົກສຽງເໜືອຂອງສສຫວຽດນາມ, ເຂົ້າສູ່ແຂວງຫົວພັນ, ຊຽງຂວາງ ແລະ ແຂວງຫຼວງພະບາງມີເສັ້ນທາງໜຶ່ງງຜ່ານບັນດາແຂວງທິດໃຕ້ຂອງສປປຈີນເຂົ້າສູ່ບັນດາແຂວງພາກເໜືອຂອງລາວເຊັ່ນ: ແຂວງຜົ້ງສາລີ, ແຂວງອຸດົມໄຊ, ແຂວງຫຼວງນ້ຳທາແລະແຂວງບໍ່ແກ້ວ.



ຮູບການແຕ່ງກາຍຂອງຊົນເຜົ່າອິວມຽນ

### 1. ຊື່ເອີ້ນຂອງເຜົ່າ

ຊົນເຜົ່ານີ້ມີຊື່ເອີ້ນແຕກຕ່າງກັນໃນແຕ່ລະສະໄໝເຊັ່ນ: ໃນສະໄໝລາດຊະວົງຂິນຣັ່ນຖືກເອີ້ນວ່າ “ ມໍມານ ” ສະໄໝລາດສະວົງຖັງຖືກເອີ້ນວ່າ “ ມໍຢ້າວ ” ເຊິ່ງໄດ້ມີຄວາມໝາຍວ່າ: ບໍ່ຢູ່ໃຕ້ອຳນາດຂອງຜູ້ໃດດັ່ງນັ້ນຊື່ເອີ້ນວ່າ “ ຢ້າວ ” ແມ່ນຊື່ຊົນເຜົ່າອື່ນເອີ້ນໃຫ້ເຂົາເຈົ້າ, ຊື່ທີ່ເຂົາເອີ້ນຕົນເອງ, ມັກທີ່ສຸດແລະຊື່ທີ່ກຳລັງໃຊ້ທາງລັດສະການໃນປັດຈຸບັນແມ່ນ: ຊົນເຜົ່າ “ ອິວມຽນ ” ຊຶ່ງມີຄວາມໝາຍວ່າ: “ ອິວມຽນ ” ແມ່ນຊົນເຜົ່າ. ຄຳເຕັມຂອງຊື່ຊົນເຜົ່າທີ່ວ່າ: “ ອິ - ຢູ່ມຽນ ” ແມ່ນຊົນເຜົ່າອິວມຽນແລະປະກອບດ້ວຍແຊງຕ່າງໆເຊັ່ນ: ແລນແຕນ, ຢ້າວຂາວ, ຢ້າວຜົມໃໝແດງ. ສຳລັບແລນແຕນມີຊື່ເອີ້ນຄື: ໄລຍະທຳອິດເອີ້ນວ່າຢິວ, ຕໍ່ມາຍ້ອນວ່າຊົນເຜົ່ານີ້ຮູ້ຍ້ອມເຄື່ອງດ້ວຍສີຄາມຈີນຈຶ່ງເອີ້ນວ່າ: ແລນແຕນເວລາຍົກຍ້າຍມາຢູ່ລາວແລນແຕນຢູ່ຕາມຫ້ວຍນ້ຳລຳເຊສະນັ້ນຊົນເຜົ່າລາວຈຶ່ງເອີ້ນເຂົາເຈົ້າວ່າ “

ຫ້ວຍ ” ຊື່ທີ່ເຂົາມັກແທ້ແມ່ນ “ ແລນແຕນ ” ແສນແຕນມັກໃສ່ຊື່ແລະນາມສະກຸນສິ່ງທີ່ດີເລີດຂອງຕົນ ຫຼື ສິ່ງຂອງອ ອ້ມຕົວເຮົາສ່ວນຍິງສາວມັກຈະເປັນດົ້ວນ້ອຍເພື່ອຫຼີກຂົນຄິ້ວໃຫ້ກຽງຊຶ່ງຈະມີຈຸດປະສົງຢາກງາມແລະເກັ່ງ.

## 2. ອາຊີບຂອງຊົນເຜົ່າ

ການດຳລົງຊີວິດທາງດ້ານເສດຖະກິດ, ເຂົາເຈົ້າມີອາຊີບຕົ້ນຕໍກໍ່ແມ່ນ: ໃນການເຮັດໄຮປູກເຂົ້າຈ້າວພ້ອມກັນນັ້ນກໍ່ຍັງປູກພືດສຳຮອງຫຼາຍຊະນິດເພື່ອຮັບໃຊ້ຊີວິດປະຈຳວັນຂອງຄອບຄົວຄື: ສາລີ, ມັນຕົ້ນ, ມັນດາງ, ໝາກຖົ່ວແລະ ພືດຜັກຕ່າງໆສັດທີ່ຊົນເຜົ່ານີ້ນິຍົມກັນລຽ້ງໄດ້ແກ່: ຄວາຍ, ງົວ, ມ້າ, ແບ້, ໝູ, ໝາ, ແລະໄກ່ພິເສດຊົນເຜົ່າອິວມຽນເຊື້ອໃນການຖັກແສ່ວຄ້າຂາຍນ້ອຍເພື່ອເສີມລາຍໄດ້ແກ່ຄອບຄົວ.

ນອກນັ້ນເຂົາຍັງຮູ້ເອງໄມ້ໃຜມາຜະລິດເປັນເຈ້ຍເຊິ່ງເປັນສັນຍາລັກຂອງເງິນໃຊ້ປະກອບເຂົ້າໃນພິທີກຳການໄຫວ້ຜີຕ່າງໆ.




ຮູບການທັກແສ່ວຫັດຖະກຳຖັກແສ່ວ

## ທີ່ຕັ້ງບ້ານ ແລະ ເຮືອນ

ສະໄໝກ່ອນການຕັ້ງບ້ານເຮືອນຂອງຊົນເຜົ່າອິວມຽນສ່ວນຫຼາຍແມ່ນຢູ່ເຂດເປີ້ນພູບອ່ນທີ່ສູງຊັນ, ມີອາກາດໜາວແລະມີສາຍນ້ຳລຳທານ, ລັກສະນະເຮືອນຂອງເຂົາເຈົ້າເປັນເຮືອນຊັ້ນດຽວຕິດດິນ, ສອງຜາເຮືອນຊາຍ, ຂວາມີປະຕູເຂົ້າອອກເບື້ອງລະປ່ອງຄື: ປະຕູຊາຍໄຂເຂົ້າບໍລິເວນຮັບແຂກ, ປະຕູຍິງໄຂເຂົ້າສູ່ຄອບຄົວສ່ວນປະຕູສາມເອີ້ນວ່າປະຕູໃຫຍ່ສຳລັບເຮັດພິທີກຳຕ່າງໆຢູ່ກົງກັນຂ້າມກັບຮ້ານບູຊາຜີຊົນເຜົ່ານີ້ນັບຖືວ່າເຮືອນເປັນສິ່ງທີ່ກໍ່ສ້າງສິ່ງສັກສິດ. ສະນັ້ນການປຸກເຮືອນຕ້ອງຫາມື້ຫາຍາມເພືອບໍ່ໃຫ້ຜິດຜີ ( ຜິດຮີດຂອງເຜົ່າ ) ແລະ ເພື່ອຄວາມປອດໄພກໍຄືຄວາມສຸກຂອງຄອບຄົວ.



ຮູບທີ່ຕັ້ງບ້ານ ແລະ ລັກສະນະເຮືອນ ແລະ ເຄື່ອງນຸ່ງຫົ່ມ

## 3. ເຄື່ອງນຸ່ງຮົ່ມ

ນັບແຕ່ໃດໆມາຊົນເຜົ່າອິວມຽນແມ່ນມີເອກະລັກວັດທະນາທໍາທາງດ້ານການນຸ່ງຫົ່ມ ແລະ ເອ້ຍ້ອງທີ່ເປັນເອກະລັກຂອງຊົນເຜົ່າຕົນໃນແຕ່ລະແຂວງກໍ່ມີຄວາມແຕກຕ່າງກັນອອກໄປເຊັ່ນ: ແມ່ຍິງໂດຍປົກກະຕິແລ້ວແມ່ນມີຄວາມນິຍົມນຸ່ງໂສ້ງຂາລີບສີດໍາແລະແສ່ວປ້າຍຂາໂສ້ງດ້ວຍດອກຝ້າຍຫຼາຍສີຄື: ສີແດງ, ສີຂາວ, ສີເຫຼືອງ, ສີຟ້າຍອນລົງຮອດປາຍແຂງ, ຫົ່ມເສື້ອແຂນຍາວສີດໍາແລະຢູ່ສົ້ນຂອງແຂນເສື້ອໄດ້ມີການປັກແສ່ວລວດລາຍດວ້ຍຝ້າຍທີ່ມີສີສັນແຕກຕ່າງກັນເຊັ່ນ: ສີດໍາ, ສີຂາວ, ແຂບຄໍເສື້ອດ້ວຍໝາກປັດແລ້ນສີແດງ, ສີບົວທັງປະດັບດ້ວຍເງິນນົ້ມຫ້ອຍໄວ້ຕາມໜ້າເອິກຂອງເສື້ອຊຸດໜຶ່ງໆທີ່ມີນໍ້າໜັກ 1, 5 ກຼາມໃສ່ຜ້າສີດໍາຄຽນຫົວທີ່ມີຄວາມຍາວ 10 ແມັດສ່ວນຜ້າຄອ້ງຄໍແຕ່ລະແຂວງຈະບໍ່ຄືກັນເຊັ່ນ: ມີຜ້າແລ້ນ. ຜ້າແພ່ສີຂາວຍາວປະມານ 1 ແມັດມີກະແສ່ວປັກລວດລາຍຄອງຄໍພາດລົງບາທາງໜ້າສອງເບື້ອງ. ນອກຈາກນີ້ແລ້ວກໍ່ຍັງມີຜ້າສີດໍາແຄ້ນແອວທີ່ແສ່ວດ້ວຍຜ້າສີແດງຢູ່ສອງສົ້ນຂອງແພ. ຜ້າພັນແຂນສີຂາວທີດ້ວຍຜະລິດດວ້ຍຕົນເອງແລະມີເຄື່ອງປະເອ້ຍອ້ງທີ່ເຮັດດວ້ຍເງິນຄື: ປອກຄໍ, ປອກແຂນ, ປອກຂາ, ຕ້າງຫູແລະສາຍຄໍຍາວ. ໃນອາດີດແມ່ຍິງຊົນເຜົ່າອິວມຽນບໍນິຍົມໃສເກີບພັດມີຄວາມນິຍົມໃສປອກແຂນສາຍຄໍທີ່ເຮັດດ້ວຍເງິນມີນໍ້າໜັກສອງຂີດຂຶ້ນໄປ. ແຕ່ສໍາລັບຜູ້ຊາຍແມ່ນມັກນຸ່ງໂສ້ງສີດໍາຂາລີບຍາວພຽງປາຍແຄ່ງແສ່ວດວ້ຍຝ້າຍສີແດງຢູ່ປາຍຂອງຂາໂສ້ງມີຄວາມນິຍົມເສື້ອສີດໍາມີກະດຸມຢູ່ສະຫວ່າງສອງຂ້າງ. ໃນເສື້ອຊຸດໜຶ່ງປະປະດັບດ້ວຍເງິນນົ້ມປະມານ 25 ໜວ່ຍຂື້ນໄປຜູ້ຊາຍທີ່ມີຄອບຄົວແລ້ວນັ້ນມີຄວາມນິຍົມໃສໝວກສີດໍາແຄບດວ້ຍສີແດງ.

## 4. ອາຫານ ແລະ ເຄື່ອງດື່ມ

ໃນສະໄໝກ່ອນສະພາບການກິນການດື່ມຫຼືການດຶງດູດຝົ່ນຂອງຊົນເຜົ່າອິວມຽນກໍຄືກັບຊົນເຜົ່າອື່ນໆໃນປະເທດລາວເປັນຕົ້ນເຂົາເຈົ້າໄດ້ອາໃສທຳມະຊາດແລະສິ່ງແວດລ້ອມທີ່ອ້ອມຕົວຄື:ຫຼ່າເນື້ອສັດປ່າ, ຫາປາຕາມຫ້ວຍຮອງ, ເກັບເດັດຜັກປ່າ, ໜໍ່ໄມ້ທີ່ຫາມາປຸງແຕ່ງເປັນອາຫານປະເພດຕ່າງໆເຊັ່ນ: ປະເພດແກງ, ລາບສຸກ, ລາບດິບ, ປີ້ງ, ໝົກດ້ວຍໃບຕອງ, ຫຼາມໃສບັ້ງໄມ້ໃຜ່, ຕົ້ມຜັກ, ກິນເຂົ້າຈ້າວ, ກິນອາຫານທີ່ມີລົດຊາດມີລັກສະນະເຄັມ, ເຜັດ. ການກິນຂອງຊົນເຜົ່າອິວມຽນໃນເວລານັ້ນເຄື່ອງໃຊ້ໃນຄົວເຮືອນຈະມີເຊັ່ນວ່າ: ຖ້ວຍ, ບ່ວງ, ໝໍ້ແລະອື່ນໆແມ່ນອາໄສທຳຊາດ, ສິ່ງປະດິດຄິດແຕ່ງມາໃຊ້ໃນຊີວິດປະຈຳວັນແລະບາງທ້ອງຖິ່ນກໍ່ຍັງເຫັນເທົ່າທຸກວັນນີ້.ມາຮອດໄລຍະໜຶ່ງພວກກໍ່ພັດທະນາທາງດ້ານການປຸງແຕ່ງອາຫານດ້ວຍການໃສ່ຜັກຫອມບົ່ວ, ຜັກຫອມ,ຜັກຫອມລາບແລະຫົວສີໄຄຊຶ່ງມີລົດຊາດຈະເຜັດໜ້ອຍໜຶ່ງ, ເຄັມ, ບໍ່ຈືດຈາງເກີນໄປໂດຍປະເພນີແລ້ວຊົນເຜົ່າອິວມຽນ, ແມ່ນນິຍົມດື່ມນ້ຳດິບທີ່ຕັກຈາກຫ້ວຍ, ຮ່ອງ, ໜອງ, ບຶງ, ດື່ມເຫຼົ້າໃນເວລາງານດອງງານບຸນຕ່າງໆປະເພນີຂອງເຂົາສູບຢາເສັ້ນແຕ່ກ່ອນແມ່ນນິຍົມກິນຝິ່ນບໍ່ວ່າຍິງຫຼືຊາຍເຂົາເຈົ້າຈະບໍ່ມີຂໍ້ຫ້າມການຄະລຳໃນເວລາກິນອາຫານແລະດື່ມເຫຼົ້າຊຸມແຊວພຽງແຕ່ໃນເວລາງານດອງຫຼືງານບຸນກ່ອນຈະກິນເຂົ້າຕ້ອງເອົາອາຫານແລະເຫຼົ້າຖວາຍຜີໄດ້ກິນກ່ອນໃນໄລຍະໜຶ່ງຄືນຈຶ່ງຄ່ອຍໆກິນໄດ້.

## 5. ສາສະໜາຄວາມເຊື່ອ ແລະ ພິທີກຳ (ຊອກຫາຕາມຜີແມ່ນ້ຳ )

ໃນຮອບວຽນປີໜຶ່ງໆງານບຸນປະເພນີສຳຄັນຂອງຊົນເຜົ່າອິວມຽນແມ່ນບຸນປີໃໝ່ ( ບຸນກິນຈຽງ ) ເຈຍຊຽງຮຽງ, ຊຶ່ເດືອນໜຶ່ງຈັດຂຶ້ນຂອງທຸກໆປີນອກຈາກນັ້ນແຕ່ລະເດືອນເຂົາເຈົ້າຍັງມີພິທີຫຼາຍເຊັ່ນ: ເດືອນສິບສອງເຮັດພິທີກຳບ້ານ, ເດືອນສາມເຮັດພິທີກຳບູຊາຫຼືເຄນຜີພໍ່ແມ່, ບັນພະບຸລຸດ. ໃນພິທີກຳນີ້ແມ່ນໄດ້ເອົາເຂົ້າທີ່ໜຶ່ງສຸກແລ້ວມາຍອ້ມສີເຮັດເປັນສີສັນໝາຍຄວາມ: ເຮັດເຂົ້າດຳ, ເຂົ້າແດງ, ເຂົ້າເຫຼືອງ, ເຂົ້າຂາວແລະອື່ນໆ. ເພື່ອບູຊາໃຫ້ບັນດາຜີດັ່ງກ່າວເດືອນສີ່ກ່ອນຈະລົງມືເຮັດການຜະລິດຕ້ອງໄດ້ເຮັດທີກຳຄອບໄຊ່ວໃຫ້ເຈົ້າຖິ່ນເຈົ້າຖານເປັນຜູ້ປົກປັກຮັກສາແລະສິ່ງສິ່ງສັກສິດໃຫ້ພົນລະປູກງອກງາມ, ເດືອນຫ້າຫາເດືອນເຈັດບຸນຫໍ່ເຂົ້າຕົ້ມເອົາກາບກ້ວຍຫຼືເຈ້ຍຂາວມາຕັດເປັນຮູບເຄື່ອງນຸ່ງຫົ່ມຂອງບູຊາຜີພໍ່ແມ່, ຜີເຮືອນ, ເຮັດບຸນກິນເຂົ້າໃໝ່, ເດືອນສິບເອັດເຮັດບຸນພິທີກຳ “ ຕຸກາຍ ” ງານນີ້ຈັດສະເພາະຜູ້ທີເປັນລູກຊາຍຄົນອາຍຸ 10 ປີເທົ່ານັ້ນ, ມີການຕີກ້ອງ, ຮ້ອງເພງ, ພ້ອນສະຫຼັບກັນໄປຂະບວນຝຶດຝົ້ນເປັນເວລາ 2 –3 ວັນຈາກນັ້ນພໍ່ແມ່ຈຶ່ງຂ້າໝູແລ້ວເຊີນຄົນໝົດທັນມາກິນຮ່ວມກັນ.

- ❖ ສາສະໜາ: ຊາວອິວມຽນສ່ວນໃຫຍ່ນັບຖື ຜີພໍ່, ຜີແມ່, ວິຍານບັນພະບຸລຸດ ແລະ ວິນຍານທົ່ວໄປ
- ❖ ຄວາມເຊື່ອ: ເຜົ່າອິວມຽນເຊື່ອໃນສິ່ງທີ່ເໜືອທຳມະຊາດ, ເຊື່ອໃນສິ່ງສັກສິດ, ຕະຫຼອດຈົນຮອດນັບວັນເດືອນປີກ່ຽວຂອງກັບຊີວິດປະຈຳວັນ, ກ່ຽວກັບໂຊກລາບ
- ❖ ພິທີກຳ: ມີພິທີກຳການມີລູກ, ພິທີກຳການເກີດ, ມີພິທີກຳການຜູກແຂນມີພິທີກຳການບວດ, ການແຕ່ງງານ, ງານສົບ ແລະ ມີພິທີກຳງານຂຶ້ນປີໃໝ່ແລະອື່ນໆ

## 6. ເຄື່ອງດົນຕີ ແລະ ສິນລະປະພື້ນເມືອງ

ດ້ານສິນລະປະວັນນະຄະດີຊົນເຜົ່ານີ້ຈະມີເນື້ອຮ້ອງທຳນອງເສບມີເພງຮ້ອງເຢົາຢູງ, ມີກອນລຳ, ຂັບຢ້າວທີ່ເປັນເອກະລັກຂອງຕົນເອງ.ພິເສດເຂົາເຈົ້າຍັງມີຕົວໜັງສືຂຽນດ້ວຍຕົວອັກສອນຈີນທີ່ເວົ້າເຖິງໂລກໄຂ້ໄຟເຈັບ, ວິທີປິ່ນປົວ, ເວົ້າເຖິງດວງສະຕາແລະເວົ້າເຖິງຈິດວິນຍານນອກຈາກນັ້ນເຂົາເຈົ້າຍັງມີເຄື່ອງດົນຕີເຊັ່ນ: ຄ້ອງ, ກ້ອງ, ແຊ້ງ, ປີ ແລະເຄື່ອງແຕ່ງກາຍທີ່ເປັນເອກະລັກປະຈຳຊົນເຜົ່າຂອງເພດຊາຍແລະເພດຍິງຊຶ່ງປະກອບດ້ວຍສີສັນລວດລາຍຈາກສີໄມ້ລາຍມີອັນປານິດ, ມາຈາກການຊຳນິຊຳນານຂອງຊົນເຜົ່ານັ້ນເອງ.

## 7. ພາສາປາກເວົ້າ

ພາສາປາກເວົ້າຂອງຊົນເຜົ່ານີ້ແມ່ນຈັດຢູ່ໃນໝວດພາສາມົ້ງ - ອິວມຽນຊົນເຜົ່າອິວມຽນແລະຊົນເຜົ່າແລນແຕນມີຕົວໜັງສືຂຽນຊຶ່ງເປັນຕົວໜັງສືຈີນຍ້ອນວ່າ: ຊົນເຜົ່ານີ້ໃນສະໄໝກອນແມ່ນອ່ານແລະຂຽນຈາກຜູ້ເປັນພໍ່ ຫຼື ຄູຄົນຈີນແມ່ນໃຊ້ຕົວອັກສອນຈີນບັນທຶກໃນພິທີກຳທາງສາສະໜາປະຫວັດການສືບຕະກູນ ແລະ ອື່ນໆ

**ການສົມທຽບລະຫວ່າງພາສາລາວກັບພາສາອິວມຽນ**

| ລ/ດ | ພາສາລາວ | ພາສາອິວມຽນ |
|---|---|---|
| 1 | ສະບາຍດີ | ລົງຂັນບໍ |
| 2 | ໂຊກດີ | ລົງເຮນໂອ |

## ຊົນເຜົ່າມົ້ງ

### ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ

ມົ້ງແມ່ນຊົນເຜົ່າໜຶ່ງທີ່ດຳລົງຊີວິດຢູ່ດິນແດນປະເທດລາວເຮົາມານັບແຕ່ກາງສະຕະວັດທີ XIX ເປັນຕົ້ນມາ. ຊົນເຜົ່ານີ້ອົບພະຍົບເຄື່ອນຍ້າຍມາຈາກທິເບດ, ຊີບີລີ, ມົງໂກນ ເຂົ້າສູ່ປະເທດຈີນ ແລະ ຕັ້ງຖິ່ນຖານຫຼັກແຫຼ່ງຢູ່ລຸ່ມແມ່ນ້ຳເຫຼືອງ (ຮວງຮາ). ສາເຫດການເຄື່ອນຍ້າຍແມ່ນຍ້ອນສົງຄາມຈຶ່ງໄດ້ພາກັນອົບພະຍົບເຄື່ອນຍ້າຍຖອຍລົງມາທາງພາກໃຕ້ຂອງປະເທດຈີນ ເຂົ້າສູ່ປະເທດຫວຽດນາມ, ລາວ ແລະ ລາຊະອານາຈັກໄທ.




ຮູບຊົນເຜົ່າມົ້ງ ທີ່ອາໄສຢູ່ໃນລາວ

**ຊື່ເອີ້ນຊົນເຜົ່າມົ້ງ:** ເອີ້ນຕົນເອງວ່າ: ມົ້ງ ສຳລັບຊົນເຜົ່າມົ້ງທີ່ອາໄສຢູ່ໃນລາວ ການທີ່ເອີ້ນເຂົາເຈົ້າວ່າມົ້ງນັ້ນ ແມ່ນເປັນຊື່ທີ່ເຂົາເຈົ້າມັກ ແລະ ເພິ່ງພໍໃຈທີ່ສຸດ ທັງເປັນຊື່ດັ້ງເດີມ ແລະ ເປັນຊື່ທີ່ນຳໄປໃຊ້ທາງລັດຖະການ

ໃນປັດຈຸບັນ. ຄຳວ່າ: ມົ້ງ ຕາມຄວາມໝາຍຂອງພາສາເຂົາເຈົ້າແປວ່າ: ຄົນນັ້ນເອງຊົນເຜົ່າມົ້ງທີ່ອາໄສຢູ່ໃນປະເທດລາວແມ່ນປະກອບໄປດ້ວຍຫຼາຍແຊງເຊັ່ນ: ມົ້ງຂາວ (ມົ້ງເດີ້), ມົ້ງລາຍ (ມົ້ງເລງ, ມົ້ງຊົ, ມົ້ງຢົ້ວ) ແລະ ມົ້ງດຳ (ມົ້ງດູ).

## 1. ອາຊີບຂອງຊົນເຜົ່າມົ້ງ

ການດຳລົງຊີວິດທາງດ້ານເສດຖະກິດຂອງຊົນເຜົ່າມົ້ງ ສ່ວນຫຼາຍແມ່ນປະກອບອາຊີບທາງດ້ານການກະເສດເປັນຕົ້ນເຊັ່ນ: ເຮັດໄຮ່ປູກເຂົ້າຈ້າວ ແລະ ສາລີ. ນອກຈາກນີ້ຍັງປູກພືດຜັກ, ມັນຊະນິດຕ່າງໆຮັບໃຊ້ຊີວິດປະຈຳວັນ ແລະ ນິຍົມການລ້ຽງສັດຫຼາຍປະເພດເຊັ່ນ: ງົວ, ຄວາຍ, ມ້າ, ແບ້, ໝູ, ໝາ, ເປັດ, ໄກ່ ເປັນຕົ້ນ. ສຳລັບຜູ້ຊາຍມີຄວາມຊຳນານໃນການຕີເຫຼັກ, ສ່ວນແມ່ຍິງແມ່ນມີຄວາມຄ່ອງແຄ້ວ ແລະ ຊຳນານໃນການຫຍິບປັກຖັກແສ່ວແບບລວດລາຍຕ່າງໆສະເພາະທີ່ເຂົາເຈົ້າມັກນິຍົມກັນ. ພ້ອມກັນນັ້ນຍັງມີຄວາມເອົາໃຈໃສ່ໃນການເລືອກແນວພັນສັດ, ແນວພັນພືດເພື່ອຕອບສະໜອງຜົນຜະລິດໃຫ້ໄດ້ຮັບຜົນດີຂຶ້ນເລື້ອຍໆ. ປັດຈຸບັນຊົນເຜົ່າມົ້ງ ຈຳນວນໜຶ່ງຫັນລົງມາສູ່ອາຊີບການເຮັດນາປູກເຂົ້າຈ້າວ ແລະ ຄ້າຂາຍຢູ່ຕາມເຂດທົ່ງພຽງ

## 2. ທີ່ຕັ້ງບ້ານ ແລະ ເຮືອນ

ເມື່ອກ່ອນຊົນເຜົ່າມົ້ງ ມັກຕັ້ງຖິ່ນຖານຢູ່ຕາມພູສູງ ເຂດທີ່ມີຄວາມອຸດົມສົມໄປດ້ວຍພູຜາປ່າໄມ້ ແລະ ສັດສາວາສິ່ງຕ່າງໆ ທີ່ເໝາະສົມກັບການດຳລົງຊີວິດຂອງຕົນ. ດັ່ງທີ່ຮູ້ນຳກັນແລ້ວເຂົາເຈົ້າປະກອບອາຊີບດ້ວຍການເຮັດໄຮ່ປູກເຂົ້າ - ສາລີ ແລະ ລ້ຽງສັດເປັນຕົ້ນ. ຍ້ອນສາເຫດນີ້ຈຶ່ງມີບາງກຸ່ມຄົນເອີ້ນຊື່ເຂົາເຈົ້າວ່າ: ລາວສູງ ຍ້ອນເຂົາເຈົ້າມັກຕັ້ງຖິ່ນຖານຢູ່ຕາມເຂດພູສູງ. ຕາມປະເພນີແລ້ວຊົນເຜົ່າມົ້ງ ມັກຢູ່ເຮືອນຕິດພື້ນດິນ



ຮູບການຕັ້ງຖິ່ນຖານຂອງເຜົ່າມົ້ງ ຢູ່ເທິງພູ

ປັດຈຸບັນຊົນເຜົ່າມົ້ງດຳລົງຊີວິດ ແລະ ຕັ້ງຖິ່ນຖານພູມລຳເນົາຢ່າງຫຼວງຫຼາຍໃນບັນດາແຂວງພາກເໜືອຂອງລາວເຮົາລົງມາຮອດເມືອງ ທ່າແຂກ ແຂວງ ຄຳມ່ວນ. ນອກຈາກນີ້ຊົນເຜົ່າມົ້ງ ຍັງມີຢູ່ປະເທດຈີນ, ຫວຽດນາມ, ລາຊະອານາຈັກໄທ ແລະ ບັນດາປະເທດອື່ນໆ. ຊົນເຜົ່າມົ້ງ ທີ່ອາໄສຢູ່ໃນລາວມີປະຊາກອນທັງໝົດ 451.946 ຄົນ, ຍິງ 224.257 ຄົນ, ເທົ່າກັບ 8,0% ຂອງພົນລະເມືອງລາວໃນທົ່ວປະເທດ (ຜົນການສຳຫຼວດພົນລະເມືອງຄັ້ງທີ III ປີ 205).




ຮູບແຜນທີ່ການແຂກຢາຍປະຊາກອນຂອງຊົນເຜົ່າມົ້ງ

## 3. ເຄື່ອງນຸ່ງຫົ່ມ

ເປັນທີ່ຍອມຮັບກັນແລ້ວວ່າໃນສັງຄົມປັດຈຸບັນການທີ່ຮັກສາເຄື່ອງນຸ່ງຫົ່ມ, ເອ້ຍ້ອງໄດ້ດີກວ່າເພິ່ນນັ້ນກໍແມ່ນຊົນເຜົ່າມົ້ງ ນັ້ນເອງຊຶ່ງມັນສະແດງອອກໃຫ້ເຫັນຢ່າງຈະແຈ້ງໃນທົ່ວໆໄປບໍ່ວ່າຈະເປັນບຸນປະເພນີ ຫຼື ວັນທຳມະດາພວກເຮົາກໍຈະພົບເຫັນ. ເຄື່ອງນຸ່ງຫົ່ມທີ່ເປັນເອກະລັກຂອງເຜົ່າຕົນເອງເຊັ່ນ: ສຳລັບແມ່ຍິງຈະເປັນເສື້ອ ແລະ ນຸ່ງກະໂປງທີ່ລວດລາຍໃນການປັກແສ່ວ ແລະ ເຄື່ອງປະດັບເອ້ຍ້ອງຫຼາຍສີສັນເຊັ່ນ: ມີປອກແຂນ, ສາຍຄໍ, ຕ້າງຫູ ແລະ ໝວກ. ສຳລັບຜູ້ຊາຍກໍຈະນຸ່ງເສື້ອ, ໂສ້ງສີດຳທີ່ມີການປັກແສ່ວລວດລາຍຕ່າງໆ.



ຮູບການແຕ່ງກາຍຂອງຊົນເຜົ່າມົ້ງ

### 4. ອາຫານ ແລະ ເຄື່ອງດື່ມ

ໃນສະໄໝກ່ອນ ແລະ ປັດຈຸບັນຊົນເຜົ່າມົ້ງ ມັກກິນເຂົ້າຈ້າວ ແລະ ກິນອາຫານປະເພດຕ່າງໆເຊັ່ນ: ແກງຈືດຊີ້ນໝູໃສ່ຜັກກາດຕົ້ນໝີ ແລະ ຊີ້ນໝູສາມຊັ້ນຢ້າງໄຟເພື່ອໄວ້ກິນດົນ, ດື່ມນໍ້າຊາ, ນໍ້າດິບ ແລະ ມັກສູບຝິ່ນ. ຕາມປະເພນີຊົນເຜົ່າມົ້ງ ມັກນິຍົມກິນອາຫານທີ່ມີໄຂມັນ ຫຼື ຖ້າບໍ່ມີໄຂມັນ ເວລາເຂົາເຈົ້າແຕ່ງກິນຈະເປັນແກງຫຍັງກໍ່ຕາມເຂົາເຈົ້າຕ້ອງໃສ່ນໍ້າມັນໝູລົງໄປໃນແກງດັ່ງກ່າວ ແລະ ກໍ່ມັກກິນຕອນແກງຍັງຮ້ອນໆ ນອກນີ້ເວລາເຂົາເຈົ້າແຕ່ງພາເຂົ້າມາ ຫຼື ໃນພາເຂົ້າກໍຕ້ອງນໍ້າທ່າໄວ້ດື່ມ (ນໍ້າລ້າໆ).

### 5. ຄວາມເຊື່ອຖື ແລະ ງານບຸນ

ນັບແຕ່ໃດມາໃນຊີວິດຕົວຈິງຂອງສັງຄົມຊົນເຜົ່າມົ້ງຍັງສາມາດຮັກສາເອກະລັກໃນດ້ານຄວາມເຊື່ອຖືນັບແຕ່ບັນພະບູລຸດມາໄວ້ໃຫ້ແກ່ຄົນລຸ້ນລູກ, ຫຼານຈົນມາເຖິງທຸກວັນນີ້ເຊັ່ນ: ນັບຖືຜີພໍ່ - ແມ່, ຜີເຮືອນ, ຜີເຈົ້າຖິ່ນ, ເຈົ້າຖານ, ຜີຟ້າ, ຜີແຖນ ແລະ ອື່ນໆ. ຜີເຮືອນຈະລວມຫຼາຍສັນຍາລັກ ແລະ ເປັນສິ່ງຄະລໍາຂອງແຂກຄົນອື່ນໆເຊັ່ນ: ຮ້ານນ້ອຍແຂວນຢູ່ຝາເຮືອນ, ແຜ່ນເຈ້ຍນ້ອຍຕິດຝາເບື້ອງເທິງຫ້ອງກາງເຮືອນ, ເສົາກາງເຮືອນ, ບໍ່ລ່ວງຫ້ອງນອນທີ່ແອ້ມໄວ້, ບໍ່ນອນຂວາງຕາມລວງຍາວຂອງເຮືອນ, ຖ້າມີຝົດໄມ້ດິບ ຫຼື ຕາແຫຼວຕິດຢູ່ປາກປະຕູ ແມ່ນເຂົ້າເຮືອນບໍ່ໄດ້ ຫຼື ຕາມຮີດຂອງຊົນເຜົ່າ ມົ້ງ ຜູ້ໃດເປັນແຂກມາແຕ່ໄກ ກ່ອນຈະຍ່າງເຂົ້າເຮືອນແມ່ນຕ້ອງຖາມ ຫຼື ຂໍອະນຸຍາດຈາກເຈົ້າຂອງເຮືອນເສຍກ່ອນແລ້ວຈຶ່ງເຂົ້າໄດ້

❖ **ການແຕ່ງງານຂອງຊົນເຜົ່າມົ້ງ**

ໃນອະດີດມົ້ງມັກຈະຫາຄູ່ຄອງ (ເມຍ) ໃຫ້ລູກຊາຍຂອງຕົນເອງນັບແຕ່ອາຍຸ 14-16 ປີຂຶ້ນໄປ. ສ່ວນການໝັ້ນເຂົາເຈົ້າມັກນິຍົມໝັ້ນລະຫວ່າງພີ່ນ້ອງຕ່າງແຊ່ງກັນ ແລະ ມີບາງກຸ່ມທີ່ອາໄສຢູ່ໃນປະເທດລາວຂອງພວກເຮົາ ການຫາຄູ່ຄອງນັ້ນໄດ້ມີລາຍລະອຽດດັ່ງນີ້: ການຫາເມຍນັ້ນແມ່ນນິຍົມຫາໃນຊ່ວງຫຼັງລະດູເກັບກ່ຽວເຂົ້າແລ້ວ ຫຼື ໃນຍາມບຸນປະເພນີກິນຈຽງນັ້ນເອງເຊິ່ງຊ່ວງນີ້ຖືເປັນຊ່ວງການໄປທ່ຽວຂອງບ່າວສາວ ໃນເມື່ອຄູ່ບ່າວສາວຄົບຫາກັນເກີດມີຄວາມມັກຮັກກັນຢາກແຕ່ງງານສ້າງຄອບຄົວນໍາກັນຜູ້ຊາຍກໍ່ຈະພາ ຫຼື ລັກເອົາຜູ້ສາວໂຕນໜີໄປກ່ອນແລ້ວຈຶ່ງກັບມາສູ່ຂໍຕາມປະເພນີໃນພາຍຫຼັງ ຖ້າໃນກໍລະນີພໍ່ແມ່ທາງຝ່າຍຍິງບໍ່ມັກລູກເຂີຍກໍ່ຈະມີການທູບຕີລູກເຂີຍຂອງຕົນ ແຕ່ເຖິງວ່າຈະບໍ່ມັກລູກເຂີຍປານໃດກໍ່ຈະບໍ່ສາມາດຍົກເລີກງານແຕ່ງໄດ້ເພາະວ່າລູກສາວຂອງຕົນບໍ່ແມ່ນ

ຄົນໃນຄອບຄົວຂອງຕົນແລ້ວ. ຖ້າໃນກໍລະນີແຕ່ງງານກັນໄປເກີດມີການປະຢ່າຮ້າງກັນ ລູກສາວກະບໍ່ມີສິດເຂົ້າມາອາໃສໃນຄອບຄົວໄດ້ອີກ ຕ້ອງມີການປຸກເຮືອນອີກຫຼັງເພື່ອໃຫ້ລູກສາວຢູ່. ແຕ່ໃນກໍລະນີຄູ່ແຕ່ງງານກັນໄປເກີດມີຜົວຕາຍ ນ້ອງຊາຍຂອງຜົວກໍຈະສາມາດເອົາກັບເມຍຂອງອ້າຍແທນໄດ້.

❖ **ພິທີງານຄົນຕາຍ**

ການຕາຍຖືວ່າເປັນເລື່ອງໜຶ່ງຂອງຊີວິດທີ່ປະສະຈາກບໍ່ໄດ້ ສະນັ້ນຜູ້ອາວຸໂສຊາວມົ້ງມັກນິຍົມສ້າງໂລ້ງສົບຂອງຕົນແຂ້ວນໄວ້ເທິງໃນກາງເຮືອນເພື່ອໃຫ້ຂວັນຕົນ ແລະ ຢ້ານທີ່ຈະຕາຍ ເຊິ່ງມົ້ງມີຄວາມເຊື່ອວ່າການສ້າງໂລ້ງກ່ອນຕາຍນັ້ນມັນຈະຊ່ວຍຕໍ່ອາຍຸເພີ່ມຂຶ້ນ. ສ່ວນພິທີງານສົບຂອງຊົນເຜົ່າມົ້ງ ເມື່ອມີຄົນໃນຄອບຕາຍໄປກໍ່ຈະນໍາເອົາຜູ້ຕາຍມາຜູກໄວ້ທີ່ເສົາກາງເຮືອນແລ້ວທໍາພິທີຈົນຮອດມື້ສັນຍາມດີແລ້ວຈິ່ງນໍາສົບໄປຝັງ ແຕ່ຖ້າຜູ້ຕາຍເປັນພໍ່ - ແມ່ ຫຼື ບຸກຄົນທີ່ສໍາຄັນພາຍໃນຄອບຄົວການຄົບງັນກໍ່ຈະຍືດໄປອີກເພື່ອລໍ້ຖ້າຜູ້ລູກຫຼານມາຄົບງັນໃຫ້ຄົບໝົດທຸກຄົນ ເຖິງວ່າລູກຫຼານຈະຢູ່ພາຍໃນ ຫຼື ຕ່າງປະເທດກະຕ້ອງໄດ້ມາໃຫ້ຄົບໜ້າຄົບຕາກັນທຸກຄົນເພື່ອສະແດງຄວາມກະຕັນຍູ້ຕໍ່ຜູ້ທີ່ມີພະຄຸນຂອງຕົນ. ສ່ວນໃນງານກໍ່ຈະມີການຂ້າງົວ - ຄວາຍເພື່ອຕ້ອນຮັບແຂກ ຫຼື ເພື່ອຈັດງານລ້ຽງໃຫ້ແກ່ຜູ້ຕາຍ ຖ້າຜູ້ຕາຍເປັນພໍ່ລູກຊາຍມີຈັກຄົນກະຕ້ອງໄດ້ຂ້າ ງົວ ຫຼື ຄວາຍຢ່າງໜ້ອຍຜູ້ໜຶ່ງໂຕ ໃນເມື່ອຄົບພິທີແລ້ວເຂົາຈິ່ງສົບຜູ້ຕາຍໃສ່ລົງໄປໃນໂລງແລ້ວນໍາຝັງຕາມປະເພນີ.



ຮູບທີ 28ພິທີທາງສາສະໜາຂອງເຜົ່າມົ້ງ

❖ **ງານບຸນ**

ສໍາລັບງານບຸນປະຈໍາຊົນເຜົ່າມົ້ງ ໄດ້ແກ່ບຸນກິນຈຽງຊຶ່ງຈັດຂຶ້ນໃນມື້ແຮມ 15 ຄໍ່າເດືອນ 12 ລາວ ຫຼັງຈາກການເກັບກ່ຽວເຄື່ອງປູກຂອງຝັງ, ຊຶ່ງ ມົ້ງ ເອີ້ນກັນວ່າ: ນໍ່ເປ້ເຈົ໋າ ແລະ ມີລາຍລະອຽດດັ່ງນີ້: ມີການແກ້ເຄາະໃນມື້ແຮມ 15 ຄໍ່າເດືອນ 12 ລາວ ເອີ້ນວ່າ: ເກົາເຕົ້ໄກ້. ຈາກນັ້ນຈິ່ງເຮັດພິທີກິນຈຽງໄກ່ແລະ ສູ່ຂວັນປີໃໝ່ ໃນຕອນຄໍ່າພ້ອມກັນເຮັດກິນ, ເຮັດທານ ແລະ ກະກຽມສະຫຼອງບຸນກິນຈຽງໃນມື້ຂຶ້ນ 1 ຄໍ່າ ເດືອນຈຽງ. ໂດຍມີການຂ້າໝູ, ງົວ ຫຼື ຄວາຍ ຕາມເງື່ອນໄຂຂອງແຕ່ລະຄອບຄົວ ແລະ ມີພາເຂົ້າຕ້ອນຮັບແຂກ ຫຼື ໃຫ້ຊາວບ້ານມາກິນທັງມີການຜູກແຂນອວຍພອນເຊິ່ງກັນ ແລະ ກັນໃຫ້ທຸກຄົນມີສຸຂະພາບແຂງແຮງ. ເມື່ອກ່ອພາເຂົ້າຕ້ອນຮັບແຂກນັ້ນຈະມີອາຫານ 30 ເຍື່ອງ ດັ່ງນັ້ນຜູ້ຄົນທັງຫຼາຍຈິ່ງມັກເອີ້ນກັນວ່າ: ກິນສາມສິບ. ຄວາມຈິງແລ້ວບຸນກິນຈຽງໃນປັດຈຸບັນມີທັງການກິນ, ການອວຍພອນເຊິ່ງກັນ ແລະ ກັນ, ທັງມ່ວນຊື່ນ, ທັງເປັນການສະຫຼຸບຜົນຜະລິດຂອງແຕ່ລະຄອບຄົວ

ໃນໜຶ່ງປີຜ່ານມາ. ບຸນກິນຈຽງສ່ວນຫຼາຍແມ່ນການຫຼິ້ນມ່ວນຊື່ນຂອງບ່າວ - ສາວ, ການສະແດງເຖິງຄວາມຮັ່ງມີໃນແຕ່ລະຄອບຄົວ, ທັງເປັນການຊອກຫາຄູ່ຄອງຂອງຄູ່ບ່າວ - ສາວເພື່ອຈະສ້າງຄອບຄົວນຳກັນ ຫຼື ພໍ່ແມ່ຊອກຫາລູກໄພ້ - ລູກເຂີຍ ດ້ວຍການໂຍນໝາກຄອນຮ່ວມກັນ, ມີບາງທ້ອງຖິ່ນຈະຫຼິ້ນຍາວເປັນເວລາ 15 ຫຼື 30 ວັນ ແລະ ຍັງມີການແຂ່ງຂັນມ້າ, ຫຼິ້ນເປົ່າແຄນ, ງົວຊົນງົວ, ຕີໝາກຂ່າງ ແລະ ອື່ນໆ

## 6. ເຄື່ອງດົນຕີ ແລະ ສິລະປະພື້ນເມືອງ

ເຄື່ອງດົນຕີພື້ນເມືອງປະຈຳຊົນເຜົ່າມົ້ງ ມີຄື: ແຄນ, ຄ້ອງ, ກອງ ແລະ ແຊ່ງ ທີ່ນຳເອົາມາເປັນເຄື່ອງດົນຕີໃນເວລາມີງານບຸນ, ງານດອງ, ງານເຮັດຮີດຂອງພວກເຂົາເຈົ້າກໍຈະນຳເອົາມາເສບ ແລະ ຂັບລຳ ຫຼື ເຂົາເຈົ້າເອີ້ນວ່າ: ຂັບມົ້ງ ແລະ ມີບົດເພງຮ້ອງ ສ່ວນເຄື່ອງດົນຕີທີ່ໂດດເດັ່ນກວ່າໝູ່ຂອງຊົນເຜົ່າມົ້ງ ແມ່ນເປົ່າແຄນ.




ຮູບການເປົ່າແຄນຂອງເຜົ່າມົ້ງ

## 7. ພາສາປາກເວົ້າ

ຊົນເຜົ່າມົ້ງ ມີພາສາປາກເວົ້າສະເພາະຂອງຕົນເອງ ພ້ອມກັນນັ້ນ, ເຂົາເຈົ້າຍັງມີຕົວໜັງສືຂຽນສອງລະບົບດ້ວຍກັນຄື: ລະບົບທີ່ໃຊ້ຕົວອັກສອນລາຕິນ ແລະ ລະບົບຕົວໜັງສືທີ່ປະດິດແຕ່ງຂອງທ່ານ ເລົາຟົງ, ພາສາຂອງຊົນເຜົ່າມົ້ງ ແຕ່ລະແຂວງຈະມີຄວາມແຕກຕ່າງກັນເລັກນ້ອຍຕາມແຕ່ລະທ້ອງຖິ່ນ ແຕ່ກໍສາມາດສື່ສານເຂົ້າໃຈເຊິ່ງກັນ ແລະ ກັນ

**ການສົມທຽບພາສາລາວ ກັບ ພາສາມົ້ງ**

| ລ/ດ | ພາສາ ລາວ | ພາສາ ມົ້ງ |
|---|---|---|
| 1 | ສະບາຍດີ | ຍໍ້ຢົ້ງ |
| 2 | ໂຊກດີ | ມົ່ວມົງ |
| 3 | ຂອບໃຈ | ອົວໂຈ |

❖

## ຊົນເຜົ່າອາຄາ

## ຄວາມເປັນມາຂອງຊົນເຜົ່າອາຄາ

ຊົນເຜົ່າອາຄາ ມີຖິ່ນຖານເດີມຢູ່ທີ່ມົນທົນໄກວເລົາ ແລະ ມົນທົນຢູນານ (ປະເທດຈີນໃນປັດຈຸບັນ) ຫຼັງຈາກທີ່ໄດ້ອົບພະຍົບລົງມາທາງຕອນໃຕ້ຂອງມົນທົນຢູນານແລ້ວກໍ່ເຄື່ອນຍ້າຍໄປຢູ່ເຂດເມືອງວາ ແລະ ເຂດຊຽງຕຸງຂອງມຽນມາ. ບໍລິເວນເມືອງໄລເຈົ້າຂອງ ຫວຽດນາມ ແລະ ຈຶ່ງຄ່ອຍໆເຄື່ອນຍ້າຍມາຢູ່ຕາມພູເຂົາໃນພາກເໜືອຂອງລາວເຮົາໄດ້ປະມານ 200 ກວ່າປີມາແລ້ວ.

ສາເຫດທີ່ເຮັດໃຫ້ເຂົາເຈົ້າເຄື່ອນຍ້າຍແມ່ນຍ້ອນການຫຼົບຫຼີກໄພສົງຄາມການບີບບັງຄັບຕ່າງໆ ແລະ ການຊອກຫາບ່ອນທໍາມາຫາກິນ ຫຼື ການຜະລິດເຫຼົ້າເປັນຕົ້ນ. ສະນັ້ນ, ເມື່ອພົບບໍລິເວນທີ່ເໝາະສົມແກ່ການຕັ້ງຖິ່ນຖານທີ່ຢູ່ອາໃສ ປະກອບກັບການປາສະຈາກຜູ້ລົບກວນເຂົາເຈົ້າຈຶ່ງໄດ້ຕັ້ງຖິ່ນຖານໝັ້ນຄົງ ບ່ອນຢູ່ອາໃສຢູ່ບໍລິເວນດິນແດນຂອງພະມ້າ, ໄທ, ລາວ.ຊົນເຜົ່າອາຄານນີ້ມີຊື່ເອີ້ນຫຼາຍຊື່ເຂົາເຈົ້າເອີ້ນຕົນເອງວ່າ: "ອາຄາ" ສ່ວນຊົນເຜົ່າອື່ນເອີ້ນເຂົາວ່າ: "ອີກໍ" ແຕ່ຊື່ທີ່ເຂົາເຈົ້າມັກ ແລະ ຊື່ໃຊ້ເປັນທາງການແມ່ນ: "ຊົນເຜົ່າອາຄາ" ສ່ວນເຜົ່າອາຄາປະກອບດ້ວຍຫຼາຍແຊງດ້ວຍກັນຄື: ຈີຈໍ່, ບູລີ, ປານາ, ກໍແຟ, ໂອມາ, ນຸກຸຍ, ລູມາ, ເອີປາ, ຈີເປຍ, ມູຈີ, ມູເຕີ, ຢາເອີ, ເຄີ, ພູຊາງ ແລະ ອິງສາດ.



ຮູບທີ 30ຊົນເຜົ່າອາຄາ

## 1. ການຕັ້ງຖິ່ນຖານຂອງຊົນເຜົ່າອາຄາ.

ຊົນເຜົ່າອາຄາ ຕັ້ງຖິ່ນຖານແມ່ນຢູ່ໃນບັນດາແຂວງທາງພາກເໜືອຂອງລາວ ເຊັ່ນ: ແຂວງຜົ້ງສາລີ, ຫຼວງນໍ້າທາ, ອຸດົມໄຊ ແລະ ບໍແກ້ວ. ນອກຈາກນີ້ຍັງມີຢູ່ ສປປຈີນ, ສ.ສ ຫວຽດນາມ, ລາຊະອານາຈັກໄທ ແລະ ມຽນມາອີກດ້ວຍ. ຊົນເຜົ່າອາຄາຢູ່ໃນລາວ ມີປະຊາກອນທັງໝົດປະມານ 90.698 ຄົນ ຍິງ 45.135 ຄົນ ເທົ່າກັບ 1,6 ຂອງພົນລະເມືອງທົ່ວປະເທດ.

- ຊົນເຜົ່າອາຄາທີ່ແຈກຢາຍແຕ່ລະບ່ອນມີ:
- ແຂວງຜົ້ງສາລີ: ມີຢູ່ທຸກເມືອງ
- ແຂວງອຸດົມໄຊ: ມີເມືອງນາໝໍ້, ເມືອງຫຼາ, ເມືອງງາ.
- ແຂວງຫຼວງນໍ້າທາ: ເມືອງສິງ, ເມືອງຫຼວງນໍ້າທາ, ເມືອງພູຄໍາ, ເມືອງລອງ.
- ແຂວງບໍແກ້ວ: ເມືອງຕົ້ນເຜີ້ງ, ເມືອງຫ້ວຍຊາຍ, ເມືອງເມິງ.

## 2. ອາຊີບຂອງຊົນເຜົ່າອາຄາ.

ການດຳລົງຊີວິດຂອງ ຊົນເຜົ່າອາຄາ ແມ່ນຕິດພັນກັບທຳມະຊາດ ອາຊີບຕົ້ນຕໍຂອງເຂົາເຈົ້າ ແມ່ນການເຮັດໄຮ່ , ປູກເຂົ້າ, ປູກຝິ່ນ... ນອກຈາກນັ້ນເຂົາເຈົ້າຍັງປູກພືດປະເພດທີ່ມີທາດແປ້ງ ແລະ ພືດຜັກອື່ນໆ ເພື່ອຕອບສະໜອງໃນຄວາມຕ້ອງການບໍລິໂພກໃນຊີວິດປະຈຳວັນຂອງຄອບຄົວ ສ່ວນທີ່ເຫຼືອຈະນຳໄປແບ່ງປັນໃຫ້ຍາດຕິພີ່ນ້ອງ ແລະ ໄດ້ນຳໄປຂາຍ ຫຼື ແລກປ່ຽນສິ່ງຂອງທີ່ຈຳເປັນ ເຊິ່ງບໍ່ສາມາດຜະຫລິດໄດ້ໃນບ້ານເຊັ່ນ: ເກືອ, ນ້ຳຕານ, ແປ້ງນົວ ແລະ ເຄື່ອງໃຊ້ສອຍຕ່າງໆ. ອາຫານໃນຊີວິດປະຈຳວັນ ນອກຈາກເຂົາເຈົ້າຜະລິດເອງແລ້ວຍັງໄດ້ຈາກການໄປຊອກຫາຕາມທຳມະຊາດ. ສັດລ້ຽງທີ່ເຂົາເຈົ້ານິຍົມລ້ຽງໄດ້ແກ່: ງົວ, ຄວາຍ, ໝູ ແລະ ໄກ່. ແຕ່ເປົ້າໝາຍຂອງການລ້ຽງແມ່ນເພື່ອໄວ້ໃຊ້ງານ ເພາະເຂົາເຈົ້າບໍ່ນິຍົມຂ້າສັດເຂົາເຈົ້າຈະຂ້າກໍ່ຕໍ່ເມື່ອມີງານບຸນປະເພນີເຮັດຮີດຄອງ ຫຼື ແຂກຄົນ ແລະ ຍາດຕິພີ່ນ້ອງທາງໄກມາຢ້ຽມຢາມເທົ່ານັ້ນ.

## 3. ທີ່ຕັ້ງບ້ານ ແລະ ເຮືອນຂອງຊົນເຜົ່າອາຄາ.

ລັກສະນະບ້ານ ຫຼື ເຮືອນຂອງຊົນເຜົ່າອາຄາ ໂດຍທົ່ວໄປແລ້ວ ເຂົາເຈົ້າມັກຕັ້ງບ້ານຢູ່ຕາມສັນພູເຂົາ, ຮັບແສງແດດ, ສາຍລົມຢ່າງເຕັມທີ່ແຕ່ຕ້ອງມີແຫຼ່ງນ້ຳທີ່ເພິ່ງພາໄດ້ ແລະ ມີເນື້ອທີ່ທຳການຜະລິດຢູ່ອ້ອມຂ້າງ ກ່ອນຈະຕັ້ງບ້ານເຂົາເຈົ້າຈະມີພິທີກຳ, ມີການສ່ຽງທາຍເພື່ອໃຫ້ແນ່ໃຈວ່າບ່ອນທີ່ເລືອກນັ້ນເຈົ້າຖິ່ນຕົ້ນໄລ ແລະ ອະນຸຍາດໃຫ້ປຸກສ້າງໄດ້. ສຳລັບເຮືອນເຂົາເຈົ້າມັກຢູ່ເຮືອນຮ້ານ ແລະ ມີກ້ອງລ່າງເອົາໄວ້ເພື່ອສັດລ້ຽງ. ເປັນບ່ອນສຳລັບໄວ້ຟືນ ແລະ ເຄື່ອງມື, ເຄື່ອງໃຊ້ໃນການຜະລິດ. ເຮືອນຂອງເຂົາເຈົ້າຈະມີບັນຍາກາດທີ່ເຄັ່ງຂຶມຢ່າງປະຫຼາດ ຍ້ອນວ່າທຸກເຮືອນຈະຕ້ອງມີການບູຊາທີ່ເປັນບ່ອນສະຖິດຂອງວິນຍານຂອງບັນພະບູລຸດ ພາຍໃນເຮືອນແບ່ງອອກເປັນ 2 ເຂດຄື: ເຂດແມ່ຍິງ ແລະ ເຂດຜູ້ຊາຍ ໂດຍມີຝາກັ້ນຈາກຝາດ້ວຍຫ້ອງນອນໄປເຖິງຝາເຄິ່ງກາງເຮືອນ. ການທີ່ຄົນພາຍນອກຈະເດີນຜ່ານເຮືອນ ໂດຍບໍ່ພັກເຊົາເລັກໜ້ອຍນັ້ນຈະເຮັດໃຫ້ເຂົາເຈົ້າເກີດຄວາມບໍ່ພໍໃຈ ສະນັ້ນ, ເພື່ອຮັກສາມາລະຍາດ ແລະ ໄດ້ສ້າງຄວາມພໍໃຈໃຫ້ແກ່ເຂົາເຈົ້ານັ້ນຢ່າງໜ້ອຍຕ້ອງແວ່ເຮືອນເພື່ອຖາມຂ່າວຄາວ ຫຼື ດື່ມນ້ຳ ອາຫານທີ່ເຂົາເຈົ້າໄດ້ຈັດມາຕ້ອນຮັບ.

## 4. ເຄື່ອງນຸ່ງຫົ່ມຂອງເຜົ່າອາຄາ.

ການນຸ່ງຖືຂອງຊົນເຜົ່າອາຄາສຳລັບຜູ້ຍິງ ແມ່ນນຸ່ງເສື້ອສີດຳ. ເສື້ອຈະເປັນລັກສະນະທາງຫຼັງສັ້ນທາງໜ້າຍາວບໍ່ມີກະດຸມເສື້ອ ສິ້ນກໍ່ເປັນສີດຳມີຜ້າມັດຢູ່ຂາທັງສອງເບື້ອງ ແລະ ຢູ່ເທິງຫົວກໍ່ມີເຄື່ອງປະດັບເອ້ຍອງຫຼາຍຢ່າງທີ່ເຮັດດ້ວຍເງິນ ມີຫຼາກຫຼາຍສີສັນປະປົນກັນ. ຊຸດທີ່ເຂົາເຈົ້ານຸ່ງນັ້ນປະກອບດ້ວຍເຄື່ອງປະດັບຫຼາຍຢ່າງເຊັ່ນ: ປອກແຂນ, ສາຍຄໍ, ຕຸ້ມຫູ ແລະ ອື່ນໆ ທີ່ເຂົາເຈົ້າເອົາມາປະດັບໃສ່.



ຮູບການນຸ່ງຖືຂອງຊົນເຜົ່າອາຄາ

**ອາຫານ ແລະ ເຄື່ອງດື່ມ.**

ອາຫານຂອງຊົນເຜົ່າອາຄາ ແມ່ນຈະກິນອາຫານປະເພດຂົ້ວຜັກ, ຂົ້ວໄຂ່ໃສ່ໝາກຊຸ, ແຈ່ວປາ, ແກ້ງຜັກກາດ, ລວກຜັກ ປະເພດແນວນີ້ເປັນຕົ້ນ. ຊົນເຜົ່າອາຄາມັກນິຍົມກິນກັບເຂົ້າຈ້າວ, ດື່ມນ້ຳດິບ, ເຫຼົ້າ ແລະ ອື່ນໆ.

**5. ປະເພນີ ຄວາມເຊື່ອ ວັດທະນະທຳ**

ເຖິງຈະບໍ່ມີການບັນທຶກເປັນລາຍລັກອັກສອນກໍ່ຕາມແຕ່ຕາມຕຳນານຂອງຊົນເຜົ່າອາຄາກໍ່ມີຮີດຄອງປະເພນີ, ວັດທະນາທຳ, ວິຖີຊີວິດທີ່ຫຼວງຫຼາຍ ແລະ ອຸດົມສົມບູນ. ຊົນເຜົ່າອາຄາບໍ່ມີຄຳວ່າ "ສາສະໜາ" ການດຳລົງຊີວິດແມ່ນມີຄວາມເຊື່ອເລື່ອງຜີ, ໂຊກລາບ ແລະ ການສ່ຽງທາຍເປັນທີ່ສຸດຜີ ຫຼື "ແໜະ" ໄດ້ເຂົ້າມາມີບົດບາດ ແລະ ສືບທອດກັນມາແຕ່ປູ່ຍ່າຕາຍາຍ ຈົນມາຮອດປັດຈຸບັນນີ້ ແລະ ຍາກທີ່ສຸດຈະປ່ຽນໃຈໄປເຊື່ອຖືສາສະໜາອື່ນໄດ້. ຜີທີ່ເຂົາເຈົ້າເຊື່ອຖືກໍ່ມີທັງຜີດີ ແລະ ຜີຮ້າຍ. ຜີທີ່ເປັນສິລິມຸງຄຸນໄດ້ແກ່: ຜີເຮືອນ ແລະ ຜີບ້ານ ເຊິ່ງໄດ້ຖືເປັນວິນຍານຂອງບັນພະບຸລຸດ ກໍ່ຍ້ອນໃຫ້ຄວາມດູແລຮັກສາປົກປ້ອງຄຸ້ມຄອງສະມາຊິກໃນຄົວເຮືອນ ສະນັ້ນ,ໃນເຮືອນຈະມີແທນບູຊາຜີ ສ່ວນຜີຮ້າຍໄດ້ແກ່: ຜີຕົ້ນໄມ້, ຜີພູຜາປ່າດົງ ແລະ ຜີແມ່ນ້ຳລຳເຊເຫຼົ່ານີ້ ເຊິ່ງຈະເຮັດໃຫ້ເຂົາເຈົ້າເກີດຄວາມເຈັບໄຂ້ໄດ້ປ່ວຍຕ່າງໆ.

ຈາກຄວາມເຊື່ອຖືທີ່ກ່າວມານີ້ ເຂົາເຈົ້າກໍ່ຈະມີພິທີກຳຫຼາຍຢ່າງໃນລັກສະນະວິງວອນໄດ້ຮ້ອງຂໍຈາກສິ່ງສັກສິດຢູ່ໃນດ້ານດີ ແລະ ດ້ານຮ້າຍ ເພື່ອຈະໃຫ້ຄວາມຄຸ້ມຄອງຮັກສາ ຫຼື ປັດເປົ່າສິ່ງຊົ່ວຮ້າຍຕ່າງໆໃຫ້ບັນເທົາເບົາລົງໄດ້. ຄຽງຄູ່ກັນນີ້ຊົນເຜົ່າອາຄາມີການເອົາໃຈໃສ່ຕໍ່ສິ່ງສັກສິດທັງຫຼາຍໂດຍການ "ຢູ່ກຳ ຫຼື ຄະລຳ" ເຊິ່ງໄດ້ແກ່ການປະຕິບັດຕົນໃຫ້ຢູ່ໃນຂອບເຂດຮີດຄອງປະເພນີ. ບໍ່ກະທຳ ຫຼື ລ່ວງລະເມີດລົບລູ່ສິ່ງສັກສິດຕ່າງໆທີ່ຢູ່ໃນເຮືອນ.

➢ ຜີທີ່ເຜົ່າອາຄານັບຖືມີ:

- ຜີເຮືອນ ຫຼື ຜີບັນພະບຸລຸດ
- ຜີໝູ່ບ້ານ
- ຜີທົ່ວໄປ
- ຜີເລ່ລ່ອນ



ຮູບການປະກອບພິທີກຳຂອງຊົນເຜົ່າອາຄາ

- ❖ **ງານບຸນປະເພນີ:** ເລາະຄໍຕູ (ແປງປະຕູໂຂງບ້ານ) ຈັດຂຶ້ນໃນເດືອນສິງຫາ ການບູຊາມີຖາກໄມ້, ເຮັດເຄື່ອງອາວຸດປືນ, ພ້າ, ມີດ ແລະ ຖາກໄມ້ເຮັດຮູບແມ່ຍິງ ຜູ້ຊາຍຮ່ວມເພດນຳກັນ ປະດັບປະດາຕົບແຕ່ງປະຕູໂຂງບ້ານ ຫຼັງຈາກເຮັດວິທີແລ້ວໄດ້ມີການສະຫຼອງຢູ່ເຮືອນເຈົ້າບ້ານ ໃນພິທີຈະມີໄກ່ຜູ້ ແລະ ໄກ່ແມ່ຄູ່ໜຶ່ງ ເຫຼົ້າ ແລະ ນ້ຳຊາ.
- ❖ **ງານບຸນປະເພນີຕ່າງໆຂອງຊົນເຜົ່າອາຄາ:** ຊົນເຜົ່າອາຄາເປັນຊົນເຜົ່າທີ່ມີວັດທະນະທຳຮີດຄອງປະເພນີທີ່ຫາກຫຼາຍ ເຊິ່ງຈັດຂຶ້ນໃນແຕ່ລະປີມີດັ່ງນີ້:

- ປະເພນີໄຂ່ແດງ ( ຂຶ້ມສີ ຂຶ້ມມີອາເຜ່ວ )ຈັດຂຶ້ນໃນຊ່ວງເດືອນເມສາເປັນການສົ່ງທ້າຍປີເກົ່າຕ້ອນຮັບປີໃໝ່ ຫຼື ເອີ້ນວ່າປະເພນີປີໃຫ່ມຊົນໄຂ່ ປະເພນີນີ້ຈະເອົາໄຂ່ມາປະກອບພິທີກໍາໂດຍກ່ອນຍ້ອມດປືອກໄຂ່ໃຫ້ເປັນສີແດງ ແລະ ໃສ່ກະຕ່າຫ້ອຍໄປມາເປັນພິທີກໍາທີ່ມີມາແຕ່ບູຮານ

- ປະເພນີໂລ້ຊີງຊ້າ

ຈັດຂຶ້ນທຸກປີປະມານທ້າຍເດືອນສິງຫາ ຫາ ເດືອນກັນຍາ ເຊິ່ງກົງກັບຊ່ວງທີ່ຜົນຜະລິດກະສິກໍາຮອດໄລຍະເກັບກ່ຽວ. ຊົນເຜົ່າອາຄາຈະຖືວ່າປະເພນີນີ້ມີຄຸນຄ່າ ສະຕິປັນຍາ ສິ່ງເສີມຄວາມຮູ້ກ່ຽວກັບການດໍາລົງຊີວິດເປັນປະເພນີສໍາຄັນສໍາລັບຜູ້ຍິງໃນການແຕ່ງກາຍໃຫ້ມີຄວາມສວຍງາມເປັນພິເສດເພື່ອພ້ອມໃນການຂຶ້ນໂລ້ຊີງຊ້າ ແລະ ຮ້ອງເພງໃນລັກສະນະຄູ່ ຫຼື ດ່ຽວ ໃນການເຮັດພິທີກໍາລວມມີ 4 ວັນ

+ ວັນທີ 1 ເປັນມື້ທໍາອິດທີ່ຜູ້ຍິງຈະແຕ່ງກາຍດ້ວຍຊຸດປະຈໍາເຜົ່າແລ້ວອອກໄປຕັກນໍ້າຈາກບໍ່ນໍ້າສັກສິດແລ້ວນໍາໄປປະກອບພິທີກໍາ

+ ວັນທີ 2 ວັນສ້າງຊີງຊ້າ: ເປັນມື້ທີ່ທຸກຄົນຈະອອກມາລວມຕົວກັນເພື່ອຈະແບ່ງງານໃນການທີ່ຈະສ້າງຊີງຊ້າ

+ ວັນທີ 3 ວັນລໍດາອາເຜ່ວ: ຖືເປັນພິທີກໍາໃຫຍ່ເພື່ອເປັນການລ້ຽງສະຫຼອງທຸກຄອບຄົວ ຫຼື ເຊີນແຂກຕ່າງບ້ານມາຮ່ວມຮັບປະທານອາຫານໃນບ້ານຂອງຕົນ

+ ວັນທີ 4 ຈ່າສ່າ: ເປັນມື້ສຸດທ້າຍໃນພິທີກໍາ ໃນມື້ນັ້ນຈະບໍ່ມີການປະກອບພິທີກໍາຫຍັງນອກຈາກການໂລ້ຊີງຊ້າ, ຕອນຄໍ່າກໍ່ຈະມີການເສັ້ນໄຫວ້ຕ່າງໆແລ້ວກໍ່ສິ້ນສຸດພິທີກໍາ

- ປະເພນີເຊີດຊູຕໍາແໜ່ງຜູ້ນໍາສາສະໜາ

ຈັດຂຶ້ນເພື່ອເຊີດຊູອະດີດຜູ້ນໍາສາສະໜາ ເປັນພິທີກໍາທີ່ຜູ້ຮອງຜູ້ນໍາສາສະໜາປະກອບພິທີກໍາດ້ວຍການໄຫວ້ຄູ ແລະ ມີການລ້ຽງອາຫານ

- ບຸນຄອຶງ ຍີອາເຜ່ວເປັນບຸນທີ່ຈັດຂຶ້ນເພື່ອຂັບໄລ່ສິ່ງທີ່ບໍ່ດີອອກຈາກໝູ່ບ້ານ ລວມເຖິງໂລກໄພໄຂ້ເຈັບ

- ປະເພນີກິນເຂົ້າໃໝ່

ເປັນພິທີກໍາທີ່ສໍາຄັນອີກງານໜຶ່ງທີ່ສືບທອດ ແລະ ປະຕິບັດກັນມາແຕ່ສະໄໝບູຮານ, ພິທີກໍາຈະມີຢູ່ 2 ແບບຄື: ການເກັບພັນເຂົ້າໃໝ່ ແລະ ການກິນເຂົ້າໃໝ່ ເຊິ່ງໄລຍະປະກອບພິທີກໍາມີພຽງມື້ດ່ຽວເທົ່ານັ້ນ

- ປີໃໝ່ລູກຂ່າງ: ຈັດຂຶ້ນເດືອນທັນວາປະເພນີນີ້ ມີປະຫວັດເລົ່າວ່າເປັນປະເພນີປ່ຽນການທໍາມາຫາກິນ

### 6. ເຄື່ອງດົນຕີ ແລະ ສີລະປະພື້ນເມືອງ.

ສໍາລັບເຄື່ອງດົນຕີກໍ່ມີປະເພດ: ກອງ, ແຄນ, ຄ້ອງ, ແລ່ງ ແລະ ອື່ນໆ. ທີ່ໃຊ້ປະກອບເຂົ້າເປັນເຄື່ອງດົນຕີທີ່ເອົາມາແສບມ່ວນໃນເວລາທີ່ມີບຸນ, ງານດອງ, ງານເຮັດພິທີກໍາຕ່າງໆ ແລະ ຈະມີຜູ້ເຖົ້າຜູ້ແກ່ມາຮ້ອງເພງ. ມາຂັບລໍາຕາມຮີດຄອງປະເພນີຂອງພວກເຂົາ.

### 7. ພາສາປາກເວົ້າ.

ພາສາປາກເວົ້າຂອງເຜົ່າອາຄາ ຈັດຢູ່ໝວດພາສາຈີນ-ຕິເບດ, ສາຂາຕິເບດ-ມຽນມາ ເຂົາເຈົ້າບໍ່ມີໜັງສືຂຽນ

**ສົມທຽບ: ພາສາລາວ ກັບ ພາສາອາຄາ**

| ລໍາດັບ | ພາສາລາວ | ພາສາອາຄາ |
|---|---|---|
| 1 | ສະບາຍດີ | ອາລາຈໍຈາ |
| 2 | ໂຊກດີ | ອາມີ່ມ້າ |

## ຊົນເຜົ່າໂລໂລ

## ປະຫວັດຄວາມ ແລະ ຊື່ເອີ້ນ

ແມ່ນຊົນເຜົ່າໜຶ່ງທີ່ນອນໃນວົງຄະນະຍາດ ແຫ່ງຊາດລາວ ເຂົາເຈົ້າມີປະຫວັດຄວາມເປັນມາ ແລະ ການເຄື່ອນຍ້າຍມາຈາກດິນແດນຕອນໃຕ້ ຂອງປະເທດຈີນ ຍ້ອນມີສົງຄາມໂດຍແມ່ນ ທ່ານ ດີເປີ ເປັນຜູ້ນໍາຂະບວນຂອງພວກ

ເຂົາເຄື່ອນຍ້າຍ ຈາກແຂວງຢູນານ ແລະ ແຂວງໄກວເຈົ່າລົງມາຕັ້ງຖິ່ນຖານຢູ່ວູເປົາກາງ, ຕາປີຊູ, ແຊວມີຊູສະຫວ່າງ ແລະ ກາມີຊຸ ທີ່ຂຶ້ນກັບເມືອງຍອດອູ ແຂວງຜົ້ງສາລີ ແຫ່ງປະເທດລາວ ປະມານ 100 ກວ່າປີ.

**ຊື່ເອີ້ນ** ຊົນເຜົ່ານີ້ ເອີ້ນຊື່ຕົນເອງວ່າ: ໂລໂລ ຊົນເຜົ່າອື່ນກໍ່ເອີ້ນໃຫ້ເຂົາເຈົ້າກໍ່ແມ່ນ ໂລໂລ ແລະ ເຂົາເຈົ້າມັກນຳໃຊ້ທາງລັດຖະການກໍ່ແມ່ນຊົນເຜົ່າໂລໂລ

## 1. ອາຊີບຂອງຊົນເຜົ່າ

ການດຳເນີນແຫ່ງຊີວິດທາງດ້ານເສດຖະກິດໃນເມື່ອກ່ອນ ແມ່ນຖືກການເຮັດໄຮ່ປູກເຂົ້າຈ້າວເພື່ອກິນ. ປູກຝິ່ນເປັນສິນຄ້າປະຈຸບັນພວກເຂົາໄດ້ຫັນມາປູກເຂົ້າຈ້າວເປັນຕົ້ນຕໍ່. ເຮັດສວນປູກພຶດຜັນນາໆຊະນິດ, ປູກກ້ວຍ, ປູກອ້ອຍ, ປູກໝາກແໜ່ງ ແລະ ປູກຕົ້ນໄມ້ກິນໝາກຍາວນານ, ບໍ່ພຽງແຕ່ເທົ່ານັ້ນ ຊາວໂລໂລມີມູນເຊື້ອໃນການລ້ຽງສັດປະເພດຕ່າງໆຄື: ງົວ, ຄວາຍ, ມ້າ, ເພື່ອໃຊ້ເປັນແຮງງານແກ່ລາກ, ລ້ຽງໝູ ແລະ ສັດປີກເພື່ອເຮັດພິທີກຳຕ່າງໆ, ເລີ່ມແຕ່ປີ 1970 ເຜົ່າໂລໂລ ມີຄວາມດຸໝັ່ນ ແລະ ປະດິດສ້າງໃນການຂຸດເໝືອງປ້ານຝາຍ, ແມ່ຍິງມີການຍິບປັກທັກແຊວ, ຕໍ່າຫູກ, ທໍໄໝເພື່ອເປັນເຄື່ອງນຸ່ງຫົ່ມໃຫ້ລູກ ແລະ ຜົວສຳລັບຜູ້ຊາຍມີການເຮັດໃນດ້ານຫັດຖະກຳ ເຮັດເຄື່ອງໃຊ້ໃນຄອບຄົວ ແລະ ເປັນສ່າງຕີເຫຼັກເພື່ອເຮັດເຄື່ອງມືຜະລິດແຕ່ຍັງມີເສດຖະກິດບູຮານເຊັ່ນ: ລ່າເນື້ອ ແລະ ເກັບເດັດຜັກປ່າມາເປັນອາຫານ.

## 2. ທີ່ຕັ້ງ ແລະ ບ້ານເຮືອນ

ມີຄວາມນິຍົມປຸກເຮືອນແບບຕິນດິນຍາວ 6-15 ແມັດ, ກວ້າງ6 ແມັດ ແບ່ງອອກເປັນ2 ຫ້ອງໃຫຍ່ຂະໜານກັນຕາມລວງຍາວຂອງເຮືອນ, ຫ້ອງໃຫຍ່ທຳທຳອິດເປັນຫ້ອງວາງແຂກນອນຄົກມອງຕຳເຂົ້າ ແລະ ຫ້ອງໃຫຍ່ຖັດກັນນັ້ນປະກອບມີຫຼາຍຫ້ອງນ້ອຍຄື: ຫ້ອງນອນປູ່ຍ່າ, ຫ້ອງນອນອ້າຍກົກ, ທ້າຍຖັດນັ້ນຫ້ອງຜີທັງເປັນບ່ອນນອນຂອງລູກຊາຍທີ່ບໍ່ທັນມີເມຍ, ເຮືອນຄົວທັງເປັນບ່ອນນອນຂອງລູກສາວທີ່ບໍ່ທັນໄດ້ແຕ່ງດອງ.

## 3. ເຄື່ອງນຸ່ງຫົ່ມ

ມີເຄື່ອງນຸ່ງຫົ່ມເອ້ຍ້ອງເປັນອັນສະເພາະຂອງຕົນຄື: ຜູ້ຊາຍນຸ່ງໂສ້ງຝ້າຍສີດຳ, ຂາກວ້າງ, ມີຜ້າດຳພັນຕິນຜົມ, ຫົ່ມເສື້ອຝ້າຍແຂນຍາວຄໍມົນ, ມີຜ້າສີດຳຄຽນຫົວຍາວ 3 ແມັດ, ເອົາຂີ້ຊັ່ງຍ້ອມແຂ້ວໃຫ້ແດງ, ຈິ່ງຜົມຍາວເປຍເປັນ 3 ດົ້ວຄຽນຫົວ ແລະ ຍັງມີຜ້າສີດຳຄຽນຫົວ, ສະເພາະຜູ້ຍິງນຸ່ງໂສ້ງສີດຳຫົວກວ້າງ, ຂາລີບ, ຜ້າຄຽນແອວ, ຫົ່ມເສື້ອຝ້າຍແຂນຍາວຫຼາຍສີປະດັບເອ້ຍ້ອງດ້ວຍໝາກປັດໃສ່ດຸ້ມເສື້ອ, ໃສ່ປອກແຂນ, ບ່ອງຫູ, ໃສ່ຕ້າງທີ່ເຮັດດ້ວຍເງິນ ແລະ ອື່ນໆ.

## 4. ອາຫານ ແລະ ເຄື່ອງດື່ມ

ນິຍົມກິນເຂົ້າຈ້າວດ້ວຍວິທີເອົານ້ຳຮ້ອນລວກແລ້ວໜຶ້ງໃສ່ໄຫ ແລະ ເຂົ້າໜຽວ, ກິນອາຫານປະເພດແກງ, ຂົ້ວ, ເອາະ, ປີ້ງມີລົດຊາດຈາງ, ດື່ມນ້ຳຕົ້ມ ແລະ ດິບ, ດື່ມເຫຼົ້າສ້ຽວ, ສູບຢາ ແລະ ຝິ່ນ. ໃນເວລາກິນເຂົ້າຫ້າມທຸກຄົນຍ່າງໄປມາ ແລະ ເຮັດວຽກອື່ນ.

## 5. ຄວາມເຊື່ອ ແລະ ງານບຸນ

**ຄວາມເຊື່ອ:** ເຖິງວ່າເຂົາຍ້າຍມາຢູ່ປະເທດລາວດົນນານແລ້ວກໍ່ຕາມແຕ່ເຂົາຮັກຮີດຄອງປະເພນີຂອງເຜົ່າຕົນໄວ້ຈົນຮອດປັດຈຸບັນ. ຮີດຄອງປະເພນີຄວາມເຊື່ອ ແລະ ວັດທະນາທຳຄ້າຍຄືກັບບັນດາຊົນເຜົ່າໃນໝວດພາສາຈີນ-ຕິເບດ, ເຂົາເຈົ້າມີຄວາມເຄົາລົບບູຊາຜີພໍ່ຜີແມ່, ຜີບັນພະບູລຸດ, ຜີເຮືອນ, ຜີເມືອງ ເຊິ່ງຖືວ່າເປັນຜູ້ປົກປັກຮັກສາມວນມະນຸດ. ເຂົາຍັງເຊື່ອວ່າມີຜີກົກໄມ້ໃຫຍ່, ຜີຫ້ວຍຮອງ, ໜອງບຶງ, ຜີຕາຍຫຼງ, ຜີພູຜາປ່າດົງ ແລະ ອື່ນໆ ທີ່ເຂົາເຈົ້າເຊື່ອວ່າເຮັດໃຫ້ເກີດມີອາການເຈັບເປັນ.

### ❖ ງານບຸນປະເພນີ

ສຳລັບງານບຸນປະເພນີໃນຮອບໜຶ່ງປີຊົນເຜົ່າໂລໂລຈະຈັດງານບຸນຂຶ້ນຢູ່ສອງເທື່ອເປັນຕົ້ນແມ່ນ: ບຸນກິນຈຽງໃຫຍ່ຈັດຂຶ້ນໃນເດືອນສອງ ແລະ ບຸນກິນຈຽງນ້ອຍຈັດຂຶ້ນເດືອນສາມມື້ຂຶ້ນສິບຫ້າຄ່ຳ, ບຸນກິນຈຽງງທັງກິນ, ທັງມ່ວນຊື່ນ ແລະ ເປັນສະຫຼຸບຜົນຜະລິດຂອງແຕ່ລະຄອບຄົວໃນໄລຍະໜຶ່ງປີ, ບຸນກິນຈຽງສ່ວນຫຼາຍແມ່ນເລື່ອງລະ

ຫວ່າບ່າວສາວເຊິ່ງເປັນການຊອກຫາຄູ່ຄອງທີ່ຈະສ້າງຄອບຄົວນຳກັນ ຫຼື ພໍ່ແມ່ຈະຊອກຫາລູກໄພ້ ລູກເຂີຍເຊິ່ງສະແດງອອກໃນການຫຼິ້ນໝາກຄອນ, ນອກນີ້ຍັງມີການຫຼິ້ນຊິນງົວ, ແຂ່ງມ້າ, ຫຼິ້ນໝາກຂ່າງ ແລະ ອື່ນໆ.

### 6. ເຄື່ອງດົນຕີ ແລະ ສິລະປະພື້ນເມືອງ

ເຂົາໄດ້ມີມີການປະດິດແຕ່ງບົດຮ້ອງ, ທຳນອງເສບ, ມີບົດຂັບຮ້ອງໂລໂລ, ມີເຄື່ອງດົນຕີປະເພດຕ່າງໆເຊັ່ນ: ແຄນ, ໝາກນ້ຳເຕົ້ານ້ອຍ ( ລູຊິບ ) ປີ່ເຝືອງ, ຄ້ອງ, ມີຄຳພະຫຍາ, ຄືສຸພາສິດ, ແລະ ນິທານພື້ນເມືອງທີ່ສະແດງເຖິງຄວາມຮັກລະຫວ່າງບ່າວ-ສາວ ແລະ ທິວທັດທຳມະຊາດອື່ນໆ.

### 7. ພາສາປາກເວົ້າ

ມີພາສາປາກເວົ້າເປັນອັນສະເພາະຂອງຊົນເຜົ່າຄົນຄ້າຍຄືກັນກັບພາສາປາກເວົ້າຂອງຊົນເຜົ່າສີລາ, ຊົນເຜົ່າຮາຍີ່ ແລະ ຈັດເຂົ້າໃນໝວດພາສາຈີນ-ຕິເບດ, ພາສາຂອງຕິເບດ-ມຽນມາ, ບໍ່ມີຕົວໜັງສືຂຽນ, ນອກຈາກນີ້ເຂົາຍັງມີຄວາມສາມາດເວົ້າພາສາຂອງຊົນເຜົ່າລື້, ຢັ້ງ ແລະ ໄທເໜືອໄດ້

**ການສົມທຽບພາສາລາວກັບພາສາເຜົ່າໂລໂລ**

| ພາສາລາວ | ພາສາເຜົ່າໂລໂລ |
|---|---|
| ສະບາຍດີ | ຍີເຣົາຍາ |
| ຂອບໃຈ | ເຊຍໆມ່າ |
| ຂໍໂທດ | ບົງມີພຣາມາ |
| ເຈົ້າຊື່ຫຍັງ ? | ຍີມີ່ຈື່ອາຈີກີແອ່ນ ? |
| ເຮັດຫຍັງຢູ່ ? | ຍີອາເຈີປີ໊ງເອີໂລງາ ? |
| ກິນເຂົ້າລະບໍ ? | ຍີຈູງໆແວງ ? |
| ລາກ່ອນ | ຫາມາແຮງ |

## ເຜົ່າຊີງມູນ

## ປະຫວັດຄວາມເປັນມາຂອງເຜົ່າຊີງມູນ

ຊົນເຜົ່າຊີງມູນທີ່ດຳລົງຊີວິດຢູ່ສປປລາວແມ່ນໄດ້ເຄື່ອນຍ້າຍມາຈາກປະເທດຫວຽດນາມໂດຍສະເພາະແມ່ນມາຈາກແຂວງເຊີນລາໃນຕົ້ນສະຕະວັດທີXIXແລະເຄື່ອນຍ້າຍເຂົ້າມາຫຼາຍໃນສະຕະວັດXX ,ສະໄໝສົງຄາມດຽນບຽນຟູສາເຫດຂອງການຍຸກຍ້າຍແມ່ນການເກີດສົງຄາມເຮັດໃຫ້ສະພາບການດຳລົງຊີວິດພົບຄວາມຫຍຸ້ງຍາກຈຳເປັນໄດ້ພາກັນໄປລີ້ຊ້ອນຕາມຫ້ວຍຮ່ອງແລະມີເຈົ້າກົກເຈົ້າເຫຼົ່າຊື່ວ່າເຖົ້າເຈື້ອງກາ, ເຈື້ອງວານຊຶ່ງແມ່ນຕະກຸນດຽວກັນເປັນຜູ້ນຳພາ. ໃນຕອນເຂົ້າມາຢູ່ລາວທຳອິດເຂົາເຈົ້າດຳລົງຊີວິດຢູ່ກະແຈກກະຈາຍ, ໄລຍະທີ່ມີການປະຕິວັດຊາດປະຊາທິປະໄຕເຂົາເຈົ້າຈຶ່ງໄດ້ເຕົ້າໂຮມຢູ່ເປັນບ້ານຈົນເຖິງປະຈຸບັນນີ້…




**ຊື່ເອີ້ນ**ຊົນເຜົ່າຊິງມູນມີຫຼາຍຊື່ເອີ້ນເຊັ່ນ: ປວກ,ປວກດົງ,ປວກເດົາ,ແງດແລະລາວໃໝ່,ທັງໝົດໄດ້ກ່າວມາ ນັ້ນເປັນຊື່ທີ່ຊົນເຜົ່າອື່ນເອີ້ນໃຫ້ແຕ່ເຂົາເຈົ້າບໍ່ມັກ. ສ່ວນຊື່ທີ່ເຂົາເຈົ້າມັກ,ສະໝັກໃຈເອີ້ນຕົນເອງແລະຊື່ທີ່ໃຊ້ທາງ ການໃນປັດຈຸບັນແມ່ນເຜົ່າ“ຊິງມູນ”ເຊິ່ງມີຄວາມໝາຍວ່າ: ”ຄົນພູ”

## 1. ພາສາປາກເວົ້າ

ຊົນເຜົ່ນຊິງມູນມີພາສາປາກເວົ້າເປັນເອກະລັກຂອງຕົນຈັດເຂົ້າໃນໝວດພາສາມອນ-ຂະແມເຂົາເຈົ້າບໍ່ມີຕົວ ໜັງສືຂຽນ

**ການສົມທຽບພາສາລາວກັບພາສາຊິງມູນ**

| 1./ | ສະບາຍດີ | ຊົ້ນລໍບໍ |
|---|---|---|
| 2./ | ໂຊກດີ | ໂຊກລໍບໍ |
| 3./ | ຂອບໃຈ | ຈະເອີນເນີ |
| 4./ | ຂໍໂທດ | ຂໍໂທດ |
| 5./ | ເຈົ້າຊື່ຫຍັງ? | ມີມຊື່ແນວ? |
| 6./ | ເຮັດຫຍັງຢູ່? | ມີມບີເໝາະແອ? |
| 7./ | ກິນເຂົ້າແລ້ວບໍ? | ຈາປະແລ້ວບໍ? |

| | | |
|---|---|---|
| 8./ | ລາກອ່ນ | ຢູ່ເນີ |
| 9./ | ພົບກັນໃໝ່ | ເທື່ອໜ້ານະອອມທະປານໃໝ່ |
| 10./ | ບໍ່ເປັນຫຍັງ | ເກາະຖຸເໝາະລະ |

## ອາຊີບຂອງຊົນເຜົ່າຊິງມູນ

ພື້ນຖານດ້ານເສດຖາກິດຂອງ ເຜົ່າຊິງມູນເອົາການເຮັດໄຮ່ປູກເຂົ້າ. ນອກນັ້ນ, ເຂົາເຈົ້າຍັງລ້ຽງສັດ, ປູກພືດປະເພດຕ່າງໆສຳລັບຄອບຄົວ. ຄຽງຄູ່ກັບບັນດາທີ່ກ່າວມານັ້ນຊົນເຜົ່າຊິງມູນຍັງມີມູນເຊື້ອທາງດ້ານຫັດຖາກຳຈັກສານ, ຫຍິບປັກຖັກແສ່ວອີກດ້ວຍ.

2. **ທີ່ຕັ້ງບ້ານ ແລະ ເຮືອນ**

ລັກສະນະເຮືອນຂອງຊົນເຜົ່າຊິງມູນຕາມປະເພນີເຂົາເຈົ້າມັກປຸກສ້າງ ແລະ ຢູ່ເຮືອນຮ້ານທີ່ຫ່າງຈາກໜ້າດິນພຽງ 1 ແມັດເຮືອນມີລັກສະນະຊົ່ວຄາວ, ໂຄງປະກອບຂອງເຮືອນບໍ່ແໜ້ນໜາ, ແຕ່ລະຊິ້ນສ່ວນຂອງເຮືອນແມ່ນໃຊ້ເຄືອເຂົາຜູກໃສ່ກັນ, ມຸງດ້ວຍຫຍ້າຄາ ຫຼື ສັງກະສີຊຶ່ງຢູ່ໄດ້ພຽງແຕ່ 2-3 ປີ, ເຊິ່ງຫຼັງຄາມີຮູບຮ່າງຄືຫຼັງໂຕເຕົ່າ. ໃນເຮືອນມີເຕົາໄຟສອງເຕົາ: ເຕົາໄຟສຳລັບແຕ່ງຢູ່ຄົວກິນ ແລະ ອີກເຕົາໜຶ່ງແມ່ນສຳລັບຜີງໃນຍາວໜາວ.ໃນເຮືອນຍັງແບ່ງອອກເປັນສາມສ່ວນ:ສ່ວນທີໜຶ່ງຫົວເຮືອນດ້ານເຊຍແມ່ນສະຖານທີ່ຮັບແຂກ,ສ່ວນທີສອງຫົວເຮືອນດ້ານຊານແມ່ນເກັບມ້ຽນພົນລະປູກ ແລະ ເຄື່ອງມືທຳການຜະລິດ, ສ່ວນທີສາມກາງເຮືອນແມ່ນບອ່ນນອນຂອງເຈົ້າຂອງເຮືອນພ້ອມດ້ວຍບັນດາສະມາຊິກໃນຄອບຄົວ, ສຳລັບຄອງການຄະລຳຢູ່ໃນເຮືອນບໍ່ໃຫ້ກາງມຸ້ງຂາວ, ບໍ່ໃຫ້ນອນຂວາງຕາມລວງຍາວຂອງເຮືອນ ແລະ ບໍ່ໃຫ້ເອົາຊິ້ນດິບທີ່ບໍ່ໄດ້ຫຸ້ມຫໍ່ຂຶ້ນລ່ວງຫ້ອງຢ່າງເດັດຂາດ, ສຳລັບລູກເຂີຍບໍ່ໄດ້ນັ່ງຕັ່ງຫວາຍ ແລະ ນັ່ງເທິງສະແນນຂອງພໍ່ເຖົ້າເດັດຂາດ.





ຮູບເຮືອນຂອງຊົນເຜົ່າຊິງມູນ

## ອາຫານ ແລະ ເຄື່ອງດື່ມ

ແຕ່ກ່ອນຊົນເຜົ່າຊິງມູນແມ່ນມັກກິນອາຫານທີ່ລຽບງ່າຍບໍ່ຫຼາຍຢ່າງເປັນຕົ້ນເຂົ້າ ແລະ ອາຫານປະເພດແກງ, ໝົກ, ຫຼາມ, ເອາະ ແລະ ອື່ນໆ ດື່ມນ້ຳດິບ, ເຫຼົ້າໄຫ, ເຫຼົ້າຂາວ, ສູບຢາເສັ້ນ ແລະ ແມ່ຍິງທີ່ມີອາຍຸສູງມັກຄ້ຽວໝາກ ເປັນສ່ວນຫຼາຍເວລາດື່ມເຫຼົ້າເຂົາເຈົ້າຈະຜູກໄຫເຫຼົ້າໃສ່ກາງຂອງເຮືອນຄືກັນກັບ ເຜົ່າກຶມມູ

## 3. ຄວາມເຊື່ອຖື ແລະ ຮີດຄອງປະເພນີ

ຍ້ອນການດຳລົງຊີວິດຢູ່ໃກ້ກັບຊົນເຜົ່າອື່ນໆເປັນຕົ້ນແມ່ນຊົນເຜົ່າໄຕ (ໄຕດຳ, ໄຕແດງ) ຊົນເຜົ່າກຶມມຸ. ດັ່ງນັ້ນ, ຈິ່ງເຮັດໃຫ້ເຂົາເຈົ້າມີປະເພນີຫຼາຍອັນຄ້າຍຄືກັບຊົນເຜົ່າອື່ນທີ່ຢູ່ໃກ້ຄຽງ: ເຖິງຢ່າງໃດກໍ່ຕາມເຂົາເຈົ້າຍັງຮັກສາປະເພນີເປັນເອກະລັກຂອງຕົນເອງໄວ້ຈຳນວນໜຶ່ງຄື: ມີຄວາມເຊື່ອຖືນັບຖືຜີເປັນຕົ້ນຜີພໍ່ແມ່ ,ຜີປ່າ,ຜີພູ, ຜີບ້ານແລະອື່ນໆ ເພື່ອສະແດງເຖິງຄວາມເຄົາລົບນັບຖືບູຊາ. ແຕ່ລະຫຼັງເຮືອນລ້ວນແຕ່ມີຫໍຜີເຊິ່ງປຸກສ້າງຢູ່ໃກ້ກັບເຮືອນຂອງຕົນ.

ນອກຈາກນີ້ເຂົາເຈົ້າຍັງມີພິທີກຳ ຫຼື ຮີດຫຼາຍຢ່າງເຊັ່ນ: ພິທີກຳປຸກສ້າງ, ຂຶ້ນເຮືອນໃໝ່, ພິທີກຳເກັບກ່ຽວເຂົ້າໃໝ່, ພິທີເຮັດຂວັນບ້ານ ແລະ ຂວັນເມືອງເຊິ່ງໃນແຕ່ລະພິທີກຳນັ້ນເປັນໂອກາດໃຫ້ເຂົາເຈົ້ານຶກເຖິງຈິດວິນຍານຂອງບັນພະບຸລຸດທີ່ໄດ້ລວ່ງລັບໄປໂດຍສະເພາະແມ່ນຜູ້ທີ່ເສຍຊີວິດແບບຜິດປົກກະຕິ (ບໍ່ໄດ້ຮັບການປິ່ນປົວ).






## ການແຕ່ງງານ ແລະ ປະເພນີ

ເຂົາເຈົ້າຕັ້ງຖິ່ນຖານໃກ້ຄຽງກັນ, ມີການແຕ່ງງານພາຍໃນເຜົ່າ, ລະຫວ່າງເຜົ່າທີ່ມີຕະກຸນ ແລະ ເຜົ່າມີຜີເຮືອນຕ່າງກັນກໍ່ແຕ່ງງານກັນໄດ້ວັດທະນະທຳທີ່ໂດດເດັ່ນແມ່ນການແຕ່ງງານທີ່ສືບຕາມເຊື້ອບິດາສິດທິລາດ. ຢູ່ຊິງມູນຍັງມີຮີດ “ສືບ” ໝາຍເຖິງການແຕ່ງງານທີ່ມີລັກສະນະ “ຊື້  - ຂາຍ“ ຍັງແຜ່ຫຼາຍໃນສັງຄົມເຂົາເຈົ້າໃນປັດຈຸບັນ. ໂດຍປົກກະຕິແລ້ວຜູ້ເປັນພໍ່ຈະເປັນເຈົ້າກົເຈົ້າການໃນການແຕ່ງງານໃຫ້ແກ່ລູກຊາຍດ້ວຍວິທີການ ”ຊື້ຄ່າຫົວ” ຂອງຜູ້ຍິງແລ້ວເອົາເມືອເປັນເມຍຂອງລູກຊາຍຂອງຕົນ.  ລູກຊາຍມີການລົ້ມຫາຍຕາຍຈາກ, ຜູ້ເປັນພໍ່ຈະເປັນຄົນສືບຕໍ່ເອົາລູກໃພ້ມາເປັນເມຍຫຼືຍົກໃຫ້ຜູ້ອື່ນດ້ວຍວິທີ ”ຂາຍຄ່າຫົວ” ເພື່ອເອົາເງິນຄືນກໍ່ລະນີຫາກຜູ້ຍິງບໍ່ຍິນຍອມຮັບເງື່ອນໄຂດັ່ງກ່າວຈະເປັນຄົນໃຊ້ໃນເຮືອນພໍ່ຂອງຜົວຕະຫຼອດຊີວິດ.

**ປະເພນີງານສືບ**

ໃນເມື່ອມີຄົນຕາຍໃນບ້ານຈະມີການຍິງປືນຂຶ້ນຟ້າສາມນັດເພື່ອເປັນສັນຍານບອກໃຫ້ຄົນໃນບ້ານຮັບຮູ້ເຊິ່ງທຸກຄົນຈະຢຸດການເຮັດວຽກຈົນກວ່າຈະນຳເອົາສົບໄປຝັງພາຍຫຼັງທີ່ຕາຍບັນດາຍາດຕິພີ່ນ້ອງຈະມາຊ່ວຍກັນອາບນ້ຳໃຫ້ສົບຈາກນັ້ນກໍ່ແຕ່ງໂຕໃສ່ເສື້ອຜ້າຂອງເຜົ່າຊີງມູນເອົາຜ້າແພສີຂາວມາຫຍິບເປັນຖົງໃສ່ສົບຫຍິບດ້ວຍຜ້າໃໝຮຽບຮ້ອຍເອົາລົງໃນໂລງສົບໂດຍໃຊ້ຜ້າແພປົກໜ້າສົບໄວ້ໜຶ່ງຜືນໃນກໍລະນີເດັກນ້ອຍຕາຍໄປຈະປະກອບພິທີກຳຕາຍມື້ໃດໃຫ້ເອົາໄປຝັງມື້ນັ້ນສ່ວນຄົນໜຸ່ມສາວຖ້າຕາຍຕອນກາງຄືນໃຫ້ມື້ອື່ນເຊົ້າມື້ໃໝ່ໃຫ້ຂ້າໝູຫຼືງົວ, ຄວາຍໜຶ່ງໂຕເຮັດອາຫານສຳລັບອຸທິດໃຫ້ຜູ້ຕາຍກິນເອີ້ນວ່າ: "ເຮັດທງາຍ" ພໍຮອດຕອນຄ່ຳກໍ່ນຳໄປຝັງສ່ວນຄົນໄວກາງ ຫຼື ຜູ້ສູງອາຍຸເອົາສົບໄວ້ 1-2 ຄືນແລ້ວຈຶ່ງນຳເອົາໄປຝັງ ແລະ ຂ້າໝູ, ຄວາຍໜຶ່ງໂຕເຮັດທງາຍໃຫ້ຜູ້ຕາຍໃນເຊົ້າຂອງວັນທີ່ຈະນຳເອົາສົບໄປຝັງການທຳພິທີຝັງແມ່ນຂ້າໝູໜຶ່ງໂຕອຸທິດໃຫ້ເອີ້ນວ່າ: ໝູເຂົ້າຂຸມຫຼັງຈາກນັ້ນອີກສາມວັນຈະເຮັດພິທີທຳບຸນສ່ວນກຸສົນໃຫ້ໂດຍນຳເອົາເຄື່ອງໄປສົ່ງໃຫ້ທີ່ປ່າຊ້າເມື່ອສຳເລັດພິທີຝັງສົບຜູ້ໄປຮ່ວມພິທີຝັງສົບທຸກຄົນຈະລົງອາບນ້ຳທຳຄວາມສະອາດຮ່າງກາຍແລະສະຜົມໃນແມ່ນ້ຳເພື່ອລ້າງສິ່ງອັບປະມົງຄົນທັງຫຼາຍອອກຈາກຮ່າງກາຍເມື່ອຮອດຕອນຄ່ຳຈະມີພິທີສູດຂວັນໃຫ້ແກ່ຄອບຄົວຜູ້ຕາຍຜູ້ໄປຝັງສົບເພື່ອເປັນຄວາມສິລິມົງຄຸນແກ່ທຸກຄົນຫຼັງຈາກນັ້ນຄອບຄົວເຮັດອາຫານໄປອູທິດໃຫ້ທີ່ຂຸມຝັງສົບຕະຫຼອດໄລຍະ 7 ວັນຈາກນັ້ນໃຫ້ຜູ້ທີ່ເປັນເຂີຍກົກເອີ້ນຂວັນ ຫຼື ວິນຍານຂອງຜູ້ຕາຍຂຶ້ນກາຍໄປເປັນຜີເຮືອນນຳໄປໄວ້ດ້ານສຸດຂອງເຮືອນເອີ້ນວ່າ: ກະລໍ່ຫ້ອງເພື່ອປົກປັກຮັກສາຄຸ້ມຄອງລູກຫຼານ ແລະ ສະມາຊິກໃນຄອບຄົວໃຫ້ຢູ່ດີມີສຸກຕະຫຼອດໄປ.

4. **ສິລະປະວັນນະຄະດີພື້ນເມືອງ**

ດ້ານສິລະປະວັນນະຄະດີຂອງຊີງມູນໂດຍທົ່ວໄປແລ້ວເຂົາເຈົ້າບໍ່ມີເອກະລັກທາງດ້ານການຂັບລຳ, ເນື້ອຮ້ອງທຳນອງເສບທີ່ເປັນອັນສະເພາະຂອງຊົນເຜົ່າຕົນສຳລັບການເບີກບານມ່ວນຊື່ນຂອງເຂົາເຈົ້າແມ່ນມີລັກສະນະຊອດກະຈາໄດ້ຮັບອິດທິພົນຂອງບັນດາທີ່ຢູ່ໃກ້ຄຽງເຂົ້າມາປະສົມປະສານແລະລຽນແບບນຳບັນດາເຜົ່າອື່ນໆໃນສັງຄົມແຕ່ລະຍຸກສະໄໝ.

5. **ເຄື່ອງນຸ່ງຫົ່ມ**

ເຄື່ອງນຸ່ງຫົ່ມເອ້ຍ້ອງປະຈຳຊົນເຜົ່າກໍ່ເຊັ່ນດຽວກັນເຊິ່ງປັດຈຸບັນໄດ້ຫັນມາໃຊ້ເຄື່ອງນຸ່ງທີ່ຊື້ຈາກຕະຫຼາດ ແລະຈາກການແລກປ່ຽນສິນຄ້າກັບຊົນເຜົ່າທີ່ຢູ່ໃກ້ຄຽງໂດຍສະເພາະແມ່ນຊົນເຜົ່າລາວ ແລະ ຊົນເຜົ່າລາວໄຕ.

## ຊົນເຜົ່າສາມຕ່າວ.

## ປະຫວັດຄວາມມາ ແລະ ຊື່ເອີ້ນ

ປະຫວັດຄວາມເປັນມາຕົ້ນກຳເນີດມາຈາກດິນດອນຕອນໃຕ້ຂອງປະເທດຈີນເຂດສິບສອງພັນນາແລະເຂດສຽງຮຸ່ງນຳພາໂດຍເຈົ້າຫຼວງອິງແສນຄຳຕໍ່ມາມີພະອົງ ແລະ ເຈົ້າແສງເປັນຜູ້ສືບທອດ, ສາເຫດຂອງການເຄື່ອນຍ້າຍເນື່ອງຈາກການປະລາໄຊເສີດສິບສອງພັນນາຈຶ່ງຍົກຍ້າຍບ້ານເມືອງສາມພູປາງສາຍແດນຂອງປະເທດມຽນມາ. ຈາກນັ້ນເຂົາເຈົ້າເຄືອນຍ້າຍເຂົ້າມາຕັ້ງພູມລຳເນົາຢູ່ປະເທດລາວໄລຍະດຽວກັບຊົນເຜົ່າກຶມມຸ, ບິດ ແລະ ລະເມດ.

ຊົນເຜົ່ານີ້ເອີ້ນຕົນເອງວ່າ: "ສາມຕ່າວ"ຊົນເຜົ່າອື່ນເອີ້ນເຂົາເຈົ້າມັກ ແລະ ຊື່ທີ່ນຳໃຊ້ທາງລັດຖະການໃນປັດຈຸບັນກໍແມ່ນຊົນເຜົ່າ"ສາມຕ່າວ"ຄວາມໝາຍຂອງຊື່ເອີ້ນ: ຊົນເຜົ່ານີ້ຕາມປື້ມປະຫວັດສາດແຂວງຜົ້ງສາລີໄດ້ໃຫ້ຮູ້ວ່າ: "ສາມຕ່າວ" ແມ່ນຊື່ຕາມກົກ (ສາມເຈົ້າ) ຂອງສາມອານາຈັກນ້ອຍໃນສະໄໝສີແສນອານາສະໃໝສັກດີນາພະມ້າເຂົ້າມາຮຸກຮານປະເທດລາວສາມຕ່າວຍັງມີປະຫວັດເລົ່າສືບຕໍ່ກັນມາ: ແຕ່ກ່ອນເປັນເຜົ່າດຽວກັນກັບເຜົ່າກຶມມຸ, ມີເຂດໜຶ່ງຂອງເຜົ່າກຶມມຸທີ່ມີການຈະເລີນກ່າວ, ມີໂຕອັກສອນຂອງຕົນ. ພວກເຈົ້າກົກ, ເຈົ້າເຫຼົ່າໄດ້ເອົາໂຕອັກສອນຂອງ

ຕົນໄປຂາຍໃຫ້ເຜົ່າອື່ນຕາມຫຼັງກໍກຳເນີດມີການຜິດຖຽງທະເລາະວິວາດກັບເຜົ່າດັ່ງກ່າວຈຳເປັນໄດ້ກັບຫາຊົນເຜົ່າຕົນ, ແຕ່ປະຊາຊົນບໍ່ຮັບເອົາເຂົາເຈົ້າອີກ, ຈຶ່ງໜີໄປຢູ່ຕ່າງຫາກ, ປະພາສາ, ປະຣິດຄອງຂອງຊົນເຜົ່າຕົນລອກແບບເອົາຂອງຊົນເຜົ່າອື່ນເຊັ່ນ: ຈາກຖືຜີມາຖືພາມຈາກສາສະໜາພາມ - ມາຖືສາສະໜາພຸດຊົນເຜົ່າສາມຕ່າວປະກອບມີໜຶ່ງແຊນຄື: "ດອຍ "

1. **ອາຊີບຂອງເຜົ່າສາມຕ່າວ.**

ການດຳເນີນທາງດ້ານເສດຖະກິດຊົນເຜົ່າສາມຕ່າວ, ສ່ວນຫຼາຍປະກອບອາຊີບທາງດ້ານກະສິກຳຄື: ການເຮັດໄຮ, ເຮັດນາປູກເຂົ້າໜຽວ.ນອກນີ້ພວກເຂົາເຈົ້າຍັງປູກຜິດຕ່າງໆເພື່ອຮັບໃຊ້ຊີວິດປະຈຳວັນຂອງຄອບຄົວ, ເຄື່ອງມີການຜະລິດ ແລະ ແມ່ນຈຶ່ງມີມູນເຊື້ອໃນການຕຳຫູກທໍໄໝເພື່ອເຮັດເຄື່ອງນຸ່ງຮົ່ມສັດທີ່ມັກລ້ຽງໄດ້ແກ່: ຄວາຍ, ໝູ ແລະ ສັດປີກ.

2. **ທີ່ຕັ້ງບ້ານ ແລະ ເຮືອນ**

ຊົນເຜົ່າຊາມຕ່າວມີຄວາມນິຍົມຢູ່ເຮືອນຮ້ານ,ການອອກແບບໃນປູກສ້າງຈະມີຊານ, ມີເຊຍ, ເຮັດເປັນຫ້ອງ ແລະ ຂັ້ນໄດ້ແມ່ນລູກຄີກຄື: 3, 5, 7, 9 ຂັ້ນ ແລະ ການຈັດເຮືອນແມ່ນຄ້າຍຄືກັນກັບເຜົ່າລື້. ສ່ວນວັດສະດຸໃນການກໍ່ສ້າງແມ່ນຂຶ້ນກັບສະພາບຄວາມເປັນຈິງ ແລະ ຖານະຄອບຄົວໃນແຕ່ລະສະໄໝຮີດຄອງປະເພນີກ່ຽວກັບຂໍ້ຫ້າມ ແລະ ການຄະລຳຢູ່ໃນເຮືອນແມ່ນບໍ່ໃຫ້ຄົນນອກລ່ວງເຂົ້າຫ້ອງນອນ.



ຮູບທີ່ຕັ້ງບ້ານເຮືອນຂອງເຜົ່າສາມຕ່າວ

3. ເຄື່ອງນຸ່ງຫົ່ມ

ການນຸ່ງຖືຂອງຊົນເຜົ່າສາມຕ່າວສຳລັບແມ່ຍິງແມ່ນນຸ່ງເສື້ອປ້າຍ ແລະ ມີລວດລາຍຢູ່ບ່ອນປາມ, ຕີນເສື້ອແຂບລາຍ, ສິ້ນເປັນລາຍດອກຫຼາຍສີປົນກັນກໍມີຜ້າຄຽງຫົວເປັນສີຟ້າສຳລັບຜູ້ຊາຍແມ່ນໃຫ້ນຸ່ງເສື້ອດຳເຊີດມີລວດລາຍຢູ່ຄໍາ ແລະ ປາກຖົງໂສ້ງສີດຳຂາຍາວ





ຮູບການແຕ່ງກາຍຂອງເຜົ່າສາມຕ່າວ

### 4. ອາຫານ ແລະ ເຄື່ອງດື່ມ

ຊົນເຜົ່າສາມຕ່າວມີຄວາມນິຍົມກິນເຂົ້າໜຽວ, ມັກກິນອາຫານປະເພດລາບດິບ, ປີ້ງ, ຈີ່, ເອາະ, ທີ່ມີລົດຊາດເຜັດ ແລະ ເຄັມ, ມັກດື່ມເຫຼົ້າ, ນໍ້າດິບ, ສູບຢາ, ຄ້ຽວໝາກ.

### 5. ຄວາມເຊື່ອຖື

ຍ້ອນມີການດໍາລົງຊີວິດຢູສະຫຼັບຫວ່າງກັບຊົນເຜົ່າອື່ນໆເຮັດໃຫ້ເຂົາເຈົ້າເຊື່ອຖືສາສະໜາພຸດ, ພາມ ແລະຜີທັງແມ່ນວັດທະນາທໍາມີລັກສະນະປະສົມປະສານກັບຊົນເຜົ່າອື່ນໆທີ່ຢູ່ໃກ້ຄຽງເຊັ່ນ: ຢູ່ບ້ານຂອງເຂົາເຈົ້າມີວັດວາອາລາມມາມະນີພະສົງສໍາມະເນນ. ຄຽງຄູ່ກັນນີ້ຍັງມີຄວາມເຊື່ອທາງໄຊຍະສາດ, ເລື່ອງຜີເຊັ່ນ: ຜີພໍ່, ຜີແມ່, ຜີເຮືອນ, ຜີບ້ານ, ຜີເມືອງ, ຜີແມ່ນໍ້າລໍາເຊ, ຜີປາ ແລະຄວາມເຊື່ອເລື່ອງຈິດວິນຍານອື່ນໆ.

ໃນປີໜຶ່ງໆພວກເຂົາເຈົ້າມີການມ່ວນຊື່ນດ້ວຍການເຮັດບຸນຕາມລະເດືອນເຊັ່ນ: ບຸນສູ່ຂວັນເຂົ້າ, ບຸນເຂົ້າຈີ່, ບຸນພະເຫວດ, ບຸນປີໃໝ່, ບຸນເຂົ້າພັນສາ, ບຸນເຂົ້າປະດັບດິນ, ບຸນເຂົ້າສະຫຼາກແລະບຸນອອກພັນສາ (ການອອກຄອງຂອງພະສົງສໍາມະເນນ) ຕາມຮອບວຽນຂອງປະຕິທິນລາວໃນແຕ່ລະເດືອນ.

### 6. ສິລະປະວັນນະຄະດີພື້ນເມືອງ

ສໍາລັບສິລະປະວັນນະຄະດີຂອງຊົນເຜົ່ານີ້ແມ່ນປະກອບດ້ວຍການຂັບ, ລໍາ, ຮ້ອງເພງທໍານອງແຄ້ນ, ມີຄໍາກອນ, ຄໍາຜະຍາ, ຄໍາສຸພາສິດ, ນິທານພື້ນສືບທີ່ສ່ອງເຖິງສັງຄົມແຕ່ລະຍຸກສະໄໝ ແລະ ເຄື່ອງດົນຕີເຊັ່ນ: ກ້ອງ, ປີ, ສໍ, ຄ້ອງ, ແລະ ອື່ນ.

### 7. ພາສາປາກເວົ້າ

ຊົນເຜົ່າສາມຕ່າວບໍ່ມີຕົວໜັງສືຂຽນ, ແຕ່ກໍມີພາສາປາກເວົ້າເປັນສະເພາະຂອງຊົນເຜົ່າຕົນຈັດເຂົ້າໃນໝວດພາສາໝອນ-ຂະແມ. ຄ່ຽງຄູກັນນີ້ຊົນເຜົ່າສາມຕ່າວຍັງສາມາດເວົ້າພາສາຂອງຊົນເຜົ່າລາວ, ລື້, ຍວນ, ບິດ ແລະ ກຶມມຸໄດ້ດີ.

**ສົມທຽບພາສາລາວກັບພາສາຕ່າວ**

| ລໍາດັບ | ພາສາລາວ | ພາສາສາມຕ່າວ |
|---|---|---|
| 1 | ສະບາຍດີ | ໂງດຝອງ |
| 2 | ໂຊກດີ | ຢອບີສົມ |

| | | |
|---|---|---|
| 3 | ຂອບໃຈ | ລີຢອ໋ງ |
| 4 | ຂໍໂທດ | ຂໍໂທດ |
| 5 | ເຈົ້າຊື່ຫຍັງ | ມີຈີ່ເມາະ? |
| 6 | ເຮັດຫຍັງຢູ່ | ຈີຊີເມາະໂງດ? |
| 7 | ກິນເຂົ້າແລ້ວບໍ? | ຫາຍຊອບກ່ອຍ? |
| 8 | ລ່າກ່ອນ | ເອາະຊີອິເຕີ |
| 9 | ພົບກັນໃໝ່ | ກອ່ມາໃໝ່ |

## ຊົນເຜົ່າຕຣີ

## ປະຫວັດຄວາມເປັນມາ ແລະ ຊື່ເອີ້ນຊົນເຜົ່າຕຣີ

ຊົນເຜົ່າຕຣີແມ່ນຊົນເຜົ່າໜຶ່ງທີ່ນອນຢູ່ໃນວົງຄະນາຍາດແຫ່ງຊາດລາວເຊິ່ງໄດ້ຕັ້ງພູມລຳເນົາຢູ່ປະເທດລາດລາວແຕ່ດຶກດຳບັນຫ່າງຈາກນີ້ປະມານ 5000 ກວ່າປີມີປະຫວັດຄວາມເປັນມາຄ້າຍຄືກັນກັບບັນດາຊົນເຜົ່າໃນສາຂາພາສາກະຕູ່ອີກໄດ້ເຄື່ອນຍ້າຍມາຕັ້ງຖິ່ນຖານບ້ານຊ່ອງປະຈຸບັນແມ່ນຢູ່ປະເທດລາວຈາກດິນແດນພາກເໜືອໂດຍຜ່ານແຄວ້ນພົງສາວາດີປະເທດມຽນມາແລະເຂດລົບບູລີປະເທດໄທ.ໃນສະໄໝເຈົ້າຈັນອານຸວົງເຂົາເຈົ້າໄດ້ມີບົດບາດອັນສຳຄັນໃນການຂຽນເຂົ້າປະຫວັດສາດຂອງຊາດລາວໂດຍສະເພາະແມ່ນຢູ່ແຂວງສະຫວັນນະເຂດແລະຄຳມ່ວນເປັນກຳລັງແຮງທາງດ້ານການເມືອງ, ການທະຫານ,ວັດທະນະທຳສັງຄົມ,ເສດຖະກິດແຕ່ບັນພະບູລຸດນັບວ່າຫຼາຍຍຸກສະໄໝຮອດສະໄໝມີພັກປະຕິວັດນຳພາຊົນເຜົ່ານີ້ເອີ້ນຕົນເອງ"ຕຣີ"ຊົນເຜົ່າອື່ນເອີ່ນເຂົາເຈົ້າວ່າຕຣີ ຫຼືເຈຣີຊື່ເຂົາເຈົ້າມັກແລະໃຊ້ທາງການໃນປັດຈຸບັນແມ່ນຊົນເຜົ່າຕຣີ

1. **ອາຊີບຂອງຊົນເຜົ່າຕຣີ**

ການດຳເນີນວິຖີຊີວິດທາງດ້ານເສດຖະກິດຂອງຊົນເຜົ່າລາວເຂົາມີອາຊີບແບບປະສົມປະສານແຕ່ຕົ້ນຕໍແມ່ນການເຮັດນາ. ປູກເຂົ້າໝຽວ, ເຂົ້າຈ້າວເຮັດສວນຄົວປູກພືດຜັກແລະລ້ຽງສັດ. ຕາມລະດູການຜະລິດໃນວົງຈອນຊີວິດຮອບປີໜຶ່ງໂດຍອີງໃສ່ປະຕິທິນລາວເຊິ່ງແຕກຕ່າງຈາກປະຕິທິນສາກົນພ້ອມກັນນີ້ກໍ່ຍັງເຮັດການຄ້າຂາຍນ້ອຍເພື່ອເສີມລາຍໄດ້ແກ່ຄອບຄົວ, ກ່ອນໄປທຳການຜະລິດປູກພືດພັນທັນຍາຫານ,ໄປຊອກຢູ່ຫາກິນ ແລະ ອື່ນໆໃນຊີວິດຂອງເຂົາເຈົ້າຈະມີການໄລ່ມື້ໄລ່ຍາມຢ່າງລັກແນ່ເຊັ່ນ: ມື້ໃດເປັນມື້ງາມຍາມດີ ແລະ ມື້ບໍ່ດີຄື: ມື້ວັນສິນດັບ, ມື້ຮອງ, ມື້ຮາຍເດືອນດັບ, ເດືອນເພັງເປັນຕົ້ນ.

2. **ທີ່ຕັ້ງບ້ານ ແລະ ເຮືອນ**

ລັກສະນະເຮືອນຂອງຊົນເຜົ່າຕຣີເປັນເຮືອນຮ້ານນ້ອຍສອດຄ່ອງກັບຂະໜາດຄອບຄົວການຈັດວາງໃນຫອ້ງເຮືອນຄື:ມີເຕົາໄຟຫອ້ງນອນ,ຫ້ອງນອນຂອງພໍ່ແມ່, ຫ້ອງນອນແຂກແລະລູກຊາຍທີ່ບໍ່ທັນແຕ່ງດອງ. ສ່ວນລູກສາວໃຫຍ່ທີ່ບໍ່ທັນໄດ້ສ້າງຄອບຄົວແມ່ນໄປນອນ(ຢູ່ເຮືອນແມ່ຮ້າງນາງໝ້າຍ) ຄືກັນກັບຊົນເຜົ່າມະກອງບັນດາເຜົ່າໝວດ

ພາສາມອນ- ຂະແມມີໂຄງປະກອບສັບສົນຜົສົມຄວນລັກສະນະການສັບສົນທາງດ້ານວັດທະນະທຳ, ກ່ອນອື່ນໝົດສະແດງອອກໃນດ້ານສາຖາປານິກຂອງເຮືອນ ແລະ ຮີດການດຳລົງຊີວິດຂອງເຂົາເຈົ້າໃນຫຼັງຄາເຮືອນໜຶ່ງໆ. ທາງພາກເໜືອພວກເຂົາເຮັດເຮືອນ. ໄມ້ຂີ່ເຮືອນແມ່ນປະກອບດວ້ຍໄມ້ກົມໃຫຍ່ຜ່ປານກາງຈັດລຽງໄປຕາມທາງຂວາງຂອງເຮືອນ,ໄມ້ສົ້ນເທິງໄຂວ່ກັນ ແລະ ຜູກດ້ວຍເຄືອເຂົາໃນບາງເຂດເຮືອນຂອງບັນດາເຜົ່າ.

### 3. ເຄື່ອງນຸ່ງຫົ່ມ

ສຳລັບບເອກະລັກການນຸ່ງຫົ່ມເອ້ຍ້ອງກ່ອນໜ້ານີ້ປະມານ 100 ປີ ຜູ້ຊາຍຂອງຊົນເຜົ່າຕຣີແມ່ນຈິ່ງຜົມຍາວເກົ້າຜົມຄືກັບແມ່ຍິງ ແລະ ບັນດາຊົນເຜົ່າໃນໝວດພາສາມອນ - ຂະແມຢູ່ເຂດແຂວງພາກໃຕ້ແມ່ນຢູ່ແຂວງອັດຕະປືບ່ອງຫູໃສ່ກະຕ້າງເຮັດດ້ວຍເງິນ ແລະ ກໍ່ວເກົ້າຜົມຖືກະຈອນໃສ່ປອກແຂນໝາກຕຸ້ມ,ໃສ່ຂໍໝາກປັດ ແລະ ອື່ນໆ ຕັດແຂ້ວບໍ່ວ່າຍິງຫຼືຊາຍ. ແຕ່ປະເພນີດັ່ງກ່າວນັ້ນໄດ້ມີການປ່ຽນແປງຕາມແຕ່ລະປະຫັວດສາດປະຈຸບັນ ຫຼື ວັດທະນະທຳການນຸ່ງຖືເອ້ຍ້ອງບໍ່ຄ່ອຍປະກົດໃຫ້ເຫັນຢ່າງຊັດເຈນ ແລະ ເຂົາເຈົ້າກກໍໄດ້ເຫັນແຕ່ງກາຍຄືກັບຊົນເຜົ່າຜູ່ໄທ.

### 4. ອາຫານ ແລະ ເຄື່ອງດື່ມ

ຊົນເຜົ່າຕຣີແມ່ນມີຄວາມນິຍົມກິນເຂົ້າໜຽວທີ່ເຂົາເຈົ້າໄດ້ປູກເອງ ແລະ ແຕ່ສ່ວນອາຫານການກິນທີ່ເຂົາມັກກິນປະເພດຕົ້ມ, ລາບ, ຜັກປະເພດແກງທີ່ມີລົດຊາດເຄັມໃນເວລາມີແຂກມາແວ່ຢາມໃຫ້ກິນເຂົ້າກ່ອນ ແລະ ດື່ມເຫຼົ້າໄຫ, ເຫຼົ້າເດັດ, ເຂົາເຈົ້າໄດ້ມີຂໍ້ຫ້າມ ແລະ ຂະລຳບໍ່ໃຫ້ວາງພາເຂົ້າຊື່ຂີ່ເຮືອນ, ດື່ມນ້ຳດິບຕາມທຳມະຊາດທີ່ບໍ່ໄດ້ຕົ້ມຫຼືກັ່ນຕອງ.ໃນປະຈຸບັນມີການຫັນປ່ຽນໄປຕາມສະພາບຄວາມເປັນຈິງຂອງສັງຄົມທີ່ມີການພັດທະນາທາງອາຫານການກິນແລະອື່ນໆ.

### 5. ຄວາມເຊື່ອຖື

ຊົນເຜົ່າຕຣີມີຮີດຄອງປະເພນີທີ່ອຸດົມສົມບູນພວກເຂົາເຈົ້າມີຄວາມນິຍົມໃນການເຊື່ອຖື 2 ຢ່າງເຊັ່ນ: ພວກທີ່ຢູ່ທົ່ງພຽງມີຈຳນວນໜຶ່ງໄດ້ມີການເຊື່ອຖືສາສະໜາພຸດ ແລະ ເຊື່ອຖືຜີສວ່ນຍັງດຳລົງຊີວິດຢູ່ເຂດຫ່າງໄກສອກຫຼີກນັ້ນໄດ້ເຊື່ອຖືຜີເຊັ່ນ: ຜີບັນພະບູລຸດ, ຜີພໍ່, ຜີແມ່, ຜີອ້າຍ, ຜີນອ້ງຖ້າບໍ່ເຮັດລະປີບແມ່ນຜົວພັນເຖິງການແຕ່ງດອງບໍ່ແລ້ວຂຶ້ນເຮືອນພໍ່ເຖົ້າບໍ່ໄດ້ຜີຟ້າ, ຜີແຖນ, ຜີໜໍ,ຜີປົວ, ຜີເຂົ້າເປັນຜີທີ່ເຮັດໃຫ້ຄົນເຮົາເກີດລູກຢູ່ເຮືອນບໍ່ໄດ້, ຜີຈາຄາດ, ຜີອາຍະຍຽງແຕງ, ປາເຊີງ, ໝາໃນຄອບຄົວໜຶ່ງມີຫຼາຍຜີມີບາງຄອບຄົວໄດ້ເຊື່ອຖືສີ່ຜີຂຶ້ນໄປນອກຈາກນັ້ນຍັງມີຜີລວມຂອງບ້ານຄືຜີເມືອງ.



ຮູບເຄື່ອງເສັ້ນໄຫວ້

ເອີ້ນວ່າ: ຜີມະເຫສັກໃນປີໜຶ່ງຊົນເຜົ່າຕຣີໄດ້ມີພິທີກຳທາງການຈ້ຳຜີສະຫຼອງຜົນສຳເລັດເຊັ່ນ: ເວລາປຸກສ້າງເຮືອນໄດ້ເຮືອນແປ້ນກໍ່ຕ້ອງຂ້າໝູ, ງົວ, ຄວາຍກອ່ນຈະຖາງປ່າເຮັດໄຮ່ໄດ້ຈູດໄຮ່, ເສຍຫຍ້າໄຮ່, ຮູດເຂົ້າ, ເກັບກູ້ຜົນລະປູກ ແລະ ເອົາເຂົ້າຂຶ້ນເລົ້າແມ່ນຂ້າໝູ, ຄົນຈະເກີດລູກ, ງົວ, ຄວາຍຈະເກີດລູກໃໝ່ຈະຂາຍສັດລ້ຽງນາໆຊະນິດໄດ້ເງິນຄຳ ແລະ ໄດ້ລູກໃໝ່, ປັດຈຸບັນໄດ້ຫຼຸດຜ່ອນລົງສ່ວນໃດສ່ວນໜຶ່ງແລ້ວ

- **ຮີດຄອງປະເພນີຕ່າງໆຂອງເຜົ່າຕຣີ**

ການແຕ່ງງານ ແລະ ປະເພນີເຂົາເຈົ້າຕັ້ງຖິ່ນຖານໃກ້ຄຽງກັນ, ມີການແຕ່ງງານພາຍໃນເຜົ່າ, ລະຫວ່າງເຜົ່າທີ່ມີຕະກຸນແລະເຜົ່າມີຜີເຮືອນຕ່າງກັນກໍ່ແຕ່ງງານກັນໄດ້ວັດທະນະທຳທີ່ໂດດເດັ່ນແມ່ນການແຕ່ງງານທີ່ສືບຕາມເຊື້ອບິດາສິດທິລາດ.ຢູ່ຊົງມູນຍັງມີຮີດ “ ສືບ” ໝາຍເຖິງການແຕ່ງງານທີ່ມີລັກສະນະ “ ຊື້- ຂາຍ “ ຍັງແຜ່ຫຼາຍໃນສັງຄົມເຂົາເຈົ້າໃນປັດຈຸບັນໂດຍປົກກະຕິແລ້ວຜູ້ເປັນພໍ່ຈະເປັນເຈົ້າກົເຈົ້າການໃນການແຕ່ງງານໃຫ້ແກ່ລູກຊາຍດ້ວຍວິທີການ” ຊື້ຄ່າຫົວ”ຂອງຜູ້ຍິງແລ້ວເອົາເມືອເປັນເມຍຂອງລູກຊາຍຂອງຕົນລູກຊາຍມີການລົ້ມຫາຍຕາຍຈາກ, ຜູ້ເປັນຈະເປັນຄົນສືບຕໍ່ເອົາລູກໃພ້ມາເປັນເມຍ ຫຼື ຍົກໃຫ້ຜູ້ອື່ນດ້ວຍວິທີ”ຂາຍຄ່າຫົວ” ເພື່ອເອົາເງິນຄືນກໍ່ລະນີຫາກຜູ້ຍິງບໍ່ຍິນຍອມຮັບເງື່ອນໄຂດັ່ງກ່າວຈະເປັນຄົນໃຊ້ໃນເຮືອນພໍ່ຂອງຜົວຕະຫຼອດຊີວິດ.

- **ປະເພນີງານສົບ**

ໃນເມື່ອມີຄົນຕາຍໃນບ້ານຈະມີການຍິງປືນຂຶ້ນຟ້າສາມນັດ ເພື່ອເປັນສັນຍານບອກໃຫ້ຄົນໃນບ້ານຮັບຮູ້ເຊີ່ງທຸກຄົນຈະຢຸດການເຮັດວຽກຈົນກວ່າຈະນຳເອົາສົບໄປຝັງພາຍຫຼັງທີ່ຕາຍບັນດາຍາດຕິພີ່ນອ້ງຈະມາຊວ່ຍກັນອາບນ້ຳໃຫ້ສົບຈາກນັ້ນກໍ່ແຕ່ງໂຕໃສ່ເສື້ອຜ້າຂອງເຜົ່າຊົງມູນເອົາຜ້າແພສີຂາວມາຫຍິບເປັນຖົງໃສ່ສົບຫຍິບດ້ວຍຜ້າໃໝຮຽບຮ້ອຍເອົາລົງໃນໂລງສົບໂດຍໃຊ້ຜ້າແພປົກໜ້າສົບໄວ້ໜຶ່ງຜືນໃນກໍລະນີເດັກນ້ອຍຕາຍໄປຈະປະກອບພິທີກຳຕາຍມື້ໃດໃຫ້ເອົາໄປຝັງມື້ນັ້ນສ່ວນຄົນໜຸ່ມສາວຖ້າຕາຍຕອນກາງຄືນໃຫ້ມື້ອື່ນເຊົ້າມື້ໃໝ່ໃຫ້ຂ້າໝູຫຼືງົວ, ຄວາຍໜຶ່ງໂຕ.

ເຮັດອາຫານສຳລັບອຸທິດໃຫ້ຜູ້ຕາຍກິນເອີ້ນວ່າ: ”ເຮັດງາຍ” ພໍຮອດຕອນຄ່ຳກໍ່ນຳໄປຝັງສວ່ນຄົນໄວກາງ ຫຼື ຜູ້ສູງອາຍຸເອົາສົບໄວ້ 1-2 ຄືນແລ້ວຈຶ່ງນຳເອົາໄປຝັງແລະຂ້າໝູ, ຄວາຍໜຶ່ງໂຕເຮັດງາຍໃຫ້ຜູ້ຕາຍໃນເຊົ້າຂອງວັນທີ່ຈະນຳເອົາສົບໄປຝັງການທຳພິທີຝັງແມ່ນຂ້າໝູໜຶ່ງໂຕອຸທິດໃຫ້ເອີ້ນ: ວ່າໝູເຂົ້າຂຸມຫຼັງຈາກນັ້ນອີກສາມວັນຈະເຮັດພິທີທຳບຸນສ່ວນກຸສົນໃຫ້ໂດຍນຳເອົາເຄື່ອງໄປສົ່ງໃຫ້ທີ່ປາຊ້າເມື່ອສຳເລັດພິທີຝັງສົບຜູ້ໄປຮວ່ມພິທີຝັງສົບທຸກຄົນຈະລົງອາບນ້ຳທຳຄວາມສະອາດຮ່າງກາຍ ແລະ ສະຜົມໃນແມ່ນ້ຳເພື່ອລ້າງສິ່ງອັບປະມົງຄົນທັງຫຼາຍອອກຈາກຮ່າງກາຍເມື່ອຮອດຕອນຄ່ຳຈະມີພິທີສູດຂວັນໃຫ້ແກ່ຄອບຄົວຜູ້ຕາຍແລະຜູ້ໄປຝັງສົບເພື່ອເປັນຄວາມສິລິມົງຄຸນແກ່ທຸກຄົນຫຼັງຈາກນັ້ນຄອບຄົວເຮັດອາຫານໄປອູທິດໃຫ້ທີ່ຂຸມຝັງສົບຕະຫຼອດໄລຍະ 7 ວັນຈາກນັ້ນໃຫ້ຜູ້ທີ່ເປັນເຂີຍກົກເອີ້ນຂວັນຫຼືວິນຍານຂອງຜູ້ຕາຍຂຶ້ນກາຍໄປເປັນຜີເຮືອນນຳໄປໄວ້ດ້ານສຸດຂອງເຮືອນເອີ້ນວ່າ: ກະລໍ່

## 6. ເຄື່ອງດົນຕຣີ ແລະ ສິລະປະພື້ນເມືອງ

ດ້ານສິລະປະວັນນະຄະດີແມ່ນມີຄວາມອູດົມສົມບູນທີ່ມີຄຸນຄ່າອັນປະເສີດມາແຕ່ບູຮານນະການເປັນຕົ້ນກອນຂັບ, ລຳສະເບີດ, ຄຳສຸພາສິດ, ຄຳພະຫຍາ, ມີເຄື່ອງດົນຕີພື້ນເມືອງຫຼາຍຊະນິດຄື: ຄອ້ງ, ຄອ້ງລາ, ຄອ້ງຈູ້ມ, ຄອ້ງນຸມ, ແຄນ ແລະ ມີພິ້ນບູຮານ.

ຊົນເຜົ່າຕຣີໄດ້ມີພວກເຖົ້າແກ່, ມີສາມທີ່ເປັນເຈົ້າຮີດຄອງຂອງແຕ່ລະບ້ານ, ເຖົ້າແກ່ນັ້ນເປັນຜູ້ຄວບຄຸມກຸ່ມຄົນໃນຕະກຸນຂອງໃຜລາວເພື່ອສຳພັນກັບຕະກຸນອື່ນໃນເວລາງານ ແລະ ຄົນເສຍຊີວິດ.

## 7. ພາສາປາກເວົ້າ

ຊົນເຜົ່າຕຣີມີພາສາປາກເວົ້າທີ່ຈັດເຂົ້າໃນພາສາມອນ-ຂະແມພວກເຂົາເຈົ້າບໍ່ມີຕົວໜັງສືຂຽນພາສາປາກເວົ້າຄ້າຍຄືກັບພາສາປາກເວົ້າຂອງຊົນເຜົ່າມະກອງ, ກະຕ່າງ, ຊວ່ຍ, ຕະໂອ້ຍ, ປະໂກະ, ກາໂດ, ກາໄນເຂົາເຈົ້າສາມາດເວົ້າພາສາຂອງບັນດາຊົນເຜົ່າດັ່ງກ່າວ, ພາສາລາວ ແລະ ພາສາຕ່າງປະເທດໄດ້ດີຊຶ່ງມີຄວາມສະດວກໃນການພົວພັນແລກປ່ຽນເສດຖາກິດ ແລະ ວັດທະນະທຳກັບບັນດາຊົນເຜົ່າເຫຼົ່ານັ້ນໄດ້ດີ.

**ການສົມທຽບ**

| ລ/ດ | ພາສາລາວ | ສາຕຣີ |
|---|---|---|
| 1 | ສະບາຍດີ | ບັນຊວນ |
| 2 | ໂຊກດີ | ບໍ່ມີ |
| 3 | ຂອບໃຈ | ຊະເອີນ |
| 4 | ຂໍໂທດ | ເຊໂລຍ |
| 5 | ເຈົ້າຊື່ຫຍັງ ? | ເມີ້ຍລະເມີນເດົາ? |
| 6 | ເຮັດຫຍັງຢູ່? | ເອີຕະເຕົາ? |

## ເຜົ່າຊົນເຜົ່າມະກອງ

## ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ

ເຜົ່າຊົນເຜົ່າມະກອງແມ່ນຊົນເຜົ່າໜຶ່ງທີ່ນອນມະກອງຢູ່ໃນວົງຄະນາຍາດແຫ່ງຊາດລາວມີປະຫວັດຄວາມເປັນມາຄ້າຍຄືກັບເຄື່ອນຍ້າຍມາປະເທດລາວໂດຍຜ່ານແຄ້ນຫົງສາວະດີປະເທດມຽນມາ ແລະ ເຂດລົບບູລີປະເທດສະຫຍາມ (ໄທ) ມາຕັ້ງພູມລຳເນົາຢູ່ເມືອງນອງແຂວງສະຫວັນນະເຂດໃນສະໃໝເຈົ້າຈັນອາຫຼວຍຕຶກໄລຍະໜຶ່ງ. ເນື່ອງຈາກມີສະພາບທຳມະຊາດ ແລະ ສົງຄາມໜີບຮັດຢ່າງໜັກໜ່ວງຈຶ່ງເຮັດໃຫ້ຊົນເຜົ່ານີ້ມີຈຳນວນໜຶ່ງເຄື່ອນຍ້າຍຈາກເມືອງນອງມາຕັ້ງພູມລຳເນົາຢູ່ຫຼາຍເມືອງທີ່ຂຶ້ນກັບແຂວງສະຫວັນນະເຂດ ແລະ ເມືອງຂອງແຂວງຄຳມ່ວນຊົນເຜົ່ານີ້ເອີ້ນຕົ້ນເອງວ່າ "ບຣູມະກອງ" ຊົນເຜົ່າອື່ນເອີ້ນຊົນເຜົ່າເຂົາເຈົ້າແມ່ນ "ມະກອງ" ເຊິ່ງໝາຍຄວາມວ່າ: "ມະກອງເອົາມາໃຫ້"ແລະ ໃນປັດຈຸບັນຊົນເຜົ່າມະກອງປະກອບດ້ວຍຫຼາຍແຊງດ້ວຍກັນຄື: ມະກອງ, ຕຣູຍ, ພົ້ວ, ມາຮ້ອຍແລະຕຣອງອາໃສຢູ່ໃນເວລານັ້ນ.

1. **ອາຊີບຂອງຊົນເຜົ່າມະກອງ**

ຊົນເຜົ່າມະກອງໃນເມື່ອກ່ອນແມ່ນທາງປ່າເຮັດໄຮ່ປູກເຂົ້າ,ເກັບເດັດຜັກປ່າ, ລ່າເນື້ອສັດປ່າ, ຫາປ່າຕາມທຳມະຊາດ, ລ້ຽງສັດປະເພດ:ຄວາຍ,ງົວ,ໝູ, ໝາ, ແບ້ ແລະ ສັດປີກ, ປູກພືດດຊະນິດຕ່າງໆ. ປັດຈຸບັນຄົນມະກອງຢູ່ຫຼາຍບ່ອນຖືກການເຮັດນາປູກເຂົ້າໜຽວເປັນຕົ້ນຕໍປູກສາລີ, ມັນກໍ, ເຜືອກ ແລະ ອື່ນໆເປັນສຳຮອງທໍ່ໄໝ, ປັ້ນໝໍ້ຫູ່ໄຫໄດ້ມີຄວາມຊຳນານງານໃນວິຊາຕີເຫຼັກເພື່ອເຮັດເຄື່ອງມືໃນການຜະລິດ, ໃຊ້ສອຍໃນຄອບຄົວ ແລະ ໄດ້ແລກປ່ຽນສິ່ງຂອງອື່ນໆອີກດ້ວຍ.

2. **ທີ່ຕັ້ງບ້ານ ແລະ ເຮືອນ**

ລັກສະນະເປັນເຮືອນຮ້ານນ້ອຍ, ສອງຄ່ອງກັບຖານະໃນຄອບຄົວຊຶ່ງມີການຈັດວາງພາຍໃນເຮືອນເຊັ່ນ: ເຕົາໄຟ, ຫ້ອງນອນ, ພໍ່ແມ່, ຫອ້ງນອນລູກແຕ່ງດອງແລ້ວ, ຫ້ອງນອນລູກຊາຍຍັງໂສດ ແລະ ຫ້ອງນອນຂອງແຂກທີ່ມາແວ່ຢາມ. ສ່ວນລູກສາວໃຫຍ່ບໍ່ທັນແຕ່ງດ່ອງກໍ່ມານອນຢູ່ເຮືອນໝູ່ຄູ່ ຫຼື ເຮືອນແມ່ຮ້າງນາໜ້າຍເຮືອນແຕ່ລະຫຼັງໃນບ້ານໜຶ່ງໆແມ່ນໄດ້ຈັດວາງເປັນວົງມົນ, ຢູ່ເຄິ່ງກາງບ້ານມີສະລາກວາ. ຊົນເຜົ່າມະກອງໄດ້ມີພິທີກຳໃນການເລືອກສະຖານທີ່ຕັ້ງບ້ານ ແລະ ການຂຶ້ນເຮືອນໃໝ່ລ້ວນແຕ່ມີການຈຳຜີທັງໝົດ.



ຮູບລັກສະນະຂອງເຮືນຊົນເຜົ່າ

## ເຄື່ອງນຸ່ງຫົ່ມ.

ກ່ອນໜ້ານີ້ 100 ກວ່າປີຜູ້ຊາຍແມ່ນນຸ່ງກະຕ່ຽວ, ຈິ່ງຜົມຍາວເກົ້າຜົມຄືແມ່ຍິງ, ບ່ອງຫູໃສ່ຕ້າງທີເຮັດດວ້ຍເງິນແລະກົ່ວ, ຕັດແຂ້ວ, ສັກເອິກ, ຄາງໜ້າລາຍທີສະແດງເຖິງຄວາມເກັ່ງກ້າດຮັ່ງມີ. ສ່ວນແມ່ຍິງນຸ່ງສິ້ນ, ຫົ່ມເສື້ອ, ໃສກະຕ້າງທີ່ເຮັດດ້ວຍເງິນ ແລະ ກົ່ວ, ຖືກກະຈອນ, ກ້ອງແຂນ, ປອກຄໍ, ໝາກຕຸ້ມ ແລະ ໝາກປັດ. ປັດຈຸບັນການນຸ່ງຫົ່ມເອ້ຢອ້ງຂອງຊົນເຜົ່າມະກອງໄດ້ມີການປ່ຽນແປງເຂົາເຈົ້າມີຄວາມນິຍົມນຸ່ງຖືແບບຊົນເຜົ່າຜູ້ໄທ, ຊົນເຜົ່າລາວ.

3. **ອາຫານ ແລະ ເຄື່ອງດື່ມ**

ສະໄໝບູຮານແມ່ນກິນເຂົ້າໜຽວ, ອາຫານທີ່ຂາດບໍໄດ້ແມ່ນລາບເລືອດ, ແກງມີລົດຊາດເຜັດ ແລະ ເຂັ້ມໃນເວລາມີແຂກມາຢາມແມ່ນໃຫ້ແຂກກິນກ່ອນເຈົ້າຂອງເຮືອນຈຶ່ງກິນຕາມຫຼັງບໍໃຫ້ວາງພາເຂົ້າຊື່ຂີ່ເຮືອນ, ນັ່ງຢອງຢໍ້ເວລາກິນເຂົ້າເຂົາເຈົ້າດື່ມນໍ້າບໍລິສຸດ,ດື່ມເຫຼົ້າໄຫ, ສູບຢາເສັ້ນປຸກທີ່ສຸດ.

4. **ຄວາມເຊື່ອຖື**

ກ່ອນໜ້ານີ້ປະມານ 100 ກວ່າປີຊົນເຜົ່າມະກອງໄດ້ເຊື່ອຖືຜີຊຶ່ງລວມມີຜີຕ່າງໆຄື: ຜີປູ, ຜີຍາ, ຜີພໍ່ແມ່, ອ້າຍນ້ອງຖ້າຮາກບໍ່ທັນເຮັດປີບມັນພົວພັນເຖິງຫຼາຍດ້ານເປັນຕົ້ນ: ແຕ່ງດອງບໍ່ແລ້ວຂຶ້ນເຮືອນພໍ່ເຖົ້າບໍ່ໄດ້. ນອກຈາກຜີກ່າວມານັ້ນແລ້ວຍັງມີຜີຟ້າ, ຜີແຖນ, ຜີໝໍ, ຜີປົວ, ຜີເຂົ້າເປັນຜີທີເຮັດໃຫ້ຊົນເຜົ່າເກີດລູກຢູ່ເຮືອນບໍ່ໄດ້ເພາະວ່າເຂົາເຈົ້າເຊື່ອຖືຮີດຄອງປະເພນີ, ຜີກະຈາດ, ຜີອາຍະຢຽງແດງ, ປາເຊິງ, ຜີໝາ ແລະ ຜີອື່ນໆ. ນອກຈາກນັ້ນ, ຄົນແຕ່

ລະຄອບຄົວຍັງມີຜີລວມຂອງບ້ານຄື: ຜີບ້ານ "ຜີມະເຫສັກ" ປັດຈຸບັນໄດ້ມີການປ່ຽນແປງເປັນຕົ້ນມີຫຼາຍບ້ານໄດ້ເຂົ້າາລົບນັບຖືພຸດທະສາສະໜາ ແລະ ຄວາມເຊື່ອຖືອິກດວ້ຍຊົນເຜົ່າມະກອງໄດ້ມີຮີດຄອງປະເພນີພົວພັນເຖິງການຜະລິດໃນປີໜຶ່ງເຊັ່ນ: ພິທີກຳຈຳຜີແມ່ນເວລາປຸກເຮືອນ, ຖ້າເຮັດເຮືອນໄມ້ແປ້ນຕອງໄດ້ຂ້າໝູ, ງົວ, ຄວາຍ. ສະຫຼອງກ່ອນຈະຖາງປ່າເຮັດໄຮ່, ເສຍຫຍ້າ ແລະ ຮູດເຂົ້າ, ເກັບຜົນລະປູກ, ຂົນເຂົ້າຂຶ້ນເລົ້າ, ຄວາຍ, ງົວຈະເກີດລູກ, ຈຳໜ່າຍສັດລ້ຽງທຸກຊະນິດ, ໄດ້ເງິນ, ຄຳ ແລະ ໄດ້ລູກໃໝ່ກໍຕ້ອງຂ້າໝູ. ໃນຮອບວຽນປີໜຶ່ງໆຂອງເຂົາເຈົ້າຈະມີການຈັດງານເຊັ່ນ: ເດືອນ 5 ເຮັດບຸນດຳໄພມີການຄົບງັນກິນງົວ, ຄວາຍສະເຫຼີມສະຫຼອງໜຶ່ງວັນ, ເດືອນ 8 ບຸນກິນແຕຮມີການຂ້າໝູ, ໄກ່ໃນແຕ່ລະປີແລະເດືອນ 12 ມີການຈັດງານເອີ້ນວ່າ"ກິນງະ"ຊົນເຜົ່າມະກອງໄດ້ມີເຖົ້າແກ່ມີລ່າມຜູ້ເປັນເຈົ້າຮີດຄອງແຕ່ລະບ້ານ, ເຖົ້າແກ່ອາວຸໂສເປັນຜູ້ຄອບຄຸ້ມຕະກູນຂອງຕົນ ແລະ ການສຳພັນກັບຕະກູນອື່ນໃນເວລາງານບຸນ, ຄົນເສຍຊີວິດເຂົາເຈົ້າໄດ້ມີຊັ້ນຄົນ, ປັນຍາຊົນ,ເຈົ້າກົກ, ເຈົ້າເຫຼົ່າ, ຜູ້ຊົງຄຸນວຸດທິທີ່ມີອິດທິພົນອັນສຳຄັນຕໍ່ຊາວບ້ານ.

5. **ສິນລະປະພື້ນເມືອງ**

ຊົນເຜົ່າມະກອງມີສິນລະປະວັນນະຄະດີເປັນຕົ້ນ: ຄຳຜະຫຍາສຸພາສິດກອນຂັບລຳ ຫຼື ມ່ວນຊື່ນຕາມປະເພນີ, ມີວາດຟ້ອນໄປຕາມຈັງຫວະລ້ຽງຜີອື່ນໆ.

6. **ພາສາປາກເວົ້າ**

ຊົນເຜົ່າມະກອງ ບໍ່ມີຕົວໜັງສືຂຽນມີແຕ່ພາສາປາກເວົ້າເປັນອັນສະເພາະຂອງຕົນຊຶ່ງຈັດເຂົ້າໃນໝວດພາສາມອນ-ຂະແມສາຂາພາສາບຣູອິກ ຫຼື ມອນບູຮານເຂົາເຈົ້າສາມາດເວົ້າພາສາຂອງຊົນເຜົ່າ, ກະຕ່າງ, ຕຣີ, ຕະໂອ້ຍ, ຊ່ວຍ, ກາໂດ, ກາໄນ, ປະໂກະ, ພາສາລາວ ແລະ ພາສາຕ່າງປະເທດເຊິ່ງມີຄວາມສະດວກໃນການພົວພັນແລກປ່ຽນເສດຖະກິດ, ວັດທະນາທຳພາຍໃນ ແລະ ຕ່າງປະເທດນັບມື້ນັບກວາງຂ້ວາງ.

ສົມທຽບພາສາລາວກັບພາສາມະກອງ

| ລ/ດ | ພາສາລາວ | ພາສາມະກອງ |
|---|---|---|
| 1 | ສະບາຍດີ | ບັນຊວນ |
| 2 | ຂອບໃຈ | ຊະເອີນ |

## ເຜົ່າຕະໂອ້ຍ

## ປະຫວັດຄວາມເປັນມາ ແລະ ຊື່ເອີ້ນຂອງຊົນເຜົ່າຕະໂອ້ຍ.

ເຜົ່າຕາໂອ້ຍແມ່ນຊົນເຜົ່າໜຶ່ງທີ່ດຳລົງຊີວິດ ແລະ ຕັ້ງຖິ່ນຖານພູມລຳເນົາຢູ່ໃນລາວຂອງພວກເຮົາໄດ້ຫລາຍຮ້ອຍປີແລ້ວຊົນເຜົ່ານີ້ໃດ່ອົບພະຍົກແລ້ວຍ້າຍເຂົ້າມາດິນແດນລາວພ້ອມດຽວກັນກັບບັນດາຊົນເຜົ່າໃນໝວດພາສາມອນ- ຂະແມໃນລະຫວ່າງສະຕະວັດທີV- VIII ບົນເສັ້ນທາງຂອງການເຄື່ອນຍ້າຍນັ້ນໄດ້ຜ່ານເຂດໃດແດ່ບໍ່ມີຂໍ້ມູນ ແລະ ເອກະສານທີ່ບອກແຈ້ງ ແລະ ໃຫ້ຄວາມຊັດເຈນ.

ຊົນເຜົ່ານີ້ເອີ້ນຕົນເອງວ່າ: ຕະໂອ້ຍ ຊື່ທີ່ໃຊ້ທາງລັດຖະການປັດຈຸບັນນີ້ກໍ່ແມ່ນຊົນເຜົ່າ ຕະໂອ້ຍ ສຳລັບຊື່ເອີ້ນ ແລະ ຄວາມໝາຍຂອງຊື່ເອີ້ນວ່າ: ຕະໂອ້ຍ ມີຫຼາຍຄົນໃນຄວາມແຕກຕ່າງກັນມີບາງທັດສະນະວ່າ: ແມ່ນການເອີ້ນຊື່ຕາມທ້ອງຖິ່ນທີ່ອາໃສຢູ່ ຊື່ຂອງພູພຽງຕະໂອ້ຍ ແລະ ຊື່ຂອງເມືອງຕະໂອ້ຍ,ທາງທັກສະນະພັດເວົ້າວ່າ ຕະໂອ້ຍແມ່ນຊື່

ຂອງເຈົ້າກົກເຈົ້າເຫຼົ່າຜູ້ນຳຂອງຊົນເຜົ່ານີ້ເຊິ່ງໃນພາສາຂອງເຂົາເຈົ້າເຊັ່ນ: ຕະ ແປວ່າ ລຸງ ແລະ ໂອ້ຍ ແມ່ນຊື່ຂອງຄົນ ສະນັ້ນຄວາມໝາຍຂອງຊື່ເອີ້ນ: ຕະໂອ້ຍ ຍັງຊົນເຜົ່າຕະໂອ້ຍປະກອບດ້ວຍ 2 ແຂງຄື: ຕົງ ແລະ ອິນ (ຢິນຣ) .




**ອາຊີບຂອງຊົນເຜົ່າຕະໂອ້ຍ.**

ໃນເມື່ອກ່ອນຊົນເຜົ່າຕະໂອ້ຍມີອາຊີບຫຼັກໃນການເຮັດໄຮ່ປູກເຂົ້າໜຽວ, ປູກພືດຜັກ, ຊອກຢູ່ຫາກິນຕາມທຳມະຊາດ, ຜ່ານຂະບວນການເຄື່ອນຍ້າຍໄປຕັ້ງຖິ່ນຖານບ້ານຊ່ອງຢູ່ແຕ່ລະທ້ອງຖິ່ນທີ່ມີສະພາບແວດລ້ອມທີ່ແຕກຕ່າງກັນເຮັດໃຫ້ວິຖີການດຳລົງຊີວິດກໍ່ຄືການທຳມາຫາກິນຂອງເຂົາເຈົ້າປ່ຽນແປງ ມີບາງທ້ອງຖິ່ນກໍ່ມີການຫັນຈາກການເຮັດໄຮ່ມາເຮັດນາລ້ຽງສັດເພື່ອເປັນອາຫານ ແລະ ປະກອບພິທີກຳທາງດ້ານຄວາມເຊື່ອຕ່າງໆໂດຍສະເພາະແມ່ຍິງແມ່ນການໃຊ້ເປັນຄ່າດອງ (ຄ່າສິນສອດ) ໃນເວລາລູກຊາຍແຕ່ງດອງ, ປະຈຸບັນມີຈນວນໜຶ່ງຂອງຊົນເຜົ່າຕະໂອ້ຍໄດ້ຫັນອາຊີບມາປູກຕົ້ນໄມ້ມີໝາກເພື່ອເປັນສິນຄ້າສ້າງລາຍໄດ້ແກ່ຄອບຄົວເຊັ່ນ: ປູກກາເຟ, ໝາກແໜ່ງເຫຼົ່ານີ້ເປັນຕົ້ນ.

## 1. ທີ່ຕັ້ງບ້ານ ແລະ ເຮືອນ.

ລັກສະນະເຮືອນຂອງຊົນເຜົ່າຕະໂອ້ຍຕາມປະເພນີເຂົາເຈົ້າມັກຈະປຸກສ້າງເຮືອນແບບເຮືອນຮ້ານຕ່ຳເປັນເຮືອນທີ່ຍາວໂດຍອາໃສຢູ່ນຳກັນຫຼາຍຄອບຄົວຫຼາຍເຊັ່ນ:ຄົນ,ຊຶ່ງຈະມີການຂັ້ນເປັນຫ້ອງນ້ອຍສະເພາະແຕ່ລະຄອບຄົວໃຜມັນ.ບ້ານຂອງຊົນເຜົ່າຕະໂອ້ຍຈະມີເຮືອນສາລາກວມຢູ່ໃຈກາງຂອງບ້ານຊຶ່ງເຂົາເຈົ້າຈຶ່ງຈະໃຊ້ສາລາກວມເປັນສະຖານທີ່ໂຮມຊຸມນຸມ ແລະ ມີການຂະລຳຄື:ບໍ່ໃຫ້ນັ່ງອີງເສົາເຮືອນ,ບໍ່ໃຫ້ນອນຂວາງເຮືອນ, ການເຂົ້າອອກເຮືອນຂອງແຂກຕ້ອງເຂົ້າ,ອອກທາງປະຕູທີ່ໃຊ້ສຳລັບຮັບແຂກເທົ່ານັ້ນ.



ຮູບທີ່ຕັ້ງບ້ານ ແລະ ເຮືອນ

2. **ເຄື່ອງນຸ່ງຫົ່ມ.**

ສຳລັບເຄື່ອງນຸ່ງຫົ່ມປະຈຳຊົນເຜົ່າເຂົາເຈົ້ານັ້ນມີການຖັກແສ່ວ ລວດລາຍຄ້າຍຄືຂອງຊົນເຜົ່າຕຣຽງ, ຊົນເຜົ່າກະຕູ່, ພິເສດອີກຢ່າງໜຶ່ງ ຊົນເຜົ່າຕະໂອ້ຍໃນເມື່ອກ່ອນປະເພນີການຕັດແຂ້ວ, ບ່ອງຫູ ປະຈຸບັນໄດ້ມີການປຽນແປງກໍ່ບໍ່ນິຍົມອີກແລ້ວ. ໂດຍສະເພາະແມ່ນຄົນຮຸ່ນໜຸ່ມນ້ອຍທັງເຄື່ອງນຸ່ງຂອງເຂົາເຈົ້າບໍ່ໄດ້ຮັບການສົ່ງເສີມບໍ່ນິຍົມກັນນຸ່ງ ແລະ ບໍ່ມີການອະນຸລັກຮັກສາໄວ້ໜຸ່ມສ່ວນຫຼາຍນັ້ນຫັນມາໃຊ້ເຄື່ອງນຸ່ງທີ່ຊື້ຈາກຕະຫຼາດຕາມຍຸກສະໄໝຂອງສັງຄົມທົ່ວໄປ.

3. **ອາຫານ ແລະ ເຄື່ອງດື່ມ.**

ສຳລັບຊົນເຜົ່າຕະໂອ້ຍແມ່ນນິຍົມກັນກິນເຂົ້າໜຽວທີ່ເຂົາເຈົ້າໄດ້ປູກເອງ ແລະ ສ່ວນອາຫານທີ່ເຂົາເຈົ້າມັກກິນແມ່ນປະເພດແກງ, ລາບ, ຫຼາມ, ໝຸກ, ແຈ່ວ ການກິນດື່ມຂອງເຂົາເຈົ້າມັກດື່ມເຫຼົ້າຂາວ, ເຫຼົ້າໄຫ, ດື່ມນ້ຳດິບຕາມທຳມະຊາດທີ່ບໍ່ໄດ້ຕົ້ມ ຫຼື ກັ່ນຕອງ ປັດຈຸບັນໄດ້ມີການຫັນປ່ຽນໄປຕາມສະພາບຕົວຈິງຂອງສັງຄົມທີ່ມີການພັດທະນາທັງການກິນ, ການດື່ມ, ການສູບ ແລະ ອື່ນໆ.

4. **ປະເພນີ ວັດທະນະທຳ ຄວາມເຊື່ອ**

ບຸນປະເພນີ, ພິທີກຳທີ່ສຳຄັນຂອງຊົນເຜົ່າຕະໂອ້ຍໃນປີໜຶ່ງໆນັ້ນມີການກ່ຽວພັນເຖິງການຄົບຮອບຂອງຜູ້ທີ່ເສຍຊີວິດ ຫຼື ຢ່າງໜຶ່ງແມ່ນການບຸນລຶບຄົນຕາຍເຊິ່ງຕາມພາສາຂອງຊົນເຜົ່າເຂົາເຈົ້າແມ່ນການເຮັດລະປີບ. ນອກຈາກນີ້ແລ້ວຍັງມີປະເພນີຕ່າງໆທີ່ເປັນທີ່ເພິ່ງທາງໃຈພ້ອມທັງປົກປ້ອງຊີວິດຂອງຄົນ, ສັດລ້ຽງ, ເຄື່ອງປູກຂອງຝັງ ແລະ ອື່ນໆ.

**ປະເພນີການແຕ່ງງານ.**

ຖ້າໃຜມີລູກສາວເວລາເຮັດເຮືອນແມ່ນໃຫ້ຈິ່ງປ່ອງເຮືອນເວລາຜູ້ບ່າວໄປຫາຜູ້າສາວຈະເອົາມີຈິກແມ່ລິງຖ້າວ່າມັກແມ່ນເວົ້ານຳແລະຜູ້ຊາຍຈະໄປຫ້າມໃຫ້ຜູ້ຊາຍຂຶ້ນຖ້າທັງ 2 ມັກກັນແທ້ຜູ້ຊາຍບອກພໍ່ແມ່ໄປຂໍຄ່າດອງແພງຄວາຍ 3 ໂຕຫຼຽນກັບງົວ 6 ມີໄຂ່ໃສ່ເຫຼົ້າມີກອງລາຍ 1 ອັນຜູ້ຍິງຊາຍ ຖ້ວຍຈຳນວນ 100 ໃບບໍ່ມີບ່ອງໄກ່ຈຳນວນ 100 ໂຕຜູ້ໃຊ້ຊຸດໃຫ້ຄອບຄົວຜູ້ຊາຍທຸກຄົນເອົາລາຄາແພງທີ່ສຸດຜ້າຫົ່ມເຫຼືອປູໃຫ້ປູ່, ຍ່າ.

**ງານສົບ:** ມີຄົນຕາຍແມ່ນໄປຝັງໂລດບໍ່ປະແຮມຄືນພວກໄປຝັງບໍ່ມີຄູບາຝັງບໍ່ຈູດ ຖ້າເດັກນ້ອຍແມ່ນຂ້າໝູ, ຜູ້ເຖົ້າຂ້າຄວາຍເພື່ອເຮັດບຸນກຸສົນໃຫ້ແກ່ຜູ້ຕາຍມາແຕ່ຜູ້ຝັງແມ່ນເອົາພາເຂົ້າໄປຖວາຍຢູ່ເສົາກາງຂອງເຮືອນ ແລະ ເວົ້າວ່າໃຫ້ເບິ່ງແຍງຜູ້ທີ່ຍັງຢູ່.

**ສິລະປະວັນນະຄະດີພື້ນເມືອງ.**

ດ້ານສິລະປະວັນນະຄະດີເຂົາເຈົ້າມີກອນຂັບ, ກອນລຳ, ມີບົດບາດທຳນອງເສບທີ່ເປັນເອກະລັກຂອງຊົນເຜົ່າຕົນ. ມີເຄື່ອງດົນຕີເຊັ່ນ: ຄ້ອງກອງ, ຊຸ່ຍປີ່, ແຄນ ສິ່ງຂອງເຫຼົ່ານີ້ຈະສາມາດພົບເຫັນໄດ້,ໃນເວລາຂຶ້ນເຮືອນໃໝ່ພ້ອມກັນນີ້ເຂົາເຈົ້າຍັງມີນິທານພື້ນເມືອງ, ຄຳພະຫຍາ, ຄຳສຸພາສິດ ແລະ ອື່ນໆຫຼາຍປະເພດທີ່ຍ້ອນຮອຍເຖິງວິທີການດຳລົງຊີວິດກໍ່ຄືອຸປະສັກຕ່າງໆທີ່ບັນພະບູລຸດຂອງເຂົາໄດ້ປະເຊີນໃນໄລຍະຜ່ານມາ.



ຮູບເຄື່ອງດົນຕີພື້ນເມືອງ

## ພາສາປາກເວົ້າ.

ຊົນເຜົ່າຕະໂອ້ຍມີພາສາປາກເວົ້າທີ່ເປັນເອກະລັກຂອງຕົນຊຶ່ງຈັດຢູ່ໃນໝວດພາສາມອນ-ຂະແມເຂົາເຈົ້າບໍ່ມີຕົວໜັງສືຂຽນ.

**ການສົມທຽບພາສາລາວ ກັບ ພາສາຕະໂອ້ຍ.**

| ລ/ດ | ພາສາລາວ | ພາສາຕະໂອ້ຍ |
|---|---|---|
| 1. | ສະບາຍດີ | ສະບາຍດີ |
| 2. | ໂຊກດີ | ໂຊກດີ |
| 3. | ຂອບໃຈ | ຂອບໃຈ |
| 4. | ຂໍໂທດ | ຂໍໂທດ |

## ຊົນເຜົ່າກຶມມຸ

## ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ

ຊົນເຜົ່າກຶມມຸ ໜຶ່ງໃນວົງຄະນາຍາດແຫ່ງຊາດລາວເອກະພາບຕາມການຄົ້ນຄວ້າຂອງນັກປະຫວັດສາດຫຼາຍປະເທດໃຫ້ຮູ້ວ່າ: ປະຫວັດຄວາມເປັນມາແມ່ນຄ້າຍຄືກັບບັນດາເຜົ່າທີ່ນອນຢູ່ໃນໝວດພາສາມອນ-ຂະແມ ບັນດາຊົນເຜົ່າເຫຼົ່ານີ້ມີເຊື້ອສາຍພົວພັນກັບຊົນຊາດຂອມທີ່ມາຈາກ ເຜົ່າອິນເດຍບູຮານ. ໃນທ້າຍສະຕະວັດທີ IX ໄດ້ຍົກຍ້າຍມາຕັ້ງຖິ່ນຖານຢູ່ເຂດໃຈກາງຂອງສຸວັນນະພູມກວມເອົາໝົດອິນດູຈີນໃຈກາງສຸວັນນະພູມໝາຍເຖິງປະເທດລາວ ແລະ ຍ້າຍມາຢູ່ເຂດ 12 ພັນນາປະເທດຈີນ, ແລ້ວເກີດເສິກຂຸນເຈືອງ, ຂຸນລໍ ແລະ ມີຈຳນວນໜຶ່ງຕົກຄ້າງຢູ່ຕາມປ່າຂ່າດອນດັ່ງກ່າວ, ຍັງມີຂະບວນຂອງທ້າວຍີ່ຂຸນເຈືອງ 7 ອ້າຍນ້ອງຂັບໄລ່ ຊົນເຜົ່າກຶມມຸ ຈຳນວນໜຶ່ງຕົກຢູ່ແຄມຂອງ, ຈຳນວນໜຶ່ງຕົກຢູ່ແຄມນ້ຳອູ ແລະ ຈຳນວນໜຶ່ງຈະຕົກຢູ່ເຂດປ່າເລົ່າ ສາເຫດຂອງການຍ້າຍແມ່ນຍ້ອນເສິກຂອງຂຸນເຈືອງເປັນຜູ້ຂັບໄລ່ໃນສະໄໝບູຮານປະມານ 700 ກວ່າປີແຕ່ລະແຂວງຂອງຊົນເຜົ່າກຶມມຸ ເອີ້ນຕົນເອງມີການຜັນສຽງແຕກຕ່າງກັນບາງເລັກນ້ອຍເປັນຕົ້ນຄຳທຳອິດ ກຶມ, ເຄີ, ຂະ, ກຳ. ສຳລັບເຜົ່າອື່ນໃຫ້ເຂົາເຈົ້າກໍ່ມັກອອກສຽງບໍ່ແຈ້ງໃນຄຳທຳອິດ, ສ່ວນຄຳທີສອງ “ມຸ “ ແມ່ນແຈ້ງຄືກັນໝົດ.

ຊື່ເອີ້ນ ເປັນເອກະພາບກັນວ່າ: “ ກຶມມຸ “ ເປັນຊື່ເອີ້ນ ແລະ ຊື່ທີ່ນຳໃຊ້ໃນທາງລັດຖະການ. ຄຳທີ່ວ່າ: “ ກຶມມຸ “ ມີຄວາມໝາຍວ່າ: “ ຄົນ ” ແລະ ຄົນໃນນີ້ນີ້ມີຄວາມໝາຍເຈາະຈົງເຖິງເຜົ່າຂອງຕົນເອງເທົ່ານັ້ນ. ຊົນເຜົ່າກຶມມຸ ປະກອບມີຫຼາຍແຊງເຊັ່ນ: ກຶມມຸຣອກ, ກຶມມຸອູ, ກຶມມຸລື້, ກຶມມຸແຄວນ, ກຶມມຸຍວນ, ກຶມມຸເຈືອງ, ກຶມມຸຄຣອງ, ກຶມມຸແມດ ກຶມມຸກະສັກ... ແຕ່ລະແຊງຂອງຊົນເຜົ່າໄດ້ຖິ່ນຖານພູມລຳເນົາຕາມສະຖານທີ່ຕ່າງກັນ.



ຮູບການແຕ່ງກາຍຂອງເຜົ່າ

1. **ປະເພນີຄວາມເຊື່ອຖື ແລະ ວັດທະນະທຳ**

ຕາມປະເພນີແລ້ວ ບຸນເກຣີ ແມ່ນຈັດຂຶ້ນໃນທ້າຍເດືອນ 1 ຫຼື ວ່າຕົ້ນເດືອນ 2 ຂອງທຸກໆປີ. ສະນັ້ນພາຍຫຼັງເກັບກ່ຽວເຂົ້າໄຮ່ສຳເລັດແລ້ວ. ເຂົາເຈົ້າໄດ້ມີການກະກຽມເຮັດບຸນດັ່ງກ່າວ. ຊຶ່ງກ່ອນອື່ນໝົດຈະຕ້ອງມີການກະກຽມວັດຖຸປັດໄຈຫຼາຍຢ່າງ ໂດຍສະເພາະ ແມ່ນ ອາຫານການກິນເຊັ່ນ: ງົວ, ຄວາຍ, ໝູ, ໄກ່, ເຄື່ອງປູກຂອງຝັງເຊັ່ນ: ເຂົ້າສານ, ເຜືອກ, ມັນ, ເຫຼົ້າໄຫ, ເຄື່ອງນຸ່ງຫົ່ມເອ້ຍ້ອງ, ມີການຝຶກແອບຂອງໜ່ວຍສິລະປະການສະແດງເຄື່ອງດົນຕີ ແລະ ອື່ນໆ.

ຕາມຄວາມເຊື່ອຖືຂອງຊົນເຜົ່າກຶມມຸ ນັບຖືບັນພະບຸລຸດຂອງຕົນຕະຫຼອດມາຢູ່ໃນເຮືອນມີຮ້ານບູຊາຜີເວລາເຮັດພິທີກຳລ້ຽງຜີເຮືອນນັ້ນລວມມີຜີພໍ່ແມ່, ຜີປູ່ຍ່າ, ຕາຍາຍ. ນອກນັ້ນຊົນເຜົ່າກຶມມຸ ຍັງນັບຖື ຜີບ້ານ, ຜີເມືອງ, ຜີຟ້າ, ຜີແຖນ, ຜີປ່າ, ຜີນ້ຳ ຜີທີ່ເຂົາເຈົ້າຢ້ານທີ່ສຸດແມ່ນ ຜີປອບ. ສະນັ້ນ, ແຕ່ລະບ້ານຈຶ່ງມີໝໍມົນຢ່າງໜ້ອຍໜຶ່ງຄົນ ປັດຈຸບັນນີ້ ຊົນເຜົ່າກຶມມຸ ຈຳນວນໜຶ່ງໄດ້ຫັນມານັບຖືສາສະໜາຕ່າງໆເຊັ່ນ: ສາສະໜາພຸດ, ເຢຊູ ແລະ ອື່ນໆ.

2. **ເຄື່ອງດົນຕີ ແລະ ສິລະປະພື້ນເມືອງ**

ດ້ານສິລະປະ-ວັນນະຄະດີແມ່ນອຸດົມສົມບູນໃນແຕ່ລະແຊງລ້ວນແຕ່ມີການຂັບລຳຕ່າງໆຫຼາຍຊະນິດ (ເຕີມ) ແລະ ມີເຄື່ອງດົນຕີປະດິດສ້າງຈາກໄມ້ປ່ອງ ນອກຈາກນີ້ມີນິທານພື້ນເມືອງ, ຄຳຜະຫຍາ ແລະ ບົດຟ້ອນປະຈຳເຜົ່າຄື: ຟ້ອນດາບ, ຟ້ອນທັ່ງບັ້ງ.

3. **ອາຊີບຂອງຊົນເຜົ່າກຶມມຸ**

ລັກສະນະທາງດ້ານເສດຖະກິດຂອງຊົນເຜົ່າກຶມມຸ ແມ່ນປະກອບອາຊີບທາງດ້ານກະສິກຳເປັນຕົ້ນ ແມ່ນເຮັດໄຮ່ປູກເຂົ້າໜຽວ, ປູກພືດຕ່າງໆເພື່ອຮັບໃຊ້ຊີວິດປະຈຳວັນການລ້ຽງສັດກໍເປັນກິດຈະການທີ່ສຳຄັນໃນສັງຄົມຂອງຊົນເຜົ່ານີ້ ສັດທີ່ເຂົາເຈົ້ານັກລ້ຽງ ແມ່ນໝູ, ໝາ, ງົວ, ຄວາຍ, ແບ້. ສັດປີກເພື່ອປະກອບໃນພິທີກຳຕ່າງໆເປັນ

ອາຫານເຂົ້າໃນຊີວິດປະຈຳວັນຄຽງຄູ່ກັບຊົນເຜົ່າກຶມມຸ ຍັງມີການເກັບເຄື່ອງປ່າຂອງດົງເພື່ອເປັນສິນຄ້າແລກປ່ຽນຢູ່ຕາມທ້ອງຕະຫຼາດ ຫຼື ແລກປ່ຽນນຳບັນດາຊົນເຜົ່າທີ່ໃກ້ຄຽງ.

### 4. ທີ່ຕັ້ງບ້ານ ແລະ ເຮືອນ

ລັກສະນະເຮືອນຂອງຊົນເຜົ່າກຶມມຸ ຕາມປະເພນີຂອງເຂົາເຈົ້າມັກປຸກເຮືອນຮ້ານ, ມີຊານ, ມີເຊຍ, ຈະມີການຈັດຫ້ອງຕາມຄວາມເໝາະສົມຂອງຈຳນວນສະມາຊິກໃນຄອບຄົວເຮືອນຈະຖືກຈັດເປັນສອງຫ້ອງ, ຫ້ອງໃນສຳລັບພໍ່ແມ່ ມີເຕົາໄຟສະເພາະໜຶ້ງເຂົ້າ, ຫ້ອງນອກໄວ້ສຳລັບຮັບແຂກມີເຕົາໄຟແຕ່ງກິນ, ແຂກຄົນມາເຮືອນຈະໄດ້ຢູ່ແຕ່ຫ້ອງນອກບໍ່ໃຫ້ນອນຂວາງເຮືອນ ສ່ວນຍາມກາງເວັນບໍ່ໃຫ້ຫົ່ວຊິ້ນດິບຕ່າງໆ ທີ່ບໍ່ໄດ້ຫໍ່ຂຶ້ນເຮືອນບໍ່ໃຫ້ແບກສາດປູນອນ ຫຼື ສາດປູຮອງຕີນເຂົ້າຜ່ານບ້ານເຮືອນຢ່າງເດັດຂາດ.




ຮູບລັກສະນະບ້ານເຮືອນ

### 5. ອາຫານ ແລະ ເຄື່ອງດື່ມ

ຊົນເຜົ່າກຶມມຸ ແມ່ນໄດ້ມີຄວາມນິຍົມກິນເຂົ້າໜຽວທີ່ໜຶ້ງດ້ວຍໄຫ, ອາຫານປະເພດຕ່າງໆເຊັ່ນ: ໝົກໃສ່ເຂົ້າປຽນ, ເອາະຫຼາມ, ປີ້ງ, ແກ້ງ, ລາບ, ຊຶ່ງໄດ້ມີການປຸງແຕ່ງອາຫານດ້ວຍໝາກເຜັດ, ເກືອ, ຫົວສີໃຄ, ຜັກນາງຕູ່, ຜັກອື່ນ, ຫົວຂ່າ ທີ່ມີລົດຊາດເຜັດ ແລະ ເຄັມ ສ່ວນການດື່ມ ແມ່ນດື່ມເຫຼົ້າໄຫ, ດື່ມນ້ຳດິບທີ່ຕັກມາຈາກຫ້ວຍຮ່ອງ, ສູບຢາເສັ້ນທີ່ປຸກດ້ວຍການເອົາໃບຕອງກ້ວຍແຫ້ງພັນ.

### 6. ເຄື່ອງນຸ່ງຫົ່ມ

ຊົນເຜົ່າກຶມມຸ ມີເຄື່ອງນຸ່ງຫົ່ມທີ່ເປັນເອກະລັກຂອງເຂົາເຈົ້າຕ່ຳດ້ວຍຝ້າຍ, ຍ້ອມນິນ ແລະ ປະດັບປະດາຕາມແຕ່ລະປະເພດ ປັດຈຸບັນນີ້ການແຕ່ງຕົວ, ການນຸ່ງຖືບາງຈະປະກົດເຫັນແຕ່ຍາມງານບຸນປະເພນີເທົ່ານັ້ນສຳລັບວັນທຳມະດາແລ້ວເຂົາເຈົ້າຈະມັກນຸ່ງເຄື່ອງສຳເລັດຮູບທີ່ຊື້ຈາກຕະຫຼາດ.

### 7. ພາສາປາກເວົ້າ

ຊົນເຜົ່າກຶມມຸ ມີພາສາປາກເວົ້າເປັນເອກະລັກສະເພາະຂອງຕົນເຂົາເຈົ້າບໍ່ມີຕົວໜັງສືຂຽນມາຮອດຊຸມປີ 1980 ມີນັກອັກສອນສາດຈຳນວນໜຶ່ງໄດ້ຄົ້ນຄວ້າ ແລະ ໃຊ້ຕົວອັກສອນລາຕິນ ເປັນໜັງສືຂອງຊົນເຜົ່າກຶມມຸ, ປັດຈຸບັນຕົວອັກສອນດັ່ງກ່າວຍັງຄົງຕົວຢູ່ແຕ່ບໍ່ໄດ້ນຳໃຊ້ຢ່າງກວ້າງຂວາງ (ໃຊ້ສຳລັບນັກຄົ້ນຄວ້າ) ພາສາກຶມມຸຈັດເຂົ້າຢູ່ໃນໝວດພາສາມອນ-ຂະແມ ແຕ່ລະແຂວງຂອງ ຊົນເຜົ່າກຶມມຸ ຈະມີພາສາປາກເວົ້າແຕກຕ່າງກັນເລັກນ້ອຍ ຄົນຊົນເຜົ່າກຶມມຸຍັງມັກຮຽນພາສາຊົນເຜົ່າອື່ນໆເຊັ່ນ: ພາສາເຜົ່າລາວ, ພາສາບາງຊົນເຜົ່າທີ່ຢູ່ໃກ້ຄຽງ.

**ການສົມທຽບພາສາລາວ ກັບ ພາສາກຶມມຸ**

| ລ/ດ | ພາສາລາວ | ພາສາກຶມມຸ |
|---|---|---|

| | | |
|---|---|---|
| 1 | ສະບາຍດີ | ສົມມ່າຍເລົ້ |
| 2 | ໂຊກດີ | ໂຊກເດົ້ |
| 3 | ຂອບໃຈ | ຂອບທຣິເຢືອງມ |
| 4 | ຂໍໂທດ | ຂໍສູ່ມາ |
| 5 | ເຈົ້າຊື່ຫຍັງ ? | ຊຶງເມີ້ະບາເມີ້ະເມີ໋ ? |
| 6 | ເຮັດຫຍັງຢູ່ ? | ແຕ່ງເມີ ? |
| 7 | ກິນເຂົ້າແລ້ວບໍ ? | ເປີ້ະມະແລ້ວໂອ໊ຍ ? |
| 8 | ລາກ່ອນ | ເຢາະເບີເອັມ |
| 9 | ພົບກັນໃໝ່ | ປົ້ມເຢາະຫົມເມາະ |
| 10 | ບໍ່ເປັນຫຍັງ | ອຳແຢລເມີ |

## ຊົນເຜົ່າຊ່ວຍ

## ປະຫວັດຄວາມເປັນ ແລະ ຊື່ເອີ້ນ

ຊົນເຜົ່າຊ່ວຍຕັ້ງຢູ່ພູມລຳເນົາຢູ່ລາວໄດ້ຮ້ອຍປີແລ້ວເຂົາເຈົ້າໄດ້ເຄື່ອນຍ້າຍເຂົ້າມາລາວໂດຍຜ່ານແຄ້ວນຫົງສາວະດີປະເທດມຽນມາໃນສະໄໝເຈົ້າອາຫຼວຍພວກເຂົາເຈົ້າເຄື່ອນຍ້າຍມາຢູ່ບາງເມືອງຂອງແຂວງສະຫວັນນະເຂດ, ມາໄລຍະໜຶ່ງເນື່ອງຈາກມີສະພາບທຳມະຊາດ ແລະ ສັງໜົບຮັດຢ່າງໜັກໜ່ວງຈຶ່ງເຮັດໃຫ້ຊົນເຜົ່າຊວ່ຍເປັນຈຳນວນບໍ່ໜ້ອຍເຄື່ອນຈາກສະຫວັນນະເຂດລົງມາຢູ່ບາງເມືອງຂອງແຂວງສະຫວັນນະເຂດ, ຈຳປາສັກ, ເຊກອງ ແລະ ຍັງມີຈຳນວນໜຶ່ງທີ່ໄດ້ເຕືອນຍ້າຍໄປປະເທດໃກ້ຄຽງເຊັ່ນ: ລາຊະອານາຈັກກຳປູເຈຍ ແລະ ຊະອານາຈັກໄທ.

ຊົນເຜົ່ານີ້ເອີ້ນຕົນເອງວ່າ " ຊ່ວຍ " ຊົນເຜົ່າອື່ນເອີ້ນ, ຊື່ທີ່ເຂົາເຈົ້າມັກ ແລະ ຊື່ທີ່ໃຊ້ທາງການປັດຈຸບັນກໍແມ່ນ " ຊົນເຜົ່າຊ່ວຍ" ສຳລັບການທີເອີ້ນວ່າ: " ຊ່ວຍ " ແມ່ນມາຈາກຄຳສັບ: ສ່ວຍອາກອນຜ່ານຂະບວນວິວັດແຫ່ງການດຳລົງຄົງຕົວຂະຫຍາຍຕົວຂອງພວກເຂົາເຈົ້າຈຶ່ງປຽ່ນຊື່ຈາກຄຳທີ່ວ່າ "ສ່ວຍ" ມາເປັນ "ຊ່ວຍ" ເຊິ່ງມີຄວາມໝາຍຊ່ວຍເຫຼືອເຊິ່ງກັນ ແລະ ກັນຢູ່ປະເທດລາຊາອານາຈັກກຳປູເຈຍເອີ້ນວ່າ: "ແປນ" ໝາຍເຖິງພວກແຄມແມ່ນ້ຳ ແລະ ຢູ່ປະເທດລາວລາຊາອານາຈັກໄທເອີ້ນວ່າ: "ກຸຍ" ໝາຍເຖິງຄົນ.




## ອາຊີບຂອງຊົນເຜົ່າຊວ່ຍ

ແຕ່ກ່ອນຊົນເຜົ່າຊ່ວຍແມ່ນຍຶດຖືອາຊີບການຖາງປ່າເຮັດໄຮປູກເຂົ້າໜຽວເປັນຕົ້ນຕໍ, ປູກພືດທີ່ມີທາດແປ້ງ ພືດລົ້ມລຸກ, ພືດໃຫ້ໝາກໃນຂະນະທີ່ພວກເຂົາເຈົ້າເຄື່ອນຍ້າຍລົງມາຢູ່ທົ່ງພຽງແມ່ນໄດ້ຫັນປ່ຽນແບບແຜນການດຳລົງຊີວິດຈາກການຖາງປ່າເຮັດໄຮປູກເຂົ້າມາເຮັດນາປູເຂົ້າໜຽວ, ເຮັດສວນປູກໝາກເຜັດ, ກາເຟເປັນສິນຄ້າ, ລຽ້ງສັດປະເພດຕ່າງໆຄື: ງົວ, ໝູ ແລະ ສັດປີກເພື່ອເຮັດຮີດຄອງ “ ຈາງ ” ເຮັດບຸນລະປີບ ແລະ ຂາຍເປັນສິນຄ້າ ສະເພາະແມ່ຍິງມີຄວາມຊໍານານໃນວິຊາການຕໍາຫູກ.

1. **ທີ່ຕັ້ງບ້ານ ແລະ ເຮືອນ**

ຊົນເຜົ່າຊ່ວຍໄດ້ປຸກສ້າງເຮືອນຂອງເຜົ່າລາຢູ່ໃນສະໄໝບູຮານຊຶ່ງເປັນເຮືອນຮ້ານປູ ແລະ ແອ້ມແປ້ນມຸ່ງດ້ວຍຫຍ້າຄາກ້າວຂຶ້ນມຸງດ້ວຍສັງກະສີ, ກະເບື້ອງເປັນເຮືອນເຄິ່ງຖາວອນໃນອັດຕາສ່ວນສູງ.

## ເຄື່ອງນຸ່ງຫົ່ມ

ວັດທະນາທໍາການນຸ່ງຖືນັ້ນແຕ່ກອນຜູ້ຊາຍແມ່ນນຸ່ງກະຕ່ຽວ, ບ່ອງຫູ, ໃສ່ກະຕ້າງ, ເຮັດດ້ວຍເງິນ, ກົ່ວ, ເກົ້າຜົມສັກຂາລາຍ, ຕັດແຂ້ວໃສ່ປອກແຂນ ຜ່ານໄລຍະຫຼາຍສິບປີນີ້ພວກເຂົາເຈົ້າໄດ້ນິຍົມນຸ່ງໂສງ, ຫົ່ມເສື້ອ, ບໍ່ບ່ອງຫູ ແລະ ບໍ່ຈີ່ງຜົມຍາວສະເພາະແມ່ຍິງນຸ່ງສິ້ນ, ຫົ່ມເສື້ອ, ບ່ອງຫູໃສ່ກະຕ້າງທີ່ເຮັດດ້ວຍເງິນ ແລະ ກົ່ວປັດຈຸບັນແມ່ນຸ່ງຖືເອ້ຢອ້ງຄືກັບຊົນເຜົ່ລາວ ແລະ ຊົນເຜົ່າຜູ້ໄທ.

2. **ອາຫານ ແລະ ເຄື່ອງດື່ມ**

ສະເພາະການດໍາລົງຊີວິດເຂົາເຈົ້າແມ່ນຢູ່ໃກ້ກັບຊົນເຜົ່າລາວຜູ້ໄທ ສະນັ້ນລັກສະນະອາຫານການກິນກໍ່ແມ່ນລອກແບບຈາກທໍາມະຊາດເປັນຫຼັກເພື່ອປຸງແຕ່ງໃຫ້ມີລົດຊາດເຜັດ, ເຄັມ ແລະ ມັກກິນປະເພດແກງ, ຕົ້ມຜັກ, ລາບ ( ລາບສຸກ, ລາບດິບ ) ແຈ່ວ, ປີ້ງ, ໝົກ, ເອາະ ແລະ ອື່ນໆ ສໍາລັບເຄື່ອງດື່ມມັກດື່ມນ້ຳດິບ, ດື່ມເຫຼົ້າເດັດ ( ເຫຼົ້າຂາວ) ສູບຢາເສັ້ນທີ່ປູກພັນດ້ວຍໃບຕ້ອງກ້ວຍແຫ້ງປັດຈຸບັນໄດ້ມີການພັດທະນາດ້ວຍການຫັນໃຫ້ຖືກກັບຫຼັກສຸຂະອະນາໄມມີການປະດິດຄິດແຕ່ງກ່ຽວກັບລາຍການອາຫານດື່ມນ້ຳຕົ້ມ, ດື່ມນ້ຳຜະລິດຈາກໂຮງງານ, ດື່ມເຫຼົ້າ , ເບຍປະເພດຕ່າງໆ ແລະ ສູບຢາສໍາເລັດຮູບຈາກໂຮງງານຕາມມາດຕະຖານແຕ່ລະຄອບຄົວ.

## 3. ຄວາມເຊື່ອຖື

ດ້ານການເຊື່ອໃນເມື່ອກອນແມ່ນຜີພໍ່-ແມ່ ປູ່ຍາຕາຍາຍທີ່ໄປລ່ວງລັບໄປ ຜີເຮືອນ, ຜີບ້ານ, ຜີສາລາກວານ ຜີພູ, ຜີຫວ້ຍຮ່ອງໜອງບຶງ ແລະ ອື່ນໆ ໃນປີໜຶ່ງໆ ເຮັດບຸນຈາງະ ແລະ ເຮັດລາປີບ (ທານຄົນຕາຍ) ປັດຈຸບັນ " ຊົນເຜົ່າຊ່ວຍ " ຖືທັງຜີ, ສາດສະໜາພຸດຫຼາຍບ້ານໄດ້ມີວັດວາອາຮາມຄືກັບຊົນເຜົ່າລາວເຂົາເຈົ້າຈຶ່ງໄດ້ປະຕິບັດຮີດ 12 ແມ່ນອີງໃສ່ປະທິທິນປະຈຳເດືອນລາວຄື:

- ເດືອນຈຽງ ( ລ້ຽງຜີຟ້າ,ຜີແຖນ )
- ເດືອນຍີ່ ( ເຮັດບຸນຄູນລານ )
- ເດືອນສາມເພັງ ( ບຸນເຂົ້າຈີ່ - ບຸນຄະນະບູຊາ, ບຸນວັດພູ, ບຸນທາດອິງຮັງ, ບຸນທາດສີໂຄດ )
- ເດືອນສີ່ ( ບຸພະເຫວດ, ບຸນມະຫາຊາດ )
- ເດືອນຫ້າ ( ບຸນປີໃໝ່ລາວ ຫົດນ້ຳຜູ້ຫຼັກຜູ້ໃຫຍ່ພະສິງສາມະເນນ )
- ເດືອນຫົກ ( ບຸນວິສາ, ຂະບູຊາ ແລະ ບຸນບັ້ງໄຟ )
- ເດືອນເຈັດ ( ບຸນເບີກຊຳລະບານມາລຽ້ງປູ່ຕາເພື່ອກະກຽມເຂົ້າການສູ່ຜະລິດ )
- ເດືອນແປດ ( ບຸນເຂົ້າພັນສາເຂົ້າກຳຂອງສິງສຳມະເນນເປັນເວລາ 3 ເດືອນ )
- ເດືອນເກົ້າ ( ບຸນເຂົ້າປະດັບດິນຊຶ່ງແມ່ນຄວາມເຊື່ອມາແຕ່ບູຮານເປັນການຖວາຍໃຫ້ບັນດາທີລວງລັບໄປ ນັ້ນໃຫ້ມາຮັບເອົາ )
- ເດືອນສິບ ( ບຸນເຂົ້າສະຫຼາກແມ່ນການກະກຽມພົນກາຜະລິດຫຼືຄວາມໝາຍໜຶ່ງແມ່ນການເສັ້ນເຂົ້າກອນ ການເກັບກ່ຽວ )
- ເດືອນສິບເອັດ ( ບຸນພັນສາແມ່ນການອອກກຳຂອງພະອົງສຳມະເນນທີໄດ້ປະຕິບັດມາເປັນ 3 ເດືອນ )
- ເດືອນສິບສອງ ( ບຸນກະຖິນ, ຊຶ່ງເປັນບຸນທີ່ປະຊາຊົນລາວເຮົາໄດ້ເຄົາລົບບູຊາ ແລະ ສະຖິດໄວ້ໃນ ປະຫວັດສາດຂອງຊາດລາວ )

ພິເສດເຂົາເຈົ້າຂາດບໍ່ໄດ້ໃນຮອບວຽນຂອງປີໜຶ່ງໆຈະເຮັດບຸນເຂົ້າໃໝ່ບຸນປີໃໝ່ ແລະ ບຸນລະປີບຂອງ ຊົນເຜົ່າເຊິ່ງບຸນດັ່ງກ່າວນີ້ ສ່ວນຫຼາຍແມ່ນມັກຈະຈັດຢູ່ໃນລະຫວ່າງເດືອນເມສາຫາເດືອນພຶດສະພາຂອງທຸກໆປີ.

## 4. ສິລະປະວັນນະຄະດີພື້ນເມືອງ

ໃນເມື່ອກ່ອນຊົນເຜົ່າຊ່ວຍໄດ້ມີສິລະປະວັນນະຄະດີ, ມີບົດຮ້ອງທຳນອງເສບ, ມີພື້ນເມືອງເປັນອັນສະເພາະ ຂອງຊົນເຜົ່າຕົນເອງ, ແຕ່ມາຮອດປະຈຸບັນສິລະປະວັນນະຄະດີດັ່ງກ່າວໄດ້ຖືກເສື່ອມເສຍເນື່ອງຈາກໄດ້ຮັບຜົນ ສະທ້ອນວັດທະນາທຳ ແລະ ວັນນະຄະດີຂອງຊົນເຜົ່າລາວ.

## 5. ພາສາປາກເວົ້າ

ຊົນເຜົ່າຊ່ວຍບໍ່ມີຕົວໜັງສືມີພາສາປາກເວົ້າຂອງຊົນເຜົ່າຕົນ, ຈັດເຂົ້າໃນໝວດພາສາມອນ - ຂະແມທັງ ສາມາດກັບພາສາຂອງຊົນເຜົ່າ ກະຕາງ, ຕຣີ, ມະກອງ, ຕະໂອ້ຍ ແລະ ພາສາລາວໄດ້ດີ.

**ການສົມທຽບພາສາພາສາລາວ ກັບ ພາສາຊວ່ຍ**

| ລ/ດ | ພາສາລາວ | ພາສາຊວ່ຍ |
|---|---|---|
| 1 | ສະບາຍດີ | ຈຳອອ໋ຍສະປີໃໝ່ |
| 2 | ໂຊກດີ | ໂຊກອໍ |
| 3 | ຂອບໃຈ | ອໍພອມ |

| | | |
|---|---|---|
| 4 | ຂໍໂທດ | ເທື່ອໂທດ |
| 5 | ເຮັດຫຍັງຢູ່ ? | ວໍໄມວາ ? |
| 6 | ກິນເຂົ້າແລ້ວບໍ ? | ຂາດອຍແລ້ວໄມ ? |
| 7 | ລາກ່ອນ | ຈີເຈົາຕິ |
| 8 | ເຈົ້າຊື່ຫຍັງ ? | ມອງຊີມິງນາ ? |
| 9 | ພົບກັນໃໝ່ | ປະທະເຄືອເນືອອີດ |
| 10 | ບໍ່ເປັນຫຍັງ | ມະເກີດໄມ |

## ຊົນເຜົ່າກະຕູ

## ປະຫວັດຄວາມເປັນມາ ແລະ ຊື່ ເອີ້ນ.

ຊົນເຜົ່າກະຕູ ແມ່ນຊົນເຜົ່າໜຶ່ງ ທີ່ໄດ້ຕັ້ງຖິ່ນຖານພູມລຳເນົາຢູ່ ສປປ ລາວ ເຮົາໄດ້ຫຼາຍຮ້ອຍປີສຳລັບປະຫວັດຄວາມເປັນມາ ແລະ ຕົ້ນກຳເນີດຂອງຊົນເຜົ່ານີ້ ແມ່ນຄ້າຍຄືກັບບັນດາຊົນເຜົ່າໃນໝວດພາສາມອນ-ຂະແມ ເຊິ່ງມັກຄົ້ນຄ້ວຫຼາຍຄົນໃດ້ສັນນິຖານວ່າ: ໄດ້ອົບພະຍົບມາຈາກພາກຕາເວັນອອກສ່ຽງໃຕ້ຂອງອິນເດຍ ແລະ ບໍ່ລິເວັນຕອນໃຕ້ຂອງ ສປປ ຈີນ ເພາະຢູ່ເຂດນີ້ຍັງປາກົດມີກຸ່ມຄົນທີ່ປາກເວົ້າພາສາ ມອນ-ຂະແມຄື: ພວກມູນດະ, ພວກໂກນເປັນຕົ້ນ.

ຊົນເຜົ່ານີ້ເອີ້ນໂຕເອງວ່າ: ກະຕູ ຊົນເຜົ່າອື່ນເອີ້ນ ແລະ ຊື່ທີ່ເຂົາເຈົ້າມັກເອີ້ນ ແມ່ນ: ກະຕູ ສຳລັບຄວາມໝາຍຂອງຊື່ເອີ້ນວ່າ: ກະຕູ ຖ້າຈະແປຕາມພາສາຂອງເຂົາເຈົ້າຄືຄຳວ່າ: ກະ ແປວ່າ ລຸງ ແລະ ຕູ ແປວ່າ ຍອດນ້ຳ ຫຼື ຍອດຫ້ວຍຊົນເຜົ່າກະຕູປະກອບຫຼາຍກຸ່ມຄົນດ້ວຍກັນຄື: ຕຣີວ, ດາກກັງ (ບັນແດງ) ອຣັນາອາສານ ແລະ ເຝືອງ.

### 1. ທີ່ຕັ້ງບ້ານ ແລະ ເຮືອນ.

ຕາມປະເພນີເຂົາເຈົ້າມັກປຸກເຮືອນແບບເປັນຮູບວົງມົນອ້ອມສາລາກາບ້ານ ແລະ ໃຫ້ຢູ່ໃກ້ກັບຕະກຸ ຫຼື ເຊື້ອສາຍຂອງຕົນລັກສະນະເປັນເຮືອນຮ້ານຕ່ຳ ແລະ ເປັນເຮືອນຍາວໂດຍອາໃສຢູ່ນຳກັນຫຼາຍຄອບຄົວ ແລະ ຄົນໝາຍຄວາມວ່າ: ໃນບ້ານຂອງຊົນເຜົ່າກະຕູຈະມີເຮືອນສາລາກວານຢູ່ໃຈກາງ ສາລາກວານນີ້ເຂົາເຈົ້າໃຊ້ເປັນສະຖານທີ່ໂຮມຊຸມນຸມເປັນບ່ອນຮັບແຂກຈັດງານພິທີກຳຕ່າງໆກ່ຽວກັບຄວາມເຊື່ອຖືເພື່ອປະຕິບັດຕາມຮີດຄອງປະເພນີຂອງຊົນເຜົ່າກະຕູໃນບ້ານເຮືອນຂອງເຂົາເຈົ້າມີການຂະລຳ ແລະ ຂໍ້ຫ້າມຫຼາຍຢ່າງເຊັ່ນ: ກ່ອນຈະເຂົ້າບ້ານຕ້ອງສັງເກດເບິ່ງຢູ່ປະຕູໂຂງວ່າມີຝັດໄມ້ ຫຼື ຖ້າບໍ່ມີຝັດໄມ້ດິບສະແດງວ່າຫ້າມເຂົ້າບ້ານກ່ອນຈະຮູດເຂົ້າມີການຂະລຳບ້ານ ໂດຍຄົນໃນບໍ່ໃຫ້ອອກ ຄົນນອກບໍ່ໃຫ້ເຂົ້າ ຫ້າມຂຶ້ນເຮືອນໃນເວລາມີຝັດໄມ້ດິບຕິດຝາເຮືອນ ຫຼື ປະຕູ ບໍ່ໃຫ້ນັ່ງອີງເສົາເຮືອນບໍ່ໃຫ້ນອນຂວາງເຮືອນ ແລະ ການເຂົ້າອອກເຮືອນຂອງແຂກຕ້ອງເຂົ້າອອກປະຕູທີ່ໃຊ້ສຳລັບຮັບແຂກເທົ່ານັ້ນ.



ຮູບລັກສະນະເຮືອນຊົນເຜົ່າ

## 2. ອາຊີບຂອງຊົນເຜົ່າກະຕູ.

ຊົນເຜົ່າກະຕູສ່ວນຫຼາຍເຂົາເຈົ້າຍັງດຳລົງຊີວິດຢູ່ເຂດພູດອຍທີ່ຫ່າງໄກສອກຫຼີກ ເຂົາເຈົ້າມີອາຊີບຫຼັກໃນການເຮັດໄຮ່ປູກເຂົ້າພ້ອມກັນນີ້ຍັງປູກພືດຜັກ ແລະ ພືດທາດແປ້ງອື່ນໆເພື່ອໄວ້ບໍລິໂພກໃນຄອບຄົວເຮືອນ ໂດຍທົ່ວໄປແລ້ວວິທີການດຳເນີນຊີວິດປະຈຳວັນຂອງເຂົາເຈົ້າຍັງຕິດພັນຢູ່ກັບທຳມະຊາດເປັນສ່ວນໃຫຍ່ ເຄື່ອງນຸ່ງອຸປະກອນ ແລະ ເຕັກນິກວິທີການຜະລິດກໍ່ຍັງແມ່ນລັກສະນະພື້ນບ້ານພື້ນເມືອງການລ້ຽງສັດປະເພດຕ່າງໆກໍ່ເປັນອາຊີບໜຶ່ງທີ່ຊົນເຜົ່າກະຕູມີມູນເຊື້ອມາແຕ່ດົນນານ.

## 3. ເຄື່ອງນຸ່ງຫົ່ມ ແລະ ການແຕ່ງກາຍ

ຊົນເຜົ່າກະຕູມີເຄື່ອງນຸ່ງຫົ່ມທີ່ເປັນເອກກະລັກຂອງຕົນເຊິ່ງແຕ່ກ່ອນຜູ້ຊາຍມັກນຸ່ງກະຕ່ຽວ ປະຈຸບັນໄດ້ມີການປ່ຽນແປງໂດຍຫັນມານຸ່ງເຄື່ອງທີ່ຊື້ຈາກຕະຫຼາດ ສຳລັບແມ່ຍິງສາມາດຮັກສາເຄື່ອງນຸ່ງເອ້ຍ້ອງທີ່ເປັນເອກະລັກໄດ້ດີກວ່າຜູ້ຊາຍຊຶ່ງຈະເຫັນໄດ້ໃນເວລາມີພິທີກຳ ແລະ ງານຕ່າງໆ.

## 4. ອາຫານການກິນ ແລະ ເຄື່ອງດື່ມ.

ຊົນເຜົ່າກະຕູແຕ່ກ່ອນເຖິງປະຈຸບັນແຕ່ກ່ອນແມ່ນກິນເຂົ້າໜຽວ ເຂົາເຈົ້າມັກດື່ມນ້ຳດິບທີ່ຕັກຈາກຫ້ວຍທ່ອງ ສ່ວນອາຫານແມ່ນຈະມັກກິນປະເພດແບບຫຼາມ, ມັກສູບຢາດ້ວຍກອກເດີ ນຳໃຊ້ຮອດປະຈຸບັນ.

## 5. ຄວາມເຊື່ອຖື ແລະ ຮີດຄອງປະເພນີ.

ແຕ່ລະປີຊົນເຜົ່າກະຕູມີພິຕິກຳໃຫຍ່, ນ້ອຍຫຼາຍຄັ້ງເພື່ອຂໍຄວາມສັກສິດຄວາມຢູ່ເຢັນເປັນສຸກໃນການດຳລົງຊີວິດກໍ່ຄື ການຜະລິດບຸນປະເພນີທີ່ສຳຄັນໃຫ້ແກ່ການເຮັດບຸນປະເພນີທີ່ສຳຄັນໃຫ້ແກ່ການເຮັດບຸນຂວັນເຂົ້າພາສາກະຕູເອີ້ນວ່າ: ອາຢາ ບຸນກ່ອນຈະລົງມືປູກຝັງ (ຕະເນັ້ຍຣ) ບຸນກ່ອນຈະຮູດຫຼື ກ່ຽວເຂົ້າ (ຕະເຣັ້ຍ ຫຼື ຈາຣີບ) ບຸນສາລາກວານ (ເບຣົາໂຮງ) ພິຕິກຳອື່ນໆ ການເຮັດບຸນ ຫຼື ພິທີກຳຕ່າງໆທີ່ກ່າວມານັ້ນມີທັງຕົວຢ່າງ ງານບຸນປະເພນີເຮັດຢູ່ໃນຄອບຄົວ ແລະ ເຮັດລວມບ້ານໃນເວລາພິທີນັ້ນເຂົາເຈົ້າມັກຂ້າໄກ່, ໝູ ຫຼື ຂ້າຄວາຍເພື່ອຖວາຍແກ່ສິ່ງສັກສິດ ແລະ ເປັນອາຫານສຳລັບແຂກຄົນທີ່ມາຮ່ວມງານ.

## 6. ເຄື່ອງດົນຕີ ແລະ ສີລະປະພື້ນເມືອງ.

ດົນຕີປະເພດວັນນະຄະດີຂອງຊົນເຜົ່າ ມີການຂັບລຳເນື້ອງຮ້ອງທຳນອງເສບ ແລະ ນິທານຕ່າງໆທີ່ເປັນເອກະລັກຂອງຕົນສຳລັບເຄື່ອງດົນຕີພື້ນເມືອງຂອງເຂົາເຈົ້າມີ ຄ້ອງ, ແຄນ, ປີ່ ແລະ ອື່ນໆ.

## 7. ພາສາປາກເວົ້າ.

ພາສາປາກເວົ້າຂອງຊົນເຜົ່າ ນັ້ນຈັດຢູ່ໝວດພາສາມອນ-ຂະແມ ເຂົາເຈົ້າບໍ່ມີຕົວໜັງສືຂຽນ.

ການສົມທຽບພາສາລາວ ກັບ ພາສາກະຕູ.

| ລຳດັບ | ພາສາລາວ | ພາສາກະຕູ |
|---|---|---|
| 1. | ສະບາຍດີ | ສະບາຍດີ |

| | | |
|---|---|---|
| 2. | ເຮັດຫຍັງຢູ່? | ອາເຮົາມະຕັກ? |
| 3. | ຂອບໃຈ | ອະມອງກະລື. |

## ເຜົ່າໂອຍ

## ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ

ເຜົ່າໂອຍເປັນຊົນເຜົ່າຫນຶ່ງທີ່ອາໄສຢູ່ໃນລາວ ແລະ ກະເປັນໜຶ່ງໃນ 50 ຊົນເຜົ່າໃນລາວໂດຍຈັດຢູ່ໃນຫມວດຫມູ່ພາສາມອນ - ຂະແມ ໃນ32ຊົນເຜົ່າຕາມການສັນນິຖານຂອງຜູ້ເຖົ້າແກ່ອາວຸໂສຢູ່ແຂວງ ອັດຕະປື ໄດ້ໃຫ້ການວ່າ: ໃນຈຳນວນ 22 ບ້ານຂອງຊົນເຜົ່າໂອຍ ທີ່ຂຶ້ນກັບແຂວງ ອັດຕະປື. ໃນປັດຈຸບັນນີ້ລ້ວນແຕ່ມີປະຫວັດຄວາມເປັນມາສະເພາະຕາມແຕ່ລະເຂດບ້ານເຊັ່ນ: ແຕ່ກ່ອນແມ່ນຕັ້ງຖິ່ນຖານພູມລຳເນົາຢູ່ເຂດຫນອງແສ ເນື່ອງຈາກວ່າເມື່ອກ່ອນມີສົງຄາມຮຸກຮານຍາດຊີງດິນແດນອານາເຂດກັນ ຈິ່ງເປັນສາເຫດພາໃຫ້ເກີດການເຄື່ອນຍ້າຍຖິ່ນຖານກັນລົງມາຢູ່ຫຼວງພະບາງ, ທົ່ງໄຫຫີນ, ທົ່ງຫຼົ່ງ, ທົ່ງຫວາຍ, ຮົ່ງເງີວລອກຈອກເຄ້ຍ, ຕະມໍກອງໃບແຄມເຊປ່ຽນ, ບາງທ່ານກໍ່ໄດ້ໃຫ້ທັດສະນະວ່າ: ຊົນເຜົ່າໂອຍໄປຢູ່ທົ່ງໄຫຫີນໃນນາມເປັນສະເລີຍເສິກຂອງຂຸນເຈືອງ ແລະ ສຸດທ້າຍກໍ່ໄດ້ແຈກຈາຍກັນໄປ ບາງກຸ່ມກໍ່ອາໄສຢູ່ຕາມເກາະດອນກາງທົ່ງນາ.



ຮູບທົ່ງໄຫຫີນ ທີ່ຢູ່ອາໄສຂອງຊົນເຜົ່າໂອຍໃນອະດີດ

ຊົນເຜົ່ານີ້ເອີ້ນຕົນເອງວ່າ: ໂອຍ ຊົນເຜົ່າລາວ ເອີ້ນຊື່ທີ່ເຂົາເຈົ້າມັກໃຊ້ທາງລັດທະການໃນປັດຈຸບັນກໍ່ແມ່ນຊົນເຜົ່າໂອຍ ອີກຢ່າງຊົນເຜົ່າກໍ່ມີຊື່ສະເພາະຂອງຕົນເອງໄປຕາມແຕ່ລະເຂດບ້ານ ຫຼື ຈະເປັນຊື່ແຊງຂອງຊົນເຜົ່າເຊັ່ນ: ສະປວນ, ສອກ, ກຣີຍ, ດາກກະຍະ, ຣີຢາວ, ກົນແຫຼະອຶມປາວ, ກອງຮາຮວຍ, ຕໍ່າມໍເລີຍ, ອິນດູ່, ຈໍເຈີກ ແລະ ແມກູອງ, ທັງໝົດເຫຼົ່ານີ້ລ້ວນແຕ່ໄດ້ຂະໜານນາມຕົນເອງວ່າ: ໂອຍ ຫຼື ຊົນເຜົ່າໂອຍ ແລະ ຄຳທີ່ວ່າ ໂອຍ ໄດ້ມີທັດສະນະ ແລະ ຄວາມໝາຍຄື: ແມ່ນຄົນ, ແມ່ນສຽງຮ້ອງຄວນຄາງຈາກການເຈັບເປັນສຽງຮ້ອງຈາກຄວາມຂີ້ຄ້ານເອວຍາວນັ້ນເອງ.

### 1. ທີ່ຢູ່ ແລະ ການແຈກຢາຍຂອງປະຊາກອນ

ປັດຈຸບັນຊົນເຜົ່າໂອຍ ຕັ້ງຖິ່ນຖານພູມລຳເນົາຢູ່ເມືອງ ໄຊເສດຖາ, ສາມັກຄີໄຊ, ສະໜາມໄຊ ແຂວງ ອັດຕະປື ແລະ ເມືອງ ປາກຊ່ອງ ແຂວງ ຈຳປາສັກ ນອກຈາກໃນ ສປປ ລາວ ແລ້ວຍັງມີຢູ່ ແຂວງ ກະແຈະ , ຊຽງແຕງ ຂອງ

ລາຊະອານາຈັກ ກຳປູເຈຍ ແລະ ພາກອິສານ ຂອງລາຊະອານາຈັກ ໄທ ສ່ວນຢູ່ໃນປະເທດລາວ ຊົນເຜົ່າ ໂອຍ ມີປະຊາກອນທັງໝົດ 22.458 ຄົນ, ຍິງ 11.375 ຄົນ, ເທົ່າກັບ 0.4% ຂອງພົນລະເມືອງໃນທົ່ວປະເທດ



**ແຜນທີການແຈກຢາຍປະກອນ ຊົນເຜົ່າ ໂອຍ**

## ທີ່ຕັ້ງບ້ານ ແລະ ເຮືອນ

ຊົນເຜົ່າໂອຍ ມີຄວາມນິຍົມຢູ່ເຮືອນຮ້ານປູດ້ວຍແປ້ນ, ແອ້ມດ້ວຍແປ້ນ ມຸງດ້ວຍຫຍ້າຄາ ເປັນເຮືອນລວດດຽວ ລະຫວ່າງລວງຍາວ ແລະ ລວງກວ້າງຫຼຸດລື່ນກັນຢ່າງຂາດຂັ້ນ, ລວງຍາວອອກຫາທິດຕາເວັນຕົກ, ຫົວນອນຈະປິ່ນມາທາງທິດໃຕ້, ຂະໜາດຂອງເຮືອນສູງສຸດ 5 ຫ້ອງ ຕ່ຳສຸດ 2 ຫ້ອງ, ເອົາຜີເຮືອນ, ຜີດ້ອງລາໄວ້ໃນຫ້ອງ. ແຕ່ລະຫຼັງເຮືອນຂອງຊົນເຜົ່າໂອຍ ລ້ວນແຕ່ມີຣົ້ວອ້ອມ, ມີປະຕູເຂົ້າ 2 ບ່ອນ. ສ່ວນຂໍ້ຫ້າມໃນການເຂົ້າບ້ານເຮືອນຂອງເຂົາເຈົ້າແມ່ນມີເຄື່ອງໝາຍຕາແຫຼວ ແລະ ພົດໄມ້ດິບ ຖ້າເຫັນເຄື່ອງໝາຍສອງອັນນີ້ປະໄວ້ທາງເຂົ້າບ້ານ ຫຼື ປະຕູໂຂງເຂົ້າບ້ານສະແດງວ່າເຂົ້າບໍ່ໄດ້ ເພາະເປັນຮີດຄອງຂອງເຂົາເຈົ້າ.





ຮູບເຮືອນຂອງຊົນເຜົ່າໂອຍເຄື່ອງໝາຍຂໍ້ຫ້າມເຂົ້າບ້ານ

## 2. ອາຊີບຂອງຊົນເຜົ່າໂອຍ

ອາຊີບຫຼັກຂອງຊົນເຜົ່າໂອຍ ແມ່ນການເຮັດນາປູກເຂົ້າຈ້າວ, ໃນປີ ຄ.ສ 1960 ຄືນຫຼັງເຂົາເຈົ້າໄດ້ເຮັດນາຫວ່ານ, ໄຮ່ນາກວ້າງແຕ່ 2 ໄລ່ຂຶ້ນໄປ, ຄັນນາສູງພຽງແອວ, ນາແຕ່ລະໄຮ່ລ້ອນແຕ່ມີຫຼູມຢູ່ກາງນາ ຫຼື ແຄມຄັນນາມີບ່ອນລະບາຍນໍ້າອອກ. ນອກຈາກເຮັດນາປູກເຂົ້າແລ້ວເຂົາເຈົ້າຍັງມີຄວາມຊໍານານທາງດ້ານຫັດຖະກໍາຈັກສານ, ປັ້ນໝໍ້, ລ້ຽງສັດປະເພດຕ່າງໆເຊັ່ນ: ງົວ, ຄວາຍ ເພື່ອໃຊ້ເປັນແຮງງານລາກແກ່, ຍັງລ້ຽງ ໝູ, ໄກ່ ເພື່ອໃຊ້ປະກອບພິທີ ກໍາບະພີຕ່າງໆ ຫຼື ກິນເປັນອາຫານ.

**<u>ພິເສດ:</u>** ນອກຈາກການເຮັດນາປູກເຂົ້າແລ້ວ ຊົນເຜົ່າໂອຍ ຍັງມີການຂຸດຫຼຸມຢູ່ກັບໄຮ່ນາ ເລືອກບ່ອນທີ່ຕໍ່າທີ່ສຸດຢູ່ກັບໄຮ່ນາເພື່ອເປັນການດັກເອົາປາພາຍຫຼັງລະດູການເກັບກ່ຽວເຂົ້ານາແລ້ວ ເອີ້ນວ່າ: ຫຼຸມປາ ຫຼຸມປາມີລັກສະນະຄ້າຍຄືຫຼຸມນໍ້າສ້າງ ເປັນຫຼຸມ ສີ່ຫຼ່ຽມມົນທົນ ສູງປະມານ 4 - 5 ແມັດ ນໍາໄມ້ເສົາມາຕອກເປັນຫຼັກສີ່ແຈຮອມເຮັດເປັນສາມຊັ້ນມີການຕອກໄມ້ຢຶດເປັນຢ່າງດີ ນອກນີ້ຍັງມີການນໍາເອົາຂ່ອນໄມ້ທີ່ມີຮູມີໂກນມາວາງທັບກັນລົງໄປແລ້ວທັບດ້ວຍກ້າງໄມ້ໄຜ່ອີກເທື່ອ ເພື່ອໃຫ້ກາຍເປັນທີ່ລີ້ຊ້ອນຂອງປາທີ່ລ້ອຍຂຶ້ນມາຈາກຫ້ວຍຮ່ອງໜອງບຶງມາສູ່ທົ່ງນາໃນຍາມຝົນນັ້ນບໍ່ໃຫ້ກັບລົງຄືນຈົນໝົດໃນຍາມແລ້ງນັ້ນເອງ ຫຼຸມປາແມ່ນສ້າງມາຄູ່ກັບການເຮັດນາເພາະວ່າການມີເຂົ້າ ແລະ ອາໄສປາຈາກທໍາມະຊາດມາເປັນແຫຼ່ງອາຫານ ຮັບໃຊ້ຊີວິດການເປັນຢູ່ຂອງປະຊາຊົນແມ່ນອາໄສຄວາມຮູ້ ແລະ ພູມປັນຍາທີ່ຊ່າງຄິດຂອງຊົນເຜົ່າໂອຍທີ່ມີມາຍາວນານຍັງສາມາດນໍາໃຊ້ໄດ້ຈົນຮອດປັດຈຸບັນນີ້.

## 3. ເຄື່ອງນຸ່ງຫົ່ມ

ໃນປີ 1975 ຄືນຫຼັງຜູ້ຊາຍຂອງຊົນເຜົ່າໂອຍ ແມ່ນນຸ່ງກະຕ່ຽວ, ຖືກຸບຈອມແຫຼມປີກແຄບທີ່ສຸດໃນເວລາຍັງເປັນບ່າວ, ແຕ່ງດອງແລ້ວຖືກຸບປີກກວ້າງ, ເວລາເຮັດພີພະເບງ, ພະຍອງນຸ່ງກະຕ່ຽວໝາກບັດ, ແພແດງຄຽນຫົວ, ແພແດງ , ແພຂາວໄຂວ່ກັນແຕ່ບ່າລົງຫາແອວ, ເກົ້າຜົມ, ບ່ອງຫູໃສ່ຕ້າງທີ່ເຮັດດ້ວຍກົ່ວ, ສໍາລັບແມ່ຍິງແມ່ນນຸ່ງສິ້ນລ່າມຮອດບີແຂ່ງ(ຍິງເອົາຜົວໃຫມ່), ຖ້າຜູ້ເຖົ້າລ່າມລົງກາຍບີແຂ່ງ, ຫົ່ມເສື້ອແຊກລາຍເຮ້ຍ, ເກົ້າຜົມ, ບ່ອງຫູໃສ່ຕ້າງ ແລະ ໃສ່ຄຣີແອຕົມເບຣິດ (ກຸບຕົມເບຣິດ).




ຮູບລັກສະນະການນຸ່ງຖືຂອງເຜົ່າໂອຍ

## ອາຫານ ແລະ ເຄື່ອງດື່ມ

ແຕ່ກ່ອນນັ້ນຊົນເຜົ່າໂອຍມີອາຫານການກິນທີ່ລຽບງ່າຍບໍ່ຫຼາຍເຍືອງເປັນຕົ້ນ: ເຂົ້າຈ້າວ, ໜຶ້ງປາ ແລະ ແກງເທົ່ານັ້ນ, ສ່ວນການປຸງແຕ່ງແກງນັ້ນຈະແຕກຕ່າງກັນນັ້ນແມ່ນຕາມລະດູການ ຫຼື ຂຶ້ນກັບຊ່ວງເວລາເຊັ່ນ: ແກງປາ, ຊີ້ນ ແລະ ແກງກະດູກ. ໃນລະດູເຮັດໄຮ່ເຮັດນາຖ້າມີຄົນມາຊ່ວຍວຽກຫຼາຍ ການປຸງແຕ່ງແກງແມ່ນໃສ່ເຂົ້າເບືອໃສ່ຫຼາຍໆຈົນແກງນັ້ນໜຽວເຂົາເຈົ້າເອີ້ນວ່າ: ປີອວນ, ຖ້າມີແຕ່ຄົນໃນຄອບຄົວກໍ່ໃສ່ເຂົ້າເບືອໜ້ອຍ ລະດູແລ້ງທີ່ມີບາງຄອບຄົວຕ້ອງການປຸກສ້າງເຮືອນໃໝ່ ການປຸງແຕ່ງແກງນັ້ນກໍ່ຕ້ອງໃສ່ເຂົ້າຂົ້ວບາງເທື່ອເຂົາເຈົ້າຈະເກັບເດັດຜັກທີ່ເປັນເຄື່ອງປ່າຂອງດົງນັ້ນມາປົນປາເຕົາໃສ່ເຂົ້າເບືອເອົາໃບໝາກທຸ່ງຫໍ່ແລ້ວເອົາໄປໜຶ້ງ ສ່ວນການດື່ມແມ່ນດື່ມນ້ຳດິບ, ເຫຼົ້າໄຫ ແລະ ສູບຢາທີ່ປຸກ.

4. **ຮີດຄອງປະເພນີ ແລະ ງານບຸນ**

ຊົນເຜົ່າໂອຍ ມີຮີດຄອງປະເພນີ ປະຈຳເຜົ່າຂອງເຂົາເຈົ້າເອງມາຕັ້ງດົນນານແລ້ວ ໃນເມື່ອກ່ອນແມ່ນບຸນຜີພະເບັງ. ພິທີງານບຸນດັ່ງກ່າວຈັດຂຶ້ນພາຍໃນ 1 ວັນ ໃນຊ່ວງເວລາລະດູເຂົ້າສຸກເຫຼືອງ ພິທີງານບຸນແມ່ນຈັດຂຶ້ນພາຍໃນຄອບຄົວຂອງໃຜລາວພ້ອມກັນໝົດບ້ານ ຕອນເຊົ້າໃຫ້ຕາງໜ້າແຕ່ລະຄອບຄົວໄປເອົາຮ່ວງເຂົ້າໄຮ່ລະຮວງ ນາມີຈັກໄຮ່ກໍ່ເອົາໃຫ້ທຸກໄຮ່ ພ້ອມທັງຂີ້ຕົມ ແລະ ຫຍ້າທີ່ຕິດດິນຢູ່ໃນໄຮ່ນາ ເພື່ອມາຢະແຊຣ (ຢະແຊຣ ແມ່ນສະຖານທີ່ມີຮູບແບບຄືໄຮ່ນາຢູ່ຕີນບ້ານ ຊຶ່ງແຕ່ລະຄອບຄົວກໍຂອງໃຜລາວມີໄວ້ ເພື່ອເອົາເຄື່ອງດັ່ງກ່າວມາແຈ້ງ)ແລ້ວຈຶ່ງເອົາເມືອເຮືອນ, ແຕ່ລະເຮືອນຕ້ອງກຽມໃບຕອງຈານ 14 ໃບ, ໄກ່ 1 ໂຕ ເມື່ອເຄື່ອງດັ່ງກ່າວມາຮອດເຮືອນກໍຂ້າໄກ່ຢູ່ໜ້າປ່ອງຢ້ຽມເບື້ອງຫ້ອງທາງຂຶ້ນເອົາໃບຈານປູຖັດຈາກປ່ອງຢ້ຽມ 7 ໃບ ແລ້ວເອົາເລືອດໄກ່ຢອດໃສ່ໃບຕອງຈານ ແລະ ເອົາເຫຼົ້າໄຫນ້ອຍມາຕັ້ງຂ້າງປ່ອງຢ້ຽມ, ຫຼັງຈາກນັ້ນກໍເອົາໄກ່ໄປແກງ ເຊິ່ງຕ້ອງແຍກແກງລະຫວ່າງແກງໃຫ້ຜີ ແລະ ແກງໃຫ້ຄົນກິນ. ເມື່ອແກງສຸກແລ້ວກໍເອົາໃບຕອງຈານມາປູອີກຂ້າງໜຶ່ງຂະໜານກັນແລ້ວເອົາເຂົ້າກັບຊີ້ນໄກ່ໃສ່ໃບຕອງຈານ, ເອົາເຫຼົ້າໄຫໃຫຍ່ມາໄຂຢູ່ຕໍ່ໜ້າປະຕູທາງເຂົ້າ ແລະ ພ້ອມພິທີເອີ້ນຜີໄຮ່, ຜີນາ, ຜີພໍ່ແມ່ມາກິນ. ຈາກນັ້ນຄົນເຮົາຈຶ່ງກິນຊຸມແຊວກັນຕາມປະເພນີ ນັບຕັ້ງແຕ່ເວລາ 8ໂມງເຊົ້າ ຫາ 3ໂມງແລງ ແລ້ວພາກັນແຕ່ງກາຍໃສ່ເຄື່ອງໃໝ່ຍ່າງຜ່ານທົ່ງໄປອີກທົ່ງແຫ່ງໜຶ່ງເຊິ່ງເປັນທົ່ງລວມບ້ານ ຜູ້ຄົນມາເຕົ້າໂຮມກັນເຢັ້ນເຫຼົ້າໃຫ້ງົວຄວາຍກິນ ທຸກຄົນກໍກິນເຫຼົ້າມີການຢອກໃຍກັນ ເຂົາເຈົ້າເອີ້ນວ່າ: ແຍ່ຊວງຢູ່ບ່ອນເປີດເຜີຍຄັດເລືອກເອົາຜູ້ຊາຍທີ່ມີນ້ຳໜັກເທົ່າກັນ ອອກມາເຕະກົ້ນກັນ ເຊິ່ງເປັນກິລາປະເພດຫນຶ່ງຂອງຊົນເຜົ່າໂອຍ ພາກັນຫຼິ້ນຢູ່ທົ່ງຈົນຮອດເວລາຄ່ຳແລ້ວກໍພາກັນຍ່າງແຫ່ກັນມາບ້ານ ແລ້ວກໍ່ເປັນອັນວ່າຈົບພິທີງານບຸນນັ້ນໄປ



ຮູບງານບຸນພິພະເບັງ

- ❖ **ການແຕ່ງງານ**: ບ່າວ - ສາວ ຂອງຊົນເຜົ່າໂອຍ ມີຄວາມເສລີພາບໃນການຫາຄູ່ຄອງ ຫຼື ຄູ່ຜົວເມຍຂອງຕົນເອງ ແລະ ຝ່າຍຊາຍເປັນເຈົ້າພາບໃນການສູ່ຂໍຝ່າຍຍິງ ພິທີການແຕ່ງດອງແມ່ນຈັດຂຶ້ນທີ່ເຮືອນເຈົ້າສາວແລ້ວຈຶ່ງເອົາມາເຮືອນເຈົ້າບ່າວ
- ❖ **ງານສົບ**: ດັ່ງທີ່ຮູ້ນໍາກັນແລ້ວວ່າ ຊົນເຜົ່າໂອຍ ນັບຖືສາສະໜາຜີ ຫຼື ການສັກກະລະບູຊາຜີພໍ່ຜີແມ່ມາແຕ່ໃດມາ ສ່ວນງານສົບຂອງເຂົາເຈົ້າແມ່ນ ການຝັງ ບໍ່ວ່າຈະຕາຍດ້ວຍກໍລະນີໃດກໍ່ຕາມແມ່ນຝັງສົບຄົນທັງນັ້ນພິທີການຄົບງັນກໍ່ຄ້າຍຄືກັບເຜົ່າອື່ນ ເວລາເອົາຜີໄປຖິ້ມແມ່ນເອົາລົງທາງປະຕູດ້ານຫຼັງ ຫຼື ດ້ານຫ້ອງນັ້ນເອງປະຕູນີ້ມີໄວ້ສໍາຫຼັບໃຊ້ໃນງານສົບ ແລະ ການແຕ່ງງານ ເອົາລູກໃພ້ລູກເຂີຍຂຶ້ນລົງເທົ່ານັ້ນ

5. **ສິລະປະ ແລະ ເຄື່ອງດົນຕີພື້ນເມືອງ**

ຊົນເຜົ່າໂອຍ ກໍໄດ້ມີສິລະປະວັນນະຄະດີ, ບົດຮ້ອງທໍານອງເສບທີ່ໄດ້ຂັບລໍາຕາມແຕ່ລະໆດູການຂອງເຂົາເຈົ້າເຊັ່ນ: ຂັບລໍາມາງອີມມາງ, ເຢງງາຍ, ຫຼຽວງາຍ, ມາງເປູາະ, ຈາເລີແລ, ເອີ້ຍໄນູນູາຍ ແລະ ເປັດປູ້ ປະກອບມີເຄື່ອງດົນຕີພື້ນເມືອງຫຼາຍຊະນິດຄື: ການີ ແມ່ນສໍາລັບຜູ້ບ່າວເປົ່າເມື່ອເວລາຍ່າງໄປເຮືອນຍິງສາວ, ດວນ ໃນມື້ຂຶ້ນເຮືອນໃໝ່, ບຸກເປົ່າເວລາບ່າວສາວນອນນໍາກັນ, ກົນນິງ ທີ່ເຮັດດ້ວຍເຄື່ອໄມ້ ແມ່ນຕີຍາມດໍານາເມື່ອຕອນບ່າວສາວໄປລ້ຽງງົວລ້ຽງຄວາຍຕາມທົ່ງຫຍ້າ, ປ່າໂຄກ ແລະ ສາຍນໍ້າ, ໂຮດເຮດ ແມ່ນເປົ່າສໍາລັບພິທີເອີ້ນຂວັນເຂົ້າ, ເກົາະອື້ງເກົາະ ຂອງຜູ້ຊາຍຕີປີໃນແຕ່ລະຄັ້ງເວລາກ່ອນເຂົ້າສຸກເຫຼືອງ 1 ເດືອນ ໄລຍະເວລາຕີແມ່ນ 1 ເດືອນ ນັບແຕ່ມື້ທໍາອິດຈົນຮອດມື້ສຸດທ້າຍ ເວລາ 7ໂມງ ຫາ 12ໂມງ ກາງຄືນ ສ່ວນຄືນສຸດທ້າຍແມ່ນຕີໝົດຄືນຮອດແຈ້ງ, ເຕີນເປົ່າບາງຄັ້ງຄາວຮ່ວມກັບໝູ່ ຫຼື ເວລາ ບ່າວສາວລົມກັນ, ຄ້ອງລາເຮັດດ້ວຍທອງໃຊ້ເວລາເອີ້ນຂວັນເຂົ້າ. ນອກຈາກທີ່ກ່າວມານີ້ແລ້ວກໍຍັງມີນິທານພື້ນເມືອງທີ່ເຫຼົ່າຕ່າງກັນມາຫຼາຍເລື່ອງຄື: ຍະຕອງຊາຍ, ຕ່າວແກຼ, ແກງເຫັດປວກ, ຕູ໊ເປ້ຕູ໊ປ້ອງ, ທ້າວແດ່ະດໍ, ທ້າວຣີມບຸ, ທ້າວໂບງ, ຜົວເມຍເສືອ ແລະ ອື່ນໆ.

## ພາສາປາກເວົ້າ

ຊົນເຜົ່າໂອຍ ບໍ່ມີຕົວໜັງສື ຫຼື ພາສາຂຽນ ແຕ່ເຂົາເຈົ້າມີພາສາປາກເວົ້າເປັນຂອງຕົວເອງ ເຊິ່ງເປັນພາສາທີ່ຖືກຈັດເຂົ້າໃນໝວດພາສາມອນ - ຂະແມ ທັງເປັນປັດໄຈພາສາຂະເມນບູຮານ (ບັນນາຣິກ) ແຕ່ລະເຂດບ້ານຂອງຊົນເຜົ່າ ໂອຍ ແມ່ນມີພາສາປາກເວົ້າສະເພາະເຂດເຖິງວ່າພາສາປາກເວົ້າຈະບໍ່ຄືກັນແຕ່ກໍ່ຄ້າຍຄືກັບຍັງສາມາດສື່ສານເຂົ້າໃຈກັນໄດ້ດີ. ນອກຈາກພາສາຂອງຕົນເອງແລ້ວເຂົາເຈົ້າກໍຍັງສາມາດເວົ້າພາສາຂອງຊົນເຜົ່າອື່ນໄດ້ ເຊັ່ນ: ເຈັງ, ເບຣົາ, ຢຣຸ, ຍະເຫີນລາວໄດ້ດີ

**ການສົບທຽບລະຫວ່າງພາສາ ລາວ ກັບ ພາສາ ໂອຍ**

| ລ/ດ | ພາສາລາວ | ພາສາໂອຍ |
|---|---|---|
| 1 | ສະບາຍດີ | ປະຣາຢະ |
| 2 | ຂອບໃຈ | ແປລະໂຢະ |
| 3 | ເຈົ້າຊື່ຫຍັງ? | ຊານຍຈະນຸງາຍ? |
| 4 | ເຮັດຫຍັງຢູ່? | ເບີມງາຍ? |
| 5 | ກິນເຂົ້າແລ້ວບໍ? | ຈ້ອງປວນຣເລີຍ? |
| 6 | ລາກ່ອນ | ແປແອຣາໂຢະ |

## ເຜົ່າຍະເຫີນ.
## ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ.

ຕາມໃຫ້ຂໍ້ມູນຂອງພວກເຖົ້າແກ່ອາວຸໂສນາຍບ້ານເຂດບ້ານຈັດສັນບ້ານໜອງເມັກເມືອງປາກຊ່ອງແຂວງຈໍາປາສັກໃຫ້ຮູ້ວ່າ: ຊົນເຜົ່າຍະເຫີນ ( ເຫີນຍໍ ) ນີ້ຍົກຍ້າຍມາຈາກປະເທດມົງໂກນເຄື່ອນຍ້າຍຢູ່ພາກໃຕ້ຂອງຈີນລະຫວ່າງພູເຂົາຕິເບດ, ຈາກນັ້ນແມ່ນເຄື່ອນຍ້າຍມາຢູ່ຕາມແຄມແມ່ນໍ້າຂອງເຫີງນານປະມານ 2 ສະຕະວັດ ແລະ ໄດ້ຕັ້ງພູມລໍາເນົາທີ່ນດິນແດນແຕ່ດຶກດໍາບັນ, ຊົນເຜົ່າຍະເຫີນຕັ້ງພູມລໍາເນົາຢູ່ເຂດບ້ານລຸ່ມຄໍ່າໄດ້ມີສ່ວນຮ່ວມໃນການກໍ່ສ້າງ ພາລະຊະວັງແຫ່ງ ອານາຈັກຂອມເມືອງອິງການ ແລະ ເຂດເມືອງໂຊກ, ເມືອງຊູງ, ແລະ ຫໍ່ພຣະພຸດທະຮູບ, ພຣະສິງແສນ ຢູ່ວັດບ້ານສະເຄາະທີ່ຂຶ້ນກັບ ເມືອງໄຊເສດຖາແຂວງອັດຕະປື ທ້າຍສະຕະວັດທີ 18 ຊົນເຜົ່າຍະເຫີນ ( ເຫີນຍໍ ) ໄດ້ເຄື່ອນຍ້າຍເຂດນັ້ນມາຕັ້ງບ້ານຢູ່ເຂດພູຄໍາພຸກ ແລະ ຂະຫຍາຍໄປທົ່ວເຂດພູຫຼວງ ແລະ ໜາແໜ້ນກ່ວາໝູ່ແມ່ນຢູ່ພາກເຊນໍ້ານ້ອຍເບື້ອງທິດຕາເວັນຕົກເຊັ່ນ: ດາກລ່ານ, ດາກກິຣງ, ດາກອີນຕຽງ, ໜອງເມັກ, ຄໍາປັດ ແລະ ອື່ນໆ ຊົນເຜົ່າຍະເຫີນ ( ເຫີນຍໍ ) ໄດ້ມີຫຼາຍຊື່ເອີ້ນຄື: ຍະເຫີນ, ( ເຫີນຍໍ) ຕຶງແກະ, ຊື່ເອີ້ນວ່າ: “ ຕຶງແກະ “ ມີຄວາມໝາຍວ່າ:” ມີດຽຽບ” ຊື່ທີ່ເອີ້ນວ່າ: “ ຍະເຫີນ “ ມີຄວາມໝາຍວ່າຊ່າງເຫີນທີ່ເຂົາເຈົ້າສະມັກໃຈ ( ມັກ ) ແລະ ຊື່ທີ່ນໍາໃຊ້ທາງລັດຖະການປັດຈຸບັນນັ້ນແມ່ນ “ ຍະເຫີນ ”.

1. **ອາຊີບຂອງຊົນເຜົ່າຍະເຫີນ.**

ອາຊີບຂອງ ຊົນເຜົ່າຍະເຫີນການດໍາລົງຊີວິດທາງດ້ານເສດຖະກິດ ໃນສະໄໝປີ 1960 ຄືນຫຼັງ ຊົນເຜົ່າຍະເຫີນ ແມ່ນຢຶດຖືການຖາງປ່າເຮັດໄຮ່ ປູກເຂົ້າຈ້າວເປັນຫຼັກ ພ້ອມກັນນັ້ນກໍ່ຍັງປູກຜົດທີ່ມີທາດແປ້ງ, ປູກຜົດໃຫ້ໝາກ, ປູກຜົດນາໆຊະນິດ ແລະ ລຽ້ງສັດປະເພດຕ່າງໆເປັນຕົ້ນແມ່ນ: ຄວາຍ, ໝູ, ສັດປີກ ເພື່ອໃຊ້ເປັນອາຫານໄປເຮັດພິທີກໍາຕ່າງໆສະເພາະຊົນເຜົ່າຍະເຫີນຢູ່ເຂດບ້ານເຕົ່າໄຮ່, ບ້ານເຜົ່ານ້ອຍແມ່ນໄດ້ປູກເຂົ້າຈ້າວເປັນຕົ້ນຕໍ, ປູກເຂົ້າໜຽວບໍ່ຫຼາຍຄືຊົນເຜົ່າເຈັງ, ຊົນເຜົ່າໂອຍ, ຊົນເຜົ່າເບີຣາ. ນອກນີ້ມີຄວາມນິຍົມຫຼາຍແມ່ນປູກກະເຟ, ກ້ວຍ, ໝາກຫຸ່ງ ແລະ ລຽ້ງສັດປະເພດຕ່າງໆເປັນສິນຄ້າ, ພວກເຂົາເຈົ້າບໍ່ມີການຕໍາຮູບແຕ່ມີຄວາມສໍານານໃນວິຊາຫັດຖະກໍາຈັກສານ.

2. **ທີ່ຕັ້ງບ້ານ ແລະ ເຮືອນ.**

ເອກະລັກການຕັ້ງບ້ານເຮືອນຂອງ ຊົນເຜົ່າຍະເຫີນ ແມ່ນນິຍົມຕັ້ງຢູ່ແຄມແມ່ນໍ້າໃຫ່ຍ ແມ່ນໍ້ານ້ອຍທີ່ໄຫຼຜ່ານຕະຫຼອດປີມີເນື້ອທີ່ສູງ ແລະ ຮາບພຽງເພື່ອຮັບປະກັນບໍ່ໃຫ້ນໍ້າຄ້າງໃນລະດູຝົນ, ພາຍຫຼັງໄດ້ມີການກະກຽມເຄື່ອງເຮັດເຮືອນຄົບແລ້ວ, ເຂົາເຈົ້າຊອກຫາມື້ຫາຍາມໃນການຕັ້ງເຮືອນສ່ວນຫຼາຍຈະຕັ້ງເຮືອນໃນວັນພະຫັດ ຫຼື ວັນເສົາເພາະພວກເຂົາເຈົ້າມີຄວາມເຊື່ອຖືມາຕັ້ງແຕ່ບັນພະບູລຸດທັງສອງວັນນີ້ເປັນວັນສິລິມົງຄຸນຂອງຊົນເຜົ່າຕົນ, ໃນເວລາຕັ້ງເຮືອນນັ້ນແມ່ນແລ່ວໝົດບ້ານມາຢືນອ້ອມດິນຕອນທີ່ຈະປຸກເຮືອນ, ລັກສະນະເຮືອນຂອງ ຊົນເຜົ່າຍະເຫີນ ສະໄໝກ່ອນ ແລະ ປັດຈຸບັນແມ່ນເຮັດເຮືອນຮ້ານ ແລະ ແບ່ງອອກເປັນ 2-3 ຫ້ອງ, ເຮືອນເຮັດດ້ວຍໄມ້ມອກຕອກລີບ, ມຸງດ້ວຍຫຍ້າ, ປູດ້ວຍຟາກ, ແອ້ມດ້ວຍໃບຕອງ ແລະ ມີການຈັດແບ່ງຫ້ອງເປັນ 2 ສ່ວນ, ໜຶ່ງສ່ວນເປັນບ່ອນຂອງພໍ່ແມ່, ອີກສ່ວນໜຶ່ງນັ້ນເປັນບ່ອນນອນຂອງລູກທີ່ຍັງບໍ່ທັນແຕ່ງງານ ປັດຈຸບັນການປຸກເຮືອນໄດ້ມີການປະຍຸກຮຽນແບບຊົນເຜົ່າລາວມີການເຮັດດ້ວຍໄມ້ແກ່ນ, ດິນຈີ່, ສີມັງ ແລະ ອື່ນໆ.

3. **ເຄື່ອງນຸ່ງຫົ່ມ.**

ລັກສະນະການນຸ່ງຫົ່ມຂອງ ຊົນເຜົ່າຍະເຫີນ ໃນເມື່ອກ່ອນຜູ້ຊາຍແມ່ນນຸ່ງກະຕ່ຽວ, ເອົາແພແດງຄຽນຫົວ, ເກົ້າຜົມ, ບ່ອງຫູໃສ່ຕ້າງ, ມີປອກແຂນ, ປອກຂາ, ໃສ່ໝາກປັດ ສະເພາະແມ່ຍິງແມ່ນນຸ່ງສິ້ນລ່າມລົງຮອດປາຍແຂ່ງ, ຫົ່ມເສື້ອແຊກເອົາແພແດງຄຽນຫົວ, ມີປອກແຂນ, ປອກຂາ, ເກົ້າຜົມ, ບ່ອງຫູໃສ່ຕ້າງທີ່ເຮັດດ້ວຍທອງ, ບໍ່ວ່າຍິງ ຫຼື ຊາຍບໍ່ຕັດແຂ້ວ ແລະ ສັກລາຍ.

4. **ອາຫານ ແລະ ເຄື່ອງດື່ມ.**

ຊົນເຜົ່າຍະເຫີນ ມີຄວາມນິຍົມກິນເຂົ້າຈ້າວຫຸງໃສ່ໝໍ້ດິນ, ໝໍ້ທອງ, ກິນອາຫານປະເພດຕ່າງໆ ທີ່ປຸງແຕ່ງໃສ່ຜັກນາໆຊະນິດ, ໃຫ້ສຳເລັດເຊັ່ນ: ແກງ, ຕົ້ມ, ປີ້ງ, ເຜົາ, ລົດຊາດບໍ່ເຄັມ, ບໍ່ເຜັດບໍ່ຈາງເກີນໄປ ນອກຈາກນີ້, ແມ່ຍິງເກີດລູກໃໝ່ເຂົາເຈົ້າຍັງມີການຄະລຳບໍ່ກິນຊີ້ນປາ ແລະ ຊີ້ສັດບາງຊະນິດເຊັ່ນ:ປາຄໍ່ກົ້ງ, ອ່ຽນ, ຊີ້ນພານ, ໄກ່ປ່າ, ນົກເຂົາ, ແລະຜັກທີ່ມີນາມສຳລັບການດື່ມສ່ວນຫຼາຍແມ່ນ: ດື່ມນໍ້າດິບທີ່ຕັກຈາກຫ້ວຍ, ຮ່ອງ, ໜອງ, ບຶງ, ດື່ມເຫຼົ້າໄຫ , ສູບຢາດ້ວຍກອກເລີ່ມແຕ່ເວລາຍັງນ້ອຍຈົນຮອດເຖົ້າ.

5. **ຄວາມເຊື່ອຖື.**

ຊົນເຜົ່າຍະເຫີນໃນຮອບວຽນປີໜຶ່ງສ່ວນຫຼາຍແມ່ນມັກຈະເຮັດບຸນເຂົ້າໃໝ່, ບຸນປີໃໝ່, ບຸນຈັດພິທີກຳລ້ຽງຜີບ້ານ, ຜີເມືອງຕາມໄລຍະຂອງເດືອນທີ່ກຳນົດໄວ້, ໃນນັ້ນສ່ວນຫຼາຍເຮັດພິທີກຳລ້ຽງຜີຫຼັກເມືອງເອີ້ນວ່າ: ບຣະເມືອງ, ເຊິ່ງຈະຈັດຂຶ້ນໃນລະຫ່ວາງກາງເດືອນ 2-3 ຂອງທຸກໆປີ, ໃນພິທີດັ່ງກ່າວ, ຈະມີການກະກຽມໝົດທຸກຄອບຄົວພາຍໃນບ້ານເຊັ່ນ: ໄກ່, ເປັດ, ຄວາຍ, ງົວ, ໝູ, ເຂົ້າສານ, ເຂົ້າສຸກ, ເຫຼົ້າໄຫ, ທຽນ, ດອກໄມ້ທີ່ເປັນລັກສະນະລວມບ້ານສ່ວນແຕ່ລະຄອບຄົວນັ້ນແມ່ນອີງຕາມຖະນະຄອບຄົວຂອງໃຜລາວເມື່ອກະກຽມວັດຖຸປັດໄຈໄດ້ແລ້ວກໍ່ຈະມີກຳນົດວັນເວລາໃນການຈັດງານດັ່ງກ່າວ.

6. **ສິລະປະວັນນະຄະດີພື້ນເມືອງ.**

ດ້ານສິລະປະວັນນະຄະດີພື້ນເມືອງຊົນເຜົ່າຍະເຫີນແມ່ນເຂົາເຈົ້າມີພົນລະເມືອງໜ້ອຍໄດ້ຮັບອິດທິພົນຈາກຊົນເຜົ່າໃກ້ຄຽງກໍ່ຕາມ ແຕ່ຍັງຮັກສາເອກະລັກອັນສະເພາະຂອງຕົນ, ມີນິທານພື້ນເມືອງ, ຄຳສຸພາສິດເຊັ່ນ: ເລື່ອງຂຸນລູ- ນາງອົ້ວ, ກຳພ້າຜີນ້ອຍ, ຊຽງໝ້ຽງ ແລະ ອື່ນໆ.ນອກນັ້ນຍັງມີຄຳສຸພາສິດທີ່ສ່ອງແສງເຖິງການພົວພັນລະຫ່ວາງຄົນກັບສັດ ແລະ ທຳມະຊາດ, ມີກອນລຳທີ່ພັນລະນາເຖິງທຳມະຊາດ, ຄວາມຮັກລະຫ່ວາງບ່າວ-ສາວ, ຍັງມີເຄື່ອງດົນຕີເຊັ່ນ: ກອງ, ຄ້ອງລາ, ແກວ, ຢວນ ທີ່ຜະລິດດ້ວຍທອງແດງ, ທອງເຫຼືອງເຫຼົ່ານີ້ເປັນຕົ້ນ.



ຮູບທີ 63ສິລະປະດົນຕີຂອງຊົນເຜົ່າຍະເຫີນ.

## ພາສາປາກເວົ້າ.

ຊົນເຜົ່າຍະເຫີນບໍ່ມີຕົວໜັງສືຂຽນ, ແຕ່ມີພາສາເວົ້າອັນສະເພາະຂອງຊົນເຜົ່າຕົນຊຶ່ງຈັດເຂົ້າໃນໝວດພາສາມອນ-ຂະແມ, ທັງເປັນປັດໃຈພາສາຂະເໝນບູຮານ ພາສາປາກເວົ້າຂອງຊົນເຜົ່ານີ້ຄ້າຍຄືກັນກັບພາສາຊົນເຜົ່າຢຣຸ, ໂອຍ, ເຈັງ ແລະ ເບິ່ຣາຊຶ່ງມີຄວາມສະດວກໃນການແລກປ່ຽນເສດຖະກິດ ແລະ ວັດທະນະທຳລະຫ່ວາງຊົນເຜົ່າດ້ວຍກັນ, ພ້ອມກັນນີ້ເຂົາເຈົ້າຍັງສາມາດເວົ້າພາສາຊົນເຜົ່າລາວໄດ້ດີ.

**ການສົມທຽບພາສາລາວກັບພາສາຍະເຫີນ.**

| ລະດັບ | ພາສາລາວ | ພາສາຍະເທີນ |
|---|---|---|
| 01 | ໂຊກດີ | ເດີມຽນ |
| 02 | ເຈົ້າຊື່ຫັຍງ ? | ຍອງມັຣກຊີຊາ ? |
| 03 | ເຮັດຫັຍງຢູ່ ? | ປະຊາປີຣມແງ ? |
| 04 | ກິນເຂົ້າແລ້ວບໍ ? | ຊາຈ້ອງລອຍເອີນ ? |
| 05 | ລາກ່ອນ | ເດີການອນ |
| 06 | ພົບກັນໃໝ່ | ເຕີເບີຣນນາວ |
| 07 | ບໍ່ເປັນຫັຍງ | ເອີນແນປີຣມ |

## ຊົນເຜົ່າຂະແມ

## ປະຫັວດຄວາມເປັນມາຂອງຊົນເຜົ່າຂະແມ

ຊົນເຜົ່າຂະແມ ແມ່ນເຜົ່າທີໄດ້ຕັ້ງພູມລຳເນົາ, ດຳລົງຊີວິດຢູ່ລາວເຮົາມາແຕ່ດຶກດຳບັນຊົນເຜົ່າດັ່ງກ່າວໄດ້ມີຫຼັກຖານທາງດ້ານພາສາສາດ, ວັດທະນາທຳຂອງເຂົາເຈົ້າ ກໍ່ແມ່ນອັນດຽວກັນກັບຊົນເຜົ່າຊົນລາວອານາຈັກອາສະວະລີທີລຸ່ມແມ່ນ້ຳເຈົ້າພະຍາເຊິ່ງໄດ້ສ້າງຂຶ້ນໃນລະຫວ່າງສະຕະວັດທີVສຳລັບປະຫວັດຄວາມເປັນມາກົກເຄົ້າເຫົ້ງາກໍ່ແມ່ນຄືກັນກັບຊົນເຜົ່າທີປາກພາສາມອນ-ຂະແມ ຫຼື ຕະກຸນດຽວກັນກັບພວກໂອສໂຕຼນີເຊຍ.

**ຊື່ເອີ້ນຂອງຊົນເຜົ່າຂະແມ:** ຊົນເຜົ່າຂະແມມີຊື່ເອີ້ນທາງການຊື່ທີເຂົາເຈົ້າມັກເອີ້ນກໍ່ແມ່ນ: "ຂະແມ" ຊົນເຜົ່າອື່ນເອີ້ນເຂົາເຈົ້າກໍ່ແມ່ນ "ຂະແມ

1. **ອາຊີບຂອງຊົນເຜົ່າຂະແມ**

ການປະກອບອາຊີບວງກເຮັດຂອງເຂົາເຈົ້າມີຄວາມຊຳນານວຽກງານການກະສິກຳ,ປູກເຂົ້າໜ່ຽວ,ປູກພືດທາດແປ້ງ,ພັກຕ່າງໆຮັບໃຊ້ຄອບຄົວປະເພດສັດລ້ຽງແມ່ນ: ງົວ, ຄວາຍ, ໝູ, ເປັດ,ໄກ່. ຜູ້ຊາຍມີຄວາມຊຳນານໃນດ້ານຫັດຖະກຳຈັກສານ ແລະ ການຄັວດລວດລາຍ. ແມ່ຍິງມີຄວາມຄ້ອງແຄ້ວໃນການຕໍ່າຫູກ ແລະ ການຊອກເງິນດ້ວຍວິທີການຄ້າຂາຍແລກປ່ຽນວັດຖຸສິ່ງຂອງຕ່າງໆ.

2. **ທີຕັ້ງ ແລະ ເຮືອນຂອງຊົນເຜົ່າຂະແມ**

ລັກສະນະເຮືອນຂອງຊົນເຜົ່າຂະແມແມ່ນນິຍົມປຸກສ້າງແບບເຮືອນຮ້ານທັງກະທັດຮັດ ແລະ ງ່າຍດາຍ, ຫຼັງຄ່າເບື້ອງຫຼັງຈະສູງກວ່າເບື້ອງໜ້າເພື່ອໄຫ້ນຳໄຫຼໄດ້ສະດວກ, ປັດຈຸບັນນີ້ບັນດາເອກະລັກເຮືອນຂອງເຂົາເຈົ້າກໍ່ມີການປ່ຽນແປງ ແລະ ປະຍຸກໄປຕາມສະໄໝໂດຍຫັນມາປຸກເຮືອນແບບຊົນເຜົ່າລາວເປັນສ່ວນຫຼາຍ.

3. **ເຄື່ອງນຸ່ງຫົ່ມຂອງຊົນເຜົ່າຂະແມ**

ສຳລັບເອກະລັກເຄື່ອງນຸ່ງຂອງຊົນເຜົ່າຂະແມໃນສະໄໝກ່ອນຈະມີຄວາມແຕກຕ່າງກັບຍຸກປະຈຸບັນເຊັ່ນ: ຜູ້ຊາຍນຸ່ງໂສ້ງຫົວຣູດ, ຫົວໃຫ່ຍແລ້ວວິທີນຸ່ງແມ່ນປ້າຍເອົາຄືກັນກັບນຸ່ງສິ້ນ, ເອົາສາຍເຊືອກມັດ (ທີເຮັດດ້ວຍແພຝ້າຍ), ຂາໃຫຍ່ຍ່ອມດ້ວຍຄາມ, ສີດຳ, ສີຂາວ, ຫົ່ມເສື້ອຄໍມົນ, ແຂນຍາວ,ໃສ່ໝວກສີຂາວເຮັດຜ້າຝ້າຍມີລະໃບທາງຫຼັງ ແລະ ມີສາຍມັດທາງຫຼັງໝວກ, ສ່ວນທາງໜ້າແມ່ນບໍ່ມີຫຍັງ,ໃສ່ເກີບທີເຮັດດ້ວຍໄມ້ຍໍ່ສາຍເກີບເຮັດດ້ວຍໜັງ

ຄວາຍ, ເຄື່ອງນຸ່ງຫົ່ມແຕ່ລະຢ່າງແມ່ນເຮັດດ້ວຍຝ້າຍທີ່ຜະລິດດ້ວຍຕົນເອງຫຍິບດ້ວຍມື. ສ່ວນແມ່ຍິງແມ່ນນຸ່ງສິ້ນກະຕຸກແມ່ນບໍ່ມີຕີນ, ນຸ່ງເສື້ອຄໍ່ມົນສີຂາວ, ບ່ອງຫູໃສ່ຕ້າງ, ຈີ່ງຜົມຍາວພຽງຫຼັງແລ້ວມັດໃສ່ປວກແຂນ, ປວກຂາ ແລະ ໃສ່ໝາກປັດເຄື່ອງເອ້ຢ້ອງແຕ່ລະຊະນິດແມ່ນເຮັດດ້ວຍເງິນສົດ ແລະ ໃສ່ເກີບຄືກັບຜູ້ຊາຍປັດຈຸບັນຄົນຮຸນໜຸ່ມຫັນມານິຍົມເຄື່ອງນຸ່ງຫົ່ມແບບຊົນເຜົ່າລາວ, ຫາຊື້ຕາມທ້ອງຕະຫຼາດເປັນສ່ວນຫຼາຍ.

## 4. ອາຫານ ແລະ ເຄື່ອງດື່ມ

ຊົນເຜົ່າຂະແມ ສະໄໝກ່ອນແມ່ນມັກກິນອາຫານທີ່ມີລົດຊາດເຜັດ, ເຄັມປະເພດລາບ (ສຸກ, ດິບ, ຊອຍແຊ ເພັຍແມ່ນຊີ້ນສົດ), ແກ່ງ, ຕົ້ມ, ປີ້ງສິ່ງທີ່ຂາດບໍ່ໄດ້ແມ່ນແຈ່ວເຂົ້າໜຽວ,ການດື່ມກໍ່ແມ່ນດື່ມນ້ຳດິບທີ່ຕັກມາຈາກຫ້ວຍ,ຮ່ອງ ຫຼື ຂຸດເປັນນ້ຳສ້າງໄວ້, ດື່ມເຫຼົ້າຂາວທີ່ເຮັດດ້ວຍເຂົ້າໜຽວ, ຕົ້ມເອົາ, ເຫຼົ້າສະໂທມີການສູບຢາເສັ້ນທີ່ເອົາໃບຕອງກ້ອຍແຫ້ງມາພັນມີການຄ້ຽວໝາກດ້ວຍການເອົາເປືອກ, ແກ່ນໄມ້ແລະ ອື່ນໆ. ເຊັ່ນ: ເປືອກຫາດ, ເປືອກເມືອກ, ສີສຽດ, ແກ່ນຄູນ, ໝາກອອ່ນ, ໝາກແກ່,ໃບພູ, ປູນຂາວສ່ວນຫຼາຍແມ່ນແມ່ຍິງ.

## 5. ຄວາມເຊື່ອຖື ແລະ ວັດທະນະທຳ

ພື້ນຖານວັດທະນະທຳຕ່າງໆຂອງເຂົາເຈົ້າມີຢ່າງຫຼວງຫຼາຍຍ້ອນຄວາມເຫຼື້ອມໃສທາງພຸດທະສາສະໜາ, ນັບຖືພຸດທະສາສະໜາ ແລະ ຜີໄປພ້ອມບັນດາໝູ່ບ້ານຊົນເຜົ່າຂະແມ ບາງບ້ານມີວັດວາອາຮາມທີ່ເປັນສ່ວນສັກກາລະບູຊາດັ່ງກ່າວ, ເຂົາເຈົ້າຈຶ່ງມີຫຼາຍປາງບຸນຄື: ບຸນປີໃໝ່, ບຸນວັນເກີດຂອງພະພຸດທະເຈົ້າ, ບຸນບູຊາດວງເດືອນ ແລະ ການຈັດງານບຸນປະຈຳແຕ່ລະເດືອນຕາມປະຕິທິນຄືກັບຊົນເຜົ່າລາວ.

❖ **ງານບຸນປະເພນີ**

ງານບຸນປະເພນີຂອງຊົນເຜົ່າຂະແມ ທີ່ເຂົາເຈົ້າໄດ້ເຊື່ອຖືປະຕິບັດໃນທຸກໆປີມີຄື: ການຈັດງານບຸນແມ່ນໄດ້ອີງໃສ່ປະຕິທິນປະຈຳເດືອນລາວຄື: "ເດືອນຈຽງ (ລ້ຽງຜີຟ້າຜີແຖນ), ເດືອນຍີ່ (ເຮັດບຸນເຂົ້າຄູນລານ), ເດືອນສາມ ເພັງ (ບຸນເຂົ້າຈີ່-ບຸນມາຂະບູຊາ, ບຸນວັດພູ, ບຸນທາດອີງຮັງ, ບຸນພະທາດສີໂຄດ), ເດືອນສີ່ (ບຸນພະເຫວດ, ບຸນມະຫາຊາດ), ເດືອນຫ້າບຸນປີໃໝ່ລາວ (ຫົດນ້ຳຜູ້ຫຼັກຜູ້ໃຫ່ຍ), ເດືອນຫົກ (ບຸນວິສາຂະບູຊາ, ບຸນບັ້ງໄຟ), ເດືອນເຈັດ (ບຸນເບີກຊຳລະບ້ານມາລ້ຽງປູ່ຕາເພື່ອກະກຽມເຂົ້າສູ່ການຜະລິດ), ເດືອນແປດ (ບຸນເຂົ້າພັນສາແມ່ນເຂົ້າກຳຂອງພະສົງສຳມະເນນເປັນເວລາ 3 ເດືອນ), ເດືອນເກົ້າ (ບຸນຫໍ່ເຂົ້າປະດັບດິນເຊິ່ງແມ່ນຄວາມເຊື່ອມາແຕ່ບູຮານນະການເປັນການຖວາຍໃຫ້ບັນດາຜູ້ທີ່ລວງລັບໄປນັ້ນໃຫ້ມາຮັບເອົາ), ເດືອນສິບ (ບຸນຫໍ່ເຂົ້າສະຫຼາກແມ່ນການກະກຽມຜົນຜະລິດ) ຫຼື ຄວາມໝາຍໜຶ່ງແມ່ນການເສັ້ນເຂົ້າກ່ອນການເກັບກ່ຽວ), ເດືອນສິບເອັດ (ບຸນອອກພັນສາແມ່ນການອອກກຳຂອງພະສົງສຳມະເນນທີ່ໄດ້ປະຕິບັດມາເປັນໄລຍະ 3 ເດືອນ), ເດືອນສິບສອງແມ່ນບຸນກະຖິນ".

## 6. ເຄື່ອງດົນຕີ ແລະ ສິລະປະພື້ນເມືອງ

ດ້ານສິລະປະວັນນະຄະດີວັດທະນາທຳຂອງຊົນເຜົ່າຂະແມແມ່ນມີຄວາມອຸດົມສົມບູນ ແລະ ຮັ່ງມີ ໂດຍສະເພາະການຄ້ອດລວດລາຍ, ການແຕ້ມລະບາຍສີຕາມວັດວາອາຮາມ, ພ້ອມກັນນີ້ເຂົາເຈົ້າຍັງມີກອນຂັບລຳ, ບົດຟ້ອນ , ນິທານພື້ນເມືອງ, ເຄື່ອງເສບດົນຕີ ແລະ ອື່ນໆ.

## 7. ພາສາປາກເວົ້າຂອງຊົນເຜົ່າຂະແມ

ຊົນເຜົ່າຂະແມ ມີພາສາປາກເວົ້າທີ່ເປັນເອກະລັກຂອງຕົນ, ຈັດເຂົ້າໃນໝວດພາສາມອນ-ຂະແມນອກຈາກນີ້ເຂົາເຈົ້າຍັງມີຕົວໜັງສືຂຽນເຊິ່ງເປັນໜັງສືທຳທີ່ໃຊ້ຄ່ຽງຄູ່ຕົວກັບໜັງສືລາວ,ພາສາລາວ.

**ການສົມທຽບພາສາລາວກັບພາສາຂະແມ**

| ລໍາດັບ | ພາສາລາວ | ພາສາຂະແມ |
|---|---|---|
| 01 | ສະບາຍດີ | ເຈຍລະອໍ |
| 02 | ໂຊກດີ | ອອຍສໍານາງລະພອນລະອໍ |
| 03 | ຂອບໃຈ | ລະອໍກຸນ |
| 04 | ຂໍໂທດ | ສາມາຖ |
| 05 | ເຈົ້າຊື່ຫັຍງ? | ສະເໜາະໄອ? |
| 06 | ເຮັດຫັຍງຢູ່? | ເທີກໄອ? |
| 07 | ກິນເຂົ້າແລ້ວບໍ່? | ສິເບຍເຮີຍ? |
| 08 | ລາກ່ອນ | ເລຍເຊັນ |

## ຊົນເຜົ່າພູນ້ອຍ

## ປະຫວັດຄວາມເປັນມາ ແລະ ຊື່ເອີ້ນຂອງເຜົ່າພູນ້ອຍ.

ຊົນເຜົ່າພູນ້ອຍກໍ່ແມ່ນຊົນເຜົ່າໜຶ່ງທີ່ໄດ້ຕັ້ງຖິ່ນຖານພູມລໍາເນົາ ດໍາລົງຊີວິດຢູ່ປະເທດລາວ ມາໄດ້ຫຼາຍຮ້ອຍປີ ໂດຍອີງໃສ່ບັນດາເອກະສານ ຕາມການບອກຂອງເຈົ້າກົກ, ເຈົ້າເຫຼົ່າໃຫ້ຮູ້ວ່າຊົນເຜົ່າ: ພູນ້ອຍ ມີປະຫວັດຄວາມເປັນມາຈາກປະເທດມຽນມາໄດ້ເຄື່ອນຍ້າຍເຂົ້າມາລາວຢູ່ເຂດວຽງພູຄາໃນຕອນຕົ້ນຂອງສະຕະວັດທີ XVIຮອດສະຕະວັດທີ XVIII-XIX ເປັນໄລຍະສົງຄາມສັກດີນາຈີນກັບ ພະມ້າ ເຂົາເຈົ້າໄດ້ເຄື່ອນຍ້າຍໄປຢູ່ດິນແດນແຂວງຜົ້ງສາລີໃນປັດຈຸບັນດ້ວຍເສັ້ນທາງ ແລະ ຫຼາຍໄລຍະທີ່ແຕກຕ່າງກັນເຊິ່ງຢູ່ໃນໝວດພາສາຈີນ-ຕິເບດ.

**ຊື່ເອີ້ນ:** ເຜົ່າພູນ້ອຍມີຫຼາຍຊື່ເອີ້ນດ້ວຍກັນເຊັ່ນ: ຜູ່ນ້ອຍ, ປູນ້ອຍ, ພູນ້ອຍ, ໄທຜົ້ງສາລີ, ສິງສີລີ, ປີຊູ ແລະອື່ນໆ. ຊື່ເອີ້ນຕ່າງໆແມ່ນມີຫຼາຍເລື່ອງແຕກຕ່າງກັນຊີ້ແຈງເຖິງຊື່ເອີ້ນໃນປັດຈຸບັນຊົນເຜົ່າພູນ້ອຍປະກອບດ້ວຍຫຼາຍແຂວງເຊັ່ນ: ພູຍອດ, ຕາປາດ, ບ້ານຕັ້ງ, ຈາທໍ, ລາວແຊງໄຟ, ລາວປານ, ຜົ້ງກູ້ ແລະ ຜົ້ງເສດ.

### 1. ອາຊີບຕົ້ນຕໍຂອງເຜົ່າພູນ້ອຍ.

ໃນເມື່ອກ່ອນເຂົາເຈົ້າສ່ວນຫຼາຍມີອາຊີບໃນການກະເສດເປັນຕົ້ນແມ່ນ: ເຮັດໄຮ່, ປູກເຂົ້າ, ນອກຈາກນີ້ກໍ່ປູກສາລີ ແລະ ພືດຜັກຊະນິດຕ່າງໆທີ່ເປັນອາຫານສໍາລັບຊີວິດປະຈໍາວັນຂອງຄອບຄົວ. ສັດທີ່ເຂົາເຈົ້າມັກລ້ຽງແມ່ນ: ໄກ່, ໝູ, ງົວ ແລະ ຄວາຍ ສັດດັ່ງກ່າວມີຄວາມສໍາຄັນໃນການໃຊ້ເປັນແຮງງານລາກແກ່ປະກອບເຂົ້າໃນພິທີກໍາທາງຄວາມເຊື່ອ ຮີດຄອງປະເພນີ.

ສໍາລັບການປູກຝັງ ແລະ ລ້ຽງສັດຍັງມີລັກສະນະພື້ນບ້ານທີ່ສືບທອດກັນມາແຕ່ ປູ່, ຍ່າ, ຕາ, ຍາຍ ຕິດພັນກັບທໍາມະຊາດ ແຕ່ເຂົາເຈົ້າເປັນຄົນທີ່ມີຄວາມດຸໝັ່ນຂະຫຍັນພຽນໂດຍສະເພາະແມ່ນແມ່ຍິງທີ່ມີມູນເຊື້ອໃນການຫຍິບປັກຖັກແສ່ວ, ຕໍ່າແຜ່ນແພເຮັດເຄື່ອງນຸ່ງຫົ່ມ ແລະ ຄ້າຂາຍ. ໃນປັດຈຸບັນນີ້ເຜົ່າພູນ້ອຍໄດ້ມີວິຖີຊີວິດປ່ຽນແປງໄປຈາກເດີມຫຼາຍ. ມີການປະກອບອາຊີບທີ່ຫຼາກຫຼາຍ, ມີທັງການເຮັດໄຮ່, ເຮັດນາປະສານກັນໄປຕາມແຕ່ລະສະພາບຄວາມເປັນຈິງຂອງແຕ່ລະທ້ອງຖິ່ນທີ່ເຂົາເຈົ້າໄດ້ອາໄສຢູ່.

### 2. ທີ່ຕັ້ງບ້ານ ແລະ ເຮືອນ.

ຕາມປົກກະຕິແລ້ວຊົນເຜົ່າພູນ້ອຍເຂົາເຈົ້າດຳລົງຊີວິດ ແລະ ຕັ້ງບ້ານເຮືອນຢູ່ຕາມເປີ້ນພູ ຫຼື ຕີນພູໃກ້ກັບຫ້ວຍນ້ຳລຳເຊ, ລັກສະນະຂອງເຮືອນແມ່ນປຸກສ້າງເຮືອນຕ່ຳ, ມີຊານ, ຝາເສົາເຮືອນຈະເຮັດດ້ວຍໄມ້ທີ່ແຂງແກ່ນ, ຝາເຮືອນແອ້ມດ້ວຍຝາໄມ້ເຮ້ຍ ຫຼື ໄມ້ແປ້ນ, ໃນເຮືອນຈະມີການຈັດໃຫ້ເປັນຫຼາຍຫ້ອງຄື: ຫ້ອງນອນຂອງພໍ່ແມ່, ຫ້ອງລູກຊາຍທີ່ສ້າງຄອບຄົວແລ້ວ, ຫ້ອງລູກສາວທີ່ຍັງເປັນໂສດ. ໃກ້ກັບຫ້ອງນອນພໍ່ແມ່ ຈະມີອີກຫ້ອງໜຶ່ງຕັ້ງຫິ້ງຜີທັງເປັນບ່ອນເຄົາລົບບູຊາຂອງສະມາຊິກໃນຄອບຄົວ. ເຮືອນຈະມີ 2 ປະຕູຄື: ປະຕູດ້ານໜ້າໃຊ້ເຂົ້າ-ອອກຕາມປົກກະຕິ ອີກປະຕູໜຶ່ງເປັນປະຕູສຳຮອງຢູ່ດ້ານຫຼັງໄວ້ເຮັດພິທີຮຽກຂວັນ, ບູຊານົບໄຫວ້ຜີຕ່າງໆ ຫຼື ໃຊ້ໃນເວລາເອົາສົບຄົນຕາຍລົງຈາກເຮືອນໄປຝັງ ແຕ່ໃນປັດຈຸບັນລັກສະນະຂອງເຮືອນກໍ່ມີການປ່ຽນແປງໄປຕາມຍຸກຕາມສະໄໝແຫ່ງການພັດທະນາ.

### 3. ເຄື່ອງນຸ່ງຫົ່ມຂອງເຜົ່າພູນ້ອຍ.

ເຜົ່າພູນ້ອຍມີເຄື່ອງນຸ່ງຫົ່ມ, ເຄື່ອງເອ້ຢ້ອງປະຈຳເຜົ່າຂອງຕົນທັງຜູ້ຍິງ ແລະ ຜູ້ຊາຍ, ເຄື່ອງນຸ່ງຫົ່ມສ່ວນຫຼາຍຈະເປັນສີດຳເຊິ່ງປະດັບເອ້ດ້ວຍສີສັນລວດລາຍຕ່າງໆທີ່ສວຍສົດງົດງາມ ຈາກສີໄມ້ລາຍມືອັນຄ່ອງແຄ້ວປານິດຂອງແມ່ຍິງຊົນເຜົ່ານີ້ເອງເຊິ່ງຈະເຫັນເຂົາເຈົ້າໃສ່ໃນມື້ງານບຸນ ຫຼື ພິທີກຳທາງສາສະໜາຕ່າງໆ.




ຮູບທີ65ເອກະລັກການນຸ່ງຖືຂອງເຜົ່າພູນ້ອຍ

### 4. ອາຫານ ແລະ ເຄື່ອງດື່ມຂອງເຜົ່າພູນ້ອຍ.

ອາຫານສ່ວນຫຼາຍແມ່ນໄດ້ມາຈາກທຳມະຊາດ, ແລ້ວກໍ່ນຳມາປຸງແຕ່ງເປັນອາຫານປະເພດຕ່າງໆເຊັ່ນ: ແກງໝູ, ຕົ້ມຜັກ, ລາບຊີ້ນໝູ, ປີ້ງປາ, ປີ້ງຊີ້ນ, ແຈ່ວ... ອາຫານຈະມີລົດເຄັມ ແລະ ມັກກິນກັບເຂົ້າຈ້າວການດື່ມສ່ວນຫຼາຍແມ່ນດື່ມນ້ຳດິບ, ຕົ້ມໃບຊາ, ດື່ມເຫຼົ້າຂຽວ, ເຫຼົ້າຂາວ, ສູບຢາ.

### 5. ຄວາມເຊື່ອຖື.

ຊົນເຜົ່າພູນ້ອຍມີຮີດຄອງປະເພນີ ຄວາມເຊື່ອ, ວັດທະນະທຳເປັນເອກະລັກສະເພາະຂອງຕົນມາແຕ່ບູຮານນະການມີການນັບຖືສາສະໜາພຸດ, ວັດຂອງເຂົາເຈົ້າມີລັກສະນະເບົາບາງກວ່າວັດຂອງຊົນເຜົ່າອື່ນໆ ໃນໝວດພາສາລາວ- ໄຕ, ຄຽງຄູ່ກັບການນັບຖືສາສະໜາພຸດແລ້ວເຂົາເຈົ້າກໍ່ຍັງເຊື່ອຖືຜີເຊັ່ນ: ຜີພໍ່, ຜີແມ່, ຜີຍັນພະຍຸລຸດ, ຜີແມ່ນ້ຳລຳທານ, ຜີຕົ້ນໄມ້ໃຫຍ່ ແລະ ອື່ນໆ. ໃນແຕ່ລະເຮືອນຈະມີຫິ້ງຜີເພື່ອເປັນບ່ອນສັກກະລະບູຊາຂອງຄອບຄົວ.

6. **ງານບຸນປະເພນີ.**

ໃນຮອບວຽນປີໜຶ່ງຂອງຊົນເຜົ່າພູນ້ອຍ ແມ່ນໄດ້ປະຕິບັດຕາມປະຕິທິນຂອງລາວນັ້ນນັບແຕ່ເດືອນ 1-12 ຈະມີການຈັດງານບຸນຕາມແຕ່ລະເດືອນ. ພິເສດພາຍຫຼັງການເກັບກ່ຽວຜົນລະປູກແລ້ວເຂົາເຈົ້າກໍ່ໄດ້ຈັດບຸນຂຶ້ນໃນເດືອນນັ້ນ.

7. **ເຄື່ອງດົນຕີ ແລະ ສິລະປະພື້ນເມືອງ**

***ດົນຕີພື້ນເມືອງ*** ເຄື່ອງດົນຕີກໍ່ມີປະເພດ ກອງ, ແຄນ, ຄ້ອງ, ແສ່ງ ແລະ ອື່ນໆ ທີ່ໃຊ້ປະກອບເຂົ້າເປັນເຄື່ອງດົນຕີທີ່ນຳມາເສບງັນໃນເວລາທີ່ມີການຈັດງານບຸນ, ງານດອງ ແລ້ວຈະມີຜູ້ເຖົ້າ,ຊາຍໜຸ່ມ, ຍິງໜຸ່ມເຂົ້າຂັບລຳຕາມຈັ່ງຫວະຂອງດົນ.

8. **ພາສາປາກເວົ້າ.**

ພາສາຂອງເຜົ່າພູນ້ອຍຈັດຢູ່ໃນໝວດພາສາ ຈີນ-ຕິເບດ,ສາຂາຕິເບດ-ມຽນມາ. ມີແຕ່ພາສາເວົ້າແຕ່ບໍ່ມີພາສາຂຽນ.

**ການສົມທຽບລະຫວ່າງພາສາລາວ ແລະ ພາສາພູນ້ອຍ.**

| ລ/ດ | **ພາສາລາວ** | **ພາສາພູນ້ອຍ** |
|---|---|---|
| 1 | ສະບາຍດີ | ອ່າຈ່າອ່ານິ່ງປີລຣາ |
| 2 | ໂຊກດີ | ເມັນໂຢ່ມ່າງໂຢ່ຈ່າວີແມ່ |
| 3 | ຂໍໂທດ | ປາລາຍີ່ບາ |
| 4 | ຂອບໃຈ | ອາເຕົາບີຢ່າ |
| 5 | ເຈົ້າຊື່ຫຍັງ? | ນຳອ່າງມິ່ງມ່າຊ່າງເຢີ? |
| 6 | ເຮັດຫຍັງຢູ່? | ເອິເຈີຈີຢີ່ເຢີ? |
| 7 | ກິນເຂົ້າແລ້ວບໍ? | ອາຈາເວຍແລຣະ? |
| 8 | ລາກ່ອນ | ຈ່າຊວ້ານເອວັນແມ່ |
| 9 | ພົບກັນໃໝ່ | ນຸ່ງຈ່າງນິ່ງດມຍນ່າແລແມ |
| 10 | ບໍ່ເປັນຫຍັງ | ອີທິຄ່າ |

❖ **ຊົນເຜົ່າຫໍ້**

**ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ.**

ຊົນເຜົ່າຫໍ້ແມ່ນຊົນໜຶ່ງທີ່ມີກົກເຄົ້າເຫງົ້າກໍ, ກໍຄືດົນກຳເນີດມາຈາກປະເທດຈີນ ເຂົ້າເຈົ້າອົບພະຍົບ ແລະ ການເຄື່ອນຍ້າຍທາງຝາກເໜືອຂອງລາວເຮົາໂດຍສະເພາະແມ່ນແຂວງຜົ້ງສາລີໃນທ້າຍສະຕະວັດທີXIX.

**ຊື່ເອີ້ນ:** ຊົນເຜົ່າເອີ້ນຕົນເອງວ່າ: "ຫໍ້" ຊົນເຜົ່າອື່ນເອີ້ນໃຫ້ເຂົ້າເຈົ້າກໍແມ່ນ "ຫໍ້" ເຂົ້າເຈົ້າມັກນໍາໃຊ້ທາງລັດຖະການກໍແມ່ນຊົນເຜົ່າຫໍ້.

1. **ອາຊີບຂອງຊົນເຜົ່າຫໍ້.**

ຊົນເຜົ່າຫໍ້ປະກອບອາຊີບຕົ້ນຕໍແມ່ນການເຮັດໄຮ່ປູກເຂົ້າຈ້າວ ນອກຈາກນີ້ເຂົ້າເຈົ້າກໍຍັງເຮັດສວນປູກພືດຜັກຕ່າງໆ ມີປະສົບການໃນການເຮັດໄຮ່ແບບປະສົມປະສານຕາມໄລຍະລະດູການຂອງການຜະລິດ.

ການລ້ຽງສັດເປັນອາຊີບສໍາຮອງທີ່ຊົນເຜົ່ານີ້ນິຍົມເຊິ່ງໄດ້ແກ່:ການລ້ຽງງົວ , ຄວາຍເພື່ອໃຊ້ເປັນແຮງງານລາກແກ່ , ສ່ວນສັດປະເພດໝູ, ສັດປີກຕ່າງໆກໍນິຍົມລ້ຽງເຊັ່ນກັນລ້ຽງເພື່ອເຮັດໃຫ້ພິທີກໍາຕ່າງໆເຂົ້າເຈົ້າມັກເອົາຜົນຜະລິດກໍຄືເອົາສັດລ້ຽງໄປຂ້າຍແລກປ່ຽນກັບສິ່ງຂອງອື່ນໆ.

2. **ທີ່ຕັ້ງບ້ານ ແລະ ເຮືອນ**

ລັກສະນະບ້ານເຮືອນຂອງເຂົ້າເຈົ້າ ໂດຍປົກກະຕິແລ້ວຊົນເຜົ່ານີ້ມັກຕັ້ງບ້ານຢູ່ເຂດທີ່ມີຄວາມສູງແຕ່ 1000 – 1500 ແມັດເໜືອລະດັບໜ້ານໍ້າທະເລເຮືອນຂອງຊົນເຜົ່າຫໍ້ຈະເປັນລັກສະນະຕິດດິນ, ອ້ອມຮອບເຮືອນເຂົ້າເຈົ້າມັກເຮັດສວນເພື່ອປູກພືດຜັກ, ລ້ຽງສັດເພື່ອເປັນອາຫານ, ຂ້າຍເພື່ອເປັນລາຍຮັບໃຫ້ແກ່ຄອບຄົວ.

ການຈັດແບ່ງຫ້ອງພາຍໃນເຮືອນອີງຕາມຈໍານວນສະມາຊິກຂອງຄອບຄົວເຂົ້າເຈົ້າມັກຈະເອົາງ້າວ , ຫອກ , ດາບ ແລະ ເຄື່ອງໃນການຂ້າສັດປະດັດເອ້ໄວ້ເທິງປະຕູເຮືອ.

3. **ເຄື່ອງນຸ່ງຫົ່ມ.**

ການນຸ່ງຖືຂອງຊົນເຜົ່ານີ້ຜູ້ຊາຍມັກນຸ່ງໂສ້ງສີດໍາ, ມຸ່ຍ ຫຼື ສີມິ່ນ , ແຖຜົມ ຈຶ່ງໄວ້ຍາວຄ່າສອກແລ້ວເປຍໃສ່ໝວກ.ສ່ວນແມ່ຍິງມັກນຸ່ງໂສ້ງສີດໍາຍາວຮອດຕີນ, ເສື້ອຍາວຕິດກະດຸມທາງຂ້າງ ແລະ ເອົາຜ້າຄຽນຫົວ.

**ອາຫານ ແລະ ເຄື່ອງດື່ມ**

ຊົນເຜົ່າຫໍ້ແມ່ນນິຍົມກິນອາຫານລົດຊາດຈາງ ແລະ ອາຫານທີ່ພວກເຂົ້າເຈົ້າເຮັດກິນໃນແຕ່ລະວັນນັ້ນຈະກິນປະເພດແກງໄກ່ , ແກງໝູ , ຂົ້ວຜັກ , ແຈ່ວນໍ້າປາ , ລາບຊີ້ນໝູ , ປີ້ງປາ ແລະ ກິນນໍ້າດິບ ,ເຫຼົ້າໃນເວລາມີງານໃນບ້ານ.

4. **ຄວາມເຊື້ອຖື.**

ຊົນເຜົ່າຫໍ້ເຖິງແມ່ນວ່າຈະໄດ້ອົບຍົບ ແລະ ເຄື່ອນຍ້າຍມາຢູ່ລາວເຮົາໄດ້ດົນນານກໍຕາມແຕ່ເຂົ້າເຈົ້າຍັງຮັກສາຮີດຄອງປະເພນີ , ຄວາມເຊື່ອຖືວັດທະທໍາທີ່ເປັນເອກະລັກຂອງຕົນເອງໄວ້ໄດ້ເປັນຢ່າງດີ ຊົນເຜົ່າຫໍ້ເຊື້ອຜີ ໂດຍສະເພາະແມ່ນຜີພໍ່ແມ່ , ຜີບັນພະບູລຸດທີ່ລ່ວງລັບໄປແລ້ວກໍ່ຈະມີການເຮັດຮ້ານບູຊາໄວ້ໃນເຮືອນນອກຈາກນີ້ ຍັງມີຈໍານວນໜຶ່ງໄດ້ອິດທິພົນຈາກສາສະໜາຄິດ ( ລັດທະເຕົ໋າ) ນໍາອີກ.

- **ງານບຸນ:** ໃນຮອບວຽນປີໜຶ່ງໆຊົນເຜົ່າຫໍ້ຈະມີຈັດງານບຸນ, ພິກໍາຫຼາຍຄັ້ງ , ແຕ່ບຸນທີສໍາຄັນໄດ້ແກ່ບຸນປີໃໝ່( ບຸນກິນຈຽງ ) ຄື: ບຸນກິນຈຽງໃຫຍ່ຈັດຂຶ້ນໃນກໍານົດ 5 ວັນ, ບຸນກິນຈຽງນ້ອຍແມ່ນການກິນເຂົ້າຢູ່ປ່າ ຫຼື ປ່າຊ້າ ເຊິ່ງໄດ້ມີການກະກຽມອາຫານການກິນພ້ອມຍາດຕິພີ່ນ້ອງພາກັນໄປກິນບ່ອນຊຸມຝັງສົບພໍ່, ແມ່, ຍາດຕິພີ່ນ້ອງຂອງຕົນເຮັດຮີດຄອງດ້ວຍການຂ້າໝູເພື່ອລ້ຽງຜີ.

3. **ເຄື່ອງດົນຕີ ແລະ ສິລະປະພື້ນເມືອງ.**

ຊົນເຜົ່າຫໍ້ ຈະມີເຄື່ອງດົນຕີພື້ນເມືອງປະເຜົ່າຕົນເອງແມ່ນ: ແຊ່ງ, ກອງ, ປີ, ບົດກອນລໍາ, ກອນຂັບ, ກອນຜະຫຍາ ແລະ ອື່ນໆ ເຊິ່ງວ່າສິ່ງທີ່ກ່າວມານັ້ນແມ່ນເຂົ້າເຈົ້າຈະຮ້ອງ, ຈະເສບໃນເວທີທີ່ມີງານບຸນປະຈໍາເຜົ່າ, ງານແຕ່ງດອງ ແລະ ປະເພນີອື່ນໆ.

4. **ພາສາປາກເວົ້າ.**

ຊົນເຜົ່າຫໍ້ມີພາສາປາກເວົ້າທີ່ເປັນເອກະລັກຂອງຕົນເອງຊຶ່ງພາສານີ້ຈັດຢູ່ໃນໝວດພາສາຈີນ - ຕິເບດ.

**ການສົມທຽບພາສາລາວກັບພາສາຫໍ້.**

| - ພາສາລາວ | - ພາສາທໍ້ |
|---|---|
| ສະບາຍດີ | ບີເຣົາ |
| ໂຊກດີ | ໄຕຣຈ່ຽນ |
| ຂອບໃຈ | ເຊຽກ່າ |
| ຂໍໂທດ | ຕູຍວູຊີ |
| ເຈົ້າຊື່ຍັງ ? | ມີຈີ່ງ ? |
| ເຮັດຍັງຢູ່ ? | ຢີຈູຍາງເລ ? |
| ກິນເຂົ້າແລ້ວບໍ່ ? | ຊີ່ຟາງເລ ? |
| ລາກ່ອນ | ໄຈຈ່ຽນ |
| ພົບກັນໃໝ່ | ຊ່າເຈົ້າຕຽງ |
| ບໍ່ເປັນຫຍັງ | ອິຢາງພູຜາ. |

ຫຼັງຈາກທີ່ສະພາແຫ່ງຊາດເມື່ອຕອນເຊົ້າຂອງວັນທີ 5 ທັນວາ 2018 ໄດ້ຮັບຮອງເອົາຊົນເຜົ່າບຣູເຂົ້າເປັນຊົນເຜົ່າໃໝ່ທີ່ສຸດອັນດັບທີ 50 ຂອງວົງຄະນາຍາດລາວແຫ່ງຊາດລາວ ກໍມີຫຼາຍຄົນທີ່ຢາກຮູ້ກ່ຽວກັບຊົນເຜົ່ານີ້ວ່າມີຄວາມໝາຍວ່າແນວໃດ ລວມທັງທີ່ຢູ່ອາໃສ ແລະ ວິຖີຊີວິດຂອງພວກເຂົາ ລວມທັງພາສາປາກເວົ້າ.

ຊົນເຜົ່າບຣູ ເປັນຄົນກຸ່ມເຜົ່າຊົນໜຶ່ງທີ່ມີຖິ່ນກຳເນີດຢູ່ແຂວງສະຫວັນນະເຂດ, ແຂວງ ສາລະວັນ ແລະ ແຂວງອັດຕະປື ຂອງລາວເປັນຊົນເຜົ່າດັ່ງເດີມໃນດິນແດນລ່ອງແມ່ນ້ຳຂອງ ເຊິ່ງອາດສືບເຊື້ອສາຍມາຈາກຂອມບູຮານເຊິ່ງເຄີຍຢູ່ໃນດິນແດນອານາຈັກຈັນລາ ເປັນາອານາຈັກຂອມ ແລະ ອານາຈັກສີໂຄດຕະບູນ. ຂອມເຄີຍມີອິທິພົນຂຶ້ນມາຮອດເຂດນີ້ ແລ້ວເສື່ອມອຳນາດລົງ.

ຊົນເຜົ່າບຣູ ຢູ່ໃນຕະກຸນດຽວກັບຂອມ- ມອນຂະແມ ສະນັ້ນ, ພາສາບຣູ ຈຶ່ງເປັນພາສາຕະກູນດຽວກັນກັບກັບຂອມ- ມອນຂະແມ. ນອກນັ້ນ ບຣູຍັງແບ່ງອອກເປັນຫຼາຍເຜ່າຍ່ອຍເຊັ່ນ: ບຣູບໍລະເວນ, ບຣູສຸ, ບຣູຕະໂອດ, ບຣູສອກ ແລະ ບຣູອື່ນໆອີກ.

ຄຳວ່າ " ບຣຸ "  ໃນພາສາຊົນເຜົ່າມີຄວາມໝາຍວ່າ "  ພູ " ສ່ວນໃນປະເທດຫວຽດນາມເອີ້ນຊົນເຜົ່າບຣູວ່າ:  ມ້ອຍຊົນເຜົ່າບຣູ ດັ່ງເດີມມີສີຜິວເຂັ້ມ, ຜົມຫຍອງ ທັງຍິງ ແລະ ຊາຍ ຜູ້ຊາຍແຕ່ງກາຍດ້ວຍຜ້າກະຕ່ຽວ, ມີຜົມຍາວພຽງບ່າ ແລະ ນິຍົມໃຊ້ຜ້າແດງຜູກຄອງຄໍ ຫຼື ໂພກໃສ່ຫົວເປັນເອກະລັກ. ຕາມປະຫວັດເຫຼົ່າຂານວ່າ ເນື່ອງຈາກບັນພະບູລຸດຊົນເຜົ່າບຣູໄດ້ໃຊ້ຜ້າຈຸບເລືອດສີແດງແນບຕິດກາຍໄວ້ກ່ອນສິ້ນຊີວິດໃນການຍາດຊີງຖິ່ນຢູ່ກັບຊົນເຜົ່າຜູ້ໄທ ໃນອະດີດດິນແດນຝັ່ງຊ້າຍແມ່ນ້ຳຂອງ ຊົນເຜົ່າບຣູ ຈຶ່ງຖືເອົາຜ້າແດງເປັນເອກະລັກຂອງພວກເຂົາ . ສ່ວນແມ່ຍິ່ງນິຍົມແຕ່ງກາຍ ການນຸ່ງງສິ້ນຍາວເຖິງຂໍ້ຕີນ ແຕ່ເປືອຍກາຍສ່ວນເທິງ. ໃນປະຈຸບັນບັນດາຊົນເຜົ່ານີ້ກໍ່ເຊັ່ນດຽວກັບຊົນເຜົ່າອື່ນ ທີ່ມີການປ່ຽນແປງການນຸ່ມຖືໃຫ້ເຂົ້າກັບຍຸກສະໄໝ ມີຜ້າແພ່ຕໍ່າເອງທີ່ເປັນເອກະລັກສວຍງາມ.

ປະເພນີ, ຄວາມເຊື່ອຂອງເຜົ່າບຣູ ທີ່ມີເອກະລັກກໍ່ເປັນປະເພນີໃນການສູ່ຂໍເພື່ອແຕ່ງງານ, ໃນການສູ່ຂໍຍິງສາວມາເປັນເມຍນັ້ນຕ້ອງມີລ່າມ  4 ຄົນ ( ຊາຍ 2 ຍິງ 2  ), ທຽນ 4 ເຫຼັ້ມ, ເງິນໜັກ 5 ບາດ ເມື່ອແຕ່ງຕ້ອມເຫຼົ້າ ( ເຫຼົ້າໄຫ ) 2 ໄຫ, ໄກ່ 2 ໂຕ, ໄຂ່ 8 ໜ່ວຍ, ເງິນໜັກ 2 ບາດ, ໝູນ 1 ໂຕ, ກຳໄລແຂນ 1 ຄູ່

ນອກນັ້ນກໍຍັງມີປະເພນີອື່ນໆທີ່ເປັນຂໍ້ຫາມຖ້າຫາກເຮັດແລ້ວຖືວ່າຜິດປະເພນີ ຫຼື ຜິດຜີ , ນອນກ່ອນຜົວ, ຫ້າມລຸກໄພ້ຮັບເຄື່ອງຈາກພໍ່ຂອງຜົວ, ຫ້າມລູກເຂີຍທີ່ເຂົ້າອອກໃນເຮືອນອອກຈາກຫ້ອງໜຶ່ງໄປອີກຫ້ອງໜຶ່ງ, ຫ້າມລູກເຂີຍຖືມີດ ຫຼື ໃສ່ໝວກເຂົ້າເຮືອນພໍ່ເມຍ ຫຼື ກິນເຂົ້າຮ່ວມກັບແມ່ຂອງເມຍ.

ການເຮັດຜິດຜີຂ້າງເທິງນັ້ນ ລູກເຂີຍຕ້ອງໃຊ້ເງິນ 5 ບາດ, ໝູ 1 ໂຕ, ດອກໄມ້, ທູບທຽນ 1 ຄູ່ ກອກຢາໃບຕອງ 2 ມ້ວນ, ໝາກພູ 2 ຄຳ ນຳໄປຄາລະວະຜີ ( ວິນຍານ ) ຂອງບັນພະບູລຸດທີ່ຢູ່ແຈເຮືອນດ້ານຕາເວັນອອກ ຫຼື ຢູ່ເຕົາໄຟ. ບັນຫາທີ່ລູກໄພ້ເຮັດຜິດກໍ່ຕ້ອງໃຊ້ປ້າຂາວມ້າ 1 ຜືນ, ສິ້ນ 1 ຜືນ, ດອກໄມ້ທູບທຽນ 2 ຄູ່, ໝາກພູ 2 ຄຳ, ຢາສູບ  2 ມ່ວນ ແລະ ໄປຄາລະວະຕໍ່ຜີໃນບ່ອນດຽວກັບກໍ່ລະນີລູກເຂີຍ.



# ເອກະສານອ້າງອີງ

1. ຄຳແພງ ທິບມູນທະລີ (2005),ຂະບວນການຈັດສັນຊົນເຜົ່າຢູ່ສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ສຳນັກພິມແຫ່ງຊາດນະຄອນຫຼວງວຽງຈັນ, ປະເທດລາວ

Khampheng Thipmountaly (2005), *Quá trình sắp xếp các dân tộc ở nước Cộng hòa Dân chủ Nhân dân Lào*, Nhà xuất bản Quốc gia, Viêng Chăn, Lào.

2. ນະຄອນຫຼວງວຽງຈັນ(2008), *ກິດຈະກຳດ້ານເສດຖະກິດແລະວັດທະນະທຳຂອງຊົນເຜົ່າພູໄທ*, ປະລິນຍາໂທທິດສະດີກ່ຽວກັບຊົນເຜົ່າ, ມະຫາວິທະຍາໄລແຫ່ງຊາດລາວ.

Thủđô Viêng Chăn (2008), *Hoạt động kinh tế - văn hóa của dân tộc Phu Thai*, Luận văn Thạc sĩ Dân tộc học, Đại học Quốc gia Lào.

3. ສະພາແຫ່ງຊາດແຫ່ງສປປລາວ (2010), *ເອກະສານກອງປະຊຸມສະພາແຫ່ງຊາດຊຸດທີ3*,ສຳນັກພິມປື້ມແຫ່ງຊາດລາວ.

Quốc hội CHDCND Lào (2010), *Văn kiện Hội nghị Dân tộc toàn quốc lần thứ 3,* Nhà xuất bản và phát hành sách quốc gia Lào.

4. ພະແນກຊົນເຜົ່າ-ແນວລາວສ້າງຊາດ (2005), "ຈຸດລັກສະນະຂອງພູໄທ*, ແຂວງສະຫວັນນະເຂດ, ປະເທດລາວ", **ໜັງສືພິມປະຊາຊົນ,*** (12), tr.14 – 16*.*

Sở dân tộc - Mặt trận Lào xây dựng đất nước (2005), "Đặc điểm của dân tộc Phu Thai, Savannakhet, Lào*", Báo Passasson*, (12), tr.14 – 16.

5. ພະແນກວຽກງານຊົນເຜົ່າ ແນວລາວສ້າງຊາດ(2005), "ສະຖິຕິຊົນເຜົ່າລາ", *ວຽງຈັນມືໃຊ,*(7), tr.4 – 6.Sở dân tộc - Mặt trận Lào xây dựng đất nước (2005), "Thống kê dân tộc Lào", *Báo Viengchanmay*, (7), tr.4 – 6.

6. ພະແນກຖະແຫລງຂ່າວ, ວັດທະນະທຳແລະທ່ອງທ່ຽວແຂວງສະຫວັນນະເຂດ(2019),"ສະຖິຕິຈຳນວນນັກທ່ອງທ່ຽວໄປທ່ຽວສອງຄອນ, ແຂວງສະຫວັນນະເຂດ, ປະເທດລາວ(2010 -2019)", ສຳ ນັກພິມປື້ມແຫ່ງຊາດລາວ.

Sở Thông tin, Văn hóa và Du lịch tỉnh Savannakhet (2019), "Thống kê lượng khách du lịch tới Songkhone, Savannakhet, Lào (Giai đoạn 2010 – 2019)"*,* Nhà xuất bản và phát hành sách quốc gia Lào.

7. ແຂວງສະຫວັນນະເຂດ(2002), "ສາດສະໜາພຸດໃນປະເທດລາວ", *ໜັງສືພິມປະຊາຊົນ,* (1), tr.20 – 22.

Thapxin Bounmavong (2002), "Đạo Phật trong tín ngưỡng của người Lào", *Báo Passasson*, (1), tr.20 – 22.

8. ບັນດາຊົນເຜົ່າໃນສປປລາວ(2008), ກົມຊົນເຜົ່າ.

The Ethnic Groups in Lao P.D.R(2008), Printed: Department of Ethnic Affairs.

9. ທອງສວຍ ຂັນຕິວົງ (2017),*ປະຫວັດບ້ານນາກະລາ, ແຂວງສະຫວັນນະເຂດ, ປະເທດລາວ*, ບໍລິສັດເຜີຍແຜ່ສະຫວັນນະເຂດ.